ປະຫວັດ

ຄວາມເປັນມາ ຂອງ ແຂວງ ອັດຕະປື



ລວບລວມ ແລະ ຮຽບຮຽງໂດຍ:

ສົງຂຍາ ຈັນທະໂຄດ

ಅಲ್ಲಿ ಕೆಲಸ ಮಾಡಿದ ವರ್ಷಗಳು

ಸಂಬಳ

ಅಲ್ಲಿ ಕೆಲಸ ಬಿಟ್ಟ ಕಾರಣ

17-01-09

ปะຫວັດ

ຄວາມເປັນມາ ຂອງ ແຂວງອັດຕະປື

ລວບລວມ ແລະ ຮຽບຮຽງ

ໂດຍ

ສັງຂຍາ ຈັນທະໂຄດ

"ສະຖາບັນວິຈັຍ"

ຄຳນຳ

ຄວາມສົນໃຈຂອງນັກປາດ ອາຈານ, ຜູ້ຊົ່ງຄຸນວຸດທິ ແລະ ປະຊາຊົນ ທົ່ວໄປ ກ່ຽວກັບແຂວງອັດຕະປື ວ່າມີຄວາມເປັນມາແນວໃດ ໄດ້ມີມາດົນນານ ແລະ ກວ້າງຂວາງສົມຄວນ ແຕ່ບໍ່ສາມາດຫາຄຳຕອບ ທີ່ສົມເຫດສົມຜົນ ກືກ ຕາມຫລັກວິທະຍາການໄດ້ ຍ້ອນວ່າ ບໍ່ມີເອກະສານ ຫລື ຂໍ້ມູນທີ່ເປັນຕາເຊື່ອກືໄດ້. ຂ້າພະເຈົ້າ ກໍ່ແມ່ນຜູ້ໜຶ່ງ ທີ່ມີຄວາມສົນໃຈເລື້ອງນີ້ ດັ່ງນັ້ນ, ຈຶ່ງໄດ້ພະຍາຍາມ ລວບລວມຂໍ້ມູນຈາກເອກະສານຕ່າງໆ ທັ້ງຂອງລາວ ແລະ ຕ່າງປະເທດ ເປັນເວລາຫລາຍປີ ຈຶ່ງສາມາດລວບລວມໄດ້ ສ່ວນໃດສ່ວນໜຶ່ງ ດັ່ງທີ່ທ່ານໄດ້ ອ່ານໃນຂະນະນີ້. ເກືງຢ່າງໃດກໍ່ດີ ຂໍ້ມູນທີ່ໄດ້ມາກໍ່ເປັນພຽງ ຂໍ້ມູນເບື້ອງຕົ້ນ ເພື່ອເປັນແນວທາງຄົ້ນຄວ້າ ຂອງທ່ານຜູ້ສົນໃຈທັ້ງຫລາຍ ໄດ້ສືບຕໍ່ຄົ້ນຄ້ວາ ເພື່ອຫາຂໍ້ມູນ ແລະ ຫລັກການໃຫ້ລະອຽດຕື່ມອີກ.

ໃນປຶ້ມຫົວນີ້, ກ້າທ່ານສະລະເວລາອ່ານໃຫ້ໝົດ, ເຊື່ອວ່າ ທ່ານຈະໝົດ ຄວາມສົງໃສ ເລື້ອງເຈົ້າໄຊຍະເສດຖາທິຣາດ ຫາຍສາບສູນຢູ່ເມືອງອົງການ ທີ່ຫລາຍຄົນເຂົ້າໃຈວ່າ ເມືອງອົງການ ຄືເມືອງຂະເມນ ແລະ ການຫາຍສາບ ສູນ ຂອງ ເຈົ້າໄຊຍະເສດຖາທິຣາດ ຍ້ອນໄປປາບພວກກະບົດ ເພົ້າລາວເທົ່ງ ຫລືຫລົງກົນພະຍານະຄອນ ທີ່ນັກຂຽນບາງທ່ານໄດ້ຂຽນໄວ້ໃນປຶ້ມປະຫວັດສາດ ລາວບາງຫົວ. ພ້ອມກັນນີ້ ທ່ານຈະໝົດຄວາມສົງໃສທີ່ວ່າ " ຄົນລາວລຸ່ມ ແລະ ພຸທສາສນາ ໄດ້ເຂົ້າມາໃນດິນແດນອັດຕະປື ແຕ່ເມື່ອໃດ ແລະ ດ້ວຍເຫດການ ແນວໃດ ? ".

ສຳລັບທ່ານທີ່ມີມາຕຸພູມ ຢູ່ແຂວງອັດຕະປື, ທ່ານຈະໄດ້ຮູ້ການຕໍ່ສູ້ຂອງ ຊາວອັດຕະປື ໃນຫລາຍຊັ່ນຄົນ ເກືອບ 200 ປີ ຜ່ານມາ ກັບພວກລ່າເມືອງ

ຂົ້ນສະຍາມ (ໃຫ) ແລະ ຝຣັ່ງເສດ ຊາວອັດຕະປື ໄດ້ເສັຍສະຫລະເລືອດເນື້ອ ໃນການຕໍ່ສູ້ ບໍ່ຈັກວ່າເທົ່າໃດ. ມູນເຊື້ອຕໍ່ສູ້ຂອງບັນພະບຸຣຸດດັ່ງກ່າວ ໄດ້ຫລໍ່ ຫລອມລູກຫລານຊາວອັດຕະປື ໃຫ້ມີຄວາມອົດທົນ ມີຈິດໃຈກ້າດັ່ງເພັດ ເດັດ ດັ່ງເຫລັກກ້າ ສົມກັບສຳນັ້ນຍານນາມວ່າ " ລູກຫລານເຈົ້າໄຊຍະເສດຖາທິຣາດ ກະສັດລ້ານຊ້າງຜູ້ລີຊີ່ແທ້ ".

ຂ້າພະເຈົ້າ ຂໍຮູ້ບຸນຄຸນ ແລະ ຂອບໃຈ ທ່ານ ສາລີ ຄຳສີ ອະດີດ ເອກ ອັກຄະລັດກະທູດລາວ ປະຈຳ ໄຕກຽວ, ອິນເດັຍ ແລະ ອົງການສະຫະປະຊາຊາດ ທ່ານ ຄຳ ເພົາ ພອນແກ້ວ ອະດີດເລຂາທິການ ອົງການຢູເນສໂກ ແລະ ອະດີດ ຫົວໜ້າຫ້ອງວ່າການ ກະຊວງສຶກສາທິການ, ທ່ານ ດຣ. ມົງຄົນ ໂດນສະໂສລິດ ຫົວໜ້າກົມການຂ່າວ ແລະ ຜູ້ຊ່ຽວຊານກົດໝາຍ ລະຫວ່າງປະເທດ ກະຊວງ ການຕ່າງປະເທດ ທ່ານ ອາຈານ ເສັງ ແສງສຸຣິຍະ ຮອງຫົວໜ້າກົມອາຊີວະ ສຶກສາ ແລະ ການສຶກສາຊັ້ນສູງ ທີ່ໄດ້ໃຫ້ຂໍ້ມູນ ແລະ ເອກະສານປະກອບການ ຄົ້ນຄ້ວ້າ. ຂໍຂອບໃຈ ທ່ານ ພໍເກົ້າ ສີຍາ ກົມມະເມືອງ ແລະ ທ່ານ ຄຳໄພ ອາມາດມຸນຕີ (ບ້ານຝັ່ງແດງ) ທ່ານ ກຳວອນ ບົວພາສິດ ແລະ ທ່ານ ພ.ຕ ສົມບູນ ສຸດທິຈັກ (ບ້ານຄັນມະກ່ອງ) ທີ່ໄດ້ໃຫ້ຂໍ້ມູນ ການປົກຄອງສະໝັຝຣັ່ງ ເສດ ແລະ ຊ່ວຍເກັບຂໍ້ມູນບູຮານສະຖານ ວັດລະມານ, ປາສາດຫີນ ຊະແຣ ແລະ ປາສາດຫີນຂອມ ປາກເຊ. ຂໍຂອບໃຈ ນ. ທັດສະນີ ພັນແພງດີ ຜູ້ຈັດພິມ ຕົ້ນສະບັບ ແລະ ຈັດໜ້າ ເຮັດໃຫ້ປຶ້ມຫົວນີ້ ມີຄວາມກະທັດຮັດ ງົດງາມ ແລະ ເປັນຕາອ່ານ.

ຫລັກຖານ ແລະ ຂໍ້ມູນ ທີ່ໄດ້ຮີບໂຮມໄວ້ ໃນປຶ້ມຫົວນີ້ ຜູ້ຂຽນບໍ່ທັນໄດ້ ຄົ້ນຄວ້າລົງເລິກ ແລະ ວິໃຈລະອຽດ ດັ່ງນັ້ນ, ອາດຈະມີຂໍ້ຜິດພາດ ບໍ່ຄົບກ້ວນ ຫວັງວ່າທ່ານຜູ້ອ່ານ ແລະ ຜູ້ຮູ້ທັ່ງຫລາຍ ຈະໃຫ້ອະໄພ ແລະ ໃຫ້ຄຳຄິດເຫັນ ຕິຊົມ ເພື່ອຈະໄດ້ປັບປຸງໃຫ້ດີຂຶ້ນ ໃນການຈັດພິມຕໍ່ໄປດ້ວຍ.

ສາລະບານ

ເນື້ອເລື້ອງ	ໜ້າ
ບົດທີ I ຄວາມເປັນມາຂອງອັດຕະປື	1
- ອັຊກາບ ເຈົ້າໄຊຍະເສດກາທິຣາດ	6
- ເຈົ້າໄຊຍະເສດກາທິຣາດ ຍົກທັບຈາກອັດຕະປື ມາຊັບໄລ່ພະມ້າ	12
- ພະມ້າຕີວຽງຈັນ ຄັ້ງທີ II	15
- ຍົກທັບໄປອັດຕະປື ຄັ້ງທີ II	23
- ພະມ້າຕີວຽງຈັນຄັ້ງທີ III	26
- ກາບຕໍ່ສູ້ຂອງຂະບວນກາບໄຊຍະເສດກາທິຣາດ	30
- ຄວາມເຫັນຂອງນັກປະຫວັດສາດ ກ່ຽວເລື້ອງກາບສະຫວັນນະຄົດ ຂອງສົມເດັດພຣະເຈົ້າໄຊຍະເສດກາທິຣາດ	35
- ອັຊກາບ ເຈົ້າສ້ອຍສີສະໝຸດ ພຸດທາງກູນ	43
- ລາວລຸ່ມ ແລະ ພຣະພຸທສາສນາ ເຂົ້າມາໃນອັດຕະປື	47
ບົດທີ II ອັດຕະປື ເປັນຫົວເມືອງຂຶ້ນ ຂອງ ສະຍາມ	53
- ກາບເກັບສ່ວຍ ຂອງສະຍາມ ຈາກລາວ	67
- ຂະບວນກາບຕໍ່ຕ້ານ ກາບປົກຄອງ ຂອງສະຍາມ	72
- ນະໂຍບາຍຄຸກຄາມ ຂອງສະຍາມ	78

ບົດທີ III ລຳດັບເຫດການ ຝຣັ່ງເສດ ເຂົ້າປົກຄອງລາວ 92

ບົດທີ IV ອັດຕະປື ພາຍໃຕ້ການປົກຄອງ ຂອງຝຣັ່ງເສດ 101

- ການຊຸດຮີດເຜຣງງານ ແລະ ການເກັບພາສີ 112

ບົດທີ V ການຕໍ່ສູ້ຂອງຊາວອັດຕະປື ຕໍ່ການຊຸດຮີດຂອງຝຣັ່ງ 127

- ການຕໍ່ສູ້ຕ້ານຝຣັ່ງ ຂອງຂະບວນລາວອິດສະຫລະ 127
- ລັດກະບານລາວອິດສະຫລະ 138
- ຝຣັ່ງເສດ ກັບຄືນມາເອົາລາວ ຄັ້ງທີ II 140
- ຈັດຕັ້ງກອງໄຊຈັກກະພັດ 143
- ສ້າງຕັ້ງ ເຂດຕໍ່ຕ້ານ ລາວໃຕ້ 150
- ຍ້າຍທີ່ໝັ້ນຕໍ່ຕ້ານ ໄປທິດຕາເວັນຕົກ 152
- ຈັດຕັ້ງ ລັດກະບານລາວຕໍ່ຕ້ານ 157
- ການຮ່ວມສຳພັນສູ້ຮົບ ລາວ-ຫວຽດນາມ-ກຳປູເຈັຍ 159
- ປັ້ນອະວະສານ ຂອງນັກລ່າເມືອງຂຶ້ນຝຣັ່ງເສດ 168

ບົດທີ VI ອານາຈັກຂອມ 180

- ການຂະຫຍາຍອິດທະພົນ ທາງວັດທະນະທຳ-ສັງຄົມ ຂອງຂອມ 186
- ອິດທິພົນທາງວັດທະນະທຳ 193
- ອານາຈັກ ເຈນລະ 200
- ເຈນລະນ້ຳ 207
- ເຈນລະບົກ 210

ປະຫວັດ

ເມືອງອັດຕະປື (ຄວາມຈະເລີນຮຸ່ງເຮືອງ ກ້າວໜ້າ)

ບົດທີ I

ຄວາມເປັນມາຂອງອັດຕະປື

" ແຕ່ດັ້ງເດີມມາ ດິນແດນຕອນນີ້ ແມ່ນຄົນຊາດລາວ ຕັ້ງບ້ານເຮືອນ ຢູ່ອາໄສ ແລະ ປົກຄອງກັນເອງ ມີຄວາມຈະເລີນຮຸ່ງເຮືອງ ກວ້າງໃຫຍ່ໄພສານ ບໍ່ຕ່ຳກວ່າຊາດອື່ນ ໃນສະໝັຍດຽວກັນ ແລະ ເປັນຊາດເກົ່າແກ່ຊາດໜຶ່ງ ໃນ ໂລກ ".

ເມື່ອຂອມມີອຳນາດຂຶ້ນ ທາງຕອນໃຕ້ ບໍລິເວນທີ່ເປັນປະເທດ ກຳປູ ເຈຍ ປັດຈຸບັນ ຈຶ່ງແຜ່ອຳນາດ ແລະ ເຂົ້າຄອບຄອງດິນແດນ ທີ່ເປັນອັດຕະປື ປັດຈຸບັນ; ກວມໄປເຖິງຈຳປາສັກ, ສະຫວັນນະເຂດ, ຄຳມ່ວນ (ສີໂຄດຕະບອງ) ວຽງຈັນ (ທາດຊາຍຟອງ).

ห้ามจำหน่าย

ເມືອງອັດຕະປື ແຕ່ເດີມບໍ່ປະກົດຊື່ແນວໃດ ຈົນຮອດສະໝັຍຂອມ ແຜ່ ອຳນາດ ມາປົກຄອງ ດິນແດນທີ່ເປັນແຂວງອັດຕະປື ປັດຈຸບັນ ຈຶ່ງປະກົດຊື່ວ່າ " ຄວາມະຣັກອົງກາບ " ຕັ້ງຢູ່ລຳນ້ຳເຊກຸ ນ້ຳນີ້ຕົກໃສ່ນ້ຳເຊກະໝານ ແລະ ຕໍ່ໃສ່ ເຊກອງ (ໜ້າ 1 ໜັງສືພິມສາວະລີ ໂດຍ ພຣະຫລັກຄຳວະຊິຣະຍານະວິສຸດທິຄຸນ ປະດິດ ພຸທທະໂຄສະໄກ). ຢູ່ປາກເຊກຸ (ຈາກປາກເຊກຸ ໄປປະມານ 500 ມ - 1,000 ມ) ມີປາສາດຂອມຫລັງໜຶ່ງ ສ້າງຂຶ້ນລະຫວ່າງ ສະຕະວັດທີ 5-7 ປັດຈຸ

ບັນ ຍັງເຫລືອແຕ່ດິນຈີ່ຊະຊາຍ ຢູ່ໃນບໍລິເວນດ້ງກ່າວ ສ່ວນແຜ່ນຫີນ ທີ່ກໍ່ເປັນ ອົງປາສາດນັ້ນ ທ່ານ ຟັງແລ (Mr. Fendler) ນາຍທະຫານຝຣັ່ງ ຜູ້ມາປະຈຳ ຢູ່ເມືອງອັດຕະປື ປີ 1934 ໄດ້ພາປະຊາຊົນ ມາມ້ຽງເພ ແລະ ເອົາມາເຮັດຂັ້ນ ໄດຫີນ ຢູ່ບ້ານຝັງແດງ ໃນປັດຈຸບັນ. ສ່ວນໜຶ່ງເອົາໄປໄວ້ວັດຝັງແດງ (ແຜ່ນໜຶ່ງ ຕິດຢູ່ດ້ານຫລັງ ສາລາໂຮງທັມ ອີກແຜ່ນໜຶ່ງ ເອົາອັດປະຕູເຂົ້າປີທາດໃຫຍ່ (ທາດອິນປົງ) ວັດຝັ່ງແດງ. ຈຳນວນໜຶ່ງເອົາໄປໄວ້ວັດຫລວງ ເມືອງເກົ່າ.

ເຂດນ້ຳແດນດິນຂອງເມືອງຮາມະຣັກອົງກາບ ເວລານັ້ນ ທິດເໜືອ ຕິດເຂດເມືອງພະຍາຕຸມລາງ ຕະໂປນ ໂພນສີມ ແຕ່ນ້ຳຂອງຮອດແດນຫວຽດ. ໄມ້ລົ້ມແປ່ງ. ທາງທິດໃຕ້ ຕິດເຂດ່ເມືອງພະຍາລະແວກ (ຂອມ) ປາກນ້ຳ ເຊກອງ ຕົກໃສ່ນ້ຳຂອງ. ທາງທິດຕາເວັນອອກ ຕິດເຂດແດນຈາມ-ຫວຽດ. (. ຕໍ່ມາຫຍັບເຂົ້າມາເກືງໝອງໄກ່ໂອກ ຍອດນ້ຳອ່າງ. ພາຍລຸນມາໄດ້ປັກຫລັກ ຫີນໄວ້ໝອງຟ້າ) ˙ ທາງທິດຕາເວັນຕົກ ລຽບຂຶ້ນຕາມແຄມຂອງ ແຕ່ປາກເຊ ກອງ ຮອດເມືອງພຍາຕຸມລາງ.

ຕາມຕຳນານກ່າວວ່າ ພໍ່ຂອງພະນາງສີພະເກດ ໄດ້ສ້າງປາສາດຫີນຢູ່ ປາກເຊຊຸນີ້. ເປັນຂອງຂວັນໃຫ້ແກ່ນາງໃນງານແຕ່ງດອງ ເມື່ອພະນາງສີພະ ເກດ ໄດ້ລູກຊື່ " ພະຍາຄຳຄັດ " ໄດ້ເປັນກະສັດຄອງເມືອງ "ຮາມະຣັກອົງກາບ" ພະຍາຄຳຄັດ ມີມະເຫສີເປັນລາວ ມີລູກຫລານສືບຕະກຸນມາເປັນເວລາຫລາຍ ຮ້ອຍປີ.

ຕໍ່ມາເກີດຟົນແລ້ງ ຮອດສາມປີ ປະຊາຊົນອຶດຢາກ ງົວຄວາຍຊ້າງ ມ້າ ກໍ່ລົ້ມຕາຍ ເກີດຫ່າ ຄົນລົ້ມຕາຍຢ່າງຫລວງຫລາຍ ຜູ້ຄົນໄດ້ຫລົບໜີໄປຢູ່

ນ້ຳຍາດພີ່ນ້ອງເມືອງຕຸມວາງ ເມືອງມະລຸກຂວນະຄອນ, ພາບ້ຳ, ຊາຍຟອງ ແລະ ອື່ນໆ ເມືອງຣາມະຣັກອົງກາບ ກໍ່ກາຍເປັນເມືອງຮ້າງ ດັ່ງນັ້ນ ພະຍານະຄອນ ຈຶ່ງເອົາເມືອງຣາມະຣັກໄດ້ ແລະ ເປັນເມືອງຂຶ້ນ ຕໍ່ພະຍານະຄອນ ແຕ່ນັ້ນ ມາຈົນຮອດສະໄໝ ພະຍາອິນທະປັດກາບະຄອນ ຍົກໃຫ້ພະຍາຟ້າງຸ່ມ ໃນປີ ຄ.ສ 1353.

ຫລັງຈາກນັ້ນຫລາຍປີ ປະຊາຊົນທີ່ໄປຢູ່ເມືອງອື່ນ ຄິດຮອດບ້ານເມືອງ ຈຶ່ງຄືນມາ ແຕ່ບໍ່ໄປຢູ່ໃກ້ຄຸ້ມ ປະສາດຫີນ ຍ້ອນຢ້ານອາຣັກ ແລ້ວພີ່ສາງຈຶ່ງແຍກ ຍ້າຍກັນໄປປຸກບ້ານແປງເຮືອນ ເປັນກຸ່ມ ເປັນຈຸ້ມ ລຽບຕາມແມ່ນ້ຳ ເຊກອງ ແລະເຊກະໝາມ. ທ້າວພະຍາ ປົກຄອງເມືອງຣາມາຣັກອົງກາບ ເຫັນ ປະຊາຊົນບໍ່ກັບຄືນມາຕັ້ງບ້ານເຮືອນ ຢູ່ຢ່າງເດີມ ຈຶ່ງຍ້າຍເມືອງຂຶ້ນໄປ ຕັ້ງຢູ່ ທາງເໜືອນ້ຳເຊກອງ ໃຫ້ຊື່ເມືອງໃໝ່ນີ້ວ່າ "ເມືອງລະມາມ" ແຕ່ຄົນທັ່ງຫລາຍ ຍັງເອີ້ນຕາມຊື່ເດີມວ່າ ຣາມະຣັກອົງກາບ ຢູ່. (ປັດຈຸບັນ ແມ່ນເມືອງລະມາມ ແຂວງເຊກອງ ບໍລິເວນທີ່ເປັນປະສາດ ຣາຊວັງ ເມືອງເກົ່າ ປະຊາຊົນເອີ້ນ ວ່າ "ດົງເມືອງ ") ໄດ້ຕັ້ງເຊື້ອສາຍ ພະຍາ ຄຳຄັດ ໃຫ້ເປັນເຈົ້າ ປົກຄອງເມືອງ ລະມາມສືບມາ. ກະສັດປົກຄອງ ເມືອງລະມາມ ຄົນສຸດທ້າຍ ຊື່ວ່າ " ພຣະ ແກ້ວບົວໂຮມ " ປົກຄອງເມືອງລະມາມ ໄດ້ສິບປາຍປີ ກໍ່ສິ້ນພະຊົນ ".

ພຣະຣາຊບຸດ ຂອງພຣະແກ້ວບົວໂຮມ ຊື່ " ຣາມະເທວະຣາດ " ໄດ້ຂຶ້ນ ປົກຄອງເມືອງແທນໄດ້ 3 ປີ ຈຶ່ງຍ້າຍໄປສ້າງບ້ານໂສກ ບ້ານຊຸງຄອກຊ້າງ (ແຕ່ກ່ອນບ້ານເຫລົ່ານີ້ເປັນຄອກຊ້າງ ແລະເຝິກຊ້ອມຊ້າງ ຂອງພະຍາລາວທົ່ງ, ພະຍາຣາມະຣັກ ແລະ ພະຍາອື່ນໆ ສືບຕໍ່ກັນມາຫລາຍພຣະອົງ). ໃກ້ກັບເມືອງ ລະມາມນັ້ນເອງ ຍົກຂຶ້ນເປັນເມືອງໂສກ ເມືອງຊຸງຄອກຊ້າງ. ພາຍຫລັງສ້າງ ເມືອງໂສກ ເມືອງຊຸງຄອກຊ້າງແລ້ວ ຕໍ່ມາອີກ 20 ປີ ພຣະອົງກໍ່ສິ້ນພຣະຊົນ.

ບໍລິເວນທີ່ເປັນເມືອງຊຸງ ໃນເມື່ອກ່ອນ, ຕັ້ງຢູ່ລະຫວ່າງພູນາງນອນ ແລະພູອີ່ຫລາວຢູ່ຟາກເຊກອງ ເບື້ອງກ້ຳຂວາ ປັດຈຸບັນແມ່ນບ້ານສະປວນ ແຕ່ກ່ອນມີ 2 ຕາແສງ ດຽວນີ້ຈັດຕັ້ງເປັນ 2 ບ້ານ ຄືສະປວນເໜືອ ແລະ ສະປວນໃຕ້, ເປັນບໍລິເວນ ທີ່ເໝາະສົມ ໃນການຄ້ອງຊ້າງ ແລະລ້ຽງຊ້າງ ເພາະຕັ້ງຢູ່ລະຫວ່າງພູ 2 ໜ່ວຍ ແລະອຸດົມສົມບູນດ້ວຍຕົ້ນໄມ້ ແລະ ຫຍ້າຕະຫລອດປີ ຊຶ່ງເປັນອາຫານຊ້າງເປັນຢ່າງດີ. ສ່ວນເມືອງໂສກນັ້ນ ຕັ້ງຢູ່ຕີນພູຫລວງ ຫ່າງຈາກນ້ຳເຊກອງ ປະມານ 3 ກິໂລແມັດ ປັດຈຸບັນ ແມ່ນບ້ານໂສກ, ບ້ານຂຸມຄ່ຳ. ບ້ານໝື່ນຫົວເມືອງ, ບ້ານກະຝາກ. ຫີນປະຕູເມືອງໂສກ ຕັ້ງຢູ່ບ້ານກະຝາກ ໃນປັດຈຸບັນ. ເຊື່ອໃຈວ່າອານາເຂດ ເມືອງໂສກ ເວລານັ້ນ ອາດຈະກວມເອົາ ຕາແສງນ້ຳຕຽງທັງໝົດ (ສຳພາດ ທ່ານ ພ.ຕ ສົມບູນ ສຸດທິຈັກ).

ສ່ວນລະມານ ຢູ່ບ້ານແກ້ງລະມານ ເຊກະໝານນັ້ນມີຊາກດິນຈີ່ເປັນກອງ ພໍໃຫ້ສັງເກດໄດ້ວ່າ ແມ່ນສີມ ແລະ ທາດ ໃນເມື່ອກ່ອນ. ຕາມການໄປເບິ່ງຕົວຈິງ ໃນວັນທີ 29/08/2003 ກັບທ່ານ ບຸນມາ ກົມມະເມືອງ ແລະທ່ານ ກາວອນ ບົວພາສິດ ແນວໂຮມບ້ານຄັນມະກ່ອງ ເມືອງໄຊເສດຖາ ສັນນິຖານວ່າ " ບ້ານແກ້ງລະມານນີ້ ອາດຈະເປັນພຽງບ້ານໜຶ່ງ " ມີວັດ ແລະ ຜູ້ຄົນທີ່ເປັນຊາວພຸດ ມາຕັ້ງກິນການທຳມາຫາກິນ. ໃນບໍລິເວນໃກ້ກັນນີ້ ກໍມີບ້ານຊື່ວ່າ ບ້ານຝັ່ງແດງ ບ້ານຄັນມະກ່ອງ ລຽບຕາມແຄມນ້ຳເຊກະໝານ ແຕບໍ່ປະກົດເຫັນຊາກກຳແພງ ສ້າງປະສາດກ່ຳແພງ ຊຶ່ງເປັນສັນຍາລັກ ຂອງເມືອງສະໄໝຂອມ ອາດຈະເປັນໄປໄດ້ວ່າ ຊົນຊາດລາວປະສົມກັບຂອມ ຈາກປາກເຊຊຸ ຂຶ້ນມາຕາມລຳນ້ຳເຊກອງ ມາຕັ້ງຢູ່ລະມານເຊກອງ ເພາະມີຊາກປະສາດ ແບບດຽວກັບຢູ່ປາກເຊຊຸ. ສ່ວນຢູ່ບ້ານແກ້ງລະມານ ແມ່ນຊາວລາວ ທີ່ກີສາສະໜາພຸດ ຂຶ້ນມາຕັ້ງບ້ານເຮືອນຢູ່ ແລະ ທຳມາຫາກິນ ໃນຕອນຫລັງ ພາຍຫລັງພຸທສາສນາ ແຜ່ເຂົ້າມາຄົນແດນຕອນນີ້ແລ້ວ. (ເຈົ້າຟ້າງຸ່ມ ມະຫາຣາດ ນຳເອົາພຸທສາສນາ ເຂົ້າມາລາວ ຄ.ສ 1353).

ຕາມລຳນ້ຳເຊກອງນີ້ ມີປະສາດຫີນຂອມ ອີກແຫ່ງໜຶ່ງ ຢູ່ວັດບ້ານ ຊະ ແຄະ (ບ້ານໂພນງາມ) ປັດຈຸບັນ ຍັງປະກົດເຫັນກອງຫີນ ຢູ່ຂ້າງຫໍສົງຂອງວັດ ແລະ ເຫັນແຜ່ນຫີນຫລາຍກ່ອນ ທີ່ມີຮູບເທວະຮູບ ແລະ ລວດລາຍຂອງຂອມ ຫລົງເຫລືອຢູ່ໃຫ້ເຫັນໃນວັດດັ່ງກ່າວ ເປັນຈຳນວນຫລວງຫລາຍ. ເຊື່ອໃຈວ່າ ພວກຂອມໄດ້ແຜ່ອິດທິພົນ ຂຶ້ນຕາມລຳນ້ຳເຊກອງ ຈົນເຖິງລະນາມ, ກາຍສະ ນາມ (ດົງເມືອງ) ຂຶ້ນໄປ ກໍ່ບໍ່ປະກົດເຫັນປະສາດຫີນຕື່ມອີກ ຕາມລຳນ້ຳສາຍນີ້.

ສະໄໝເຈົ້າຟ້າງຸ່ມມະຫາຣາດ

ປາງພະຍາຟ້າງຸ່ມ ຢູ່ໃນປະເທດຂະເມນນັ້ນ ຈ.ສ 768 ຄ.ສ 1350 ພະຍາ ອິນທະປັດກາບະຄອນ ໄດ້ຕົກລົງໃຫ້ກຽມກອງທັບ ໃຫ້ພະຍາຟ້າງຸ່ມ ກັບ ຄືນເມືອເອົາເມືອງຊຽງທອງ, ພຣະອົງ ໄດ້ໃຫ້ປູ່ລ້ຽງ ແລະ ຍາວລ້ຽງ ຂອງພະ ເຈົ້າຟ້າງຸ່ມ ພາບໍລິວານ ອັນມີເສນາຊ້າງ ຂອງພະຍາອິນທະປັດກາບະຄອນ ເປັນຜູ້ນຳໜ້າ ຂຶ້ນມາຕາມລຳແມ່ນ້ຳເຊກອງ ຮອດເມືອງ "ຣາມະຣັກອົງກາບ", ພະຍາຣາມະຣັກອົງກາບ ຈັດໝໍ້ຄ້ອງຊ້າງໃຫ້ປູ່ລ້ຽງ ຍາວລ້ຽງ ຄ້ອງເອົາຊ້າງ ປ່າ ມາເຝິກແອບ ພ້ອມທັງເຝິກເອົາຊາວລາວເມືອງນີ້ ເປັນທະຫານຊ້າງ ໄດ້ ຊ້າງໜຶ່ງຮ້ອຍ ຄົນໜຶ່ງພັນ ເປັນເວລາ 4 (ສີ່) ປີ ແລ້ວຍົກໄປໃຫ້ພະຍາຟ້າ, ພະຍາ ຟ້າກໍ່ຍົກຂຶ້ນເມືອເອົາເມືອງຊຽງທອງ ໃນປີ ຈ.ສ 711 (ຄ.ສ 1353).

ພະຍາອິນທະທັດກາບະຄອນ ໄດ້ຍົກພະນາງ ແກ້ວກັ້ງຍາ ທິດາສາວ ຂອງພຣະອົງ ໃຫ້ເປັນອັກຄະມະເຫສີ ຂອງພະຍາຟ້າ ແລະ ຍົກມອບເມືອງ ຣາ ມະຣັກອົ່ງກາບ ແລະ ເຂດແດນນະຄອນຈຳປາສັກ ໃຫ້ພະຍາຟ້າ ພ້ອມດຽວກັນ. ຕັ້ງແຕ່ນັ້ນມາ ເມືອງຣາມະຣັກອົງກາບ ທີ່ຂອມແຜ່ອຳນາດ ເຂົ້າຄອບຄອງ ຫລາຍສະຕະວັດ ຈຶ່ງກັບຄືນມາເປັນຂອງລ້ານຊ້າງ ຈົນທ້ຶງທຸກມື້ນີ້.

ธัຊภาบ พธะเจ้าไชยะเสดภาทิธาด.

พะเจ้าไชยะเสดภาทิธาด ຂึ้นคองอาบาจักล้านบา (ชฺยางใหฺม่) ใบปี ค.ส 1548 (บาๆสะบับว่า 1546) พ.ส 2091 ผละ ได้มาคองอาบาจักล้านฆ้าๆชฺยางหอๆ สืบผนพธะเจ้า ไพทีสาธะธาด (บิดา) ใบปี ค.ส 1550 (พ.ส 2093) พธะอ๊งได้ย้ายบะคอบหลวๆ จากบะคอบชฺยางหอๆ มาบะคอบวฺยางจับ. เฮ๋งภาบกฺรม ยักย้ายบะคอบหลวๆบี้ ได้มีมา ผต่สะไหฒ พธะเจ้าไพทีสาธะธาด เฮ๋งพธะอ๊ง (ไพทีสาธะธาด) ได้ภะกฺรมค้ายคู ปะสาดธาฆวัๆ ไว้จำบวบหมื่งผล้ว. เมื่อพธะเจ้า ไชยะเสดภาทิธาด ย้ายมา ก่ได้ดำเบินภาบสืบต่ตามผผนเดิม ทังบี้ก่ย้อบเตันว่า วฺยางจับเปันใจกาๆ ของอาบาจักล้านฆ้าๆ. เปันบ่อิเวบที่มีที่ๆพฺยาๆ ฝ่าๆภว้าๆขวาๆ ผละ ห่าๆไภจากพะม้า เพาะพะม้ามักธุกธาบยู่สะเฒี. ส่วบบะคอบชฺยางด๊า ชฺยางหอๆบั้บ พธะอ๊งได้ตั้งผม่ทับถิบหมื่ง ผละ พธะสังคะเจ้า ให้เผื่าธักสา ผละ ได้พาปะชาชิบ ส้าๆจัดไว้เปันอะบุสอบ ผก่บะคอบชฺยางหอๆ ให้ชื่อว่า " จัดชฺยางหอๆ " ผล้วมอบพธะบาๆ ไว้ให้ชาวเมื่องสักภาธะบูชา.

พธะอ๊งได้เอ๋าใจใส่ ไบภาบปับปุงก่ำลัๆ เพื่อป้องกับ ธาชอาบาจักเปันสำคับคฺยางคู่กับภาบส้าๆสาพัดทะบา ผละเผียผผ่พุทสาสบา. ไบเวลาที่ พธะอ๊งส้าๆค้ายคู ก่ำผพาๆเมื่องยู่บั้บ พธะอ๊งได้ส้าๆ " พธะทาดสิสองธัก " ขึ้บ ไบปี ค.ส 1560 ยู่อ่ำเพิ้าบฆ้าย (เดิมเปันเขดผดบละหว่าๆ กุๆสิอะยุทะยา กับกุๆสิสัดตะบาณะบะทุดล้านฆ้าๆ) เพื่อให้เปัน เคื่องหมายเขดผดบ ของสองอาบาจัก คืออาบาจักล้านฆ้าๆ ผละ อาบาจักล้านเพัย (สยาม).

ພຣະອົງໄດ້ພາປະຊາຊົນ ສ້າງກຳແພງເມືອງ 3 ຊັ້ນ ແລະ ສ້າງຄ້າຍຄູ ອ້ອມຕົວ ນະຄອນວຽງຈັນ ເພື່ອປ້ອງກັນຂ້າເສິກ ຄື " ວຽກຄຸກ ", ວຽງພັນ ພ້າວ, ວຽງພະໂຄ, ວຽງປາກຫ້ວຍຫລວງ, ວຽງແກ້ວ, ວຽງຄຳ ເປັນຕົ້ນ. ພ້ອມກັນນີ້ ພຣະອົງກໍ່ໄດ້ເຮັດກຳ້ຫລົບໄພ ຢູ່ບໍລິເວນພູເຂົາຄວາຍ ເພື່ອໃຫ້ເປັນ ບ່ອນລີ້ຊ້ອນຂອງປະຊາຊົນ ເມື່ອເກີງຄາວຈຳເປັນ ເວລາຂ້າເສິກ ເຂົ້າຍຶດ ນະຄອນວຽງຈັນ.

ປີ ຄ.ສ 1562 ພຣະອົງ ໄດ້ສ້າງປ້ອມປາການແຫ່ງໜຶ່ງ ທີ່ແຄມ ປາກນ້ຳຖິ້ມໃຫ້ຊື່ວ່າ "ວຽງປາກຖິ້ມ", ໄດ້ສ້າງປ້ອມປາການອີກແຫ່ງໜຶ່ງຢູ່ໜອງ ຫານນ້ອຍ ເອີ້ນວ່າ " ວຽງໜອງຫານ ". ປີຕໍ່ມາ ໄດ້ສ້າງປ້ອມປາການອີກແຫ່ງ ໜຶ່ງ ຢູ່ປາກນ້ຳຫີນປູນ ມີກຳແພງແໜ້ນໜາ ໝັ້ນຄົງ ໃຫ້ຊື່ວ່າ " ວຽງສຸຣິນ ".

ຍົກທັບໄປເມືອງຄຳມ່ວນ

ໃນການສ້າງວຽງໜອງຫານນີ້, ພຣະອົງ ພ້ອມກັບພະຍາແສນສຸຣິນທະ ຄວ່ຽງຟ້າ, ພະຍາ ຈັນກອງນາງ ແລະ ແມ່ທັບນາຍກອງ ໄດ້ມາພັກຢູ່ວຽງໜອງ ຫານ ເປັນເວລາດົນສົມຄວນ. ສ່ວນນະຄອນວຽງຈັນ ພຣະອົງໄດ້ມອບໃຫ້ ມະ ຫາອຸປຣາດ ວໍຣະວົງໂສ ກັບ ເຈົ້າພ້າຂາວ ເຈົ້າຄອງນະຄອນພວນ ເຝົ້າຮັກສາ ແທນ. ເມື່ອພຣະອົງພິຈາຣະນາເຫັນວ່າ ກິດຈະການກໍ່ສ້າງໃກ້ຈະສຳເລັດແລ້ວ, ພຣະອົງຈຶ່ງໄດ້ມອບໃຫ້ ພະຍາແສນສຸຣິນທະຄວ່ຽງຟ້າ ແລະພະຍາ ຈັນສີທະຣາດ (ຈັນກອງນາງ) ສືບຕໍ່ການກໍ່ສ້າງ. ສ່ວນພຣະອົງ ພ້ອມດ້ວຍແມ່ທັບຄົນອື່ນໆ ຄືພະຍາຊ້າຍແຂນຫັກ, ພະຍາມືເຫລັກ ແລະ ພະຍາແສນຊ້ຽງທ່າວ ເປັນຕົ້ນ ລົງໄປເມືອງໂສກ ເມືອງຊຸງ (ອັດຕະປື) ເຊິ່ງຕັ້ງຢູ່ທິດຕາເວັນອອກ ກ້ຳໃຕ້

ຂອງອານາຈັກລ້ານຊ້າງ, ເພື່ອຄ້ອງຊ້າງປ່າ ເອົາມາເຝິກຂອບເປັນຊ້າງເສິກ ພ້ອມກັນນີ້ ພຣະອົງກໍ່ໄດ້ຂົນຂວາຍປະຊາຊົນ ຕາມລຳນ້ຳເຊກອງ, ເຊຊານ ແລະ ເຊປົກ (ຢູ່ບ້ານດອນ, ລົມພັດ ຂະເມນ) ໃຫ້ຍົກລະດັບທາງວັດທະນະທັມ ໃຫ້ສູງຂຶ້ນ ໂດຍໄດ້ເອົາ ພຣະພຸທສາສນາ ເປັນແນວທາງເຜີຍແຜ່.

ຄັນເປຣອດດິນແດນນັ້ນແລ້ວ ພຣະອົງຈຶ່ງເລືອກ ພູມສະກາບແຫ່ງໜຶ່ງ ທີ່ເອີ້ນວ່າ "ທົ່ງຂີ້ຄວາຍ" ປະຊາຊົນທ້ອງຖິ່ນເອີ້ນວ່າ "ຫາດຂີ້ຄວາຍ" ຄືທີ່ຕັ້ງ ເມືອງເກົ່າໄຊເສດຖາປັດຈຸບັນ ເປັນບ່ອນຕັ້ງພະນຽດຄ້ອງຊ້າງປ່າ ປະກົດວ່າ ໄດ້ ຊ້າງຫລາຍຮ້ອຍໂຕ ທີ່ນັ້ນຈຶ່ງເປັນບ່ອນຕັ້ງພະນຽດຄ້ອງຊ້າງປ່າ ເພື່ອເອົາ ມາເຝິກຂອບເປັນຊ້າງເສິກຂອງລາວລ້ານຊ້າງ ໃນສະໄໝຕໍ່ມາ.

ໃນຂະນະດຽວກັນນັ້ນ ພຣະອົງໄດ້ຮ່ວມກັບ ຄະນະສົງ ອັນມີພຣະພິກຂຸ ອົງໜຶ່ງ ທີ່ປະຊາຊົນເອີ້ນວ່າ "ຄູນາຫູຍາວຕັ້ງບ່າ" ເປັນປະທານເຜີຍແຜ່ ວັດທະ ນະທັມ ທີ່ມີຄວາມກ້າວໜ້າ ໃຫ້ແກ່ປະຊາຊົນ ໃນລຸ່ອງນ້ຳເຊກອງ, ເຊຊານ ແລະ ເຊປົກ (ຢູ່ບ້ານດອນ, ລົມເພັດ, ບ້ານບໍ່ແກ້ວ ແຄມເຊປັອກ ກ່ຳປູເຈຍ ແຕ່ກ່ອນເປັນຂອງລາວ).

ຢູ່ທີ່ທົ່ງຂີ້ຄວາຍ ພຣະໄຊເສດຖາທິຣາດ ແລະຄູບາຫູຍາວຕັ້ງບ່າ ໄດ້ ນຳພາປະຊາຊົນ ສ້າງວັດ ແລະຫາດເຈດີ. ພຣະໄຊເສດຖາທິຣາດ ນຳພາປະຊາ ຊົນ ສ້າງພຣະຫາດເຈດີ ສ່ວນຄູບາຫູຍາວຕັ້ງບ່າ ໄດ້ນຳພາປະຊາຊົນ ສ້າງວັດ ເຊັ່ນວັດຫລວງ ແລະ ວັດຫາດ ເປັນຕົ້ນ (ວັດຫລວງ ແລະ ວັດຫາດ ຢູ່ເມືອງ ເກົ່າ ຝາກນ້ຳເຊກະໝາບ ໃນປັຕຈຸບັນ).

(ໜັງສືພົງສາວະຄີ ໜ້າ 113 ບັນທຶກ ໄວ້ວ່າ : ປີ ຈ.ສ 936 (ຄ.ສ 1572). ມີນາຍຮ້ອຍ ມາຈາກນະຄອນກາລະຈຳປາກ (ຈຳປາສັກ) ເອົາຄວາຍ ໄປຂາຍຮອດບ້ານທັກຍົມ ໄດ້ພົບພຣະເຈົ້າໄຊເສດຖາທິຣາດ ແລະ ໄດ້ປຶກສາ ຫາລືກັນ ໄດ້ 3 ປີ ຈຶ່ງພາກັນລົງມາເມືອງລາວ ເພື່ອສ້າງວັດວາ ໃຫ້ເປັນສຸກກະ ເສີມ. .ພຣະອົງຈຶ່ງໄດ້ເອົາພວກຂ້າສະຫລັງ ລົງມາຫລວງຫລາຍ ເຊົ່າຢູ່ບ້ານ ຫາດຂີ້ຄວາຍ ແລ້ວຈຶ່ງມາເມືອງແກ້ງລະນາມ ເຂົ້າຫາພະຍາ ຣາມະທັກອົງ ກາບ ໂສມາຣິດທິ, ພະຍາໂສມາ ກໍ່ຍິນດີຊື່ນຊົມ ຂໍໃຫ້ພຣະເຈົ້າໄຊເສດຖາ ມາຢູ່ ເມືອງຣາມະທັກ ແກ້ງລະນາມດ້ວຍກັນ ແຕ່ພຣະເຈົ້າໄຊເສດຖາ ບໍ່ທັນດີ ຈຶ່ງ ຊວນເອົາພະຍາໂສມາຣິດທິ ກັບອຸປະຣາດ ສຸຣິນຍາທິດ ໄປນີມົນ ເອົາພຣະຄູລຸ ວັດບ້ານແກ້ງລະນາມ, ພຣະຄູຫໍ່ຫອງ ວັດບ້ານທ່ານາກອກ ແລະ ພຣະຄູຫູຍາວ ຕ້ຳບ່າ ວັດບ້ານຫີນໂລງ ມາປະຊຸມປຶກສາຫາລືກັນ ແລ້ວເຫັນດີ ໂຮມເມືອງ ໂສກ, ເມືອງຊຸງ, ເມືອງແກ້ງລະນາມ ໄປຕັ້ງຢູ່ບ້ານຫາດຂີ້ຄວາຍ ບ່ອນດຽວ. ພຣະອົງໄດ້ຊັກຊວນເອົາພວກສອກ, ສະປວນ, ອາຣັກ, ຍາເຫີນ, ລະເວນ, ຊຸ, ໂອຍ, ກະເສງ, ສະລັງ, ເຈັງ, ຈະຣາຍ, ເສນ, ລະແດ, ຝ່ຽງບໍ່ທັນຢູ່ໃຕ້ອຳນາດ ຂອງພຣະອົງ ພ້ອມທັງພວກລາວທັງມວນ ມາຊ່ວຍກັນ ສ້າງບ້ານແປງເມືອງ ຕ້ຳຢູ່ບ້ານຫາດຂີ້ຄວາຍ ລຳນ້ຳເຊກະໜານ ຝັ່ງຊ້າຍຫັ້ນ. ໄດ້ຕັ້ງ ພະຍາໂສມາ ຣິດທິ ເປັນອາດຍາເມືອງ ແລະ ຕັ້ງອຸປຣາດ ສຸຣິຍາທິ ໃຫ້ເປັນອາດຍາບ່າວ, ພຣະອົງໄດ້ມອບພວກລາວ ໃຫ້ຢູ່ໃຕ້ບັງຄັບ ຂອງອາດຍາເມືອງ ໃຫ້ພວກລາວ ເທົ້ງ ຢູ່ໃຕ້ບັງຄັບຂອງອາດຍາບ່າວ).

ທ້າງພຣະເຈົ້າໄຊເສດຖາທິຣາດ ແລະຄູບາຫູຍາວຕ້ຳບ່າ ຕ່າງກໍ່ຢູ່ໃນໄວ ໜຸ່ມແໜ້ນ ແລະ ມີຮູບຮ່າງເລົ້າຄ້ຳ ແລະ ໜ້າຕາຄ້າຍຄືກັນ ຈຶ່ງໄດ້ກາຍເປັນ ສະຫາຍທີ່ຮັກແພງສະນິດແໜ້ນ. ເນື່ອງຈາກຄູບາຫູຍາວຕ້ຳບ່າ ເປັນພຣະພິກຸ

ທີ່ມີຄວາມຮູ້ຄວາມສາມາດ ແລະ ສະຫລາດຫລັກແຫລມ ຈຶ່ງນ່າພາປະຊາຊົນ ໄດ້ດີ. ພຣະເຈົ້າໄຊເສດຖາທິຣາດ ໄດ້ອາໃສຄູບາອົງນີ້ ຊ່ວຍວາງຮາກຖານ ພຣະພຸທສາສນາ ລົງໃນບໍລິເວນລ່ອງນ້ຳຊຶກອາ, ເຊຊ່ານ ແລະ ເຊປົກ ເປັນ ເທື່ອທຳອິດ.

ພຣະອົງ ແລະຄູບາຫູຍາວຕັ້ງບ່າ ໄດ້ຊັກຈູງປະຊາຊົນປ່ຽນອາຊີບຈາກ ການເຮັດໄຮ່ ລົງມາເຮັດນາດຳ, ພ້ອມກັນນີ້ ກໍ່ໄດ້ນຳເອົາວິຊາການໃໝ່ໆ ມາ ໃຫ້ປະຊາຊົນ ເຊັ່ນ ການຮ່ອນຄຳ, ການຫລໍ່ຫລອມໂລຫະ ມາເຜີຍແຜ່ອີກດ້ວຍ.

ພຣະອົງ ໄດ້ພາປະຊາຊົນ ເຮັດສາດຕາອາວຸດຂຶ້ນ ເພື່ອໃຊ້ໃນສົງຄາມ ເພາະພຣະອົງ ຄາດຄະເນໄວ້ວ່າ ໃນອະນາຄົດອັນໃກ້ນີ້ ກອງທັບສັກດິນາພະມ້າ ຄົງຈະຍົກທັບມາຮຸກຮານ ອານາຈັກລາວລ້ານຊ້າງ. (ຢູ່ບ້ານວັງຕັດ ເມືອງ ສານໄຊ ໃນປັດຈຸບັນ ປະກົດມີກອງຂີ້ເຫລັກທົ່ວຫົວພູແຫ່ງໜຶ່ງ ເຊິ່ງປະຊາຊົນ ເອີ້ນວ່າ " ຂີ້ເຫລັກພຣະໄຊ " ມາຕິຫອກດາບຢູ່ທີ່ນັ້ນ. ໃນຫ້ວຍຄຸມ ມີວັງນ້ຳ ແຫ່ງໜຶ່ງ ຫີນຝົນມີດ ມີແຕ່ຮອຍຝົນມີດພ້າຫລາຍຮ້ອຍກ້ອນ ຂອງພຣະໄຊເສດ ຖາທິຣາດ ແລະ ຢູ່ພະລານຫີນສີເຊົ່າ (ບ້ານສີເຊົ່າ) ເມືອງໄຊເສດຖາ ກໍ່ມີ ຮອຍຝົນມີດພ້າ ຂອງພຣະໄຊເສດຖາທິຣາດ ເໝືອນກັນ).

ປະຊາຊົນທ້ອງຖິ່ນ ຂອງອັດຕະປື ໃນເມື່ອກ່ອນ ສ່ວນຫລາຍແມ່ນຊົນ ຊາດລາວເທິງມີຫລາຍເຜົ່າເປັນຕົ້ນວ່າ ເຜົ່າຈະຣາຍ ແລະເຜົ່າກະຍອງ ມັກສູ້ຣົບ ກັນຢູ່ເລື້ອຍໆ. ຕາມຄຳບອກເລົ່າຂອງພຣະສຸວັນນະວົງສາ ອຸປະຣາດເມືອງ ອັດຕະປືວ່າ " ພຣະໄຊເສດຖາ ໄດ້ພາປະຊາຊົນ ມາຕັ້ງບ້ານເຮືອນຢູ່ບ້ານ " ອິດ ກະປື " ປາຍແດນແຄວ້ນຈຳປາສັກ ທ່ຽວເກັ່ຍກ່ອມຂ້າຂັດ, ຂ້ານາແຕ່ລ່ອງ





ພະອາຮາມ

ຢູ່ວັດຫຼວງເມືອງເກົ່າ





ສິມຢູ່ວັດຫຼວງເມືອງເກົ່າ

ເຊກອງ ເຊື້ອມາຕາມສາຍພູຫລວງ ທິດຕາເວັນຕົກຂອງເມືອງອັດຕະປື ໄດ້ ຂ້າຂັດ, ຂ້າ ນາ ບ້ານກະປື, ບ້ານກອງຄັງ, ບ້ານລະຍາວ, ບ້ານຈໍາປາວ, ບ້ານແຄມຊັງ, ບ້ານຕະໝໍ່ເລີຍ, ບ້ານຄົມ, ບ້ານຄົງ, ບ້ານຈຸມໂພຍ, ບ້ານອິນທີ, ບ້ານເຮາະ, ບ້ານຕະປາກ, ບ້ານແຜ ຕາມສາຍພູຫລວງ ໂຮມກັນເປັນ 14 ບ້ານ. ພຣະໄຊເສດກາ ທ່ຽວເກັ້ຍກ່ອມຂ້າຂັດ ທີ່ຕັ້ງບ້ານເຮືອນ ຢູ່ຟາກອັດຕະປື ໄປທາງດ້ານຕາເວັນອອກ ໄດ້ກໍ່ວ້າງຫລາຍ ເຊັ່ນ : ຂ້າຂັດ ເພົ້າສະຫລັງ ບ້ານ ປະດາ, ບ້ານ ຕາແສງ, ບ້ານສະເມັດຕົ, ບ້ານເອກ, ບ້ານອອກຍາ. ພຣະອົງ ໄດ້ນໍາພາຈັດ ຕັ້ງໝ່ວຍບໍລິຫານສັງຄົມຂຶ້ນ ໃນໝູ່ບ້ານແຄບນີ້ ເພື່ອໃຫ້ຄຸ້ມຄອງ ກັນ ໃຫ້ມີລະບຽບຈົບງາມ ແລະ ຢູ່ເຢັນເປັນສຸກ. ພຣະໄຊເສດກາ ໄດ້ຕັ້ງໜ້າ ເກ້ຍກ່ອມຊົນ ເພົ້າແຄບນີ້ ເປັນເວລາ 6-7 ປີ (ປະຫວັດສາດລາວ ເຫລັ້ມ V ໜ້າ 78 ໂດຍຄໍາ ຈໍາປາແກ້ວມະນີ).

ຊື່ສຽງຂອງພຣະໄຊເສດກາທິຣາດ ໄດ້ລືລ່າປະກົດເປັນທີ່ຮູ້ຈັກ ໃນໝູ່ ປະຊາຊົນທັ້ງຫລາຍ ປະຊາຊົນລາວ ບັນດາເຜົ່າ ຈຶ່ງໃຫ້ການເຄົາຣົບນັບຖື ເໝືອນ ກັບພໍ່ແມ່ຜູ້ບັງເກີດເກ້ົາຂອງຕົນ ຈົນທໍ້າປັດຈຸບັນ.

ພະມ້າເຊ້ົາຢຶດນະຄອນວຽງຈັນ

ພະມ້າກີເອົາໂອກາດ ທີ່ພຣະໄຊເສດກາທິຣາດ ແລະ ແມ່ທັບນາຍກອງ ຜູ້ສໍາຄັນບໍ່ຢູ່ໃນນະຄອນຫລວງ ກອງທັບພະມ້າ ໂດຍການບັນຊາການຂອງ ເຈ້ົາ ອິນເຈ ຜູ້ເປັນມະຫາອຸປະຣາດ ແລະ ເຈ້ົາກຸງອັ່ງວະ ເຊ້ົາຢຶດນະຄອນວຽງຈັນ ໄດ້ໂດຍງ່າຍດາຍ ໃນເດືອນ 8 ອອກໃໝ່ 3 ຄໍ່າ ປີກາບໃຈ້ ຈຸລສັງກາດ 926 ຄ.ສ 1564.

ພຣະເຈົ້າໄຊເສດຖາທິຣາດ ຍົກທັບຈາກອັດຕະປື ມາຊັບໄລ່ພະມ້າ ອອກຈາກວຽງຈັນ

ຂ່າວວ່າ ພຣະມະຫາອຸປຣາດ ວໍຣະວົງໂສ ເສັຍນະຄອນຫຼວງວຽງຈັນ ໃຫ້ແກ່ຂ້າເສິກ ໄດ້ຜ່ອງໝໄປຣອດພາກໃຕ້ ຂອງອານາຈັກລ້ານຊ້າງ, ພຣະເຈົ້າໄຊຍະເສດຖາທິຣາດ ຊາບດັ່ງນັ້ນ, ຈຶ່ງໄດ້ມອບພາຣະກິດ ທີ່ພຣະອົງ ພວມດຳເນີນຢູ່ໃນລ່ອງນ້ຳເຊກອງ, ເຊຊານ ແລະ ເຊປົກ ໃຫ້ຄູບາຫຼວງວຕັ້ງບ່າ ຜູ້ເປັນພຣະສະຫາຍ ກະທຳການສືບຕໍ່. ພຣະອົງໄດ້ຍົກທັບຂຶ້ນມາ ຜ່ານທາງເມືອງໂສກ ແລະ ເມືອງວາປີ ແລ້ວຂ້າມນ້ຳຂອງໄປຍັງວຽງໝອງ ຫານ. ແມ່ທັບນາຍກອງທຸກຄົນ ທີ່ວຽງໝອງຫານ ໄດ້ນຳຕົວພະຍາສາມລ້ານ ແລະ ພະຍາຈ່າບ້ານເຂົ້າເຝົ້າ ແລະ ຊາບທູນລາຍງານ ສະຖານະການໃຫ້ຊົງ ຊາບ ພຣະເຈົ້າໄຊເສດຖາທິຣາດ ໄດ້ປຶກສາຫາລືກັບແມ່ທັບນາຍກອງ ຂອງພຣະອົງ ທັງປວງ ເພື່ອວາງແຜນຊັບໄລ່ກອງທັບພະມ້າ ອອກຈາກວຽງຈັນ. ທີ່ປະຊຸມ ໄດ້ຕົກລົງແບ່ງກອງທັບ ອອກເປັນສອງສາຍຄື : ສາຍໜຶ່ງ ແມ່ນກອງທັບຫລວງ ເຊິ່ງແມ່ນພຣະເຈົ້າໄຊເສດຖາທິຣາດເອງ ເປັນຈອມທັບ ແລະ ອີກສາຍໜຶ່ງ ແມ່ນພະຍາແສນສຸຣິນທະຄວ່ານຟ້າ ເປັນແມ່ທັບໃຫຍ່ ພ້ອມກັບພະຍາຈັນກອງ ນາງ ໃຫ້ຍົກທັບເຂົ້າວຽງຈັນໄລດ ສ່ວນທັບຂອງພຣະເຈົ້າໄຊເສດຖາທິຣາດ ພ້ອມພະຍາຊ້ຽຍແຂນຫັກ ແລະ ແສນຊ້ານທ່າວ ນ່ານທັບລາວເຂົ້າທາງເມືອງ ບຽດ ແລະເມືອງຊັນ ເພື່ອໝູນກອງທັບ ຂອງພະຍາແສນສຸຣິນທະຄວ່ານຟ້າ ເຂົ້າໂຈມຕີຂ້າເສິກທີ່ວຽງຈັນ. ຝ່າຍເຈົ້າອິນເຈ ແລະ ເຈົ້າກຸງອັງວະ ແມ່ທັບ ພະມ້າ ໄດ້ຊາບຂ່າວ ກອງທັບລາວລ້ານຊ້ານຍົກມາ ກໍ່ມີຄວາມຕົກໃຈ ຈຶ່ງ ຟ້າວຍົກທັບອອກຈາກນະຄອນວຽງຈັນ ໂດຍໄວ ກ່ອນທີ່ກອງທັບລາວລ້ານຊ້ານ

ຈະຍົກມາເກີ່ງ. ພຣະເຈົ້າໄຊເສດຖາທິຣາດ ພ້ອມດ້ວຍພະຍາ ຊ້າຍແຂນຫັກ ແລະພະຍາແສນຊ້າງທ່າວ ນ່ຳກອງທັບລາວ ເຂົ້າສູ່ນະຄອນວຽງຈັນ ໂດຍສະ ຫວັດດີພາບ. ພຣະອົງ ກັບຄືນຈາກເມືອງອິດກະບີ ມານະຄອນວຽງຈັນ ໃນປີ ຄ.ສ 1565.

ພຣະເຈົ້າໄຊເສດຖາທິຣາດ ສ້າງທາດເຈດີ ແລະຫລໍ່ພຣະພຸທຮູບ

ຄັນຈັດການກັບເສິກພະມ້າສ່ຳເລັດແລ້ວ ພຣະອົງພ້ອມດ້ວຍເສນາ ອາມາດຣາຊມຸນຕີ ກໍ່ໄດ້ພາກັນຟື້ນຟູ ຄວາມເປັນລະບຽບຮຽບຮ້ອຍໃນນະຄອນ ຫລວງ. ເພື່ອບ່ຳລຸງຂວັນ ແລະ ກ່ຳລັງໃຈປະຊາຊົນ ພຣະອົງ ໄດ້ອວນປະຊາຊົນ ສ້າງຫໍພຣະແກ້ວ ໃນປີ 1565, ອວນປະຊາຊົນສ້າງພຣະທາດຫລວງຂຶ້ນ ທີ່ສວນ ອຸທິຍານ ດ້ານຕາເວັນອອກ ຂອງນະຄອນຫລວງ ໂດຍກໍ່ກວມເຈດີໜ່ວຍໜຶ່ງ ທີ່ ມີຢູ່ແລ້ວ ໃນທີ່ນັ້ນ ໂດຍລົງເສິກມື້ເດືອນຈຽງເພັ້ງ ຈຸລສັງກາດ 928 ຄ.ສ 1566 ເມື່ອສ້າງສ່ຳເລັດແລ້ວ ຈຶ່ງຂະໜານນາມວ່າ " ພຣະເຈດີ ໂລກະຈຸລະ ມະນີ ", ແລ້ວຊົງອຸທິດຖີນນາ ແລະ ຄົນອຸປະກາກ ເພື້ອເບິ່ງແຍງພຣະທາດເປັນ ອັນມາກ. ພ້ອມກັບການສ້າງພຣະທາດນີ້ ພຣະອົງໄດ້ໃຫ້ປະຊາຊົນ ສ້າງວັດຂຶ້ນ ຫລາຍແຫ່ງ ເປັນຕົ້ນວ່າ ວັດປ່າລີສີສ້າງອອນ, ໃຫ້ສ້າງອຸໂມງກວມພຣະທາດ ພຣະອໍຣະຫັນ ທີ່ວັດປ່າມະຫາພຸດທະວົງສາ (ວັດໂສກປ່າຫລວງ), ໃຫ້ປະຊາຊົນ ສ້າງວັດປ່າກັນທອງແຫ່ງໜຶ່ງ, ໃຫ້ປະຊາຊົນສ້າງວັດທີ່ໜອງຍາງຄ່ຳແຫ່ງໜຶ່ງ, ສ້າງວັດອົງຕື້, ວັດອິນແປງ, ວັດຫາຍໂສກ ແລະວັດມີໄຊ ແລ້ວສະເດັດໄປອວນ ປະຊາຊົນ ສ້າງພະເຈດີ ໂລມທາດຫົວເນົ່ຽ ທີ່ພູເຂົ້າຫລວງ (ທາດພັ້ງພອນ ສີຊຽງໃໝ່), ໃຫ້ສ້າງວັດທີ່ໂພນໜອງກົກບັ້ນແຫ່ງໜຶ່ງ.

ໃນປີດຽວກັນ ກັບການສ້າງພຣະທາດຫລວງນີ້ ພຣະເຈົ້າໄຊເສດຖາທິ ຣາດ ໄດ້ພາປະຊາຊົນ ຫລໍ່ພຣະອົງຕື້ ທີ່ວັດອົງຕື້ວຽງຈັນ, ພຣະອົງຕື້ເມືອງໄສ້ຍ ແຂວງຫົວພັນ, ພຣະອົງຕື້ວັດນ້ຳໝາ ໝອງຄາຍ, ພຣະສຸກ (ເລົ່າກັນວ່າ ຈົມ ນ້ຳຢູ່ເວີນພຣະສຸກ ໃກ້ກັບປາກນ້ຳກະດິ່ງ ໃນຄາວແມ່ທັບສະຍາມ ນຳກອງ ເອົາຊັບສິນອັນມີຄ່າຂອງລາວໄປ ໃນປາງສົງຄາມ ເພົານະຄອນວຽງຈັນ ປີ ຄ.ສ 1828) ພຣະໄສວັດໂພໄຊ ໝອງຄາຍ ແລະ ພຣະເສີມຢູ່ວັດສະປະທຸມ ບາງ ກອກ ປະເທດໄທ (ໄທເອົາໄປປາງສົງຄາມເພົານະຄອນວຽງຈັນ).

ໃນປີ ຄ.ສ 1567 ພຣະເຈົ້າ ໄຊເສດຖາທິຣາດ ໄດ້ຍົກກອງທັບລາວ ລ້ານຊ້າງ ໄປຊ່ວຍກຸງສີອະຍຸທຍາ ເພື່ອກຳຈັດພະມ້ານອກຈາກເມືອງພິດສະນຸ ໂລກ ແລະ ປີຕໍ່ມາ ຄື ຄ.ສ 1568 ພຣະອົງ ໄດ້ຍົກທັບໄປຊ່ວຍ ກຸງສີອະຍຸທຍາ ເພື່ອປ້ອງກັນ ການຮຸກຮານຂອງພະມ້າ. ພຣະອົງໄດ້ນຳພາກອຍທັບ ຄືນສູ່ນະ ຄອນວຽງຈັນ ພ້ອມດ້ວຍ ພະຍາແສນສຸຣິນທະຄວ້າງຟ້າ, ພະຍາສີນະຄອນ ພະຍາຈັນກອງນ້ອຍ, ພະຍາ ພົນລະເທບ, ພະຍາເມືອງຊ້ວຍ ແລະ ພະຍາແກ່ນ ທ້າວ ເກີ່ງນະຄອນວຽງຈັນ ດ້ວຍຄວາມປອດໄພ ໃນປີ ຄ.ສ 1569.

ໃນທ້າຍປີ ຄ.ສ 1569 ພຣະເຈົ້າໄຊຍະເສດຖາທິຣາດ ໄດ້ພາປະຊາຊົນ ລາວນະຄອນສີໂຄດຕະບູນ ສ້ອມແປງພຣະທາດສີໂຄດຕະບອງ, ທາດອົ້ງຮັ້ງ, ແລະ ທາດພະນົມ ໃຫ້ໃຫຍ່ ແລະ ຈົບງາມກວ່າເກົ່າ; ໄດ້ນຳພາປະຊາຊົນ ສ້າງ ວັດໝອງ ທີ່ເມືອງໝອງຄາຍ, ພ້ອມກັນນີ້ ກໍ່ສ້າງພຣະໃຫຍ່ຂຶ້ນ ທີ່ຊາວໝອງ ຄາຍເອີ້ນວ່າ " ຍາພໍ່ພຣະໄຊເສດຖາ " ທີ່ວັດສີ່ເມືອງ ເມືອງໝອງຄາຍ ໃນ ປັດຈຸບັນ.

ໃນຣັຊກາລ ພຣະໄຊຍະເສດຖາທິຣາດນີ້ ພຣະພຸທສາສນາ ມີຄວາມຈະເຣີນຮຸ້ງເຮືອງກວ້າງຂວາງ ເປັນອັນມາກ ໃນນະຄອນວຽງຈັນ ເຕັມໄປດ້ວຍວັດວາອາຣາມ ແລະ ທາດເຈດີ ທີ່ປະຊາຊົນລາວພາກັນສ້າງຂຶ້ນຢ່າງວິຈິດ ພິດສະດານ ກ່າວກັນວ່າ ໃນນະຄອນວຽງຈັນ ມີວັດເກົ່າ 120 ວັດ. ນອກຈາກສ້ອມແປງພະນະຄອນ ແລະວັດວາອາຣາມແລ້ວ ພຣະເຈົ້າໄຊຍະເສດຖາທິຣາດ ຍັງໄດ້ພາປະຊາຊົນ ຫລໍ່ພຣະພຸທຮູບອີກຫລາຍອົງ ທີ່ສຳຄັນ ແມ່ນ ພຣະອົງຕື້, ພຣະສຸກ, ພຣະໄສ, ພຣະເສີມ ແລະ ອື່ນໆ ....

ພຣະເຈົ້າໄຊຍະເສດຖາທິຣາດ ເປັນກະສັດ ທີ່ເກັ່ງກ້າສາມາດ ທັງທາງດ້ານການເມືອງ, ການປົກຄອງ, ການທະຫານ ແລະ ທາງດ້ານເສດຖະກິດ ຈົນເປັນທີ່ລືຊາ ປະກົດແກ່ປະເທດເພື່ອນບ້ານໃກ້ຄຽງ ໄດ້ຮັບການຍົກຍ້ອງ ໃຫ້ເປັນມະຫາຣາດ ອົງທີສອງ ຂອງຣາຊວົງລ້ານຊ້າງ ສືບຕໍ່ຈາກ ພຣະເຈົ້າຟ້າງຸ່ມ ມະຫາຣາດ ແລະ ເປັນມະຫາກະສັດອົງທີໜຶ່ງ ສະໄໝນະຄອນວຽງຈັນ ເປັນຣາຊທານີ.

ພະມ້າຕີວຽງຈັນ ຄັ້ງທີ II

ເມື່ອອານາຈັກລ້ານນາຊຽງໃໝ່ ແລະ ອານາຈັກອະຍຸທະຍາ ໄດ້ຕົກຢູ່ໃຕ້ກຳມືຂອງ ພຣະເຈົ້າຫົງສາວະດີ ບຸເລງນອງ ແລ້ວ, ກຳລັງພົນຣົບ ຂອງພະມ້າ ເພີ້ມຂຶ້ນ ເປັນ 650,000 ຄົນ (ກ່ອນຕີອະຍຸທະຍາ ມີກຳລັງທະຫານ 500,000 ຄົນ) ຈຳນວນຊ້າງເສິກ ມ້າເສິກ ກໍ່ເພີ້ມຂຶ້ນ ພິເສດແມ່ນປືນໃຫຍ່ ແບບທັນສະໄໝ ທີ່ຊື້ມາຈາກຢຸໂຣບ (ປໍຕຸເກດ) ມີ 400 ກະບອກ ບ່ວກກັບນ້ຳໃຈ ທະຫານ.ທີ່ບັນຊາການຣົບ ໂດຍ ບຸເລງນອງ ແລ້ວ ຍ່ອມໄດ້ໄຊຊະນະທຸກບັ້ນຣົບ.

ນອກຈາກນັ້ນ, ເມື່ອອະຍຸທະຍາ ແລະ ຊຽງໃໝ່ ຕົກຢູ່ໃນກຳມືຂອງພະມ້ າ ແລ້ວ ຄັງສະບຽງອາຫານລ້ຽງກອງທັບ ບໍ່ຈຳເປັນຕ້ອງເອົາມາແຕ່ ຫົງສາວະດີ ອີກຕໍ່ໄປ.

ເວລານັ້ນ ຄູ່ແຂ່ງສຳຄັນຂອງພຣະເຈົ້າຫົງສາວະດີ ບຸເລງນອງ ມີແຕ່ ສົມເດັດພຣະເຈົ້າໄຊຍະເສດຖາທິຣາດ ແຫ່ງອານາຈັກລາວລ້ານຊ້າງເທົ່ານັ້ນ ດັ່ງນັ້ນ ພຣະເຈົ້າຫົງສາວະດີ ບຸເລງນອງ ຈຶ່ງວາງແຜນ ຕີຍຶດເອົາລ້ານຊ້າງ ແລະ ຈັບເອົາໂຕ ສົມເດັດພຣະເຈົ້າໄຊຍະເສດຖາທິຣາດ ໃຫ້ໄດ້.

ການກຽມການສູ້ຣົບ ກັບອານາຈັກລາວລ້ານຊ້າງ, ບຸເລງນອງ ໄດ້ຫ້ າ ຫາກະກຽມສະບຽງອາຫານ ເປັນເວລາຫລາຍເດືອນ ໃນປີ ຄ.ສ 1570, ໂດຍ ໄດ້ແບ່ງໜ້າທີ່ກັນດັ່ງນີ້ :

- ໃຫ້ພຣະມະຫາອຸປະຣາດ ແລະ ເຈົ້າຊຽງໃໝ່ ຄວບຄຸມການປູກເຂົ້າ ແລະ ລ້ຽງສັດ ແລະ ເກັບກຳສະບຽງອາຫານ ຈາກປະຊາຊົນ ໃນອານາຈັ ລ້ານນາ.

- ໃຫ້ເຈົ້າກຸງອັງວະ ຮ່ວມກັບເຈົ້ານະເລສວນ ຄວບຄຸມການປູກເຂົ້າ ລ້ຽງ ສັດ ແລະ ເກັບກຳສະບຽງອາຫານ ຈາກປະຊາຊົນ ເຂດເມືອງພິດສະ ນຸໂລກ ແລະ ຫົວເມືອງ ທີ່ຂຶ້ນກັບພິດສະນຸໂລກ.

- ໃຫ້ພຣະມະຫາທຳມະຣາຊາ ແລະ ເຈົ້າຕອງອູ ຈັດຫາສະບຽງອາຫານ ໃນ ເຂດທົ່ງພຽງ ແມ່ນ້ ຳເຈົ້າພະຍາ.

ກອບກະກຽມກຳລັງເຂົ້າຕີ ອານາຈັກລ້ານຊ້າງ ທ້າວສາວະດີ ບຸລົງນອງ ໄດ້ແບ່ງກຳລັງທະຫານ ອອກເປັນ 10 ກອງທັບໃຫຍ່ ແລະ ຈັດຂະບວນເຂົ້າຕີ ວຽງຈັນ ເປັນ 3 ກອງຄື :

- ໃຫ້ມະຫາອຸປະຣາດ ຜູ້ເປັນໂອຣົດ ເປັນແມ່ທັບໜ້າ ປະກອບດ້ວຍທະຫານ ຊາດພະມ້າ, ມອນ ແລະ ລາວຊຽງໃໝ່ ເຄື່ອນມາທາງເມືອງຊຽງຄານ ຜ່ານເມືອງບ່ານ.

- ໃຫ້ເຈົ້າກຸງອັງວະ ລູກເຂີຍ ແລະ ເຈົ້າແປ ຜູ້ເປັນນ້ອງຊາຍ ຄຸມກຳລັງ ປະກອບດ້ວຍ ຊາດພະມ້າ, ມອນ, ອ້າຍລາວເຜົ່າໄທໃໝ້, ໄທສະຍາມ ແລະກອງທັບເມືອງພິດສະນຸໂລກ ຍົກມາທາງດ່ານສະໝໍ່ສໍ ໃນເຂດເມືອງ ເພັດຊະບູນ ເຂົ້າສູ່ເມືອງໝອງບົວລຳພູ.

- ສ່ວນເຈົ້າ ທ້າວສາວະດີ ບຸລົງນອງເອງ ເປັນແມ່ທັບຫລວງ ຄຸມທະຫານ ຊາດພະມ້າ, ຊາດລາວເຜົ່າໄທໃໝ້, ເຜົ່າລາວລື້, ໄທສະຍາມ ສົມທົບກັບ ກອງທັບເຈົ້າຕອງອູ, ກອງທັບເມືອງຍະໄຂ່ ແລະ ກອງທັບອະຍຸທະຍາ ຂອງເຈົ້າມະຫາທຳມະຣາຊາ ເຄື່ອນທັບຜ່ານທາງນ້ຳຊີ (ຂ້າມນ້ຳຊີ) ສູ່ ເມືອງບົວ (ໄຊຍະພູມ) ຍົກເຂົ້າໝອງບົວລຳພູ ເພື່ອສົມທົບກັບກອງທັບ ອື່ນໆ.

ແຜນປ້ອງກັນນະຄອນຫລວງ

ສົມເດັດພຣະເຈົ້າໄຊຍະເສດຖາທິຣາດ ຄາດຄະເນໄວ້ວ່າ ເມື່ອພຣະເຈົ້າ ທ້າວສາວະດີ ບຸລົງນອງ ໄດ້ອະຍຸທະຍາແລ້ວ ບັ້ນຣົບຕໍ່ໄປ ກໍ່ຄົງຈະແມ່ນ ອານາ

ຈັກລາວລ້ານຊ້າງແນ່ນອນ. ດັ່ງນັ້ນ ພຣະອົງ ຈຶ່ງປຶກສາກັບພະຍາ ແສນສຸລິ ທະຄ່ວາງຟ້າ, ພະຍາຈັນສີຫາຣາດ ແລະ ແມ່ທັບນາຍກອງຄົນສຳຄັນອື່ນໆ ແລະ ໄດ້ຕົກລົງ ແຜນປ້ອງກັນນະຄອນໄວ້ລະອຽດແລ້ວ ຈຶ່ງໃຫ້ພະຍາ ແສນສຸລິ ທະຄ່ວາງຟ້າ ສະເໜີແຜນຕໍ່ທີ່ປະຊຸມດັ່ງນີ້ :

ກອງທັບຫົງສາວະດີ ມີຈຳນວນທະຫານມະຫາສານ, ເຈົ້າຫົງສາວະດີ ບຸເລງນອງ ກໍເປັນຂຸນແສກ ທີ່ສະຫລາດຫລັກແຫລມ ປະກອບກັບຈຳນວນແມ່ ທັບນາຍກອງ ທີ່ມີປະສົບການໃນການສູ້ຮົບ ມີຈຳນວນມາກມາຍ ກ້າຈະສູ້ຮົບ ແບບພ້ະເຊີນໜ້າແລ້ວ ຍາກທີ່ຈະເອົາຊະນະໄດ້. ດັ່ງນັ້ນ ກ້າຈະຕັ້ງຮັບຢູ່ພາຍໃນ ກຳແພງເມືອງ ປ່ອຍໃຫ້ຂ້າແສກບຸກຕີ ຝ່າຍເຮົາຈະເສັຍປຽບ ເພາະສະນັ້ນ ພວກເຮົາ ຕ້ອງຢູ່ນອກກຳແພງເມືອງ ເພື່ອໃຫ້ສັດຕູຕີເຮົາຍາກ ໂດຍໃຊ້ຍຸດທະ ວິທີ " ກອງທັບທີ່ມີກຳລັງນ້ອຍກວ່າ ແລະ ມີອາວຸດຍຸດທະພັນນ້ອຍກວ່າ ເປັນ ຝ່າຍບຸກ ຈະໄດ້ປຽບເໜືອກວ່າ ຝ່າຍຕັ້ງຮັບ ເຖິງວ່າ ຈະມີກຳລັງຫລາຍກວ່າ ແລະ ອາວຸດຍຸດທະພັນເໜືອກວ່າ " ເພື່ອປະຕິບັດຍຸດທະສາດນີ້ ຈະຕ້ອງປະຕິ ບັດດັ່ງນີ້ :

1. ເຮັດໃຫ້ນະຄອນວຽງຈັນ ເປັນເມືອງເປີດ ປ່ອຍໃຫ້ຂ້າແສກ ເຂົ້າມາຕັ້ງ ຢູ່ພາຍໃນກຳແພງເມືອງ.

2. ຈັດແບ່ງກອງທະຫານ ອອກເປັນຫລາຍກອງ ແຕ່ລະກອງ ບໍ່ໃຫ້ເກີນ 1,000 ຄົນ ຢູ່ພາຍໃຕ້ຂຸນແສກ ທີ່ມີປະສົບການ ແລະ ມີຄວາມສາມາດສູງ ຍອມສະລະຊີວິດ ເພື່ອຊາດ ແລະ ປະຊາຊົນ. ທະຫານທີ່ປະຈຳຢູ່ແຕ່ລະ ກອງ ຕ້ອງໄດ້ຮັບການຝຶກອົບຮົມ ແບບໜ່ວຍສູ້ຮົບເຄື່ອນທີ່ ແລະມີຄວາມ ສາມາດສູ້ຮົບແບບປະຈັນບານ ໃນລະດັບສູງ.

3. ຈັດກອງກຳລັງສະກັດກັ້ນ ກອງລ່ວງລຽງສະບຽງອາຫານ ຂອງຂ້າເສິກ ເຊິ່ງຄາດວ່າ ຈະມາ 2 ທາງຄື ທາງນ້ຳຂອງ ຈາກຊຽງແສນລົງມາ ແລະ ບາງບົກ ອາດຈະມາຈາກອະຍຸທະຍາ.

4. ກຽມທີ່ຕັ້ງກອງທະຫານຫລວງ ພາຍໃຕ້ການບັນຊາຂອງ ສົມເດັດພຣະ ເຈົ້າໄຊຍະເສດຖາທິຣາດ ຢ່າງນ້ອຍ 3 ຈຸດ ຄືວຽງປາກຖົ່ມ, ວຽງໝອງ ຫານ ແລະ ວຽງສຸລິນ.

ເມື່ອສັດຕູເຂົ້າໄປໃນກຳແພງເມືອງແລ້ວ ໃຫ້ກອງໜຶ່ງ ຈຳນວນບໍ່ ເກີນ 1,000 ຄົນ ໄປຫລອກຂ້າເສິກ ໃຫ້ຂ້າເສິກໄລ່ຕິດຕາມ ໄປທີ່ກອງ ທັບຫລວງ ເມື່ອກອງທັບຂ້າເສິກ ໄລ່ຕິດຕາມມາ ໃຫ້ກອງໜຶ່ງລັດໜ້າ ກອງໜຶ່ງລັດຫລັງ ບໍ່ໃຫ້ຂ້າເສິກມາເກີ່ງກອງທັບຫລວງໄດ້ສະດວກ. ເມື່ອ ສັດຕູ ມາເກີ່ງກອງທັບຫລວງ ກໍ່ໃຫ້ກອງທັບຫລວງ ຍ້າຍໄປຕັ້ງຢູ່ອີກຈຸດ ໜຶ່ງ. ເມື່ອຂ້າເສິກກັບໄປ ກໍ່ໃຫ້ກອງທັບຫລວງ ຍ້າຍຄືນມາ.

5. ຈັດກອງທັບໃຫຍ່ 3 ກອງ ຢູ່ພາຍໃຕ້ຂຸນພົນ ທີ່ຊ່ຳນາບເສິກ ແຕ່ລະກອງ ບໍ່ໃຫ້ເກີນ 2 ໝື່ນຄົນ ຕັ້ງຢູ່ 3 ດ້ານ ຂອງນະຄອນວຽງຈັນ ທາງຝ່າກພີ້ ແລະ ຝ່າກພຸ້ນຂອງນ້ຳຂອງ ເພື່ອໄລ່ຕີຂ້າເສິກ ເວລາຂ້າເສິກກ່ອຍ ແຕ່ ຕ້ອງປ່ອຍທາງດ້ານທິດຕາເວັນຕົກ ເມື່ອຂ້າເສິກກ່ອຍ ໃຫ້ທັງ 3 ກອງ ໄລ່ຕີຂ້າເສິກຮ່ວມກັນ.

6. ອົບພະຍົບປະຊາຊົນ ອອກຈາກນະຄອນຫລວງ ແລະ ອອກຈາກບ້ານ ຕ່າງໆ ຂອງເມືອງອ້ອມນະຄອນຫລວງ ໄປລີ້ຢູ່ປ່າ ແລະ ກໍ້າ.

ພ້ອມກັນນັ້ນ ກໍ່ຈັດຕັ້ງກຳລັງທັບ ຕີຕ້ານພະມ້າ ອອກເປັນ 6 ກອງ ຕັ້ງ ພະຍາແສນສຸລິນທະຄວ່ານຟ້າ ເປັນແມ່ທັບໃຫຍ່ (ເສນາທິການສູງສຸດ) ບັນຊາ ການສູ້ຮົບ.

ປັ້ນຮົບກັບກອງທັບພະມ້າ

ກອງທັບເຈົ້າຫົງສາວະດີ ບຸເລງນອງ ເຄື່ອນທັບຈາກອະຍຸທະຍາ ມາ ເຖິງໝອງບົວລຳພູ ເຊິ່ງເປັນເມືອງໜ້າດ່ານ ປ້ອງກັນນະຄອນວຽງຈັນ ໃນ ເດືອນມີນາ (3) 1571. (ພົງສາວະດານລາວວ່າ 1570) ໄດ້ພົບກັບກອງທັບ ລ້ານຊ້າງ ບັນຊາໂດຍ ພະຍານະຄອນ. ທັງສອງຝ່າຍ ຕໍ່ສູ້ກັນ ຈົນສຸດຄວາມສາ ມາດ ພະຍານະຄອນເຫັນວ່າ ສູ້ບໍ່ໄດ້ ຈຶ່ງສັ່ງໃຫ້ຖອຍ. ກອງທັບພະມ້າ ກໍ່ໄລ່ຕີ ຕ່ອມ ເຖິງທ່າບໍ່, ວຽງຄຸກ, ວຽງພະໂຄ, ໝອງຄາຍ ແລະ ປາກຫ້ວຍຫລວງ ຕາມລຳດັບ. ເມື່ອກອງທັບຫົງສາວະດີ ມາຮອດປາກຫ້ວຍຫລວງແລ້ວ ຈຶ່ງສັ່ງ ໃຫ້ທະຫານເຮັດຂົວຂ້າມນ້ຳຂອງ ຢູ່ບໍລິເວນດອນສັງຄີ ແລ້ວຍົກກອງທັບມາຕັ້ງ ຢູ່ແຄມປາກຖ້ຳມຕອນເໜືອ. ສ່ວນພຣະເຈົ້າໄຊຍະເສດຖາທິຣາດ ຊາບຂ່າວ ກໍ່ ຖອຍທັບມາຕັ້ງຢູ່ວຽງໝອງຫານ.

ເມື່ອກອງທັບພະມ້າ ມາຕັ້ງຢູ່ປາກຖ້ຳມແລ້ວ ກໍ່ບໍ່ເຫັນກອງທັບລາວຍົກມາ ຕີ ກ້າຈະຍົກກອງທັບໄປຕີ ກໍ່ບໍ່ຮູ້ວ່າ ກອງທັບລາວຢູ່ໃສ ພໍຕົກກາງຄືນ ກໍ່ມີກອງ ທະຫານລາວຫລອນຕີທຸກຄືນບໍ່ໄດ້ຂາດ. ເຈົ້າຫົງສາວະດີ ຈຶ່ງສັ່ງໃຫ້ຖອນທັບໄປ ຕັ້ງຢູ່ພາຍໃນກຳແພງເມືອງນະຄອນວຽງຈັນ. ເມື່ອມາເຖິງນະຄອນຫລວງ ກໍ່ ໄດ້ຮັບການຕ້ານທານ ຈາກກອງປ້ອງກັນນະຄອນຫລວງ ແຕ່ສູ້ທັບພະມ້າບໍ່ໄດ້ ຈຶ່ງປ່ອຍໃຫ້ເຂົ້າໄປ ໃນກຳແພງເມືອງ. ກອງທັບລາວ ໄດ້ຖອຍອອກຈາກ ກຳ

ແພງເມືອງ ແລ້ວເຂົ້າປ່າໄປ ກອງທັບພະມ້າ ກໍໄລ່ຕິດຕາມ ແຕ່ກີກສະກັດ ທັງ ດ້ານໜ້າ ແລະ ດ້ານຫລັງ ຈາກກອງທັບເຄື່ອນທີ່. ກອງທັບພະມ້າຈຶ່ງແຕກກັບ ຄືນໄປຫາກອງທັບຫລວງ ຢູ່ໃນກຳແພງເມືອງ. ເປັນອັນວ່າ ນະຄອນວຽງຈັນ ແລະ ປ້ອມປາການປ້ອງກັນນະຄອນວຽງຈັນ ຄືເມືອງພັນພ້າວ, ທ່າບໍ່, ວຽງຄຸກ ພະໂຄ, ໜອງຄາຍ, ປາກຫ້ວຍຫລວງ ແລະ ເມືອງຊາຍຟອງ ໄດ້ຕົກຢູ່ພາຍໃຕ້ ການຍຶດຄອງຂອງກອງທັບພະມ້າຈົນໝົດສ້ຽງ. ສ່ວນເຂດນອກນະຄອນວຽງ ຈັນ ແລະ ນອກເມືອງປ້ອມປາການຕ່າງໆ ແມ່ນກອງທັບລາວລ້ານຊ້າງລີ້ຊ່ອນ ຢູ່ຕາມປ່າ ດັ່ງນັ້ນ, ກອງທັບພະມ້າ ຈຶ່ງຕົກຢູ່ໃນວົງປິດລ້ອມຂອງກອງທັບລາວ ທຸກດ້ານ. ກອງທັບພະມ້າ ຈະເຄື່ອນໄຫວໄປທາງໃດ ເມື່ອໃດ ລ້ວນແຕ່ກີກກອງ ທັບລາວ ສະກັດລັດຕີ ເຮັດໃຫ້ກອງທະຫານພະມ້າລົ້ມຕາຍເປັນລາຍວັນ ພໍຕົກ ກາງຄືນ ປ້ອມຄ້າຍທະຫານພະມ້າທຸກປ້ອມ ລ້ວນແຕ່ກີກໂຈມຕີ ຢ່າງໜັກໜ່ວງ ບໍ່ເວັ້ນແຕ່ລະຄືນ.

ນອກຈາກນັ້ນ, ສະບຽງອາຫານ ທີ່ກອງລ່ຳລຽງ ຂອງກ່ອງທັບພະມ້າ ສົ່ງ ມາທັງທາງບົກ ແລະ ທາງນ້ຳ ລ້ວນແຕ່ກີກທຳລາຍ.ຈາກອງທັບລາວລ້ານຊ້າງ ທັງໝົດ. ທະຫານພະມ້າ ຢູ່ແຕ່ລະກອງ ຈະອອກໄປຫາອາຫານນ່ຳປະຊາຊົນ ຢູ່ ເຂດນອກກໍ່ພົບແຕ່ການສະກັດລັດຕີ ຈຶ່ງເຮັດໃຫ້ກອງທັບໃຫຍ່ ຂາດແຄນສະ ບຽງອາຫານ.

ດັ່ງນັ້ນ, ສະພາບການສູ້ຮົບ ລະຫວ່າງກອງທັບລາວ ກັບກອງທັບພະມ້າ ຈຶ່ງປ່ຽນສະພາບ ກອງທັບໃຫຍ່ ມີກຳລັງພົນມະຫາສານ ເໜືອກວ່າທຸກດ້ານ ຂອງພະມ້າ ເປັນຝ່າຍເສັຍປ່ຽບ ໃຫ້ກອງທັບລາວ ທີ່ມີກຳລັງນ້ອຍ ແຕ່ເປັນ ຝ່າຍບຸກທຸກໆບັ້ນຮົບ.

ດັ່ງນັ້ນ, ພຣະເຈົ້າຫົງສາວະດີ ບຸເລງນອງ ຈຶ່ງສັ່ງໃຫ້ກອງທະຫານທຸກ ກອງ ທີ່ຕັ້ງຢູ່ທາງຝັ່ງນ້ຳຂອງ ຝັ່ງນະຄອນວຽງຈັນ ໃຫ້ຍ້າຍໄປຕັ້ງຢູ່ວຽງຄຸກ ແລະວຽງພັນພ້າວ ເພື່ອກຽມກອຍທັບ. ສົມເດັດພຣະເຈົ້າໄຊຍະເສດກາທິຣາດ ຈຶ່ງໄດ້ຍົກກອງທັບ ເຂົ້າມາຢູ່ໃນນະຄອນຫລວງວຽງຈັນ, ພຣະອົງ ແລະ ພະຍາ ແສນສຸລິນທະຄ່ວງຟ້າ ຈຶ່ງໄດ້ມອບໃຫ້ພະຍານະຄອນ ນຳກອງທັບໄປຕີຂ້າເສິກ. ຢູ່ວຽງຄຸກ, ໃຫ້ພະຍາຈັນສີທາຣາດ (ຈັນກອງນາງ) ເອົາກອງທັບໄປສະກັດ ລັດຕີຂ້າເສິກ ຢູ່ເຂດໝອງບົວລຳພູ ເຊິ່ງຄາດວ່າ ສັດຕູຈະໄປທາງນັ້ນ. ສ່ວນ ພະຍາແສນສຸລິນທະຄ່ວງຟ້າເອງ ນຳເອົາກອງທັບຫລວງ ເຂົ້າໂຈມຕີກອງ ທັບຂ້າເສິກ ບັນຊາໂດຍ ພຣະເຈົ້າຫົງສາວະດີ ບຸເລງນອງ ຢູ່ວຽງພັນພ້າວ.

ການກອຍທັບຂອງພະມ້າ ໄປທາງໝອງບົວລຳພູກໍດີ, ບັ້ນສູ້ຣົບຢູ່ວຽງຄຸກ ກໍດີ ແລະ ບັ້ນຣົບທີ່ຊຽງສົມ (ອະໂນໂສມ) ກໍດີ ລ້ວນເຮັດໃຫ້ກອງທັບພະມ້າ ໄດ້ເຂົ້າສູ່ວົງສະກັດ ແລະ ປິດລ້ອມ ຈາກກອງທັບລາວລ້ວນຊ້າງທັງໝົດ. ເປັນ ຜົນໃຫ້ກອງທັບພະມ້າ ແຕກກະຈັດກະຈ່າຍ ລົ້ມຕາຍເປັນອະເນກອະນັນ ເຫລືອ ລອດໄປເກົ່ງເມືອງພິດສະນຸໂລກໄດ້ ແຕ່ພຽງເລັກນ້ອຍ ແມ່ນແຕ່ເຈົ້າຫົງສາ ວະດີ ບຸເລງນອງ ເອງ ກໍ່ເກືອບເອົາຕົວບໍ່ລອດ.

ການເສິກຄາວນີ້ ກອງທັບລາວ ຈັບຊະເລີຍເສິກໄດ້ 30,000 ຄົນ, ສ່ວນ ທີ່ລົ້ມຕາຍນັ້ນ ມີຫລາຍເຫລືອລົ້ນ, ຈັບຊ້າງເສິກໄດ້ 200 ໂຕ (ບາງສະບັບວ່າ ຮ້ອຍປາຍ) ໄດ້ງາຊ້າງທີ່ຕາຍແລ້ວ 2,300 ກິ່ງ (ບາງສະບັບວ່າ 2,500 ກິ່ງ) ແລະ ເຮັດໃຫ້ ພຣະເຈົ້າຫົງສາວະດີ ບຸເລງນອງ ເສັຍບົດບາດ ອິດທິພົນ ຕໍ່ ອານາຈັກນ້ອຍໃຫຍ່ ທີ່ເປັນເມືອງຂຶ້ນຂອງພະມ້າ ແລະ ເສັຍຄວາມໄວ້ວາງໃຈ ຂອງປະຊາຣາສດອນ ຊາວພະມ້າ ແລະ ຊາວມອນ ທັງມວນດ້ວຍ.

ຍົກທັບໄປຍັດຕະປີ ຄັ້ງທີ II

ໃນເວລາເຮັດສົງຄາມກັບພະມ້າຢູ່ນັ້ນ, ເຈົ້າຜ່ນດິນຂະເມນ ນາມວ່າ " ນັກອົ້ງຈັນ (1516-1566) ແລະ ພຣະບໍຣົມມະຣາຊາທີ I " ກະສັດທ້າວສອງ ພຣະອົ້ງນີ້ ໄດ້ພະຍາຍາມ ສ້າງກຳລັງທະຫານ ແລະ ປັບປຸງກຳລັງໃຫ້ເຂັ້ມແຂງ ຈົນມີກຳລັງເຂັ້ມແຂງ ໄດ້ຍົກກອງທັບໃຫຍ່ ກຳລັງທະຫານ 20,000 ຄົນ ເຂົ້າ ມາເຂດອະຍຸທະຍາ ໂດຍຕີເຂົ້າທາງປາຈີນບຸຣີ ແລະ ໂຄລາດ. ສ່ວນທາງດ້ານ ອານາຈັກລ້ານຊ້າງ ໄດ້ຕີເຂົ້າທາງຊຽງແຕງ ກະແຈບ້ານແມ່ທວດ ແລະ ບ້ານ ດອນ (ແຕ່ກ່ອນບ້ານເຫລົ່ານີ້ ຂຶ້ນກັບນະຄອນຈຳປາສັກ ຂອງລາວ).

ໃນເວລາເຮັດສົງຄາມກັບພະມ້າຢູ່ນັ້ນ, ພະຍານະຄອນ ເຊິ່ງຮັບຜິດຊອບ ປົກຄອງດິນແດນ ຂອງອານາຈັກລ້ານຊ້າງທາງໃຕ້ ບໍ່ສາມາດລາຍງານເລື້ອງ ນີ້ ຕໍ່ສົມເດັດພຣະເຈົ້າໄຊຍະເສດຖາທິຣາດໄດ້ ເມື່ອສົງຄາມກັບພະມ້າສ້ຽງສຸດ ລົງແລ້ວ, ພະຍານະຄອນ ຈຶ່ງລາຍງານເລື້ອງນີ້ໃຫ້ພຣະອົ້ງຊົ້ງຊາບ. ພ້ອມໆກັນ ນັ້ນ ກະສັດຂະເມນ ກໍ່ໄດ້ສົ່ງທູດ 10 ຄົນ ແລະ ພຣະພິກຸ 2 ຮູບ ກືສານຂອງ ກະສັດຂະເມນມາຖວາຍ ສົມເດັດພຣະເຈົ້າ ໄຊຍະເສດຖາທິຣາດ ທີ່ນະຄອນ ວຽງຈັນ. ເມື່ອຄະນະທູດມາເຖິງເມືອງລາຍ ເຈົ້າເມືອງ ເມືອງລາຍ ບໍ່ໃຫ້ ຄະນະທູດ 10 ຄົນ ຜ່ານຂຶ້ນມາວຽງຈັນ, ປ່ອຍແຕ່ພຣະພິກຸ 2 ຮູບ ກືສານຂຶ້ນ ມາຖວາຍ ສົມເດັດພຣະເຈົ້າໄຊຍະເສດຖາທິຣາດ. ໃນສານນັ້ນ ຂໍ່ໃຫ້ລ້ານຊ້າງ ຮັບຮູ້ວ່າ ແຂວງຊຽງແຕງ, ເວີນໄຊ, ສົມພັດ, ບ້ານແມ່ທວດ, ບ້ານດອນ ເປັນ ຂອງຂະເມນ ໂດຍຈະຖວາຍທີ່ດາຂອງກະສັດຂະເມນ 2 ອົ້ງຄື ນາງເທບກາຍາ ແລະ ອຸທຸມພອນ ເປັນການແລກປ່ຽນ.

ເມື່ອພຣະເຈົ້າໄຊຍະເສດກາທິຣາດຊົງຊາບ ກໍ່ດີພະໄທ ທີ່ຈະເປັນໂອກາດ ແກ້ບັນຫາຊາຍແດນດ້ານນີ້ ໃຫ້ສຳເລັດໂດຍສັນຕິວິທີ. ຈຶ່ງໄດ້ແຕ່ງທູດຄະນະໜຶ່ງ ປະກອບດ້ວຍ ພະຍາໂສມພະມິດ, ພະຍາຈັນສີທາຣາດ, ທ້າວເຄ ແລະ ພັນຄົນໃຊ້ ກືພຣະຣາຊສານ ຂໍສະເໜີແກ້ໄຂບັນຫາຊາຍແດນ. ແຕ່ເຈົ້າແຜ່ນດິນ ຂະເມນບໍ່ຍອມຮັບຂໍ້ສະເໜີຂອງຝ່າຍລາວ ແລະ ໄດ້ຂັບໄລ່ຄະນະທູດລາວ ອອກ ຈາກເມືອງດ້ວຍ.

ພະຍາໂສມພະມິດ ໄດ້ພາຄະນະທູດຂຶ້ນມາ ຮອດເມືອງມະລຸກຂະນະຄອນ (ທ່າແຂກ ຫລື ນະຄອນພຣະນົມ) ຈຶ່ງເຂົ້າໄປຫາພະຍານະຄອນ ແລະ ເລົ່າ ເຫດການໃຫ້ຟັງທຸກປະການ. ພະຍານະຄອນ ມີຄວາມຄຽດແຄ້ນເປັນອັນມາກ ຈຶ່ງສະເໜີໃຫ້ພະຍາໂສມພະມິດ ທູນພຣະໄຊເສດກາໃຫ້ຍົກກອງທັບໄປຕີຂະເມນ ໂດຍຕົນເອງຂາບອາສາ ຂໍເປັນແມ່ທັບໜ້າ.

ເມື່ອສົມເດັດພຣະເຈົ້າໄຊຍະເສດກາທິຣາດຊົງຊາບດັ່ງນັ້ນ ກໍ່ໄດ້ປຶກສາ ແມ່ທັບນາຍກອງ ເສນາມຸນຕີທັງຫລາຍ ແລະ ຕົກລົງກັນວ່າ " ຄວນຍົກກອງ ທັບ ລົງໄປແກ້ໄຂບັນຫາຊາຍແດນ ດ້ານໃຕ້ໃຫ້ສຳເລັດລຸລ່ວງໂດຍດີ ".

ຄັນເຖິງຕົ້ນປີ 1573 ຈຸລສັງກາດ 935 (ປະຈັດສາດບາງສະບັບວ່າ 1572) ສົມເດັດພຣະເຈົ້າໄຊຍະເສດກາທິຣາດ ຈຶ່ງໄດ້ຍົກກອງທັບລົງໄປພາກ ໃຕ້ (ຕາມເສັ້ນທາງເດີມ ທີ່ສະເດັດໄປຄາວກ່ອນ) ແລ້ວໄປຕັ້ງກາມທັບ ຢູ່ ເມືອງລາມມະລັກອົງກາມ (ທົ່ງຂີ້ຄວາຍ) ເພື່ອວາງແຜນຈັດການຊາຍແດນ ກັບເຈົ້າແຜ່ນດິນຂະເມນ. ແມ່ທັບຄົນສຳຄັນ ທີ່ຮ່ວມໄປກັບກອງທັບຫລວງຄາວ ນັ້ນຄື : ພະຍາແສນສຸລິນທະຄ່ວງຟ້າ, ພະຍາຈັນສີທາຣາດ, ໝື່ນໄຊ, ເຈົ້າຄອງ ແຄ້ວພວນຊຽງຂວາງ ແລະ ພະຍານະຄອນ ເປັນຕົ້ນ.

ສົມເດັດພຣະເຈົ້າໄຊຍະເສດກາທິຣາດ ໄດ້ໃຊ້ວລາລະດົມກຳລັງທະຫານ ຢູ່ລາມມະລັກອົງການໄລຍະໜຶ່ງ ເພື່ອໃຫ້ມີກຳລັງພຽງພໍ ທີ່ຈະແກ້ໄຂບັນຫາຊາຍ ແດນໄດ້ສຳເລັດ. ຄູບາຫູຍາວຕັ້ງບ່າ ກໍ່ໄດ້ລາເພດພົມມະຈັນ ອອກມາເປັນແມ່ ທັບຮັບໃຊ້ຣາຊການທະຫານ ຂອງສົມເດັດ ພຣະເຈົ້າໄຊຍະເສດກາທິຣາດ. ເພາະເພິ່ນເປັນທີ່ຮູ້ຈັກແພ່ຫລາຍ ແລະ ເປັນທີ່ເຄົາຣົບນັບຖື ຂອງປະຊາຊົນ ໃນເຂດທົ່ງຂີ້ຄວາຍດີ ເທົ່າກັບສົມເດັດພຣະເຈົ້າໄຊຍະເສດກາທິຣາດ.

ພໍຮອດກາງປີ ຄ.ສ 1573 ສົມເດັດພຣະເຈົ້າໄຊຍະເສດກາທິຣາດ ຈອມ ທັບລາວລ້ານຊ້າງ ກໍ່ຊົງປະຊວນ (ປ່ວຍ) ດ້ວຍພະຍາໄຂ້ປ່າ ມີພຣະອາການ ຊຸດໜັກລົງ ຈົນເຫລືອວິໄສຂອງໝໍຈະຢຽວຢາໄດ້ .ຈຶ່ງສະຫວັນນະຄົດ ທີ່ຄ້າຍ ຫລວງ ຂອງເມືອງລາມມະລັກອົງການ (ອັດຕະປື) ນັ້ນເອງ.

ພາຍຫລັງສົມເດັດພຣະເຈົ້າໄຊຍະເສດກາທິຣາດ ສະຫວັນນະຄົດແລ້ວ, ພະຍາແສນສຸລິນທະຄ່ວາງຟ້າ. ພະຍາຈັນສີທາຣາດ ແລະ ພະຍານະຄອນ ກໍ່ບໍ່ ສາມາດ ດຳເນີນພາລະກິດ ສືບຕໍ່ວຽກງານ ທີ່ພຣະອົງໄດ້ພາເຣັດມານັ້ນໄດ້ ຍ້ອນປະຊາຊົນບໍ່ໃຫ້ການຮ່ວມມື ແລະ ໄດ້ເກີດຄວາມຂັດແຍ້ງກັນຂຶ້ນ ລະຫວ່າງ ກອງທັບວຽງຈັນ ພາຍໃຕ້ການບັນຊາຂອງພະຍາແສນສຸລິນທະຄ່ວາງຟ້າ ແລະ ພະຍາຈັນສີທາຣາດ ກັບກຳລັງປະກອບອາວຸດ ຂອງປະຊາຊົນທ້ອງຖິ່ນ ອັນມີ ແມ່ທັບຫູຍາວຕັ້ງບ່າ ຜູ້ເປັນພຣະສະຫາຍຮັກ ຂອງສົມເດັດພຣະເຈົ້າໄຊຍະເສດ ກາທິຣາດ ຈົນເກີດປະທະກັນຂຶ້ນ. ດັ່ງນັ້ນ ພະຍາແສນສຸລິນທະຄ່ວາງຟ້າ ແລະ ພະຍານະຄອນ ຈຳເປັນໄດ້ກອບກອງທັບ ກັບຄືນນະຄອນວຽງຈັນ. ສ່ວນພະຍາ ນະຄອນ ແລະ ໝື່ນໄຊ ເຈົ້າຄອງແຄວ້ນພວນຊຽງຂວາງ ແລະ ແມ່ທັບອື່ນໆ ກໍ່ ໄດ້ກອບທັບກັບກຶ່ນເດີມຂອງຕົນ.

ສ່ວນພຣະສົບຂອງ ສົມເດັດພຣະເຈົ້າໄຊຍະເສດຖາທິຣາດນັ້ນ, ພະຍາ ແສນສຸລິນທະຄ່ວາງຟ້າ ບໍ່ສາມາດນຳກັບຂຶ້ນມາ ນະຄອນວຽງຈັນໄດ້ ເພາະ ປະຊາຊົນຂັດຂວາງ.

ພະນ້າຕີວຽງຈັນ ຄັ້ງທີ III

ເມື່ອສົມເດັດພຣະເຈົ້າ ໄຊຍະເສດຖາທິຣາດ ອັນເປັນສູນໂຮມຈິດໃຈ ຂອງແມ່ທັບນາຍກອງ ແລະ ເສນາອາມາດ ສະຫວັນນະຄົດແລ້ວ, ຄວາມແຕກ ແຍກກໍ່ເກີດຂຶ້ນ ໃນອານາຈັກລາວລ້ານຊ້າງ ຄືຜູ້ກຳອຳນາດໃນນະຄອນຫລວງ ລະຫວ່າງ ພະຍາແສນສຸລິນທະຄ່ວາງຟ້າ ອັກຄະມະຫາເສນາບໍ່ດີ ຝ່າຍທະຫານ ກັບພະຍາຈັນສີຫາຣາດ (ຈັນກອງນາງ) ອັກຄະມະຫາເສນາບໍ່ດີຝ່າຍປົກຄອງ ຈຶ່ງເກີດການປະທະກັນ ດ້ວຍອາວຸດຂຶ້ນ ໃນລະດູແລ້ງ ປີ ຄ.ສ 1574 ຢູ່ທາດ ດອນຈັນ. ພະຍາແສນສຸລິນທະຄ່ວາງຟ້າ ໄດ້ໃຫ້ແສນມຸນທຽນ ຜູ້ເປັນທະຫານ ເສືອຂອງຕົນ ຂີ່ຊ້າງອອກຄົບກັບ ພະຍາຈັນສີຫາຣາດ. ແສນມຸນທຽນ ຟັນ ພະຍາຈັນສີຫາຣາດ ຕາຍຄາຄໍຊ້າງ ກຳລັງພົນຂອງພະຍາຈັນ ກໍ່ແຕກກະຈັດ ກະຈ່າຍ.

ແຕ່ນັ້ນມາ ເສນາບໍ່ດີ ແມ່ທັບນາຍກອງທັງຫລາຍ ໃນນະຄອນຫລວງ ກໍ່ ຢ້ານກົວ ພະຍາແສນສຸລິນທະຄ່ວາງຟ້າ. ເມື່ອພະຍາແສນສຸລິນທະຄ່ວາງຟ້າ ປາບປາມຜູ້ຂັດຂວາງຕົນໄດ້ໝົດແລ້ວ, ກໍ່ປະກາດຕົນເປັນເຈົ້າແຜ່ນດິນ ອານາ ຈັກລາວລ້ານຊ້າງ ໃນປາຍປີ 1574 ໂດຍມີພະນາມວ່າ " ພຣະສຸມັງຄະລະໄອຍະ ໂກໂພທິສັດ " ແຕ່ຄົນທັງຫລາຍມັກເອີ້ນວ່າ " ເຈົ້າປູ່ຫລວງ ". ເວລານັ້ນພະຍາ ແສນສຸລິນ ມີອາຍຸໄດ້ 65 ປີແລ້ວ.

ภาบที่พะยาแสนสุลินทะถ่าๆฟ้า ต้ๆตินเปันเจ้าแผ่นดินเสัยเอๆ ได้เธัดให้บันดาหัวเมืองสำคัน คืมะลุภะนะถอน (ท่าแขภ), เมืองพอนซุงซอๆ และ เมืองอัดตะบือ เปันต้น บ่ให้ภาบสะหนับสะหนูน แต่บ่ถัดถ้าน พรๆแต่ถอยเบิ่งท่าทียู่.

เมื่อพธะเจ้าหิงสาอะดิ บุลาบอๆ ได้ซาบฮ่าวอ่า สืมเดัดพธะเจ้าไฮยะเสดภาทิธาด สะหวันนะคืดแล้ว และ ซาบอ่า อ๊าสักดินาลาว พอมแตกแยกกันยู่ จึ่งอาๆแผนยึกกองทับใหย่ ล๊าบาตีอาบาจักลาว ล้าบฮ้าๆอีก. เพื่อยั้งเบิ่งท่าทีฮองล้าบฮ้าๆ. จึ่งได้สิ่งคะนะทูด ภืสาบ สะเหมิต่ำปะซาชิบ และ ผู้น่าล้าบฮ้าๆ ให้ธับเอ๊า เจ้ามะหาอุปะธาด วံธะวัๆใส ให้ดำล๊งต่ำแหน่ๆ ผู้สำเล็ดธาฆภาบ แหบพธะหม่อๆ (ไอ ธ์ดฮองสืมเดัดพธะเจ้าไฮยะเสดภาทิธาด) เพาะว่า พธะมะหาอุปะธาดวံธะวัๆใส เปันอาวฮองพธะหม่อๆ เฮ็ๆเปันเฮื๋อพธะอ๊าๆ ที่ใก้ผิดกับพธะหม่อๆ.

เวลานั้น, พะยาแสนสุลินทะถ่าๆฟ้า ได้สะภาปะนาตินเองเปันพธะเจ้าแผ่นดินล้าบฮ้าๆแล้ว และ ปะซาชิบลาวล้าบฮ้าๆ ยังจื่จำสิๆถามธุกธาบ ฮองพะม่าย่างฮืมฮืบยู่, ก้ายอมธับเอ๊าข้ำสะเหมิฮองๆ. ทิๆสาอะดิ ก่เท่ากับว่า ยอมเปันเมืองขึ้นฮองพะม่า โดยปะลิยาย. อีก ปะภาบหนึ่ๆ ปะซาชิบลาวล้าบฮ้าๆ ยังมีถวามเฮื๋อ ถวามสามาดฮองพะยาแสนสุลินทะถ่าๆฟ้ายู่ ตาบใดพะยาแสนสุลินทะถ่าๆฟ้า ยังมีชีวิดยู่ พธะเจ้าหิงสาอะดิ จะบ่สามาดเธัดหยังกับล้าบฮ้าๆได้. ดั่งนั้น, จึ่งพ้อมกันจับเอ๊า. ถะนะทูดพะม่าฮ้าเสัย อันหมายเภิๆ ปะซาชิบลาวล้าบฮ้าๆ ปะภาดสิๆถามกับพะม่าอีกเทื่อหนึ่ๆ.

ຝ່າຍພຣະເຈົ້າຫົງສາວະດີ ບຸເລງນອງ ຊາບວ່າປະຊາຊົນລາວລ້ານຊ້າງ ປະຫານຊີວິດຄະນະທູດຂອງຕົນ ຈຶ່ງໄດ້ສົ່ງກອງທັບມາຢັ້ງເບິ່ງ ກຳລັງປ້ອງກັນ ຂອງລາວລ້ານຊ້າງກ່ອນ ໂດຍໄດ້ແຕ່ງຊຸບພົນພິນຍາດາລາ (ພະຍາທະລະ) ຊົນຊາດມອນ ເປັນແມ່ທັບ ແລະ ໃຫ້ຊຽງໃໝ່ ແລະ ອະຍຸທະຍາ ຍົກກຳລັງທັບ ມາສົມທົບ.

ຝ່າຍປະຊາຊົນລາວລ້ານຊ້າງ ຊາບວ່າ ກອງທັບພະມ້າຍົກມາ ກໍ່ໄດ້ສົ່ງ ກຳລັງອອກຕໍ່ສູ້ ຕີສະກັດກັ້ນ ກອງທັບພະມ້າ ແລະຊຽງໃໝ່ ແຕກກະຈັດກະຈ່າຍ ໃນຂະນະທີ່ກອງທັບຊ້າງເສິກ ຍັງບໍ່ທັນຮອດນະຄອນຫລວງວຽງຈັນ. ສ່ວນກອງ ທັບອະຍຸທະຍາ ຍົກມາບໍ່ທັນຮອດ ເມື່ອຊາບຂ່າວວ່າ ກອງທັບໃຫຍ່ພະມ້າກີກ ແຕກ ແລະ ກຸອຍໄປແລ້ວ. ກໍ່ໄດ້ຍົກທັບກັບຄືນ ກຸງສີອະຍຸທະຍາ.

ຊ້າງຝ່າຍພຣະເຈົ້າຫົງສາວະດີ ບຸເລງນອງ ເມື່ອຊາບຂ່າວວ່າ ກອງທັບ ຂອງຕົນເສັຍໄຊ ກໍ່ມີຄວາມໂກດແຄ້ນເປັນອັນມາກ ຈຶ່ງສັ່ງໃຫ້ຈັບເອົາພາຍ ພົນພິນຍາດາລາ ໄປຊ້າກ່ຶ້ມ ແຕ່ຊຸບພົນພິນຍາດາລາ ຮູ້ຕົວເສັຍກ່ອນ ຈຶ່ງໄ ຫລົບໜີ.

ຄັນຮອດລະດູແລ້ງ ຕົ້ນປີ ຄ.ສ 1575 ຈຶ່ງຍົກກອງທັບໃຫຍ່ ອັນປະກອບ ດ້ວຍກອງທັບຫລວງ ຂອງພຣະເຈົ້າຫົງສາວະດີ, ກອງທັບຂອງພະມະຫາອຸປະ ຣາດ, ກອງທັບຂອງເຈົ້າກຸງອັງວະ, ກອງທັບພະຍາແປ, ກອງທັບເມືອງຍະໄຂ່ ກອງທັບເຈົ້າຕອງອູ, ກອງທັບໄຕໄມ້ສິບເກົ້າເຈົ້າຟ້າ, ກອງທັບລາວຊຽງໃໝ່ ແລ່ະ ກອງທັບໄທສະຍາມ ແຫ່ງອະຍຸທະຍາ. ການມາຄັ້ງນີ້ ບຸເລງນອງ ໄດ້ເອົາ ເຈົ້າ ມະຫາອຸປະຣາດ ວໍຣະວົງໂສ ມານຳ ເພື່ອຫວັງຈະສ້າງສົງຄາມຈິດຕະວິ ທະຍາ.

ຄັນກອງທັບໃຫຍ່ ຂອງພະມ້ານຍົກມາເຖິງ. ພະຍາແສນສຸລິນທະຄ່ວາງຟ້າ ກໍ່ໄດ້ທຳການສູ້ຮົບ ຕາມແຜນທີ່ວາງໄວ້ ຄືໄດ້ນຳເອົາການ ແລະ ຍຸດທະວິທີເກົ່າ ທີ່ເຄີຍໃຊ້ ແລະ ໄດ້ໄຊຊະນະມາແລ້ວ ໃນຣັດຊະສະໄໝ ຂອງສົມເດັດພຣະເຈົ້າ ໄຊຍະເສດຖາທິຣາດ. ແຕ່ກອງທັບລາວ ເວລານີ້ ມີຈຳນວນນ້ອຍກວ່າ ຄາວທີ່ ແລ້ວຫລາຍ ເພາະຄວາມແຕກແຍກພາຍໃນ ຂອງພວກຂຸນເສິກລາວ. ພວກທີ່ ສະໜັບສະໜູນ ພະຍາແສນສຸລິນທະຄ່ວາງຟ້າ ກໍ່ມີຫລາຍ ພ້ອມທີ່ຈະຕໍ່ສູ້ຮ່ວມມື ກັບພະຍາແສນສຸລິນທະຄ່ວາງຟ້າ. ສ່ວນທີ່ເປັນປະຕິປັກກັບ ພະຍາແສນສຸລິນ ທະຄ່ວາງຟ້າ ກໍ່ພາກັນຫລົບໜີ ຈາກນະຄອນວຽງຈັນ. ພວກທີ່ຄອຍຫາໂອກາດ ຄິດວ່າ ກ້ຳຕົນສະໜັບສະໜູນ ຝ່າຍພະມ້າ ອັນມີພຣະມະຫາອຸປະຣາດວໍຣະວັງໃສ ແລ້ວ ຕົນກໍ່ຈະໄດ້ຕຳແໜ່ງສູງ ອີກພວກໜຶ່ງ ເຖິງຈະບໍ່ສະໜັບສະໜູນ ພະຍາ ແສນສຸລິນທະຄ່ວາງຟ້າ ກໍ່ຕາມ ແຕ່ມີນ້ຳໃຈຮັກຊາດ ຮັກເອກະລາດ ກໍ່ໄດ້ໃຫ້ ການຮ່ວມມືຢ່າງເຕັມທີ່.

ເຖິງຢ່າງໃດກໍ່ດີ ກອງທັບລາວຜູ້ຮັກຊາດ ແລະ ຮັກຄວາມເປັນເອກະ ລາດ ພາຍໃຕ້ການບັນຊາການ ຂອງພະຍາແສນສຸລິນທະຄ່ວາງຟ້າ ກໍ່ໄດ້ທຳ ການຕໍ່ສູ້ກັບຂ້າເສິກ ຈົນສຸດຄວາມສາມາດ. ໃນທີ່ສຸດ ນ້ຳນ້ອຍສູ້ໄຟບໍ່ໄດ້, ກໍ່ ຕ້ອງເສຍນະຄອນວຽງຈັນ ໃຫ້ແກ່ພຣະເຈົ້າ ຫົງສາວະດີ ບຸເລງນອງ ໃນປີ ຄ.ສ 1575. ເປັນອັນວ່າ ອານາຈັກລາວລ້ານຊ້າງ ອັນກວ້າງໃຫຍ່ໄພສານ ທີ່ໄດ້ ທ້ອນໂຮມເປັນອັນໜຶ່ງອັນດຽວກັນ ໂດຍເຈົ້າຟ້າງຸ່ມ ມະຫາຣາດ ແຕ່ປີ ຄ.ສ 1353 ທັງດ້ານທະຫານ ການເມືອງ ແລະ ເສດຖະກິດ ແລະ ໄດ້ພັດທະນາ ໃຫ້ ເປັນດິນແດນຂອງຊົນຊາດລາວ ໃນທ່ຽງພຽງແມ່ນ້ຳຂອງ ໃນຕະຫລອດ 221 ປີ ກໍ່ໄດ້ສູນເສັຍເອກະລາດ ແລະ ອິດສະລະພາບແກ່ພະມ້າ. ແຕ່ການເສັຍເອກະ ລາດນັ້ນ ກໍ່ມີແຕ່ ນະຄອນຫລວງວຽງຈັນເທົ່ານັ້ນ, ແຕ່ຫົວເມືອງລາວອື່ນໆ

ເຊັ່ນ ເມືອງລາມມະລັກອົງກາບ (ອັດຕະປື) ມະລຸກຂະນະຄອນ ຈຳປາມະຄອນ ເມືອງພວນຊຽງຂວາງ ເປັນຕົ້ນ ບໍ່ຍອມເປັນຫົວເມືອງຂຶ້ນ ຂອງພະມ້າ ແຕ່ປະ ການໃດ. ຍັງຕັ້ງໂຕເປັນເອກະລາດຕ່າງຫາກ ຈາກນະຄອນວຽງຈັນ ຕໍ່ໄປ.

ການຕໍ່ສູ້

ຂອງຂະບວນການໄຊຍະເສດຖາທິຣາດ

ການຕໍ່ສູ້ ຂອງປະຊາຊົນອັດຕະປື ໃນນາມ ພຣະເຈົ້າໄຊຍະເສດຖາທິຣາດ ໄດ້ກໍ່ໂຕຂຶ້ນ ລຸນຫລັງສົມເດັດພຣະເຈົ້າໄຊຍະເສດຖາທິຣາດ ສະຫວັນນະຄົດ. ຜູ້ນຳຂະບວນການຕໍ່ສູ້ ແມ່ນຄູບາຫູຍາວຕັ້ງບ່າ ຜູ້ເປັນພຣະສະຫາຍຮັກ ແລະ ເພື່ອນຮ່ວມງານ ຂອງພຣະໄຊເສດຖາທິຣາດ ນັ້ນເອງ. ໃນບົດກ່ອນ ໄດ້ກ່າວ ໄວ້ແລ້ວວ່າ ເມື່ອສົມເດັດພຣະເຈົ້າໄຊຍະເສດຖາທິຣາດ ຍົກທັບລົງມາເມືອງ ລາມມະລັກອົງກາບ ເພື່ອກຽມກຳລັງ ໃນການເຈຣະຈາ ບັນຫາຊາຍແດນກັບ ເຈົ້າຊີວິດຂະເມນ ໃນປີ ຄ.ສ .1573 ນັ້ນ ຄູບາຫູຍາວຕັ້ງບ່າ ໄດ້ລາເພດພົມ ມະຈັນ ແລ້ວເຂົ້າຮັບໃຊ້ ໃນກອງທັບ ຂອງສົມເດັດພຣະເຈົ້າໄຊຍະເສດຖາທິ ຣາດ ແລະ ເປັນຜູ້ບັນຊາການ ກອງທັບປະຊາຊົນ ທີ່ລະດົມເຂົ້າໃໝ່ ຂອງທົ່ງ ຊີ້ຄວາຍ. ຄັນສົມເດັດພຣະເຈົ້າໄຊຍະເສດຖາທິຣາດ ສະຫວັນນະຄົດແລ້ວ ກໍ່ໄດ້ ເຂົ້າຄຸມອຳນາດ ບັນຊາກອງທັບປະຊາຊົນລາວພາກໃຕ້ທັງໝົດ. ໃນຄາວນັ້ນ ເຂົາໄດ້ເກີດຄວາມຂັດແຍ້ງ ກັບແມ່ທັບວຽງຈັນ ຈົນພະຍາແສນສຸລິນທະຄວ່າງ ຟ້າ ບໍ່ສາມາດຄຸມສະຖານະການໄດ້ ຈຳຕ້ອງຍົກກຸກອງທັບກັບວຽງຈັນ ດັ່ງກ່າວ ແລ້ວ

ນັບແຕ່ນັ້ນມາ, ທິດຫຼວງວຕັ້ງບ່ວ ກໍ່ປະກອດຕົນເປັນ " ພຣະໄຊເສດກາທິຣາດ ຫຼວງວຕັ້ງບ່ວ " ແລະ ກາຍເປັນຜູ້ມີອຳນາດສູງສຸດ. ພຣະໄຊເສດກາ ຫຼວງວຕັ້ງບ່ວ ໄດ້ດຳເນີນກາບຕາມແຜນ ຂອງສົມເດັດພຣະເຈົ້າໄຊຍະເສດກາ ທິຣາດພາເຣັດ ໃຫ້ລຸລ່ວງໄປ ໂດຍໃຊ້ເວລາຢູ່ ເຈັດປີບໍ່ລືບູນ. ໃນສະໄໝຂອງ ພະຍາແສນສຸລິນທະຄວ່ວງຟ້ວ ເປັນເຈົ້າແຜ່ນດິນລ້ານຊ້ວງ ເຂົ້ວກໍ່ແຂ່ງເມືອງ ແລະ ບໍ່ມາອ່ອນນ້ອມຕໍ່ວຽງຈັນ. ຄັ້ນນະຄອນຫລວງວຽງຈັນ ສູນເສັຍແກ່ກອງ ທັບພະມ້ວ ແລະ ພະມະຫາອຸປະຣາດວໍ່ຣະວັງໃສ ໄດ້ເປັນເຈົ້າແຜ່ນດິນຫຸ່ນ ຂອງ ພະມ້ວ ເຂົ້ວກໍ່ມີໂອກາດ ທຳກາບເຄື່ອນໄຫວ ບຸກລຸກປະຊາຊົນ ທາງດ້ານກາບ ເມືອງ ແລະ ກາບທະຫາບ ເພື່ອປົດປ່ອຍຊາດ ອອກຈາກແອກເມືອງຂຶ້ນ ຂອງ ພະມ້ວ ໃນນາມຂອງພຣະໄຊເສດກາທິຣາດ ຢ່ວງເຕັມຕົວ.

ກິດຈະກຳ ທີ່ນຳໄປເຜີຍແຜ່ ແມ່ນກາບລະດົມກຳລັງ ແລະ ກາບນຳເອົາ ອາຣະຍະທຳ ແລະ ວັດທະນະທຳ ທີ່ກ້ວວໜ້ວ ຂອງສະໄໝນັ້ນ ໄປເຜີຍແຜ່ ແກ່ ປະຊາຊົນ ໃນແຖບນ້ຳເຊກອງ ເຊຊ້ວນ ແລະ ເຊປົກ ໂດຍສືບຕໍ່ແຜນກາບຂອງ ສົມເດັດພຣະເຈົ້າໄຊຍະເສດກາທິຣາດ ທີ່ໄດ້ນຳພາເຣັດມາແລ້ວ ເຊິ່ງພໍສະ ຫລຸບໄດ້ດັ່ງນີ້ :

ດ້ານກາບຄ້ວຂາຍ ພຣະໄຊເສດກາຫຼວງວຕັ້ງບ່ວ ໄດ້ຈັດຕັ້ງກາບຄ້ວຂາຍ ຂຶ້ນ ເພື່ອນຳພາປະຊາຊົນ ເອົາເຄື່ອງປ່ວຂອງດົງ ມາແລກປ່ຽນ ຄ້ວຂ່ວຍ ກັບ ພໍ່ຄ້ວຊາວຈຳປານະຄອນ ຈົນເຣັດໃຫ້ມີເງິນຄ່ວ ເປັນທຶນໃນກາບສ້ວງກຳລັງ ທັບໃຫ້ເຂັ້ມແຂ່ວ.

ດ້ານການປຸກລະດົມ ປະຊາຊົນໃຫ້ມີຄວາມຮັກຊາດນັ້ນ, ເຂົາໄດ້ອ້າງວ່າ ຜູ້ກໍາອໍານາດ ໃນນະຄອນຫລວງວຽງຈັນ ປັດຈຸບັນ ເປັນລູກແຫລ້ງ ຂອງພວກ ພະມ້າ, ເຂົາໄດ້ກວາດຕ້ອນເອົາຊັບສິນເງິນຄໍາຂອງຊາດ ໄປໃຫ້ພວກຂຸນ ນາງພະມ້າ ພວກຍິງສາວ ກໍ່ຖືກສັກດິນາພະມ້າ ກວາດຕ້ອນໄປໝົດ ແລະ ຍັງຈະ ຕ້ອງຂົນໄປທຸກປີ ອັນຈະເຮັດໃຫ້ປະຊາຊົນ ໄດ້ຮັບຄວາມທຸກຍາກ ລໍາບາກ ຕະ ຫລອດໄປ ກ້າຫາກພວກເຮົາ ບໍ່ມີການຕໍ່ສູ້ຂັບໄລ່ພະມ້າ ອອກໄປຈາກລາວລ້ານ ຊ້ານ ດັ່ງນັ້ນ, ພວກເຮົາ ຈໍາເປັນຕ້ອງຕໍ່ສູ້ຂັບໄລ່ພະມ້າອອກໄປ.

ໃຕ້ຍອາໄສການຊ່ວຍເຫລືອ ສະໜັບສະໜູນຂອງປະຊາຊົນ ພຣະໄຊເສດ ກາທິຣາດຫູຍາວຕັ້ງບ່າ ຈຶ່ງໄດ້ພາປະຊາຊົນ ຜູ້ຍັງໝຸ່ນແໜ້ນ ເຝິກຜ່ອນວິຊາ ການທະຫານ ແລະ ຂົນຂວາຍປະຊາຊົນ ເຮັດສາດຕາອາວຸດ ແລະ ເຮັດປ້ອມ ຄ້າຍໃຫ້ມີຄວາມແໜ້ນໜາໝັ້ນຄົງ ຢູ່ທີ່ທົ່ງຂີ້ຄວາຍ ແລ້ວກຽມຍົກທັບຂຶ້ນມາ ຍຶດນະຄອນວຽງຈັນ.

ດ້ານອາຣະຍະທໍາ ພຣະໄຊເສດກາທິຣາດ ຫູຍາວຕັ້ງບ່າ ໄດ້ພາປະຊາຊົນ ແກບນໍ້າເຊກອງ ເຊຊານ ແລະ ເຊປົກ ໃຫ້ຮູ້ຈັກວິທີຮ່ອນຄໍາ, ຫລໍ່ຫລັກ ແລະ ຕີຫລັກ, ສິລປະການຄວັດໄມ້ ແລະ ວາງລະບຽບສັງຄົມໃຫ້ແກ່ປະຊາຊົນ.

ຄັນຮອດປີ ຄ.ສ 1579 (ຈຸລສັງກາດ 942) ພຣະໄຊເສດກາທິຣາດ ຫູຍາວຕັ້ງບ່າ ໄດ້ຍົກກໍາລັງຂຶ້ນມາຍຶດເອົາເມືອງໜັນ (ສາຣະວັນ) ແລະ ຄໍາ ທອງ ແລະ ເມືອງຕ່າງໆ ໄດ້ຫລາຍເມືອງ ຍິ່ງເຮັດໃຫ້ ກໍາລັງຂອງຂະບວນ ການນັ້ນໃຫຍ່ໄຕຂຶ້ນຕື່ມອີກ.

ຝ່າຍພຣະວໍຣະວັງໂສ ກະສັດຫຸ່ນຂອງພະມ້າ, ຄັນໄດ້ຊາບຂ່າວວ່າ ກໍາລັງ ຂອງພຣະໄຊເສດກາ ຫູຍາວຕັ້ງບ່າ ໄດ້ຄວບຄຸມພາກໃຕ້ສຸດຂອງປະເທດໄວ້ໄດ້ ທັງໝົດ ແລະ ມີອິດທິພົນຂຶ້ນຈັກໃຊ້ ຢ້ານເປັນອັນຕະລາຍ ຕໍ່ຣາຊບັນລັງຂອງ ຕົນ ຈຶ່ງໄດ້ປຶກສາກັບແມ່ທັບພະມ້າ ທີ່ປະຈໍາຢູ່ວຽງຈັນວ່າ ຄວນຈະປະຕິບັດແນວ ໃດ ແມ່ທັບພະມ້າ ແນະນໍາໃຫ້ສົ່ງກໍາລັງທັບ ລົງໄປພາບໂດຍໄວ. ດັ່ງນັ້ນ, ພຣະ ວໍຣະວັງໂສ ຈຶ່ງແຕ່ງຕັ້ງ ພະຍາຊຽງໃຕ້, ພະຍາຊຽງເໜືອ, ພະຍານະຄອນ ແລະ ແສນຄອງ ພ້ອມດ້ວຍແສນໝື່ນທັງຫລາຍ ຍົກທັບລົງໄປພາບກອງກໍາລັງ ຂອງ ພຣະໄຊເສດກາທິຣາດ ຫູຍາວຕັ້ງບ່າ. ກອງທັບວຽງຈັນ ທັງ 4 ກອງ ກໍ່ໄດ້ພົບ ກັບຄວາມພ່າຍແພ້ ກັບຄືນມາຍັງເມືອງນະຄອນ (ທ່າແຂກ). ກໍາລັງຂອງ ຂະບວນການໄຊເສດກາທິຣາດ ກໍ່ໄລ່ຕິດຕາມຂຶ້ນມາ ແລະ ຍຶດເອົາເມືອງ ລະຄອນໄດ້ໂດຍງ່າຍ ແລ້ວຈຶ່ງຕັ້ງເມືອງລະຄອນ ເປັນການທີ່ໝັ້ນ ເພື່ອຍຶດເອົາ ນະຄອນວຽງຈັນ. ຝ່າຍກອງທັບພະຍາທັງ 4 ກໍ່ແຕກຂຶ້ນມາວຽງຈັນ ເຂົ້າລາຍ ງານສະການະການ ໃຫ້ພຣະວໍຣະວັງໂສ ຊາບທຸກປະການ. ພຣະວໍຣະວັງໂສ ມີ ຄວາມຢ້ານກົວ ແລະ ຕົກໃຈເປັນອັນມາກ ຈຶ່ງໄດ້ປຶກສາກັບແມ່ທັບພະມ້າ ທີ່ປະ ຈໍາຢູ່ວຽງຈັນອີກ. ແມ່ທັບພະມ້າ ແນະນໍາໃຫ້ເຕົ້າໂຮມກໍາລັງຂອງຫົວເມືອງ ຕ່າງໆ ຝ່າຍເໜືອ ທີ່ຍັງຈົງຮັກພັກດີທັງໝົດ ແລະ ໃຫ້ກໍາລັງເມືອງພວນຊ່ຽງ ຂວາງ ຮີບມາຊ່ວຍໂດຍໄວ, ເຈົ້າວໍຣະວັງໂສ ກໍ່ປະຕິບັດຕາມ ການແນະນໍາທຸກ ປະການ.

ຝ່າຍກໍາລັງຂະບວນການໄຊເສດກາທິຣາດ ກໍ່ຍົກຕິດຕາມພະຍາທັງ 4 ຂຶ້ນມາ ແລະ ສາມາດຍຶດເອົາເມືອງສໍາຄັນຕ່າງໆ ຕາມລໍານໍ້າຂອງ ເຊັ່ນ ວຽງ ປາກຫ້ວຍຫລວງ, ໝອງຄາຍ, ທ່າບໍ່ ແລ້ວມາຕັ້ງການທີ່ໝັ້ນຢູ່ວຽງຈຸກ.

ສ່ວນກອງທັບວຽງຈັນ ອັນມີກອງທັບພະມ້າໜູນຫລັງ ກໍ່ໄດ້ຍົກອອກມາ ໂຈມຕີກອງກຳລັງ ຂອງຂະບວນການໄຊ່ເສດຖາທິຣາດ ທີ່ວຽງຄຸກ. ພຣະໄຊ ເສດຖາທິຣາດ ຫູຍາວຕັ້ງບ່ວ ກໍ່ໄດ້ປະກິດຕົວ ຕໍ່ໜ້າກອງກຳລັງຂອງຕົນ ໃນ ຂະນະທີ່ຍົກອອກມາຈາກວຽງຄຸກ ເພື່ອພະເຊີນໜ້າກັບແມ່ທັບວຽງຈັນ ແລະ ພະຍາທ້າຫລາຍ ອັນເປັນການເຣັດສົງຄາມຈິດຕະສາດ. ແມ່ທັບລາວ ແລະ ໝື່ນໄຊ ເຈົ້າຄອງແຄວ້ນຊຽງຂວາງ ຫລຽວເຫັນກໍ່ຕົກໃຈ ເສັຍຂວັນ ເພາະ ເຂົ້າໃຈວ່າ ແມ່ນສົມເດັດພຣະເຈົ້າໄຊຍະເສດຖາທິຣາດແທ້. ' ບໍ່ມີກຳລັງໃຈ ທີ່ ຈະສູ້ຣົບ ກັບກອງທັບ ທີ່ຕົນເຂົ້າໃຈວ່າ ແມ່ນສົມເດັດພຣະເຈົ້າໄຊຍະເສດຖາ ທິຣາດ ເປັນຜູ້ບັນຊາການ ຈຶ່ງແຕກພ່າຍ. ສ່ວນແມ່ທັບພະມ້າ ເຫັນເຫດການ ປ່ຽນແປງຢ່າງບໍ່ຄາດຄິດ ກໍ່ຖອຍທັບຄືນວຽງຈັນ. ກຳລັງທະຫານຂອງ ພຣະ ໄຊ່ເສດຖາທິຣາດ ຫູຍາວຕັ້ງບ່ວ ກໍ່ໄລ່ຕີມາຮອດວຽງຈັນ. ກອງທັບພະມ້າສູ້ບໍ່ໄດ້ ກໍ່ແຕກພ່າຍເມືອຫົ້ງສາວະດີ. ກອງທັບຂອງຂະບວນການໄຊ່ເສດຖາທິຣາດ ກໍ່ ເຂົ້າຍຶດວຽງຈັນໄດ້ ໃນຕົ້ນປີ ຄ.ສ 1580 (ພົ້ງສາວະດານລາວ ຂອງກະຊວງ ສຶກສາທິການວ່າ 1579).

ສ່ວນພຣະວໍຣະວົງໂສ ໄດ້ນຳເອົາມະເຫສີ ແລະ ພຣະຣາຊທິດາ 2 ຄົນ ແລະ ບໍລິວານ ລົງເຮືອໜີຂຶ້ນໄປເມືອ ເມືອງຫົ້ງສາວະດີ ພໍໄປເຖິງ ແກ້ງບ່ອນ ໜຶ່ງ ເຮືອເລີຍຫລົ້ມ ພຣະວໍຣະວົງໂສ, ມະເຫສີ, ພຣະຣາຊທິດາ ແລະ ບໍລິວານ ກໍ່ຈົມນ້ຳຕາຍສ້ຽງ.

ຄວາມເຫັນຂອງນັກປະວັດສາດ
ເລື້ອງການສະຫວັນນະຄົດ
ຂອງສົມເດັດພຣະເຈົ້າໄຊຍະເສດກາທິຣາດ

ພົງສາວະດານລາວ, ປະວັດສົມເດັດພຣະເຈົ້າ ໄຊຍະເສດກາທິຣາດ ຫລາຍສະບັບ ແລະ ປະວັດສາດບາງສະບັບ ມີຄວາມເຫັນວ່າ : " ພະຍານະຄອນ ເຈົ້າເມືອງນະຄອນ (ມະລຸກຂະນະຄອນ ຫລື ທ່າແຂກ) ສົມທົບກັບ ອະດີດ ສັງຄະລາດ ວັດມັດຊິມະວາດ ວາງແຜນປົງພະຊົນ ສົມເດັດພຣະເຈົ້າໄຊຍະ ເສດກາທິຣາດ ເພື່ອພວກຕົນຈະໄດ້ເປັນກະສັດແທນ ຈຶ່ງໄດ້ເຮັດໜັງສືໄປຕົວະ ສົມເດັດພຣະເຈົ້າໄຊຍະເສດກາທິຣາດວ່າ ລູກສາວຂອງພະຍາເມືອງອົງການ 2 ຄົນ ຄືພະນາງເທບກາຍາ ແລະ ພະນາງອຸທຸມພອນ ມີຄວາມມັກໄຄ່ ແລະ ປະສົງ ຢາກມາເປັນບາດບໍລິຈາກ ສົມເດັດພຣະເຈົ້າໄຊຍະເສດກາທິຣາດ. ແລ້ວຈຶ່ງແຕ່ງທູດ 10 ຄົນ ກັບພຣະສົງ 2 ອົງ ກືໜັງສືຂຶ້ນມາ ແຕ່ມາເຖິງເມືອງ ສາຍ ເຈົ້າເມືອງ ເມືອງສາຍ ບໍ່ອະນຸຍາດໃຫ້ພວກທູດຂຶ້ນມາ, ພຣະພິກຸ 2 ອົງ ຈຶ່ງລັກໜີຂຶ້ນມາ ກວາຍໜັງສືຕໍ່ ສົມເດັດພຣະເຈົ້າໄຊຍະເສດກາທິຣາດ ເມື່ອ ໄດ້ຮັບໜັງສືນັ້ນແລ້ວ ກໍ່ຈົ່ງເຊື່ອວ່າ ເປັນຄວາມຈິງ ຈຶ່ງແຕ່ງໃຫ້ພະຍາໂສມພະ ມິດ, ພະຍາຈັນ, ທ້າວເຄ ແລະ ພັນຄົນໃຊ້ ເປັນທູດກືສານໄປຍັງເມືອງອົງການ ໂດຍຂຸນຫລວງອຸປະຫານ ເປັນນາຍທາງ. ເມື່ອພະຍາເມືອງອົງການ ໄດ້ຮັບ ສານ ຈາກຄະນະທູດ ກໍ່ພິໂຣດໂກດແຄ້ນ ຈຶ່ງໄລ່ຄະນະທູດ ໃຫ້ອອກຈາກເມືອງ. ພວກຄະນະທູດ ໄດ້ກັບຄືນມາ ຜ່ານທາງເມືອງມະລຸກຂະນະຄອນ ຈຶ່ງໄດ້ເລົ່າ ເລື້ອງທັງໝົດໃຫ້ພະຍານະຄອນຟັງ ພະຍານະຄອນກໍ່ທໍ່າທ່າຄຽດແຄ້ນ ແທນ ສົມເດັດພຣະເຈົ້າໄຊຍະເສດກາທິຣາດ ແລະ ສະເໜີຂໍ່ໃຫ້ພຣະອົງ ຍົກກອງທັບ ໄປຕີເມືອງອົງການ ສ່ວນຕົນເອງ ຈະຂໍ່ເປັນແມ່ທັບໜ້າ. ສົມເດັດພຣະເຈົ້າ ໄຊຍະເສດກາທິຣາດ ໄດ້ຟົງຊາບແລ້ວ ກໍ່ຟົງເຊື່ອວ່າ ເປັນຄວາມຈິງແທ້.

ຄັນເຖິງປີ ຄ.ສ 1572 ສົມເດັດພຣະເຈົ້າໄຊຍະເສດຖາທິຣາດ ຈຶ່ງຍົກ ໄພ່ພົນໂຍທາ ໄປຕີເມືອງອົງກາບ. ເມື່ອໄປເຖິງເຂດແດນ ເມືອງອົງກາບແລ້ວ ພະຍານະຄອນ ໄດ້ທຳອຸບາຍ ພາກອງທັບຂອງພຣະອົງ ເຂົ້າໄປໃນລະຫວ່າງວົງ ສະກັດຂອງກອງທະຫານຂອງຕົນ ທີ່ໄດ້ຕັ້ງທັບກຽມໄວ້ແລ້ວ. ກອງທະຫານ ພະຍານະຄອນກໍ່ບຸກຕີກອງທັບ ຂອງສົມເດັດພຣະເຈົ້າໄຊຍະເສດຖາທິຣາດ ບໍ່ ທັນສູ້ຕີ ກໍ່ແຕກກະຈັດກະຈ່າຍໄປ ພະຍານະຄອນ ທຳອຸບາຍ ພາສົມເດັດພຣະ ເຈົ້າໄຊຍະເສດຖາທິຣາດ ຂ້າມນ້ຳຂອງໄປທາງຝ່າກນັ້ນ ແລ້ວເລີຍພາໄປສັ່ຍ ທີ່ໃດບໍ່ຮູ້. ສ່ວນພະຍາແສນສຸລິນທະລ່ວງໜ້າ ແລະ ພະຍາຈັນກອງນ້ອຍ ກໍ່ພາ ທະຫານ ແຕກໜີຄືນມາພະຍານະຄອນວຽງຈັນ ".

ຍ້ອນປະວັດສາດຕອນນີ້ເອງ ຈຶ່ງມີການເລົ່າກັນຕໍ່ໆມາວ່າ ພວກຊົນເຜົ່າ ລາວເທິງ ໄດ້ຈັບພຣະໄຊເສດຖາ ໄປເປັນຊະເລີຍ ແລະ ໄດ້ໃຫ້ພຣະອົງເຮັດ ວຽກສັບພະທຸກຕ່າງໆ ນັບແຕ່ການເຈັ່ຍຟືນ, ຕຳເຂົ້າ, ຕັກນ້ຳ, ກ່ຽງໄຮ່, ເອົາ ລູກເວລາພໍ່ແມ່ໄປໄຮ່, ເກືອໝູ, ເກືອໄກ່, ເຝົ້າກວ້ານເປັນຕົ້ນ. ແຕ່ພຣະໄຊເສດ ຖາ ກໍ່ຍອມປະຕິບັດຕາມທຸກຢ່າງ. ຢູ່ມາມື້ໜຶ່ງ ມີງານບຸນກິນຈຽງ ປະຈຳປີ (ບຸນລະປີບ) ໃນພິທີ ມີການຂ້າຄວາຍຫລາຍໂຕ ເພື່ອເສັ້ນຜີ, ຕີຄ້ອງລາ, ກິນ ເຫລົ້າ ຄົບງັນ 3 ມື້ 3 ຄືນ ບໍ່ອະນຸຍາດໃຫ້ຊົນທາງນອກເຂົ້າໄປໃນບ້ານ ກ້າໃຜ ຂືນດື້ເຂົ້າໄປ ຈະຖືກປັບໃໝ ເປັນຄວາຍ ສ່ວນຈຳນວນສຸດແລ້ວແຕ່ຈ້ຳຈະ ເອົ້ນເອົາ. ຢູ່ເທິງກວ້ານ (ສາລາກາງບ້ານ) ຈະມີການກິນເຫລົ້າ ຄົບງັນກິນ ຄວາຍ ຕີຄ້ອງລາ ຄົບງັນກັນໝົດບ້ານ ພຣະໄຊເສດຖາທິຣາດ ຖືກໃຫ້ໄປຕັກນ້ຳ ມາໃສ່ໄຫເຫລົ້າ ພຣະອົງໄດ້ຫາບກະກອຍຕາຫ່າງສອງໜ່ວຍ ໄປຕັກເອົານ້ຳຈົນ ເຕັມ ແລ້ວຈຶ່ງຫາບມາໃຫ້ພວກກິນເຫລົ້າ. ພວກຊົນເຜົ່າເຫັນດັ່ງນັ້ນ ກໍ່ຕົກໃຈ ຢ້ານກົວ ແລະ ງຶດງໍ້ອັດສະຈັນ ແລະ ເຊື່ອວ່າ ພຣະໄຊເສດຖາ ມີເວດມົນຄາຖາ ອາຄົມ ເສກບໍ່ໃຫ້ນ້ຳໄຫລອອກຈາກກະກອຍຕາຫ່າງ. ຕໍ່ມາ ພວກຊົນເຜົ່າໄດ້ໃຊ້

ພຣະໄຊເສດກາ ໃຫ້ເຝົ້າລູກນ້ອຍຂອງພວກຕົນ ສ່ວນພໍ່ແມ່ພາກັນໄປໃສ່ໄປສວນ ພຣະໄຊເສດກາ ໄດ້ເສກນົມເຣັດໃຫ້ເດັກນ້ອຍນອນຫລັບໝົດທຸກຄົນ ຄົນ້ຳທາງ ນອກແນມເຂົ້າມາ ພັດເຫັນເດັກນ້ອຍ ເປັນໝາກຟັກໝາກອຶໝົດ. ເມື່ອພໍ່ແມ່ ພວກເດັກນ້ອຍກັບມາແຕ່ໃສ່ ບໍ່ເຫັນລູກ ກໍພາກັນຮ້ອງໄຫ້ .ພ້ອມກັນຈະຂ້າພຣະ ໄຊເສດກາກິ້ນ. ພຣະອົງຈຶ່ງເອົາມືໄປຕົບກົ້ນເດັກນ້ອຍ ທີ່ເປັນໝາກຟັກໝາກອຶ ນັ້ນ ພວກເດັກນ້ອຍຈຶ່ງຕື່ນຂຶ້ນ ແລະ ແລ່ນໄປຫາພໍ່ແມ່ຂອງເຂົາເຈົ້າ.

ແຕ່ນັ້ນມາ, ພຣະໄຊເສດກາທິຣາດ ຈຶ່ງເປັນທີ່ເຄົາຣົບນັບຖື ແລະ ກາຍ ເປັນເຈົ້າຊົນເຜົ່າລາວເທິງ ເຜົ່າຕ່າງໆ ໃນແຂວງພາກໃຕ້ທັງມວນ ຈົນເທົ່າ ທຸກມື້ນີ້.

ທັດສະນະຂອງຜູ້ຂຽນ ຕໍ່ການເສັຍຊີວິດຂອງ ພຣະເຈົ້າໄຊຍະເສດກາທິຣາດ

ການທີ່ປະຫວັດສາດຫລາຍສະບັບ ບັນທຶກໄວ້ວ່າ " ພຣະເຈົ້າໄຊຍະເສດ ກາທິຣາດ ຍົກທັບໄປປາບພວກຂອມ ທີ່ຣາມະຣັກອົງການ ຄືພວກຊົນເຜົ່າຢູ່ ອັດຕະປື ແລ້ວຫາຍສາບສູນ. ບາງສະບັບກໍ່ວ່າ ພຣະອົງຍົກທັບໄປຕີເມືອງອົງ ການ ແລ້ວຫາຍສາບສູນ. ບາງສະບັບກໍ່ກ່າວວ່າ ສົມເດັດພຣະເຈົ້າໄຊຍະເສດ ກາທິຣາດ ສິ້ນພຣະຊົນດ້ວຍການຫັກຫລັງຂອງພຣະຍານະຄອນ " ນັ້ນ ຂ້າພະ ເຈົ້າເຫັນວ່າ ບໍ່ສົມເດັດສົມພົນ ແລະ ບໍ່ເຊື່ອວ່າ ຈະເປັນໄປໄດ້ ຍ້ອນວ່າ :

① ສະພາບປະຊາຊົນ ຄືຊົນເຜົ່າໃນຣາມະຣັກອົງການ ຫລື ອິດກະບື ເວລານັ້ນ ພຣະອົງ ແລະ ຄູບາຫູຍາວຕ້ຳບ່າ ໄດ້ເກັ້ຍກ່ອມ ໃຫ້ເຂົ້າ

ມາຮ່ວມກັບພຣະອົງໝົດແລ້ວ ແລະ ທັງເປັນກຳລັງສຳຄັນ ໃນການ ເຮັດສາດຕາອາວຸດ ແລະ ເຝິກຮອບຊ້ຽງປ່າ ໃຫ້ເປັນຊ້ຽງເສິກ ເພື່ອປະກອບເປັນກອງທັບຂອງພຣະອົງ. ຊົນເຜົ່າທີ່ສຳຄັນ ແລະ ມັກເຮັດເສິກ ຫລື ກະມາກັນ ກໍ່ຄືເຜົ່າຈະຣາຍ, ເຜົ່າກະຍອງ ແລະ ຊ້າຊັດ ເຜົ່າເຫລົ່ານີ້ ກໍ່ໄດ້ເຂົ້າຮ່ວມກັບພຣະອົງໝົດແລ້ວ ຊົນເຜົ່າ ເຫລົ່ານີ້ ຍັງເປັນກຳລັງສຳຄັນ ໃນການເຮັດ ສາດຕາອາວຸດ ຢູ່ ບ້ານວັງຕັດ ເມືອງສານໄຊ ອີກດ້ວຍ.

② ໃນໄລຍະທີ່ພຣະເຈົ້າໄຊຍະເສດກາທິຣາດ ບໍ່ຢູ່ໃນທ້ອງອິດກະບີ ຫລື ຣາມະຣັກອົງການ ແຕ່ປີ ຄ.ສ 1564 ເຖິງ 1571 ນັ້ນ, ພຣະອົງ ໄດ້ ມອບໃຫ້ຄູບາຫູຍາວຕັ້ງບ່າ ເຊິ່ງເປັນພຣະສະຫາຍຣັກຂອງພຣະອົງ ຮັກສາເມືອງຣາມະຣັກອົງການ ແລະ ສືບຕໍ່ພາຣະກິດ ທີ່ພຣະອົງ ແລະ ພຣະສະຫາຍໄດ້ເຮັດຮ່ວມກັນມາແລ້ວ. ຄູບາຫູຍາວຕັ້ງບ່າ ກໍ່ ເປັນພຣະ ທີ່ມີຄວາມສະຫລາດຫລັກແຫລມ ເປັນທີ່ເຄົາຣົບນັບຖື ຂອງປະຊາຊົນ ໃນບໍລິເວນນີ້ ເທົ່າໆກັນກັບ ພຣະເຈົ້າໄຊຍະເສດ ກາທິຣາດ. ກ້າຫາກມີກໍລະນີຂັດແຍ້ງ ຫລື ບໍ່ພໍໃຈຂອງປະຊາຊົນ ຕໍ່ ພຣະເຈົ້າໄຊຍະເສດກາທິຣາດ ຄູບາອົງນີ້ ກໍ່ມີຄວາມສາມາດລະງັບ ເຫດການນັ້ນໄດ້ ຫລື ກ້າບໍ່ສາມາດລະງັບໄດ້ ກໍ່ຄົງຈະລາຍງານໃຫ້ ພຣະອົງຊາບ ເພື່ອໃຫ້ມີວິທີປ້ອງກັນພຣະອົງໄດ້.

③ ກອງທັບຂອງພຣະເຈົ້າໄຊຍະເສດກາທິຣາດ ເປັນກອງທັບໃຫຍ່ ມີ ແມ່ທັບຜູ້ສຳຄັນ ຄືພະຍາ ແສນສຸຣິນທະຄວ່ຽງຟ້າ, ພະຍາຊ້ຽງແຂ່ນ ຫັກ, ພະຍາຈັນກອ້ຽນໆ, ພະຍາແສນຊ້ຽງທ່ຽວ ແລະ ແມ່ທັບສຳ ຄັນອື່ນໆ. ການຍົກທັບເຂົ້າຕີຊ້າເສິກ ໃນບັ້ນຣົບຕ່າງໆ ກອງທັບ

ໜ້າມັກຈະຜ່ນ ພະຍາຜສນສຸລິນທະຄວ່າງຟ້າ ສ່ວນພຣະອົງ ຜລະ ພະຍາຊ້າຍຜຂນຫັກ ຜລະ ພະຍາຜສນຊ້າງທ່າວ ຈະຄຸມທັບຫລວງ ເພື່ອໝູນກອງທັບ ພະຍາຜສນສຸຣິນທະຄວ່າງຟ້າ ເຊິ່ງເປັນກອງ ທັບໜ້າສະເໝີ ເກືອບທຸກສະໜາມຮົບ ໃນບັ້ນຮົບຕ່າງໆຜ່ານມາ. ການທີ່ສັດຕູຈະເຂົ້າເກີງພຣະອົງ ຜ່ນຍ່າກໝັກໝາ ເພາະຈະຕ້ອງ ຜ່ານຜ່ນທັບໃຫຍ່ຕ່າງໆມາກ່ອນ. ການເວົ້າວ່າ ພຣະອົງໄປປາບ ພວກເຜົ່າຕ່າງໆ ເປັນກະບົດ ຢູ່ຣາມະຣັກອົງການ ຜລ້ວຫາຍຕົວ ໄປນັ້ນ ບໍ່ສົມເຫດສົມຜົນ. ເພາະບໍ່ໜ້າຈະມີກອງກຳລັງທີ່ເຂັ້ມຜຂງ ພໍ ທີ່ຈະຕໍ່ສູ້ກັບກຳລັງທັບ ທີ່ເຂົ້າຜຂງຂອງພຣະອົງໄດ້.

④ ກະສັດຂອມ ຫລື ຂະເມນ ໃນໄລຍະນັ້ນ ຜ່ນພຣະເຈົ້າອົງຈັນ ຜລະ ພຣະບໍລົມມະຣາຊາທີ I ເຊິ່ງຜ່ນໄລຍະດຽວກັບພະມະຫາຈັກກະ ພັດ ຜລະ ພຣະມະຫາທຳມະຣາຊາ ຜຫ່າງສຍາມ ຫລື ອະຍຸທະຍາ ທ້າສອງອານາຈັກນີ້ ບໍ່ສາມາດຈະຂະຫຍາຍອິດທິພົນ ເຂົ້າມາໃນ ອານາຈັກລ້ານຊ້າງໄດ້ ຍ້ອນວ່າ :

ຝ່າຍມະຫາຈັກກະພັດ ຜລະ ມະຫາທຳມະຣາຊາ ຜຫ່າງອະຍຸທະຍາ ກໍ່ ກີກພະມ້າ ເຂົ້າຣຸກຣານ ຜລະ ເສັຍໄຊໃຫ້ຜກ່ພະມ້າ ໃນທີ່ສຸດ ໃນ ການປ້ອງກັນອະຍຸທະຍານີ້ ກອງທັບລ້ານຊ້າງ ໂດຍການນຳຂອງ ພຣະເຈົ້າໄຊຍະເສດຖາທິຣາດ ກໍ່ໄດ້ເຂົ້າຊ່ວຍ ດັ່ງທີ່ໄດ້ກ່າວມາ ຜລ້ວ.

- ฝ່າຍອານາຈັກຂອມ ຫລື ອິນທະປັດທະນະຄອນ ເຈົ້າຜູ້ປົກຄອງ ນາມ ວ່ານັກອົງຈັນ ແລະ ບໍຣົມມະຣາຊາທີ I ໄດ້ພະຍາຍາມ ສ້າງກຳລັງ ອຳນາດທາງທະຫານໃຫ້ເຂັ້ມແຂງ. ໄດ້ສົ່ງກຳລັງເຂົ້າບຽດຍຶດເອົາ ປາຈີນບຸຣີ ແລະ ໂຄລາດ ຂອງສຍາມ ແລະ ໄດ້ຍຶດເອົາຊຽງແຕງ ແລະ ບ້ານແມ່ທວດ ຂອງອານາຈັກລ້ານຊ້າງ ໃນໄລຍະທີ່ລ້ານຊ້າງ ກຳລັງສູ້ຣົບຢ່າງຕິດພັນ ຕໍ່ເນື່ອງກັບພຣະເຈົ້າຫົງສາວະດີ ບຸເລັງ ນອງຢູ່ ໂດຍເອົາໂອກາດທີ່ລ້ານຊ້າງ ກຳລັງມີຄວາມຫຍຸ້ງຍາກ, ແຕ່ເມື່ອສົມເດັດພຣະເຈົ້າໄຊຍະເສດຖາທິຣາດ ສາມາດຕ້ານການ ຮຸກຮານຂອງພະມ້າ ເຂົ້ານະຄອນຫລວງວຽງຈັນໄດ້ ແລະ ເຮັດໃຫ້ ກອງທັບພະມ້າປລາໄຊ ຖອນອອກໄປ. ຝ່າຍຂະເມນກໍ່ບໍ່ສາມາດ ບຸກຄືບໜ້າຂຶ້ນມາຕື່ມອີກ ເພາະກອງພຣະບໍຣົມເດຊານຸພາບ ຂອງ ສົມເດັດພຣະເຈົ້າໄຊຍະເສດຖາທິຣາດ. ຄວາມເຂັ້ມແຂງທາງທະ ຫານ ຂອງຂະເມນເວລານັ້ນ ມີພຽງໄລຍະສັ້ນ ເມື່ອສິ້ນສະໄໝຂອງ ບໍຣົມມະຣາຊາທີ I (ຄ.ສ 1566-1576) ແລ້ວກໍ່ປະກົດມີກະສັດ ຂຶ້ນຄອງລາດ ທີ່ຊັດເຈນ ເປັນເວລາເກືອບ 100 ປີ ຍ້ອນຄວາມ ຂັດແຍ້ງພາຍໃນ ຫລັງຈາກນັ້ນຈຶ່ງປະກົດຊື່ກະສັດຂອມ ຄືພຣະເຈົ້າ ອົງໝົ້ວ I (1640 - 1679) ແລະ ຫລັງຈາກຣັຊການ ພຣະເຈົ້າ ອົງໝົ້ວ I ແລ້ວ ຈຶ່ງແມ່ນພຣະເຈົ້າອົງໝົ້ວ II ປົກຄອງສືບຕໍ່ກັນມາ ຈົນຂະເມນຕົກເປັນເມືອງຂຶ້ນຂອງຝຣັ່ງເສດ ໃນປີ ຄ.ສ 1863. ຈຶ່ງແມ່ນ ພຣະເຈົ້າອົງດ້ວງ ແລະ ສົມເດັດພະໂຣດົມ, ສົມເດັດພະ ໂຣດົມສີຫານຸ ແລະ ສົມເດັດພະໂຣດົມ ສີຫະມຸນີ ຕາມລຳດັບ ເຖິງ ປັດຈຸບັນ.

⑤ ການທີ່ປະວັດສາດບາງສະບັບກ່າວວ່າ ສົມເດັດພຣະເຈົ້າ ໄຊຍະ ເສດຖາທິຣາດ ກືກພະຍາມະຄອນວາງແຜນປົ້ງພຣະຊົນ ເພື່ອຕົນ ຈະໄດ້ເປັນເຈົ້າແຜ່ນດິນແທນນັ້ນ ເຫັນວ່າ ເນື້ອຄວາມຂັດແຍ້ງ ກັບທີ່ບັນທຶກໄວ້ໃນ " ປະຫວັດສາດລາວ " ສະບັບຂອງສະຖາບັນຄົ້ນ ຄວ້າການສຶກສາແຫ່ງຊາດ ກະຊວງສຶກສາທິການ ເຫລັ້ມທີ VI ພາກ 7 ໜ້າ 26 ຊຶ່ງຂ້າພະເຈົ້າໄດ້ນຳມາລົງໄວ້ໃນໜ້າ 23 ໃນບົດ ວ່າດ້ວຍການຍົກທັບໄປອັດຕະປື ຄັ້ງທີ II " ເມື່ອທ່ານອ່ານບົດນີ້ຄົບ ກ້ວນ ທ່ານອາດຈະມີຄວາມເຊື່ອ ເຊັ່ນດຽວກັບຂ້າພະເຈົ້າກໍ່ໄດ້ວ່າ:

- ພຣະມະຫາກະສັດ ທີ່ມີຄວາມປຣີຊາສາມາດ ຊຳນານການສູ້ຣົບ ຜ່ານເສິກສົງຄາມມາຫລາຍຕໍ່ຫລາຍຄັ້ງ ເປັນນັກປົກຄອງທີ່ສະ ຫລາດຫລັກແຫລມ ແລະ ທັ້ງເປັນທີ່ເຄົາຣົບຮັກຂອງທັ້ງແມ່ທັບ ນາຍກອງ ພົນທະຫານ ແລະ ປະຊາຊົນລາວລ້ານຊ້າງທັ້ງມວນ ຈະ ມີຜູ້ຄິດທຳລາຍພຣະອົງ ແບບຕ່ຳຊ້າແນວນັ້ນ ຫລື ກ້າຫາກມີຄົນ ອັນທະພານ ວາງແຜນທຳລາຍພຣະອົງແບບນັ້ນ, ບັນດາແມ່ທັບ ນາຍກອງ ທີ່ເປັນອົງຄະຮັກ ກໍ່ບໍ່ປະໃຫ້ພຣະອົງເປັນໄປເໝືອນປະ ວັດສາດບາງສະບັບກ່າວໄວ້ ຢ່າງແນ່ນອນ.

- ນອກຈາກນັ້ນ, ການກ່າວວ່າ " ພຣະອົງກືກພະຍາມະຄອນ ພາຍອອກ ໜີຈາກວົງປິດລ້ອມ ແລ້ວຂ້າມນ້ຳຂອງໄປຝາກໃນ ແລ້ວຫາຍສາບ ສູນ " ນັ້ນເຫັນວ່າ ບໍ່ກືກກັບຄວາມຈິງ ເພາະຢູ່ບໍລິເວນທົ່ງຂີ້ຄວາຍ (ອັດຕະປືປັດຈຸບັນ) ບໍ່ມີນ້ຳຂອງ, ມີແຕ່ນ້ຳເຊກະໝານ ແລະ ເຊ ກອງ. ແມ່ນ້ຳທັ້ງສອງສາຍນີ້ ບໍ່ກ້ວາງຈົນນັກປະວັດສາດບາງຄົນ ເຂົ້າໃຈວ່າເປັນ " ນ້ຳຂອງ " ໄດ້.

ອີກປະການໜຶ່ງ, ກະສັດທີ່ໄດ້ຮັບນາມຍົດເປັນ " ມະຫາຣາດ " ຂອງ ອານາຈັກລາວລ້ານຊ້າງ ໃນອະດີດ ມີພຽງແຕ່ 2 ພຣະອົງ ຄື ເຈົ້າ ຟ້າງຸ່ມມະຫາລາດ ແລະ ສົມເດັດພຣະເຈົ້າໄຊຍະເສດຖາທິຣາດ ເທົ່ານັ້ນ, ກະສັດທັງສອງພຣະອົງ ໄດ້ສ້າງວິຣະກຳອັນລ້ຳເລີດ ໄວ້ ໃຫ້ລູກຫລານລາວ ໄດ້ສືບທອດມູນເຊື້ອວິຣະຊົນ ເປັນແບບຢ່າງ ການຕໍ່ສູ້ທີ່ອົງອາດກ້າຫານ (ວິຣະຊົນ) ແລະ ໄດ້ທ້ອນໂຮມອານາ ຈັກລາວລ້ານຊ້າງ ອັນກວ້າງໃຫຍ່ໄພສານ ມີຄວາມຈະເຣີນຮຸ່ງ ເຮືອງໃນອະດີດ ບໍ່ນ້ອຍໜ້າປະເທດໃດ ໃນພູມີພາກນີ້; ການບັນທຶກ ຂໍ້ມູນໄວ້ວ່າ ສົມເດັດພຣະເຈົ້າໄຊຍະເສດຖາທິຣາດ ຫາຍສາບສູນ ດ້ວຍການຫັກຫລັງ ຂອງແມ່ທັບຄົນສຳຄັນ ແລະ ເປັນທີ່ໄວ້ເນື້ອ ເຊື່ອໃຈຂອງພຣະອົງ, ເປັນການຕັ້ງໃຈ ເຣັດໃຫ້ພຣະອົງເສື່ອມ ເສຍພຣະກຽດ (discredit) ກໍ່ໄດ້, ເມື່ອນັກປະວັດສາດລາວ ໄດ້ ອ່ານພໍ ຈຶ່ງບັນທຶກຕາມຂໍ້ມູນທີ່ຕົນໄດ້ອ່ານພໍນັ້ນ ໂດຍບໍ່ໄດ້ຄຳນຶງ ເຖິງເຫດ ແລະ ຜົນ ແລະ ຄວາມເປັນໄປໄດ້ ຂອງເຫດການ. ທັງນີ້ ກໍ່ຍ້ອນວ່າ ເອກະສານສຳຄັນຕ່າງໆຂອງລາວ ໃຫ້ກືກທຳລາຍຈົນ ໝົດສິ້ນ ໃນຄາວສຍາມຈູດເຜົາ ນະຄອນຫລວງວຽງຈັນ ສະໄໝ ຣັຊການທີ 3 ແລະ ມີການປ່ຽນປະວັດສາດລາວ ຂອງນັກປະວັດ ສາດສະໄໝຣັຊການທີ 4-5 ຂອງໄທ. ການຂຽນປະວັດສາດລາວ ໃນໄລຍະຜ່ານມາ ມັກອາໄສປະວັດສາດໄທ-ເອກະສານໄທ ເປັນ ຫລັກ ດັ່ງນັ້ນ ຈຶ່ງມີຫລາຍເຫດການເກີດຂຶ້ນໃນລາວ ແລະ ພົວພັນ ກັບລາວ ມີການບັນທຶກໄວ້ບໍ່ກືກກັບຄວາມເປັນຈິງ ເຊັ່ນເລື່ອງນາງ ບຸນເຫລືອ ພັນລະຍາ ຂອງເຈົ້າເມືອງໂຄລາດ ສະໄໝເຈົ້າອະນຸວົງ ກາຍເປັນ ທ້າວສຸຣະນາຣີ (ຄຸນຍິງໃນ) ໄດ້ເພີ້ມເລື່ອງໃສ່ວ່າ ນາງ

ບຸນເຫລືອ ພາຜູ້ຍິງລາວໂຄລາດ ເອົາເຫລົ້າໄປເກືອຜ່ມ້ທັບນາຍ ກອງ ຂອງກອງທັບລາວ (ເຈົ້າອະນຸ) ຈົນຜ່ມ້ທັບນາຍກອງເມົາ ລືມສະຕິ ຜ່ລ້ວພວກຜູ້ຍິງ ໂດຍການນ່ຳຂອງນາງ ບຸນເຫລືອ ໄດ້ຂ້າ ຜ່ມ້ທັບ ຜ່ລະ ທະຫານລາວ ລົ້ມຕາຍຢ່າງຫລວງຫລາຍ ເປັນເຫດ ໃຫ້ກອງທັບເຈົ້າອະນຸປລາໄຊ ໃນສົງຄາມກູ້ເອກະລາດ ຈາກສຍາມ ຄາວນັ້ນ ຜ່ລະ ເລື່ອງອື່ນໆ ...

ຣັຊການເຈົ້າສ້ອຍສີສະໝຸດ ພຸດທາງກຸນ

ເຈົ້າສ້ອຍສີສະມຸດ ພຸດທາງກຸນ ເປັນບຸດຂອງພະນາງ ສຸມັງຄະລາ ປະສູດ ເມ່ືອປີ ຄ.ສ 1691 ທ່ີພູສະງ້ໍຫ໋ລ່ຳ ບ້ານງ້ໍວພັນລ່ຳ (ເປັນຫລານຂອງພຣະເຈົ້າ ສຸຣິຍົວົງສາ ທັມມິກະຣາດ) ເປັນປະກ໋ມກະສັດ ຂອງນະຄອນການະຈ່ຳບາກ ນາຄະບຸຣີ ສີສັດຕະນາຄະນະຫຸດ ຂ້ຶນຄອງຣາດ ເມ່ືອປີ ຄ.ສ 1713 ສ້ິນພຣະຊົນ ເມ່ືອ ຄ.ສ 1737. ຄອງຣາຊສົມບັດ ໄດ້ 24 ປີ.

ເມ່ືອພຣະອົງໄດ້ຂ້ຶນຄອງນະຄອນ ການະຈ່ຳບາກນາຄະບຸຣີ ຜ່ລ້ວ ກ໋ໄດ້ ປົກສາ ຜ່ລະ ສົມທົບກັບທ່ານ ພຣະຄູໂພນສະເມັກ ຈັດລະບົບການປົກຄອງ ຜ່ລະ ກ່ຳນົດຕ່ຳຜ່ໜ່ງ ຜ່ສນທ້ຳວພະຍາ ຜ່ສນເມ່ືອງ ເມ່ືອງຈັນ ຜ່ລະ ກົມອາສາຫ໋ກ ເຫລ່ົາ ຄ ຊ້ຳງ, ຕ່ຳຫລວດ, ມະຫາດເລັກ, ຊ່ຳວທ່ີ, ກົມມະຜ່ສງ ຜ່ລະ ອ່ືນໆ ຕ່ຳມຜ່ບບກຸ່ງສີສັດຕະນາຄະນະຫຸດ ລ້ານຊ້ຳງວຽງຈັນທຸກປະການ. ຜ່ລ້ວຈ່ຶ່ງໄດ້ ຜ່ຕ່ງຕ້ັ ຜູ້ປົກຄອງເມ່ືອງຕ່ຳງໆ ທ່ີຂ້ຶນກັບ ນະຄອນການະຈ່ຳບາກນາຄະບຸຣີ ດ່ັງນ້ີ :

① ໃຫ້ທ້າວ ສຸດ ຕ້ຳໃຫ້ເປັນ " ພຣະສີໄຊຍະເຊດ " ໄປປົກຄອງບ້ານ ທາງໃຂ້ ຄືເມືອງຊຽງແຕງ (ປັດຈຸບັນເປັນສະຖຳແຕຣາ ຂອງ ກຳປູເຈັຍ).

② ໃຫ້ຈາບແກ້ວ ໄປຮັກສາດ່ານບ້ານທົ່ງ ຕໍ່ມາເອີ້ນວ່າ ເມືອງທົ່ງ (ອຳ ເພີສຸວັນນະພູມ ຈັງຫວັດຮ້ອຍເອັດ ປັດຈຸບັນ) ຮັກສາເຂດແດນ ຝ່າຍເໜືອ ຕ້ຳແຕ່ຍາງສາມຕົ້ນ ອ້ົນສາມຂວ້ຍ ຫລັກກອດຍອດ (ເສົາຫີນ ຢູ່ກັບດິນ ບ້ານກຸດຫວ້າ ອຳເພີກຸສິນາຣາຍ ຈັງຫວັດກາ ລະສິນ ມີອັກສອນລາວຈາຣຶກໄວ້) ເກີ່ງຕາເວັນອອກ ແລ້ວຂ້າມ ນ້ຳຂອງຝັ່ງຕາເວັນອອກ ຕໍ່ຊາຍແດນຫວຽດນາມ ດ້ານຕາເວັນ ຕົກ ແຕ່ຫ້ວຍກາກວາກ ເກີ່ງປາກກະຍູງ ແດນເມືອງພິມາຍ.

③ ໃຫ້ຈາບຫວດ ໄປຮັກສາບ້ານເພີ ລວມເຂ້ົາກັບດອນໂຂງ ຕໍ່ມາຄື ເມືອງໂຂງ ໃນປັດຈຸບັນ ຈົນເກີ່ງແກ້ງຫລ່ີຜີ ສີພັນດອນ.

④ ໃຫ້ຊຽງສາ ໄປຮັກສາບ້ານກຸດຫວາຍ (ສີດອນຕົ້ງ) ຕໍ່ມາຄື ເມືອງຣັດຕະນະບຸຣີ ຈັງຫວັດສຸຣິນ.

⑤ ໃຫ້ທ້າວໝັ້ນ ຕ້ຳໃຫ້ເປັນ " ຫລວງເອກ " ໄປຮັກສາບ້ານໂພນ ຕໍ່ມາ ເອີ້ນວ່າ ເມືອງໝັ້ນ ຕາມຊື່ຂອງທ້າວໝັ້ນ ຄືເມືອງສາຣະວັນ ປັດ ຈຸບັນ.

⑥ ໃຫ້ຈາບໂສມ ໄປຮັກສາບ້ານອິດກະບີ ບ້ານນ້ີ ເປັນເມືອງຮ້ຳງມາ ແຕ່ສະໄໝຂອມ ເອີ້ນວ່າ ເມືອງໂສກ ເມືອງຊຸງ ຫລືເມືອງພະນຽດ

ເຊິ່ງແຕ່ກ່ອນຊາວລາວຈຽງຈັນ ມາຕັ້ງຖ້ານຢູ່ທີ່ນີ້ ເລີຍກາຍເປັນ ບ້ານເມືອງ ພົນລະເມືອງສ່ວນຫລາຍ ເປັນຊົນເຜົ່າ (ລາວເທີງ) ເຊິ່ງມີພູມລຳເນົາຢູ່ກ່ອນ ປັດຈຸບັນຄື ແຂວງອັດຕະປື ແລະ ໃຫ້ຈາບ ໂສມ ປົກຄອງໄປເຖິງເມືອງຄົງ ເມືອງຕະໂພນ (ເຊໂປນ) ເມືອງ ພີນ ເມືອງນອງ. ພາຍຫລັງຈຶ່ງແຍກເມືອງສີມ (ເມືອງຕະໂປນ) ເມືອງພີນ ເມືອງນອງ ໃຫ້ທ້າວ ຈັນສຸຣິຍະວົງ ໄປຮັກສາ.

⑦ ໃຫ້ທ້າວພົມ ຕັ້ງໃຫ້ເປັນ " ຣາຊບຸດໂຄດ " ໄປຮັກສາບ້ານແກ້ງອາ ເຣີມ ເຊິ່ງມີ " ທາດກ່ຳເຕົ້າທຶກ " ຢູ່ທີ່ນັ້ນ ຕໍ່ມາຄືເມືອງຄຳທອງ ໃຫຍ່.

⑧ ໃຫ້ທ້າວຫລວງ (ບຸດພຣະລະງຸມ) ຕັ້ງໃຫ້ເປັນ " ຊຸນພັກເກົ້າ " ໄປ ຮັກສາບ້ານໂຂງຈຽງ ຕໍ່ມາຄືເມືອງໂຂງຈຽມ ຢູ່ຝັ່ງຂວາແມ່ນ້ຳ ຂອງ (ໂຂງຈຽງ ພາສາລ່ວຍ ແປວ່າ ຝູງຊ້າງ) (ປະຫວັດສາດ ອີສານ ໜ້າ 42-43).

ນອກຈາກນັ້ນ, ພຣະອົງຍັງໄດ້ສົ່ງທູດ ນຳເອົາຈົດໝາຍໄປເຖິງ ປະ ເທດໃກ້ຄຽງ ຄືສຍາມ, ຫວຽດນາມ ແລະ ຂະເມນ ເພື່ອຈະເຣີນສຳພັນທະໄມຕີ ຕໍ່ກັນ ແລະ ເພື່ອໃຫ້ແຕ່ລະປະເທດ ເຄົາຣົບເຂດນ້ຳແດນດິນຂອງກັນ.

ໃນເວລາ ທີ່ພຣະຄູໂພນສະເມັກ ພາຍາດໂຍມ ກັບມາຈາກດິນແດນ ຂະເມນ ຜ່ານມາທາງທາງໂຂງ ດອນໂຂງ ຕາມລຳດັບ ແລ້ວມາພັກຢູ່ດອນ ແດງ ເຊິ່ງເປັນດອນໃຫຍ່ ໃນປີ ຄ.ສ 1705. ພຣະຄູ ໄດ້ພາຍາດໂຍມ ຫລໍ

ພຣະພຸທຮູບໃຫຍ່ອົງໜຶ່ງ ໜ້າຕັກກວ້າງ 19 ນິ້ວ (48 ຊັງຕີແມັດ) ໄວ້ວັດບ້ານ ຊາຍ ທາງດອນແດງ, ພຣະຄູໄດ້ນຳພາຄະນະສົງ ແລະ ສີສານຸສິດ ໄປເກິ່ງ ອັດຕະປື ແລະ ສາຣະວັນ ເພື່ອເຜີຍແຜ່ພຸທສາສນາ ປະຕິສັງຂອນວັດວາອາຮາມ ແລະ ແນບນຳການປົກຄອງບ້ານ ເມືອງ ຈົນເປັນທີ່ເລື່ອງລື ມາຮອດນະຄອນ ກາລະຈຳບາກນາຄະບຸຣີ.

ປະຫວັດນະຄອນກາລະຈຳບາກ ນາຄະບຸຣີ ໜ້າ 45 ບັນທຶກໄວ້ວ່າ ເຈົ້າອາຊຄູຫລວງ ໂພນສະເມັກ ໄດ້ສ້າງພື້ນກາບ ໃຫ້ແກ່ນະຄອນກາລະຈຳບາກ ນາຄະບຸຣີ ດັ່ງນີ້ :

- ໄດ້ປ່ຽນຊື່ ນະຄອນກາລະຈຳບາກ ນາຄະບຸຣີ ເປັນນະຄອນຈຳປາສັກ

- ໄດ້ແຕ່ງຕັ້ງບຸກຄົນສຳຄັນ ໄປປົກຄອງເມືອງຕ່າງໆ 8 ເມືອງ ທີ່ຂຶ້ນກັບນະຄອນກາລະຈຳບາກ ນາຄະບຸຣີ ເວລານັ້ນ ແລະ ບຸກຄົນສຳຄັນເຫລົ່ານັ້ນ ໄດ້ກາຍເປັນຕົ້ນຕະກູນຂອງເມືອງຕ່າງໆ ຕາບເທົ່າທຸກວັນນີ້.

- ຄວາມຈະເຣີນຮຸ່ງເຮືອງ ທາງດ້ານພຸທສາສນາ ແລະ ວັດທະນະທັມ ທີ່ມີສືບມາຈົນເກິ່ງປັດຈຸບັນນີ້ ໃນເຂດສາຣະວັນ, ອັດຕະປື, ຈຳປາສັກ, ເມືອງໂຂງ ແລະ ອຸບົນ ໄດ້ມີພື້ນກາບມາແຕ່ ທ່ານພຣະຄູຫລວງ ໂພນສະເມັກ ໄດ້ວາງຮາກກາບໄວ້.

ເມື່ອເຈົ້າສ້ອຍສີສະໝຸດ ພຸດທາງກູນ ເກີ່ງແກ່ອະສັນຍະກັນ ໃນປີ ຄ.ສ 1737 (ພ.ສ 2280) ພຣະເຈົ້າໄຊຍະກຸມມານ (ເຈົ້າອົ່ງຫລວງ) ພຣະໂອຣົດ ຂຶ້ນຄອງນະຄອນຈຳປາສັກແທນ ໄດ້ແຕ່ງໃຫ້ເຈົ້າທັມມະເທໂວ (ນ້ອງຊາຍ) ເປັນອຸປຣາດ ຝ່າຍໜ້າ, ໃຫ້ເຈົ້າສຸຣິໂຍ (ນ້ອງຊາຍ) ເປັນເຈົ້າຣາຊວົງ.

ໃນປີ ຄ.ສ 1778 (ພ.ສ 2321) ເຈົ້າໄຊຍະກຸມມານ ເຈົ້ານະຄອນ ຈຳປາສັກ ໂດຍມີເຈົ້າສຸຣິໂຍ ເປັນເຈົ້າຣາຊວົງ ໄດ້ຍົກກອງນະ ບ້ານອິດກະປີ ເປັນເມືອງ ໃຫ້ຊື່ວ່າ " ເມືອງອັດຕະປີ " ໂດຍໃຫ້ເຈົ້າໂອ້ (ລູກອຸປະຣາດ ທັມມະ ເທໂວ) ເປັນເຈົ້າເມືອງຜູ້ທຳອິດ, ໃຫ້ເຈົ້າອິນ (ນ້ອງຊາຍ) ເປັນອຸປະຣາດ ຂຶ້ນກັບນະຄອນຈຳປາສັກ. (ໜັງສືພົງສາວະຣີ ໜ້າ 50).

ລາວລຸ່ມ ແລະ ພຣະພຸທສາສນາ ເຂົ້າມາໃນອັດຕະປີ

ນັກປະຫວັດສາດ ແລະ ນັກບູຮານຄະດີຫລາຍທ່ານ ໃຫ້ຄວາມເຫັນກົງ ກັນວ່າ ຊົນເຜົ່າເດີມທີ່ອາໄສ ຢູ່ໃນດິນແດນອັດຕະປີ ໃນເມື່ອກ່ອນ ແມ່ນເຜົ່າ ລາວເທິງ ເຜົ່າຕ່າງໆ ຄື : ເຜົ່າຣະແດ, ສະຫລັ, ອາຣັກ, ກະເສງ, ໂອຍ, ລະແວ, ເຈັ ເຊິ່ງເຜົ່າຕ່າງໆເຫລົ່ານີ້ ມັກຈະແບ່ງເຂດກັນຕັ້ງກິ່ນກອນ ບໍ່ປະ ປົນກັນ ເປັນສ່ວນຫລາຍ ຄື : ເຜົ່າຣະແດ, ກະເສງ, ອາຣັກ, ສະຫລັ ມັກຢູ່ ຕາມຈ້າຍພູ ແລະ ພູພຽງ ທາງທິດຕາເວັນອອກຂອງແຂວງ ຕິດກັບຊາຍແດນ ຫວຽດນາມ. ສ່ວນເຜົ່າລະແວ ແລະ ເຜົ່າເຈັ ຢູ່ທາງທິດຕາເວັນຕົກ ແລະ ທິດໃຕ້ຂອງແຂວງ ໃກ້ກັບຊາຍແດນກຳປູເຈັຍ ແລະ ຈຳປາສັກ. ອາຊີບຫລັກ ຂອງເຜົ່າເຫລົ່ານີ້ ແມ່ນເຣັດໄຮ່ ເວລາວ່າງຈາກເຣັດໄຮ່ ແມ່ນຮ່ອນຄຳ ແລະ ຕຳຜ້າກະໂດ ສຳລັບເຜົ່າກະເສງ, ສະຫລັ, ລະແດ ແລະ ອາຣັກ. ສ່ວນເຜົ່າ

ລະຜວ ຜລະ ເຈ້ງ ຈ່ານວນໜ່ຶງ ກໍ່ເຮັດນາ ຈ່ານວນໜ່ຶງກໍ່ເຮັດໄຮ່ ຍາມຜລ້ຳ ສ່ວນຫລາຍຜມ່ນຫາປາ ລ່າເນ້ຶອ.

ພາຍຫລ້ງການປະຕິວັດ ໄດ້ຜພ່ລັດສະໝີ ເຂ້ົາໄປເກ່ງຊ້ນເພ່ົາຕ່າງໆ ໃນຜຂວງອັດຕະປື ພວກເຂ້ົາເຈ້ົາ ໄດ້ຮັບການພັດທະນາ ຕາມຜນວທາງຂອງ ພັກ ຜລະ ລັດກ່ະບວນ. ໄດ້ຮັບຜບບຜພນດ່ຳລ້ງຊ້ວິດ ທ່ີສ້ວ້ໄລ ພ້ອມໆກັບການ ພັດທະນາຂອງປະເທດຊ່າດ.

ຄົນເພ່ົາລາວລຸ່ມ ຜລະ ພຣະພຸທສ່ານສນາ ໄດ້ເຂ້ົາມາຕ້ັງໝ້ັນຢູ່ອັດຕະປື ຜມ່ນເຂ້ົາມາເປ້ັນຊຸດຕາມການເຄ່ືອນໄຫວທາງການເມ້ອງ ຜລະຂະບວນເພ້ຍ ຜພ່ພຣະພຸທສ່ານສນາ ໃນຜຕ່ລະໄລຍະ ດ່ັງຈະຍົກມາພ່ເປ້ັນ ຕ້ວຢ່າງດ່ັງຕ່ໍໄປນ້ີ :

ປ້ ຄ.ສ 1306 ເມ້ອງຣາມະຣັກອ້ົງການ ຍ້າຍມາຕ້ັງເມ້ອງໃໝ່ ຢູ່ " ເມ້ອງລະມາມ " " ບ້ານດ້ົງເມ້ອງ " ຜຂວງຊ່ກອງປັດຈຸບັນ ຜລ້ວໄດ້ຍົກ ພະຍາບ້ວໂຮມຂ້ຶ້ນຄອງເມ້ອງລະ.ມາມ ຜລະໄດ້ສ້າງວັດ 2 ວັດໃສ່ເມ້ອງລະມາມ ຄ້ວັດຜກ້ວ ຢູ່ກາງເມ້ອງ ຜລະ ວັດຫ້ວເມ້ອງ. ເມ່ືອໄດ້ຍ້າຍເມ້ອງ ມາຢູ່ເມ້ອງ ໂສກ ເມ້ອງຊຸງ (ສ້າງເມ້ອງໃໝ່) ໃນປ້ ຄ ສ 1340 (ຈ.ສ 702) ພະຍາ ຣາມະເທວະ (ລູກພະຍາ ຣາມະຣັກອ້ົງການ) ກໍ່ໄດ້ສ້າງວັດໃສ່ເມ້ອງໂສກ ຊ່ື ວ່າວັດສວນຜກ້ວ, ສ້າງວັດທ້ງໂສກໃສ່ກາງເມ້ອງ. ຢູ່ເມ້ອງຊຸງ ສ້າງວັດກາງ ໃສ່ກາງເມ້ອງ, ວັດຜສນ້ງ.ມ, ວັດຈອມຜກ້ວ, ຜລະ ສ້າງພຣະພຸທຮູບທອງ 5 ອ້ົງ ໃສ່ວັດທ້ັງ 5 ວັດລະອ້ົງ.

ປີ 1342 (ຈ.ສ 704) ພຣະຣາຊບຸດບາອັດ ແລະ ຊາຍາ ໄດ້ສ້າງວັດ ຊື່ວັດເຊຕຸພົນ ແລະ ໄດ້ຫລໍ່ພຣະພຸທຮູບ 5 ອົງ ໆລະແສນ ໄວ້ໃນວັດເກົ່າ (ວັດທີ່ ໄດ້ສ້າງແລ້ວແຕ່ເກົ່າ) ໃນເມືອງຊຸງນັ້ນ ແລະ ໄດ້ມີພຣະອໍຣະຫັນອົງໜຶ່ງ ມາ ຈາກຊຸມພູຫະວີບ ຕາມລຳນ້ຳຂອງ (ອາດຈະມາຈາກຂະເມນ) ພ້ອມພຣະສົງ 10 ອົງ ມາເກີ່ງເມືອງໂສກ ເມືອງຊຸງ ໄດ້ເທສນາ ສັ່ງສອນປະຊາຊົນ ໃຫ້ມີ ຄວາມເຫລື້ອມໃສ ແລະ ໄດ້ມອບພຣະສາຣີຣິກະທາດ (ກະດູກພຣະພຸທເຈົ້າ) ໃຫ້ຣາຊບຸດບາອັດ ແລະ ປະຊາຊົນ ພວກເພິ່ນ ໄດ້ກໍ່ເຈດີອົງໜຶ່ງ ຊື່ອະໂສກ ໃສ່ ໃນວັດເຊຕຸພົນ ເມືອງຊຸງ ເພື່ອໃສ່ພະອັດກີນັ້ນ. (ໜັງສືພົງສາວະຣີ ໜ້າ 98-99).

ປີ ຄ.ສ 1346 (ຈ.ສ 708) ປາງເມື່ອພະຍາຟ້າງຸ່ມ ຢູ່ເມືອງອິນທະ ປັດກະນະຄອນ (ຂະເມນ) ພະຍາອິນທະປັດກະນະຄອນ ໄດ້ຕົກລົງໃຫ້ຫ້າງຫ່ ກອງທັບ ເພື່ອໃຫ້ພະຍາຟ້າງຸ່ມ ກັບຄືນມາເອົາ ເມືອງຊຽງດົງ ຊຽງທອງ (ຫລວງພະບາງ). ພຣະອົງໄດ້ສົ່ງປູ່ລ້ຽງ ແລະ ອາວລ້ຽງຂອງພະຍາຟ້າງຸ່ມ ພາບໍລິວານ ອັນມີເສນາຊ້າງ ຂອງພະຍາອິນທະປັດກະນະຄອນ ເປັນຜູ້ນຳທາງ ຂຶ້ນມາຕາມລຳນ້ຳເຊກອງ ຮອດເມືອງຣາມະຣັກອົງກາບ (ເມືອງໂສກ ເມືອງ ຊຸງ) ພະຍາລາມະລັກອົງກາບ ໄດ້ຈັດໝໍ້ຄ້ອງຊ້າງ ໃຫ້ອາວລ້ຽງ ປູ່ລ້ຽງ ຄ້ອງ ເອົາຊ້າງປ່າ ມາເຝິກຫອບ ເປັນຊ້າງເສິກ ພ້ອມທັງເຝິກຫອບເອົາຊາຍຊະກັນ ໄປເປັນທະຫານຊ້າງ ໄດ້ຊ້າງ 100 ໂຕ ຄົນເປັນທະຫານ ໜຶ່ງພັນຄົນ ປູ່ລ້ຽງ ອາວລ້ຽງ ຢູ່ຣາມະຣັກອົງກາບ ເປັນເວລາ 4 ປີ. ອາວລ້ຽງຂອງພະຍາຟ້າ ໄດ້ ເອົາຫລານສາວຂອງພະຍາພົມ.ໄດ້ລູກ 3 ຄົນ ຄື ທ. ບາວຽງ, ທ. ບາວັງ ແລະ ນາງ ອ່ອນຊ້ອຍ (ພົງສາວະລີ ໜ້າ 101).

ປີ ຄ.ສ 1562 ເຈົ້າໄຊຍະເສດກາທິຣາດ ໄດ້ພາໄພ່ພົນ ໄປສ້າງວຽງ ໝອງທາບ ແລ້ວຈຶ່ງຍົກທັບລົງມາເມືອງໂສກ ເມືອງຊຸງ ເມື່ອໄປເຖິງແລ້ວ ພຣະອົງ ໄດ້ຄັດເລືອກຫາສະຖານທີ່ ທີ່ເໝາະສົມ, ພຣະອົງຈຶ່ງເອົາທົ່ງຂີ້ຄວາຍ ເປັນສະຖານທີ່ຕັ້ງກຳລັງທັບຫລວງ ຄືບໍລິເວນທີ່ເປັນບ້ານວັດທາດ ວັດຫລວງ ເມືອງໄຊເສດກາ ໃນປັດຈຸບັນ. ພຣະອົງໄດ້ນິມົນເອົາພຣະຄູລູ ຈາກວັດແກ້ງລະ ນາມ, ພຣະຄູຫໍ່າຫອງ ວັດບ້ານທ່ານາກອກ ແລະຄູບາຫູຍານຕັ້ງບ່າ ວັດຫີນໂລງ ມາເຜີຍແຜ່ພຣະພຸທສາສນາ, ພຣະອົງໄດ້ສິ້ນພຣະຊົນ ໃນປີ 1572 (ປະຫວັດ ສາດລາວ ພາກ V-3 ໂດຍ ຄໍາ ຈໍາປາແກ້ວມະນີ).

ປີ ຄ.ສ 1690 ພຣະຄູໂພ່ນສະເມັກ ໄດ້ພາຍາດໂຍມ ອອກຈາກ ນະຄອນວຽງຈັນ ມາບຸຣະນະພຣະທາດພະນົມ ເປັນເວລາ 3 ປີ. ປີ 1693 ພຣະຄູໄດ້ພາຍາດໂຍມ ລ່ອງລົງມາຕາມລຳນ້ຳຂອງ ເຖິງເມືອງປະທາຍ (ຂະ ເມນ), ພະຍາເພັຍວັດ ພາຄອບຄົວລົງມານຳພະຄູໂພນສະເມັກ ເຖິງເມືອງ ປະທາຍ ຢູ່ບໍ່ໄດ້ ຈຶ່ງແບ່ງຄອບຄົວ ທີ່ເປັນບໍລິວານຂອງຕົນ 30 ຄອບຄົວ ຈໍ່ ນວນພົນ ຮ້ອຍຄົນເສດ ຂຶ້ນມາຕາມລຳນ້ຳເຊກອງ ຊອກຫາບ່ອນສ້າງຢູ່ທຳກິນ ຈົນມາເຖິງເມືອງໂສກ ເມືອງຊຸງ ພັນລະຍາທ່ານໄດ້ເສັຍຊີວິດ ທ່ານຈຶ່ງໄດ້ເອົາ ລູກສາວຄົນນຶ່ງຕະກຸນໃນເມືອງໂສກ ມີລູກຢູ່ເມືອງໂສກ ສືບກັນມາ ໄດ້ເປັນເຈົ້າ ເມືອງ ອຸປະຣາດ ແລະ ອື່ນໆ ບໍ່ຂາດ.

ປີ ຄ.ສ 1826 ຣາຊວົງ ຄໍາ ຈາກວຽງຈັນ ໄດ້ລົງມາຄ້ອງຊ້າງປ່ ເຝິກຊ້າງ ແລະ ເອົາລາຍຊະກັນໄປເປັນທະຫານ ໄດ້ຢູ່ອັດຕະປີ 4 ປີ ແລະ ໄດ້ ເມັຍຢູ່ອັດຕະປີ ເປັນລູກສາວພຣະຣາຊວົງພົມ ເຊື້ອສາຍພະຍາເພັຍວັດ ຊື່. " ນາງ ແກ້ວເພົ່າຮັກ " (ໜັງສືພົ້ງສາລະວີ ໜ້າ 14).

ຈາກຫລັກຖານ ທີ່ໄດ້ຍົກມາຂ້າງເທິງ ຈະເຫັນໄດ້ວ່າ ເມືອງໂສກ ເມືອງຊຸງ ໄດ້ຕັ້ງເປັນບ້ານເມືອງ ມີເຈົ້າປົກຄອງ ກ່ອນສະໄໝເຈົ້າຟ້າງຸ່ມ ມະຫາລາດ. ເມືອງໂສກ ເມືອງຊຸງ ເຕັມໄປດ້ວຍວັດວາອາຮາມ ມີການສ້າງ ພະພຸທຮູບກັນ ຢ່າງແຜ່ຫລາຍ ເຊື່ອໃຈວ່າ ພຣະອົງ ແສນວັດຊະແຄ ປັດຈຸບັນ ອາດຈະສ້າງໃນສະໄໝນີ້ ຫລື ອາດຈະແມ່ນ ໜຶ່ງໃນຈຳນວນ 5 ອົງ ທີ່ຮາຊບຸດ ບາອັດ ແລະ ພັນລະຍາ ໄດ້ສ້າງ ໃນປີ 1342 (ຈ.ສ 704) ນັ້ນດ້ວຍ. ອີງຕາມ ຫລັກຖານທາງປະຫວັດສາດນີ້ ຄົນລາວລຸ່ມ ແລະ ພຣະພຸທສາສນາ ໄດ້ມີມາ ກ່ອນແລ້ວ.

ສະໄໝ ເຈົ້າຟ້າງຸ່ມມະຫາຣາດ ໄດ້ສົ່ງປູ່ລ້ຽງ ອາວລ້ຽງ ພ້ອມເສນາ ອາມາດ ມາຄ້ອງຊ້າງ ຢູ່ເມືອງໂສກ ເມືອງຊຸມ ແລະ ພຣະອົງໄດ້ໃຫ້ມີການເຜີຍ ແຜ່ພຣະພຸທສາສນາ ທົ່ວຮາຊອານາຈັກ ເພື່ອໃຫ້ປະຊາຊົນ ລະການເຊື່ອຖືຜີ ເລີກການບວງສວງ ດ້ວຍການຂ້າງົວຄວາຍບູຊາຜີ, ຄະນະສົງທີ່ທຳການເຜີຍ ແຜ່ ອາດຈະເຖິງເມືອງໂສກ ເມືອງຊຸງ. ການເຂົ້າມາຂອງຄະນະເຜີຍແຜ່ ພຣະ ພຸທສາສນາ ແລະພວກມາຄ້ອງຊ້າງ ແມ່ນການເຂົ້າມາເປັນຊຸດທີ 2 ພາຍຫລັງ ມີປະຫວັດສາດຈະແຈ້ງ.

ການເຂົ້າມາອັດຕະບີ ຂອງຄົນລາວລຸ່ມ ແລະ ພຸທສາສນາ ເທື່ອທີ 3 ແມ່ນສະໄໝ ພຣະເຈົ້າໄຊຍະເສດຖາທິລາດ ນຳພາໄພ່ພົນ ເສນາອາມາດ ມາ ຕັ້ງທັບຢູ່ທົ່ງອິດກະບີ ເພື່ອຄ້ອງຊ້າງປ່າ ແລະ ພຣະອົງ ໄດ້ສົມທົບກັບ ພຣະຄູລູ, ພຣະຄູຫຳທອງ ແລະ ພຣະຄູຫູຍານຕັ້ງບ່າ ເຜີຍແຜ່ພຣະພຸທສາສນາ ຕາມລຳ ນ້ຳເຊກອງ ເຊກະໝານ.

ການເຂົ້າມາຄັ້ງທີ 4 ແມ່ນສະໄໝ ພຣະຄູໂພນສະເນັກ ພາຍາດໂຍນ ຈາກວຽງຈັນ ລົງມາເກີ່ງເມືອງປະທາຍ. ພຣະຍາເພັຍວັດ ໄດ້ພາຄອບຄົວຂຶ້ນ ມາຕັ້ງກິ່ນການ ຢູ່ເມືອງໂສກ ເມືອງຊຸ ແລະ ເມື່ອພຣະຄູໂພນສະເນັກ ໄດ້ສະ ກາປະນາ ເຈົ້າໜໍ່ກະສັດ ຂຶ້ນເປັນເຈົ້າຊີວິດ ໃຊ້ຊື່ ເຈົ້າສ້ອຍສີສະໝຸດ ພຸດທາ ງກູນ ປົກຄອງຈຳປາສັກ ພຣະອົງໄດ້ສົ່ງຈາບໂສມ ມາປົກຄອງ ບ້ານອິດກະປ ບ້ານນີ້ ເປັນເມືອງຮ້າງ ສະໄໝຂອມມາກ່ອນ ເອີ້ນວ່າ ເມືອງໂສກ ເມືອງຊຸ ຫລື ເມືອງພະນຽດຮ້າງ ເຊິ່ງແຕ່ກ່ອນ ຊາວວຽງຈັນ ມາເຝິກຮ້າງທີ່ນີ້. ພ້ອ ກັນນີ້ ພຣະຄູໂພນສະເນັກ ກໍ່ນຳພາພຣະສົງ ອອກມາເຜີຍແຜ່ ພຸທສາສນາ ເກີ່ ເມືອງສາລະວັນ ຄຳທອງໃຫຍ່ ແລະ ອິດກະປີ ແລະ ເພື່ອແນະນຳຊ້າຍຮາຊການ ຕາມເມືອງຕ່າງໆ ກ່ຽວກັບການປົກຄອງປະຊາຊົນອີກດ້ວຍ.

ບົດທີ II

ສະໄໝອັດຕະປື ຕົກເປັນຫົວເມືອງຂຶ້ນ ຂອງສະຍາມ

ເມື່ອປີຂານ ຄ.ສ 1.777 (ພ.ສ 2320) ເຈົ້າສິຣິບຸນຍະສານ ໄດ້ໃຫ້ ພະຍາສຸໂພ ນຳເອົາກອງທັບວຽງຈັນ ມານຳຈັບພະວໍ ຢູ່ບ້ານວຽງຄ້ອນ (ບ້ານ ດູ່ ບ້ານແກ) ແລ້ວໃຫ້ສຳເລັດໂທດເສັຍ. ທ້າວ ກ່ຳ (ລູກຊາຍຂອງພະວໍ ໄດ້ ສົ່ງສານ ແລະ ບັນນາການ ໄປເກັ່ງຕາກສິນ ກ່າວຫາວ່າ ເຈົ້າສິຣິບຸນຍະສານ ຄຸກຄານຂົ່ມຂູ່. ເມື່ອຄວາມຊາບເກັ່ງ ເຈົ້າຕາກສິນ ເຈົ້າກຸງທົບບຸຣີ ເຊັ່ງມີ ຄວາມຕ້ອງການ ຢາກຂະຫຍາຍອຳນາດຢູ່ແລ້ວ ແລະ ເວລານັ້ນ ກຸງທົນບຸຣີ ຫາກໍ່ກູ້ເອກະລາດຈາກພະມ້າໃໝ່ໆ ຈຶ່ງຫາວ່າເຈົ້າສິຣິບຸນຍະສານ ໝິ່ນປະມາດ ຣາຊອຳນາດ ຈຶ່ງເອົາໂອກາດນີ້ ສັ່ງໃຫ້ພະຍາມະຫາກະສັດເສິກ (ຕໍ່ມາໄດ້ເປັນ ເຈົ້າຊີວິດ ຣາຊການທີ 1 ຂອງວົງຈັກກຣີຂອງໄທ) ເປັນຜູ້ບັນຊາການ ນຳກຳ ລັງພົນ 20 ພັນຄົນ ອອກຈາກ ນະຄອນຣາຊສີມາ ຕີເຂ້ົາ ນະຄອນຈຳປາສັກ ທາງພາກພື້ນດິນ (ທິດຕາເວັນຕົກ) ໃຫ້ພະຍາສຸຣະສີ (ນ້ອງຊາຍ ພະຍາ ມະຫາກະສັດເສິກ) ນຳກຳລັງ 10 ພັນຄົນ ເຄ່ືອນຂຶ້ນມາທາງແດນກຳປູເຈຍ (ຂະເມນ) ຕາມລຳນ້ຳຂອງ ຕີສົມທົບກັບກຳລັງທາງບົກ ບັນຊາໂດຍ ພະຍາ ມະຫາກະສັດເສິກ. ກອງທັບສຍາມ ເຂ້ົາຍຶດຈຳປາສັກໄດ້ ໃນປີ 1778.

ເພ່ືອຕ້ານການຄຸກຄານ ຂອງສຍາມ ທ່ີຈະເຂ້ົາຄອບຄອງ ນະຄອນ ຈຳປາສັກ ເຈ້ົາໂອ້ ເຈ້ົາອິນ (ລູກຊາຍຂອງອຸປະຣາດ ທຳມະເທໂວ ຂອງຈຳ ປາສັກ) ໄດ້ສົມທົບກັບ ພຣະຍານາງລອງ ເຈ້ົາເມືອງນາງລອງ ບ່ຍອມຂຶ້ນກັບ ສຍາມ ໄດ້ຕ່ໍສູ້ກັບກອງທັບສຍາມ ພາຍໃຕ້ການບັນຊາຂອງ ພະຍາມະຫາກະສັດ ເສິກ ແລະ ພະຍາສຸຣະສີ. ພວກສຍາມ ໄດ້ຈັບເອົາ ພຣະຍານາງລອງ ປະຫານ

ຊີວິດເສັຍ. ສ່ວນເຈົ້າໂອ້ ເຈົ້າອິນ ໄດ້ກອບກຳລັງໄປທາງທິດຕາເວັນອອກ ກຳລັງຂອງສຍາມໄລ່ຕາມ ແລະ ຈັບເຈົ້າໂອ້ ເຈົ້າອິນໄດ້ ຢູ່ເມືອງໂຂງ ແຕ່ກໍ່ໄດ້ ຮັບການຊ່ວຍເຫລືອ ຈາກປະຊາຊົນ ແລະ ກຳລັງຂອງເພິ່ນ ເຈົ້າໂອ້ ເຈົ້າອິນ ຈຶ່ງຫລຸດພົ້ນອອກຈາກມືຂອງສັດຕູໄດ້ ແລະ ໄດ້ກອບກຳລັງເມືອເຄື່ອນໄຫວ ຢູ່ ອັດຕະປື. ພາຍຫລັງ ກຳລັງຂອງເຈົ້າໂອ້ ເຈົ້າອິນ ປລາໄຊ ໃຫ້ກັບກອງທັບ ສຍາມແລ້ວ ສຍາມ ຈຶ່ງໄດ້ເຂົ້າຍຶດຄອງ ນະຄອນຈຳປາສັກໄວ້ໄດ້ທັງໝົດ.

ເມື່ອຍຶດຄອງ ນະຄອນຈຳປາສັກໄດ້ ສົມກັບການຂະຫຍາຍອຳນາດ ຂອງພະເຈົ້າກຸງທົບບຸຣີແລ້ວ. ປີ 1778 (ພ.ສ 2321) ເຈົ້າກຸງທົບບຸຣີ ກໍ່ສັ່ງ ໃຫ້ພະຍາມະຫາກະສັດເສິກ ເປັນແມ່ທັບໃຫຍ່ ຍົກກຳລັງທາງນ້ຳ ແລະ ທາງບົກ ເຂົ້າຕີນະຄອນວຽງຈັນ ໃຊ້ເວລາສູ້ຣົບກັນ 3 ເດືອນ ວຽງຈັນຈຶ່ງແຕກ, ເຈົ້າ ສິຣິບຸນຍະສານ ໄດ້ໜີໄປຢູ່ຄຳເກີດ. ກອງທັບສຍາມ ຈັບເອົາເຈົ້າຂັນທະເສນ ມະຫາອຸປະຣາດ, "ລູກຂອງເຈົ້າສິຣິບຸນຍະສານ", ເຈົ້ານາຍຊັ້ນຜູ້ໃຫຍ່ ຜູ້ນ້ອຍ ເຊື້ອພະວົງ, ໄປຢູ່ກຸງທົບບຸຣີ. ເຊື້ອພະວົງຈຳນວນໜຶ່ງ ໄດ້ກືກຂ້າຕາຍ ຕໍ່ມາຈຶ່ງ ໄດ້ເຮັດທາດກວມໄວ້ ສັນນິຖານວ່າ ແມ່ນ " ທາດດຳ ໃນນະຄອນວຽງຈັນ ໃນ ປັດຈຸບັນ ".

ໃນເວລາເຄື່ອນໄຫວ ປົດລັບຢູ່ອັດຕະປືນັ້ນ ເຈົ້າອິນ (ນ້ອງຊາຍເຈົ້າ ໂອ້) ໄດ້ຮັບຄວາມເຊື່ອຖືຈາກປະຊາຊົນ ໄດ້ປັບປຸງກຳລັງ ໂດຍໄດ້ເຕົ້າໂຮມ ເອົາປະຊາຊົນ ເຂົ້າຮ່ວມຢ່າງຫລວງຫລາຍ. ລາວລຸ່ມ, ລາວເທິງ ທີ່ເຂົ້າຮ່ວມ ໃນຂະບວນການຕໍ່ຕ້ານສັກດີນາສຍາມ ຄືປະຊາຊົນ ບ້ານກະຍື, ກອງຮັງ, ລະ ຍາວ, ຈຳປາວ, ແຄມຊັງ, ຕາເລີຍ, ບ້ານຮົ່ມ, ບ້ານປູ່ຍ, ຄັງ, ອິນທີ, ເຈີ, ເຮາະ, ຕະປາດ, ຈຸມໂພຍ, ບ້ານແທ, ບັນດາບ້ານ ທີ່ຢູ່ລຽບຕາມສາຍພູຫລວງ

ຂຶ້ນກັບແຂວງຈຳປາສັກ, ບັນດາບ້ານລາວເທິງ ຢູ່ທິດຕາເວັນອອກ, ພູພຽງ ບໍລະເວນ, ແຂວງເຊກອງ, ບ້ານຊະຫລັງ, ປະດາ,ວັງຕັດ, ກະເສາ, ບ້ານເອກ, ດອກຢາ, ບ້ານພັດ, ຈຳ, ບ້ານໂພນນ້ອຍ, ບ້ານໂພນໃຫຍ່, ຈາລະ, ດວງມາ, ທັກເດີ, ດາກກາມາ, ດັກລອມ, ດັກພັດ, ຊວນ, ພັດຍາ, ·ເມືອງໃຫຍ່, ລາມົງ ນ້ອຍ, ຕຸລະພັກຕຸກ, ພັດສູງ, ກ້ອງບໍ.

ພາຍຫລັງອານາຈັກ ຈຳປາສັກ ຕົກຢູ່ໃນກຳມືຂອງສຍາມແລ້ວ, ເຈົ້າ ໄຊຍະກຸມມານ ເຈົ້າຄອງນະຄອນຈຳປາສັກ ກໍ່ເປັນເຄື່ອງມືຂອງສຍາມ ເມື່ອ ເຫັນວ່າ ເຈົ້າໄອ້ ເຈົ້າອິນ ມີກຳລັງເຂັ້ມແຂງ. ເຈົ້າໄຊຍະກຸມມານ ຈຶ່ງໄດ້ແຕ່ງ ຕັ້ງໃຫ້ເຈົ້າເຊດ ເຈົ້ານູ (ຫລານຂອງໄຊຍະກຸມມານ) ເປັນຜູ້ບັນຊາການ ກຳ ລັງ ໄປຕີກຳລັງຂອງເຈົ້າໄອ້ ເຈົ້າອິນ ຢູ່ອັດຕະປື (ເຂດເມືອງໄຊເສດຖາ) ເປັນເວລາ 2 ປີ (1780-1782) ກຳລັງເຈົ້າເຊດ ເຈົ້ານູ ບໍ່ສາມາດຕີຊະນະ ກຳລັງເຈົ້າໄອ ເຈົ້າອິນໄດ້ ຈຶ່ງກອຍທັບ ກັບຄືນຈຳປາສັກ.

ເຈົ້າໄຊຍະກຸມມານ ເຫັນກຳລັງເຈົ້າເຊດ ເຈົ້ານູ ກົກປລາໄຊ ບໍ່ສາ ມາດສູ້ກັບກຳລັງເຈົ້າໄອ້ ເຈົ້າອິນໄດ້, ຈຶ່ງຂຽນຈົດໝາຍຫາເຈົ້າຊີວິດສຍາມ ເພື່ອຂໍກຳລັງ ແລະ ການຊ່ວຍເຫລືອ ດ້ານອາວຸດ ແລະ ເງິນຄຳ. ເຈົ້າຊີວິດ ສຍາມ ຈຶ່ງແຕ່ງຕັ້ງເຈົ້າເມືອງນະຄອນຣາຊສີມາ ເປັນຜູ້ບັນຊາການ ນຳກຳລັງ ໄປຊ່ວຍອານາຈັກຈຳປາສັກ. ປີ 1782 ກຳລັງສຍາມ ໄດ້ສົມທົບກັບກຳລັງເຈົ້າ ເຊດ ເຈົ້ານູ ບຸກໂຈມຕີ ກຳລັງຂອງເຈົ້າໄອ້ ເຈົ້າອິນ ເປັນຄັ້ງທີ 2 ຢູ່ອັດຕະປື. ກຳລັງຂອງເຈົ້າໄອ້ ເຈົ້າອິນ ກໍ່ໄດ້ຕີຕ້ານຄືນຢ່າງແຂງແຮງ, ໄດ້ສູ້ຮົບຢ່າງດັດ ດ່ຽວ ກ້າຫານ ແລະ ທົນທານ. ແຕ່ຍ້ອນກຳລັງຂອງຕົນບໍ່ຫລາຍ, ອາວຸດລ້າ ຫລັງ ສ່ວນຝ່າຍສຍາມ ແລະ ພວກຂາຍຊາດ ພັດມີກຳລັງຢ່າງຫລວງຫລາຍ.

ດັ່ງນັ້ນ, ປັ້ນຄົບເທື່ອນີ້ ເຈົ້າໄອ້ ຈຶ່ງຖືກພວກສຍາມຈັບ ໂດຍເອົາເຊືອກໜັງ ຮັດຄໍ ເຈົ້າໄອ້ ໃຫ້ຕາຍ ແລ້ວເອົາໄປຝັງໄວ້ຫ້ວຍ (ແຄມຫ້ວຍກຽງນາ) ຕໍ່ມາ ເຈົ້າຄຸຍ ເຈົ້ານະຄອນຈຳປາສັກ ແລະ ເຈົ້ານາກອຸປະຣາດ (ສອງອ້າຍນອງ ລູກເຈົ້າໄອ້) ໄດ້ມາກໍ່ທາດໃສ່ໄວ້ແຄມຫ້ວຍກຽງນາ ທີ່ງນາບ້ານວັດຫລວງ ເມືອງໄຊເສດຖາ ແຂວງອັດຕະປື ໃນລະຫວ່າງປີ ຄ.ສ 1830-40 ປະຊາຊົນ ເອີ້ນວ່າ " ທາດເຈົ້າໄອ້ ". ສ່ວນເຈົ້າອິນ ຮູ້ໂຕກ່ອນ ຈຶ່ງໂຕນນ້ຳລອຍຂ້າມມາ ຂຶ້ນທ່າບ້ານນ້ອຍ (ບ້ານໂພໄຊ ປັດຈຸບັນ) ທະຫານສຍາມ ນຳມາຈັບທັນ ແລ້ວ ຂ້າກີ້ມຢູ່ກົກຍາງໃຫ່ ແຄມທ່າວັດບ້ານນ້ອຍ (ກົກຍາງໃຫ່ນີ້ ຜູ້ຂຽນຍັງທັນ ເຫັນ ເວລາເປັນສັງຄະລີ ຢູ່ວັດບ້ານນ້ອຍ 1950-51 (ປະຫວັດສາດນະຄອນ ຈຳປາສັກ ໜ້າ 25).

ເມື່ອປາບປາມ ການຕໍ່ສູ້ຂອງຂະບວນເຈົ້າໄອ້ ເຈົ້າອິນ ໄດ້ຮຽບຮ້ອຍ ແລ້ວ, ປີ ຄ.ສ 1780, ຕາກສິນ ແຕ່ງກຸງທົບບຸຣີ ຈຶ່ງໄດ້ແຕ່ງຕັ້ງ ເຈົ້າມູລະສຸຣິ ເປັນເຈົ້າເມືອງອັດຕະປື (ຕາມຕຳນານພົງສາວະຣີ ໜ້າ 119) ເມື່ອເຈົ້າ ມູລະສຸຣິ ໄດ້ເປັນເຈົ້າເມືອງ ໄດ້ດຳເນີນການເກັບເກນສ່ວຍໄດ້ຫລາຍ ໄປໃຫ້ ເຈົ້າຕາກສິນ. ເຈົ້າຕາກສິນ ກຸງທົບບຸຣີ ພໍໃຈ ຈຶ່ງໄດ້ໃຫ້ນາມມະຍົດ ແກ່ເຈົ້າ ມູລະສຸຣິ ເປັນ " ພຣະຣາຊະວົງສາ " ເຈົ້າເມືອງອັດຕະປື.

ຕັ້ງແຕ່ນັ້ນມາການແຕ່ງຕັ້ງຕຳແໜ່ງເຈົ້າເມືອງ, ອຸປະຣາດ, ຣາຊວົງ, ຣາຊບຸດ, ເມືອງແສນ, ເມືອງຈັນ, ເມືອງຂວາ, ເມືອງກາງ, ເມືອງຊ້າຍ, ຊາເນດ ຊານົນ, ນາເໜືອ, ນາໃຕ້, ຊຽງໃຕ້, ມະຫາໄຍຫາ, ມະຫາມຸນຕີ, ມະຫາເສນາ, ພົນອາມາດ, ທິບພະອາດ, ທິບພະເສນາ, ພົນເສນາ, ໝື່ນໜ້າ, ອິນທະຊິດ, ວຽງຄຳ ເປັນຕົ້ນ ແມ່ນນາມມະຍົດ ຂອງອານາຈັກລ້ານຊ້າງ ໃຊ້ ໃນການແຕ່ງຕັ້ງຕຳແໜ່ງ ການປົກຄອງບ້ານເມືອງ ໃຫ້ແກ່ຂ້າຣາຊການ.

ແຕ່ໜັງສືປະຫວັດສາດອີສານ ໄດ້ກ່າວໄວ້ວ່າ ປີສະຫລູ ຄ.ສ 1781 (ພ.ສ 2324) ຕາກສິນແຫ່ງກຸງທົບບຸຣີ ໄດ້ແຕ່ງຕັ້ງ ທ້າວເຫງົ້າ (ລູກພຣະພົມ ທີ່ໜີຈາກເມືອງອັດຕະປື ໄປແຈ້ງກຸງທົບບຸຣີ ໃນສະໄໝເຈົ້າໄອ້ ເຈົ້າອິນ ປົກ ຄອງອັດຕະປືນັ້ນ) ຕັ້ງໃຫ້ເປັນ ພຣະຣາຊະວົງສາ (ເຫງົ້າ) ເປັນເຈົ້າເມືອງ ອັດຕະປື ສືບຕໍ່ຈາກເຈົ້າໄອ້. ເຈົ້າຕາກສິນ ສັ່ງໃຫ້ເຈົ້າເມືອງ ຄຸມຄົນລາວ ແລະ ຊົນເຜົ່າເກັບສ່ວຍ ສົ່ງໃຫ້ສຍາມ ເປັນຄໍາປີລະ 6 ຊັ່ງ (ຫົກຊັ່ງ). ໃນສະໄໝ ຂອງພຣະຣາຊວົງສາ (ເຫງົ້າ) ນີ້ ໄດ້ແຕ່ງຕັ້ງ ຄົນໄປເກັ້ຍກ່ອມ ຊົນເຜົ່າທີ່ຢູ່ ນອກເຂດປົກຄອງ ຄືເຜົ່າສະຫລັ້ງ ມີ 4 ຕາແສງ ຄື : ຕາແສງເພັຍນ້ອຍ, ຕາ ແສງເພັຍໃຫຍ່, ຕາແສງພັດວັນ ແລະ ..... ພຣະຣາຊວົງສາ (ເຫງົ້າ) ເກງແກ່ກໍາ ໃນປີມະແມ 1797 (ພ.ສ 2340).

(ການແຕ່ງຕັ້ງເຈົ້າເມືອງອັດຕະປື ຕໍ່ຈາກເຈົ້າໄອ້ ເຈົ້າອິນ ນັ້ນ ຂັດ ແຍ້ງກັນ ລະຫວ່າງ ໜັງສືພົງສາວະຣີຂອງທ່ານ ພຣະອາຈານປະດິດ ຈັນທະຊູ ຊາດ ກັບ ປະຫວັດສາດອີສານ ຂອງເຕີມ ວິພາກພົດຈະນະກິດ).

ສ່ວນໃນໜັງສືພື້ນເມືອງອັດຕະປື ໄດ້ກ່າວໄວ້ວ່າ ປີ ຄ.ສ 1785 (ພ.ສ 2328, ຈ.ສ 1147) ຣາຊການທີ 1 ເຈົ້າຊີວິດສຍາມ ໄດ້ແຕ່ງຕັ້ງ ທ້າວ ພົມມະເທໂວ ເປັນພຣະຣາຊວົງສາ (ພົມມະເທໂວ) ເປັນເຈົ້າເມືອງອັດຕະປື ຕໍ່ຈາກພຣະມູລະສຸຣິ ເມື່ອໄດ້ເປັນເຈົ້າເມືອງແລ້ວ ຈົ່ງຍ້າຍເມືອງ ຈາກເມືອງ ເກົ່າ ມາຕັ້ງຢູ່ເຊກະໜາບ (ແຕ່ຄຸ້ມວັດກາງ ລົງມາຫາວັດໃຕ້).

ປີ ຄ.ສ 1797 ຣາຊການທີ 1 ຂອງສຍາມ (ສະໄໝກຸງເທບເປັນ ຣາຊທານີ) ໄດ້ແຕ່ຕັ້ງອຸປະຣາດ ຈັນທະຣັງສີ ເປັນ " ພຣະຣາຊວົງສາ "

(ຈັນ ທະຣັງສີ) ເປັນເຈົ້າເມືອງອັດຕະປືຄົນຕໍ່ມາ. ເຈົ້າເມືອງຈັນທະຣັງສີ ໄດ້ ແຕ່ງຕັ້ງຄົນໄປເກັຍກ່ອມ ຂ້າຂັດ, ກະເສາ, ເຂດບ້ານດວງມາ, ບ້ານທັກດີ, ບ້ານທັກຂະໜາດ ແລະ ບ້ານນ້ຳໂຊະ ລວມ 9 ຕາເສາ ໃຫ້ມາຂຶ້ນກັບອັດຕະປີ ພຣະຣາຊວົງສາ ຈັນທະຣັງສີ ໄດ້ສືບຕໍ່ເກັບສ່ວຍ ສົ່ງໃຫ້ສຍາມ ຕາມຈຳນວນ ເດີມຄື ເກັບສ່ວຍເປັນຄຳປີລະ 6 ຊັ່ງ. ພຣະຣາຊວົງສາ ຈັນທະຣັງສີ ເຖິງແກ່ ກຳໃນປີ ຄ.ສ 1813 (ພ.ສ 2356).

ປີ ຄ.ສ 1813 (ພ.ສ 2356) ກະສັດສຍາມ ໄດ້ແຕ່ງຕັ້ງທ້າວ ພົມ ມະບຸດ (ບຸດພຣະຣາຊວົງສາ (ເຫງົ້າ) ເຈົ້າເມືອງຄົນກ່ອນ) ຕັ້ງເປັນພຣະ ຣາຊວົງສາ (ພົມມະບຸດ) ເປັນເຈົ້າເມືອງອັດຕະປີ ສືບຕໍ່ເຈົ້າເມືອງຄົນກ່ອນ. ພຣະຣາຊວົງສາທີ 4 ນີ້ ໄດ້ແຕ່ງໃຫ້ຄົນເກັຍກ່ອມຂ້າຂັດ ທີ່ຍັງບໍ່ທັນຂຶ້ນກັບ ເມືອງໃດ ເຊິ່ງມີບ້ານເຮືອນ ຢູ່ໃນເຂດບ້ານພັດລຽງໃຕ້, ບ້ານລະແວ, ບ້ານ ສະມ໋ວງໃຫຍ່, ບ້ານສະມ໋ວງນ້ອຍ, ບ້ານຕຸລາດ ລວມ 4 ຕາແສງ ໃຫ້ມາຂຶ້ນກັບ ເມືອງອັດຕະປີ. ການເກັບສ່ວຍສົ່ງສຍາມ ຍັງຮັກສາຄືເກົ່າ. ພຣະຣາຊວົງສາ ພົມມະບຸດ ເຖິງແກ່ກັມ ປີຂານ ຄ.ສ 1830 (ພ.ສ 2373).

ປີ ຄ.ສ 1830 (ພ.ສ 2373) ໄດ້ແຕ່ງຕັ້ງ ທ້າວ ກ່ຳ (ບຸດພຣະ ຣາຊວົງສາ ຈັນທະຣັງສີ) ເປັນພຣະຣາຊວົງສາ (ກ່ຳ) ເປັນເຈົ້າເມືອງອັດຕະປີ ຕັ້ງທ້າວ ສີ ເປັນອຸປະຣາດ, ຕັ້ງທ້າວ ຮູຍ (ນ້ອງທ້າວ ສີ) ເປັນຣາຊວົງ, ຕັ້ງ ທ້າວ ຄຳ (ລູກອຸປະຣາດ ໂຄດ) ເປັນຣາຊບຸດ ວ່າໜ້າທີ່ ເຈົ້າເມືອງໄດ້ 16 ປີ ເຖິງປີມະເມັຍ ຄ.ສ 1846 (ພ.ສ 2389) ມີຄວາມຜິດ ຍ້ອນອຸປະຣາດສີ ໄປ ຟ້ອງຕໍ່ພະຍາບໍ່ດີນເດຊາ (ແມ່ທັບໄທ) ທີ່ຕັ້ງທັບຢູ່ເມືອງອຸດົມສີໄຊ (ຂະເມນ) ຫາວ່າ ພຣະຣາຊວົງສາກ່ຳ ເຈົ້າເມືອງອັດຕະປີ ພ້ອມໃຈກັບ ເຈົ້າຣາຊບຸດໄຍ້

ແລະ ເຈົ້າລ້ານຊ້າງ ຈະກູ້ຊາດ ອອກຈາກເປັນຫົວເມືອງຂຶ້ນຂອງສຍາມ, ພຣະ ຣາຊວົງສາກ່ຳ ແກ້ໄດ້ (ອຸປະຣາດລີຕາຍ) ຕໍ່ມາ ຣາຊວົງຮູຍ (ຜູ້ເປັນນ້ອງ ອຸປະຣາດລີ) ໄດ້ໄປຝ້ອງຕໍ່ເຈົ້າຊີວິດສຍາມ ຢູ່ບາງກອກຕື່ມອີກ. ເຈົ້າຊີວິດ ສຍາມ ເອົາຫລັກການບໍ່ໄດ້ ແຕ່ມີຜູ້ຟ້ອງຮ້ອດສອງຄົນ ຈຶ່ງໄດ້ກອດ ພຣະ ຣາຊວົງສາກ່ຳ ອອກຈາກເຈົ້າເມືອງ ເນຣະເທດ ໄປຢູ່ເມືອງຊຽງແຕງ ຄືເອົາ ໄປກັກໄວ້ໃນຊຽງແຕງນັ້ນເອງ.

ໃນສະໄໝ ພຣະຣາຊວົງສາກ່ຳ ເປັນເຈົ້າເມືອງອັດຕະປືນີ້, ເຈົ້າໝາ ນ້ອຍ ເຈົ້ານະຄອນຈຳປາສັກ ສິ້ນພຣະຊົນ ຢູ່ກຸງເທບ. ເຈົ້າອະນຸວົງ (ເຈົ້າຄອງ ນະຄອນວຽງຈັນ) ຈຶ່ງແຕ່ງຕັ້ງເຈົ້າຣາຊບຸດໂຍ້ (ລູກຊາຍ ເຈົ້າອະນຸວົງ) ມາ ເປັນເຈົ້າຄອງນະຄອນຈຳປາສັກ ແລະ ແຕ່ງຕັ້ງເຈົ້າຄຳປອມ (ຫລານເຈົ້າ ອະນຸວົງ) ເປັນອຸປະຣາດ ໃນປີ ຄ.ສ 1821. ເຈົ້າອະນຸວົງ ມີຄວາມຮັກຊາດ ມີ ແຜນການກູ້ເອກະລາດຈາກສຍາມ ນັບແຕ່ພຣະອົງ ຂຶ້ນຄອງນະຄອນວຽງຈັນ ແລະ ເມື່ອໄດ້ແຕ່ງຕັ້ງຣາຊບຸດໂຍ້ ເປັນເຈົ້ານະຄອນຈຳປາສັກແລ້ວ ກ່ໍຍິ່ງເປັນ ກຳລັງສຳຄັນ ໃນການປຸກລະດົມ ຄວາມຮັກຊາດຂອງປະຊາຊົນ ຈຳປາສັກ, ສາຣະວັນ ແລະ ອັດຕະປື ເພື່ອຕໍ່ສູ້ກັບສະ ຍາມ.

ປີ ຄ.ສ 1847 (ພ.ສ 23960 ຈ.ສ 1209) ປີຕໍ່ມາ ໄດ້ແຕ່ງຕັ້ງ ທ້າວ ຮຸຍ (ນ້ອງອຸປະຣາດລີ ຜູ້ຕາຍ) ທີ່ໄປຝ້ອງພຣະຣາຊວົງສາກ່ຳ ຕໍ່ເຈົ້າຊີວິດ ສຍາມ ເປັນເຈົ້າເມືອງ ແຕ່ງຕັ້ງ ທ້າວ ແດງ ນ້ອງທ້າວ ຮຸຍ ເປັນອຸປະຣາດ ແລະ ແຕ່ງຕັ້ງທ້າວ ບົງ ເປັນຣາຊບຸດ ເພື່ອເກັບສ່ວຍ ເກັບຄ່ຳສົ່ງໃຫ້ກຸງເທບ. ທ້າວ ຮຸຍ ເຈົ້າເມືອງອັດຕະປື ໄດ້ກຳນົດເຂດແດນ ເມືອງອັດຕະປືໄວ້ດັ່ງນີ້ :

- ທາງທິດຕາເວັນອອກ ເກິງໝອງຟ້າ ໝອງຍົດ ໄລຍະທາງຍ່າງ 8 ມື້
- ທິດຕາເວັນອອກສຽງເໜືອ ຕິດຊາຍແດນເມືອງສາຣະວັນ ທີ່ຕາແສງ ພິມ ຝັ່ງຊຸກອງ ໄລຍະທາງຍ່າງ 4 ມື້.
- ທິດຕາເວັນອອກສຽງໃຕ້ ເກິງຊາຍແດນເມືອງແສນປາງ ທີ່ປາກນ້ຳ ສະໄທ ໄລຍະທາງຍ່າງ 8 ມື້.
- ທິດຕາເວັນຕົກ ຕິດຊາຍແດນນະຄອນຈຳປາສັກ ທີ່ຕາແສງຄຳພໍ ໄລ ຍະທາງຍ່າງ 3 ມື້.
- ທິດຕາເວັນຕົກສຽງເໜືອ ເກິງຊາຍແດນ ເມືອງສາຣະວັນ ເມືອງ ຄຳທອງ ທີ່ຕາແສງປົ່ງທ່ຽງຫລວງ ໄລຍະທາງຍ່າງ 5 ມື້.
- ທິດຕາເວັນຕົກສຽງໃຕ້ ເກິງຊາຍແດນເມືອງແສນປາງ ທີ່ຕາແສງ ແກ້ງສັກແອກ ລຳນ້ຳຊຸກອງ ໄລຍະທາງຍ່າງ 3 ມື້.

ພຣະຣາຊວົງສາຄຸຍ ໄດ້ໃຫ້ຄົນໄປເກັ້ຍກ່ອມຂ້າຂັດ ທີ່ຕັ້ງບ້ານຢູ່ນອກ ເຂດໝອງຟ້າ, ໝອງຍົດ ໄດ້ຊົນເຜົ່າສະຫລັງ, ບ້ານທັກຕູດ, ບ້ານພັດລັ້ງ, ບ້ານ ດອງເບາະ, ບ້ານປ້ຽລ່ານ ລວມ 4 ຕາແສງ. ແຕ່ບັນດາບ້ານທີ່ຕັ້ງຢູ່ນອກ ບ້ານທັກຕູດ, ພັດລັ້ງ, ດອງເບາະ ແລະ ບ້ານປ້ຽລ່ານ ໄປທາງທິດຕາເວັນ ອອກ ເກິງຕີນພູບັນທັດ ຕໍ່ແດນຫວຽດນາມ ໄລຍະທາງຍ່າງ 15 ມື້ ຍັງບໍ່ທັນໄດ້ ເກັ້ຍກ່ອມເທື່ອ.

ພຣະຣາຊວົງຄຸຍ ຮັບຣາຊການ ໄດ້ 17 ປີ ເກິງແກ່ກຳ ປີກຸນ ຄ.ສ 1863 (ພ.ສ 2406) ໃນຮັຊການຂອງພຣະຣາຊວົງສາຄຸຍນີ້, ເຈ້ົາອະນຸວົງ, ເຈ້ົາຄອງນະຄອນວຽງຈັນ ແລະ ເຈ້ົາຣາບຸດໂຍ້ ເຈ້ົາຄອງນະຄອນຈຳປາສັກ ຍົກກອງທັບ ໄປກວາດຕ້ອນເອົາຄົນລາວ ທີ່ພວກສຍາມ ກວາດຕ້ອນໄປຈາກ

ວຽງຈັນ ແລະ ເມືອງພວນຊຽງຂວາງ ໄປໄວ້ກຸງເທບ ແລະ ສະລະບຸຣີ ເພື່ອກັບຄືນວຽງຈັນ ເພາະເຈົ້າອະນຸວົງ ໄດ້ຂໍກັບ ພຣະບັ່ງເກົ້າເຈົ້າຢູ່ຫົວ ຣາຊກາບ ທີ 3 ຂອງໄທ ໂດຍດີແລ້ວ ແຕ່ບໍ່ຍອມໃຫ້. ໃນຈຳນວນພວກອົບພະຍົບ ທີ່ສຍາມ ກວາດຕ້ອນມານີ້ ມີເຊື້ອພຣະວົງ ກະສັດວຽງຈັນ ແລະ ຊຽງຂວາງ ລວມຢູ່ດ້ວຍ. ເຈົ້າຊີວິດສຍາມ ຣັຊກາບທີ 3 (ພຣະບັ່ງເກົ້າ) ໄດ້ແຕ່ງຕັ້ງໃຫ້ ກົມພຣະຣາຊວັງບໍວອນ ເປັນແມ່ທັບໃຫຍ່ ກັບພະຍາ ສຸພາວະດີ ຍົກທັບມາປາບທັບເຈົ້າອະນຸວົງ ແລະ ທັບຣາຊບຸດໂຍ້ ເຈົ້ານະຄອນ ຈຳປາສັກ. ເຈົ້ານະຄອນ ຈຳປາສັກ (ໂຍ້) ໄດ້ໜີໄປຢູ່ບ້ານຊົນເຜົ່າ ປາຍຫ້ວຍບັ້ງລຽງ (ຫລັກ 25). ເຈົ້າ ພະຍາສຸພາວະດີ ສັ່ງໃຫ້ເຈົ້າຣຸຍ ຕິດຕາມນຳຈັບ ເຈົ້ານະຄອນຈຳປາສັກ (ໂຍ້) ເຈົ້າຣຸຍຈັບເຈົ້າໂຍ້ໄດ້ ຢູ່ປາຍຫ້ວຍບັ້ງລຽງ ແລ້ວນຳໂຕສົ່ງໃຫ້ພະຍາສຸພາວະດີ ເພື່ອສົ່ງລົງກຸງເທບ ເພື່ອຊັ້ງປະຈານ ຮ່ວມກັບຄອບຄົວເຈົ້າອະນຸວົງ ເຈົ້ານະຄອນວຽງຈັນ.

ໃນສົງຄາມ ປາບຂະບວນການກູ້ເອກະລາດ ຂອງເຈົ້າອະນຸວົງ ຄັ້ງນີ້ ພວກສຍາມ ໄດ້ຈັບເຈົ້າອະນຸວົງ ພ້ອມດ້ວຍວົງສານະວົງ ແລະ ເຈົ້າໂຍ້ ລົງໄປກຸງເທບ ເອົາຄອບຄົວ ເຈົ້າອະນຸວົງ ໃສ່ກົງເຫລັກ ແກ້ເສື້ອຜ້າອອກ ໃຫ້ປະຊາຊົນມາດ່າ ສາບແຊ່ງ ແລະ ແຫ່ປະຈານ ຈົນເຈົ້າອະນຸວົງ ລົງແດງຕາຍ ສ່ວນວົງສານຸວົງ ພວກສຍາມ ຂ້ຳກີ້ມ ຈົນດັບເຊື້ອກະສັດວຽງຈັນ. ກວາດຕ້ອນຈັບເອົາຂ້າຣາຊການ ທະຫານ ຊັ້ນຜູ້ໃຫຍ່ ໄປກຸງເທບ. ປຸ້ນສະດົມເອົາຊັບສິນມີຄ່າ ຂອງນະຄອນວຽງຈັນ, ນະຄອນພວນຊຽງຂວາງ ແລະ ນະຄອນຈຳປາສັກ, ກວາດຕ້ອນເອົາປະຊາຊົນວຽງຈັນ, ຊຽງຂວາງ ລົງໄປກຸງເທບ, ຄົນລາວກືກຜູກມັດ ທຸບຕີ ທໍຣະມານ ແສນສາຫັດ ຈຳນວນສອງສ່ວນສາມແມ່ນລົ້ມຕາຍນຳທາງ ຍ້ອນຄວາມອຶດຫິວ. ທົນຕໍ່ການທໍຣະມານ ທຸບຕີບໍ່ໄຫວ, ເປັນພະຍາດ

ຕ່າງໆ. ຍິງໜຸ່ມສາວລາວ ຈຳນວນຫລວງຫລາຍ ຕາຍຍ້ອນການກືກຂົ່ມຂືນ ກະທຳສຳເລົ້າ. ຈຳນວນທີ່ເຫລືອ ໄປເກີງກຸງເທບ ປະມານໜຶ່ງສ່ວນ ກໍ່ໄດ້ໄປ ອອກແຮງງານ ສັບພະທຸກ ໃນການະຈະເລີຍ ເຊັ່ນໄປຂຸດຄອງແສນແສບ ແລະ ຄອງຕ່າງໆ ໃນກຸງເທບ, ໄປຕັດຕົ້ນຕານ ຢູ່ເມືອງເພັດບຸຣີ, ການ ປ່າດົງດິບ ຢູ່ ສຸພັນບຸຣີ ແລະ ສາຄະບຸຣີ. ຈຳນວນໜຶ່ງ ເອົາໄປເປັນຂ້ອຍຂ້າ ຂອງເຈົ້ານາຍ ກຸງເທບ ແລະ ອື່ນໆ.

ເມື່ອປາບເຈົ້ານະຄອນຈຳປາສັກ ໄດ້ສຳເລັດແລ້ວ, ເຈົ້າຣຸຍ (ລູກ ຊາຍເຈົ້າໄອ້) ມີພີ່ນ້ອງນຳຈັບເຈົ້າໄຍ້ໄດ້ ຈຶ່ງໄດ້ຮັບຄວາມໄວ້ເນື້ອເຊື່ອໃຈ ຈາກຣາຊການທີ . 3 ຈຶ່ງແຕ່ງຕັ້ງໃຫ້ເປັນເຈົ້ານະຄອນຈຳປາສັກ ສືບຕໍ່ຈາກ ເຈົ້າຣາຊບຸດໄຍ້.

ປີ ຄ.ສ 1832 (ຈ.ສ 1194) ພຣະບັ່ງເກົ້າ ເຈົ້າຊີວິດສຍາມ ໄດ້ແຕ່ງ ຕັ້ງທ້າວ ພິລາ (ລູກອຸປະຣາດສີ ຜູ້ກ່າວໂທດເຈົ້າເມືອງກ່ຳ) ໃຫ້ເປັນ ພຣະ ຣາຊວົງສາພິລາ ເປັນເຈົ້າເມືອງອັດຕະປື, ຕັ້ງທ້າວ ກົ່ງ ເປັນອຸປະຣາດ, ຕັ້ງ ທ້າວ ປາວ ເປັນຣາຊວົງ, ຕັ້ງທ້າວ ກັນຫາ (ນ້ອງທ້າວ ປາວ) ເປັນຣາຊບຸດ.

ປີ ຄ.ສ 1835 (ຈ.ສ 1197 ພ.ສ 2407) ພຣະຣາຊວົງສາພິລາ ຕາຍ, ເຈົ້າຊີວິດສຍາມພະບັ່ງເກົ້າ ແຕ່ງຕັ້ງອຸປະຣາດກົ່ງ (ບຸດທ້າວ ສຸດ) ກຳມະການປົກຄອງເມືອງອັດຕະປື ເປັນເຈົ້າເມືອງ. ເລື່ອນທ້າວ ປາວ ເປັນ ອຸປະຣາດ (ທ້າວ ປາວ ຕາຍ ແຕ່ງຕັ້ງທ້າວ ສິມມະລີ ເປັນອຸປະຣາດ) ຕັ້ງທ້າວ ສຸວັນ ເປັນຣາຊວົງ, ຕັ້ງທ້າວ ກັນຫາ ເປັນຣາຊບຸດ (ທ້າວ ກັນຫາ ຕາຍຕັ້ງ ທ້າວ ໂມ ເປັນຣາຊບຸດ ແທນ). ພຣະຣາຊວົງກົ່ງ ໄດ້ແຕ່ງຄົນໄປເກັ້ຍກ່ອມຂ້າ

ບ້ານແທ. ບ້ານລະແວ ເຊິ່ງຕັ້ງບ້ານຢູ່ຕີນພູຫລວງ ດ້ານຕາເວັນຕົກຂອງເມືອງ ອັດຕະປື ໃຫ້ຂຶ້ນກັບນະຄອນຈຳປາສັກ. ໃນໄລຍະທີ່ ພຣະຣາຊວົງສາກີ່ງ ປົກຄອງນີ້ ບໍ່ສາມາດເກັບສ່ວຍໄດ້ ເພາະເຜົ່າຕ່າງໆ ຂັດຂືນ ບໍ່ຍອມເສັຍສ່ວຍ ພ້ອມກັນນີ້ ກໍ່ມີການປຸ້ນສະດົມ ພໍ່ຄ້າລາວຂາຍ ຂ້າຣາຊການ ມີການຈັບກຸມ ພະນັກງານ ແລະ ປະຊາຣາຊດອນ ໄປຂາຍຢູ່ປະເທດໃກ້ຄຽງ. ບາງເຜົ່າບໍ່ຍອມ ຂຶ້ນກັບເມືອງອັດຕະປືອີກ.

ພຣະຣາຊວົງສາກີ່ງ ໄດ້ຍ້າຍເມືອງອັດຕະປື ຈາກຝັ່ງເຊກະໝານ ມາ ຕັ້ງຢູ່ຝັ່ງເຊກອງ ບ່ອນຕັ້ງສຳນັກແຂວງ ໃນປັດຈຸບັນ ໃນປີ ຄ.ສ 1835 (ພ.ສ 2407) ໃຫ້ຊື່ວ່າ " ເມືອງໃໝ່ ".

ປີ ຄ.ສ 1870 (ພ.ສ 2413) ເກີດໄພພິບັດ ນ້ຳກ້ວມໃຫຍ່ ບ້ານເຮືອນ ປະຊາຊົນເສັຍຫາຍຫລາຍ ວັດວາອາຮາມ ແລະສົມບັດ ຂອງວັດຕ່າງໆ ກໍ່ເສັຍ ຫາຍ ພຣະພຸທຮູບກໍ່ຫັກ ຄືພຣະພຸທຮູບຢູ່ວັດເໝືອ ແລະ ວັດກາງເຊກະໝານ ຄໍ່ຫັກ. ປະຊາຊົນອຶດຢາກ ຊອກຫາຫົວເຜືອກ ຫົວມັນ ກິນຕາງເຂົ້າ ມີປະຊາ ຊົນລົ້ມຕາຍ ຍ້ອນການອຶດຫິວ ແລະ ພະຍາດລະບາດ ເປັນຈຳນວນມາກ.

ໃນປີ 1870 ນີ້ ເອງ ອຸປຣາດສົມມະລິຕາຍ ໄດ້ແຕ່ງຕັ້ງທ້າວ ສຸວັນ ເປັນອຸປະຣາດ. ຕັ້ງທ້າວ ນາກ ເປັນຣາຊວົງ. ຕໍ່ມາອຸປະຣາດສຸວັນ ແລະ ຣາຊ ວົງນາກ ຕາຍຍ້ອນພະຍຸ ຈົ່ງຕັ້ງທ້າວ ໂມ ເປັນອຸປະຣາດ. ຕັ້ງທ້າວ ໂສມ ເປັນ ຣາຊບຸດ ໃນປີນີ້ເກີດແຫ້ງແລ້ງ ຄົນ ແລະ ສັດ ລົ້ມຕາຍເປັນຈຳນວນຫລວງ ຫລາຍ.

ວັນທີ 2 ເມສາ (4) 1882 (ຈ.ສ 1254) ກົມຫລວງພິຊິດ ປຣິຊາ ກອນ ໄດ້ແຕ່ງໃຫ້ພຣະປຣິຊາຄະດີ ກັບຫລວງສຸນທອນ ອຸໄທພິທັກ ຣ້ອຍໂທຄ້ວມ ແລະ ຣ້ອຍຕີກົມຢາ ເປັນຂ້າຫລວງ ກວດຣາຊການ ເມືອງສີທັນດອນ, ຊຽງ ແຕງ, ແສນປາງ, ອັດຕະປື, ສາຣະວັນ ແລະ ຄຳທອງ.

ໃນປີ ຄ.ສ 1882 ນີ້ ເຈົ້າຊີວິດສຍາມ ໄດ້ສົ່ງພິດສະນຸຣາດ ມາເປັນ ຂ້າຫລວງ ປະຈຳອັດຕະປື.

ພຣະຣາຊວົງສາກົງ ເປັນເຈົ້າເມືອງ 52 ປີ ມີອາຍຸ 90 ປີ ເມື່ອເຈົ້າ ເມືອງກົງຕາຍ, ເຈົ້າຊີວິດສຍາມ ຈົ່ງແຕ່ງຕັ້ງ ອຸປະຣາດໂມ ເປັນພຣະຣາຊວົງ ສາໂມ ເປັນເຈົ້າເມືອງອັດຕະປື, ໃນປີ 1887 ຕັ້ງທ້າວ ແສງ ເປັນອຸປະຣາດ.

ປີ ຄ.ສ 1893 (ຈ.ສ 1255) ພະຍາມະຫາອຳມາດ ເປັນຂ້າຫລວງ ໃຫຍ່ຂອງສຍາມ ປະຈຳຢູ່ຈຳປາສັກ ໄດ້ຕັ້ງທ້າວ ສຽງ (ລູກເຈົ້າເມືອງກົງ) ເປັນຣາຊວົງ ເມືອງອັດຕະປື.

ເດືອນມີນາ (3) ຄ.ສ 1893 ຫລວງສີໂຄສະຣິນທອນ, ຣ້ອຍຕີຫູນ ແລະ ນາຍທະຫານໃຫຼ ມາເກນເອົາຊາວໝຸ່ມໄປເປັນທະຫານ ໄດ້ລາວເທິງ ແລະ ລາວລຸ່ມ 170 ຄົນ ແລ້ວນຳເອົາຊາວໝຸ່ມເຫລົ່ານັ້ນ ໄປຈຳປາສັກ ເພື່ອ ກຽມຮັບເສິກກັບຝຣັ່ງເສດ.

ໃນປີ 1893 ນີ້ເອງ ປະກົດການເສືອອ່ອກອາຣະວາດ ຂົບຄົນຢູ່ເມືອງ ອັດຕະປື ເປັນຈຳນວນມາກ ເຮັດໃຫ້ຄົນບໍ່ກ້າອອກຈາກບ້ານ ໄປທຳມາຫາກິນ.

ເດືອນມີນາ (3) ຄ.ສ 1893 ນີ້ ກົມຫລວງພິຊິດປຣີຊາ ແມ່ທັບສຍາມ ມາບັນຊາການ ປະຈຳແຄວ້ນລາວ ທ້າປວາ ຕັ້ງຢູ່ອຸບົນ ໄດ້ແຕ່ງໃຫ້ພຣະປຣີຊາ ຄະດີ ມາກວາດເອົາຣາສດອນ ຊາວອັດຕະປືອີກ ເພື່ອໄປເປັນທະຫານ ສູ້ຣົບ ກັບຝຣັ່ງເສດ ຢູ່ສີທັນດອນ ໂຮມຍິງຊາຍໄດ້ 150 ຄົນ, ພວກຍິງໜຸ່ມ, ຊາຍສະ ກັນເຫລົ່ານີ້ ໄປເກິ່ງສີທັນດອນ ໄດ້ໜຶ່ງເດືອນ, ກອງທະຫານຝຣັ່ງເສດ ກໍ່ມາຕັ້ງ ກອງບັນຊາການ ສູ້ກັບກອງທັບໄທ ຢູ່ຄອນພະເພັງ (ຫລີ່ຜີ).

ວັນທີ 20 ເມສາ (4) 1893 ນາຍທະຫານຝຣັ່ງເສດ ຊຶ່ກອງຊີ ກັບ ທະຫານຫວຽດນາມ 19 ຄົນ ອາວຸດຄົບມື ເຂົ້າມາເມືອງອັດຕະປື ບັງຄັບບໍ່ໃຫ້ ຜູ້ວ່າຣາຊການ, ກົມການ ແລະ ປະຊາຣາສດອນ ເມືອງອັດຕະປື ເຊື່ອຟັງການ ບັງຄັບບັນຊາ ຂອງລັດຖະບານສຍາມ. ເວລານັ້ນຣາຊບຸດເມືອງອັດຕະປື ແລະ ຣ້ອຍໂທພຸ່ມທະຫານໄທ ຮັກສາການຢູ່ອັດຕະປື ຈຶ່ງພາກັນຂັບໄລ່ຝຣັ່ງເສດ ກັບ ທະຫານຫວຽດນາມ ໃຫ້ລ່ອງເຮືອໄປຈາກອັດຕະປື ຈົນໝົດສິ້ນ.

ໃນເດືອນເມສາ (4) 1893 ນີ້ເອງ ນາຍສຸຈິນດາ ແລະ ຣ້ອຍໂທພຸ່ມ ໄດ້ຈາກອັດຕະປືໄປຄຸມກຳລັງທະຫານ 400 ຄົນ ເພື່ອຕັ້ງຮັບສູ້ຣົບກັບກອງທະ ຫານຝຣັ່ງ ຢູ່ດອນດອນພະເພັງ.

ການສູ້ຣົບເທື່ອນີ້ ກອງທະຫານໄທ ສູ້ກອງທັບຝຣັ່ງເສດບໍ່ໄດ້ ຈຶ່ງປ່ອຍ ໃຫ້ຝຣັ່ງເສດ ເຂົ້າປົກຄອງປະເທດລາວ ໃນເດືອນສິງຫາ (8) 1893 ແລະ ມີ ສັນຍາສະຫງົບເສິກ ແລະ ມອບດິນແດນລາວໃຫ້ຝຣັ່ງເສດ ສະບັບລົງວັນທີ 3 ຕຸລາ (10) 1893 ໂດຍທີ່ລັດຖະບານສຍາມ ຍອມຍົກດິນແດນຂອງລາວ ທີ່

ສຍາມປົກຄອງ ຄືຝັ່ງຊ້າຍແມ່ນ້ຳຂອງທັງໝົດ ໃຫ້ແກ່ຝຣັ່ງເສດ. ສ່ວນດິນລາວ ທີ່ຢູ່ກ້ຳຂວາຂອງແມ່ນ້ຳຂອງ ໃຫ້ຍັງຄົງຢູ່ໃຕ້ການປົກຄອງຂອງສຍາມສືບໄປ. ໃນສັນຍາຍັງລະບຸວ່າ ນັບແຕ່ຊາຍແດນຂອງແຕ່ລະຝ່າຍ ເລິກເຂົ້າໄປ 25 ກິໂລ ແມັດ ຈະບໍ່ຕັ້ງກອງທະຫານ, ບໍ່ມີກຳລັງທະຫານ ແລ ບໍ່ເກັບພາສີສິນຄ້າເຂົ້າ ອອກອີກ.

ໃນປີ ຄ.ສ 1893 ນີ້ເອງ ທ່ານ ภูเอกเบิ ເຊເນຣານ ປະເທດລາວ ໄດ້ມາຕັ້ງສຳນັກງານຢູ່ເມືອງໂຂງ ໄດ້ແຈ້ງມາຍັງເມືອງອັດຕະປື ໃຫ້ເອົາເຮືອ ໄປຮັບທ່ານ ກອມມີແຊ ແລະ ນາຍທະຫານຝຣັ່ງເສດ ມາປົກຄອງອັດຕະປື. ພຣະຣາຊວົງສາໄມ ເຈົ້າເມືອງອັດຕ໋ະປື ໄດ້ສັ່ງຣາຊວົງສີ ເອົາເຮືອໄປຮັບຢູ່ ເມືອງຊຽງແຕງ. ທ່ານ ກອມມີແຊ ເດີ ภูเอกเบิมັ ຂຶ້ນມາປົກຄອງ ເມືອງ ອັ໋ດຕະປື ປີມະເສັ ຄ.ສ 1894 (ຈ.ສ 1256).

ທ່ານ ກອມມີແຊ ເດີ ภูเอกเบิมັ ຜູ້ນີ້ ໄດ້ບອກເຈົ້າເມືອງໄມ ຍ້າຍ ເມືອງ ຈາກເມືອງໃໝ່ເຊກອງ ໄປຕັ້ງຢູ່ບ້ານຝັ່ງແດງ ເມືອງເກົ່າ ເມື່ອຕັ້ງ ເມືອງແລ້ວ, ຈຶ່ງເກນຊາວໜຸ່ມລາວ ແລະ ເຜົ່າຕ່າງໆ ເຂົ້າເປັນທະຫານ ເພື່ອ ປ້ອງກັນເມືອງອັດຕະປື.

ເຈົ້າເມືອງໄມ ໄດ້ລາອອກຈາກຣາຊການ ໃນປີ ຄ.ສ 1900 (ພ.ສ 2443 ຈ.ສ 1262).

ภาษีส่วย ของสยามจากลาว

ผลประโยชน์ ที่สยามได้จากหัวเมืองลาวขึ้น คือส่วย. ภาษีส่วย แม่นเก็บจากราษฎรทั่วไป ผู้ราษฎรที่มีความสูง แต่ตีนเกิงบ่า 2 สอก กับ 1 คืบ (ประมาณ 125 ซ.ม) ขึ้นไป. ผู้ที่ศึกษาได้รับการยกเว้นภาษีส่วย ได้แก่ผู้เกิ่า แต่อายุ 70 ปีขึ้นไป, ผู้ราษฎรที่มีความสูงบ่เกิง 2 สอก กับ 1 คืบ (125 ซ.ม), พะเนน, ผู้มีลูก เป็นไพ่ ส่วย 3 คนขึ้นไป (ลูก 3 คน ได้เสียส่วยแล้ว), คนพิการ หรือ เสียจิต, บ้าหมอด, บ้าใบ้ หรือ ขุนนาง. (ประวัติศาสตร์ลาว 1779-1975 หน้า 71).

หัวเมืองลาว ที่เสียส่วยให้สยาม หรือ ไทย มี 17 เมือง ส่วนใหญ่อยู่ภาคใต้ของลาว อยู่ภาคกลางของลาว มี 2 เมือง คือวังเวียง และแก่นท้าว, 15 เมืองแม่นอยู่ภาคใต้คือ จำปาสัก, สาละวัน, อัตตะปือ, สีพันดอน, คำทองใหญ่, คำทองน้อย, แสนปาง, สองดอนดอนดิน, ลำเปิงหมากปธิ, สะเมียะ, เซลำเพา, สะพาด, ซ่วงแตง, ขุมพอน, ดิน.

ส่วยที่เก็บจากลาว มี 10 ชนิด คือ : เงิน, คำผูย, หมากแหน่ง, ผ้าเหลือง, ครั่ง, ผ้าขาว, ป่าน, เส้นใหม, งาช้าง, ไม้สัก.

อัตราส่วย ที่ราษฎรชาวลาว ต้องเสียส่วยให้สยาม ในแต่ละปี มีดังนี้ :

ຊະນິດຂອງສ່ວຍ	ອັດຕາເສັຍ ຕໍ່ຄົນ/ປີ	ກ້ຳຈ່າຍ ເປັນຄົນລະ	ໝາຍເຫດ
1. ເງິນ	4 ບາດ		
2. ຄ່ຳພູຍ	2 ສະລຶງ		
3. ໝາກແໜ່ງ	12 ກິໂລ	4 ບາດ	
4. ຂີ້ເຜົ້ງ	24 ກິໂລ		
5. ຄັ່ງ	12 ກິໂລ	2.4 ບາດ	
6. ຜ້າຂາວ	4.6 ພືນ	4.6 ບາດ	
7. ປ່ານ	30 ກິໂລ	8 ບາດ	
8. ເສັ້ນໃໝ	0.6 ກິໂລ		
9. ງາຊ້າງ	2.4 ກິໂລ		
10. ໄມ້ສັກ	2 ຕົ້ນ		

ໝາຍເຫດ : ເງິນ 4 ບາດ ໃນສະໄໝ 1858 (ພ.ສ 2401) (ຣັຊກາບທີ 4 ຂອງສຍາມ) ຊື້ຄວາຍໄຕແມ່ໄດ້ 1 ໂຕ (ໃນພາກອີສານ ເວລານັ້ນ) ຫລື ປະມານ 10.000 ບາດ ໃນປັດຈຸບັນ (ປະຫວັດສາດ ໜ້າ 74 ອ້າງແລ້ວ).

ເມືອງລາວ ໃນ 17 ເມືອງ ທີ່ເສັຍສ່ວຍໃຫ້ສຍາມ ດັ່ງກ່າວແລ້ວ ບາງ ເມືອງກໍ່ມີຄວາມສາມາດເສັຍໄດ້ຫລາຍຊະນິດ ບາງເມືອງກໍ່ເສັຍໄດ້ນ້ອຍ ທີ່ ປະກົດຫັນບັນທຶກໄວ້ ເປັນລາຍລັກອັກສອນ ມີດັ່ງນີ້ : ຈຳປາສັກ ເສັຍໄດ້ 7 ຊະນິດ, ສີທັນດອນ ແລະ ແສນປາງ ເສັຍໄດ້ເມືອງລະ 6 ຊະນິດ, ສາຣະວັນ

6 ຊະນິດ, ອີກ 8 ເມືອງເສັຍໄດ້ແຕ່ເມືອງລະ 2-4 ຊະນິດ, ມີ 5 ເມືອງເສັຍໄດ້ແຕ່ຊະນິດດຽວ. ແຕ່ລະເມືອງ ທີ່ເສັຍສ່ວຍໃຫ້ສຍາມນັ້ນ ອີງຕາມຄວາມສາມາດຂອງທ້ອງກິ່ນຂອງຕົນ. ໃນອີສານ ແລະ ຫົວເມືອງລາວ ສະໝັກ່ອນ ມີໝາກແໜ່ງອຸດົມສົມບູນ ຈຶ່ງກຳນົດໃຫ້ຫົວເມືອງລາວ ແລະ ອີສານ ສ່ວນໃຫຍ່ ເສັຍສ່ວຍເປັນໝາກແໜ່ງ, ສ່ວນຄຳຜູຍ ມີຫລາຍໃນເຂດເມືອງອັດຕະປື ຈຶ່ງ ກຳນົດໃຫ້ເມືອງອັດຕະປື ເສັຍສ່ວຍຄຳຜູຍ ເປັນຕົ້ນ.

ການເສັຍສ່ວຍເປັນຄຳຜູຍ ສຍາມ ກຳນົດໃຫ້ເກັບ 8 ຄົນ ຕໍ່ນ້ຳໜັກ ຄຳຜູຍ 1 ຕຳລຶງ (4 ບາດ) ຫລືຜູ້ລະ 2 ສະຫລຶງ, ກ້ຳເປັນໝາກແໜ່ງ ຈະໃຫ້ ເສັຍ 5 ຄົນຕໍ່ 1 ຫາບ (60 ກິໂລ) ຫລືຄົນລະ 12 ກິໂລ ເທົ່າກັບການເສັຍ ສ່ວຍເປັນຄັ່ງ. ກ້ຳເສັຍສ່ວຍເປັນປ່ານ ໃຫ້ເກັບ 2 ຄົນຕໍ່ 1 ຫາບ (60 ກິໂລ) ຫລື ຜູ້ລະ 30 ກິໂລ.

ການເສັຍສ່ວຍໃຫ້ສຍາມ ແຕ່ລະປີ. ເມືອງໃດບໍ່ສາມາດເກັບສ່ວຍ ຕາມທີ່ສຍາມກຳນົດໃຫ້ໄດ້ ເຊັ່ນບໍ່ສາມາດເສັຍສ່ວຍເປັນໝາກແໜ່ງ ຫລື ຄຳ ຜູຍໄດ້, ເມືອງນັ້ນຕ້ອງເກັບສ່ວຍເປັນເງິນແທ່ນ ຕາມຈຳນວນທີ່ກຳນົດໄວ້ຂ້າງ ຕົ້ນ ໃຫ້ຄົບຕາມຈຳນວນຫົວຄົນ ທີ່ມີຊື່ເສັຍສ່ວຍໃຫ້ສຍາມ ແຕ່ລະປີ.

ປີ ຄ. 1852 (ພ.ສ 2395) ເຈົ້າເມືອງອັດຕະປື (ບໍ່ໄດ້ບອກວ່າຊື່ ຫຍັງ) ບຽດບັງເອົາສ່ວຍຂອງສຍາມ ກືກຟ້ອງ ເມື່ອສອບສວນໄດ້ຄວາມວ່າ ຈິງຕາມການຟ້ອງ ເຈົ້າເມືອງອັດຕະປື ໄດ້ປິດບັງເອົາຄຳຜູຍ ແລະ ງາຊ້າງ ຂອງສຍາມ,ເປັນຂອງສ່ວນໂຕ ສຍາມຈຶ່ງສັ່ງກອດຍົດ ແລະ ໃຫ້ອອກຈາກເຈົ້າ ເມືອງ ແຕ່ງຕັ້ງອຸປະຣາດຂຶ້ນແທນ, ສ່ວຍທີ່ຄ້າງສົ່ງ 10 ຊັ່ງ 17 ຕຳລຶງ ໃຫ້ ເຈົ້າເມືອງຄົນໃໝ່ໃຊ້ແທນໃຫ້ກຸງເທບ.

ການຄຸ້ມຄອງການເກັບສ່ວຍໃນແຕ່ລະເມືອງ ແບ່ງອອກເປັນ 4 ກອງ ຄື : ກອງເຈົ້າເມືອງ, ກອງຂອງອຸປະຣາດ, ກອງຂອງຣາຊວົງ ແລະ ກອງຂອງ ຣາຊບຸດ. ຜູ້ເສັຍສ່ວຍ ຈະສັງກັດກອງໃດກໍ່ໄດ້ ອັດຕາການເກັບສ່ວຍ ແມ່ນອັດ ຕາດຽວກັນທຸກກອງ, ແຕ່ລະກອງ ຈະມີນາຍກອງ ແລະ ນາຍໝວດເບິ່ງແຍງ ເພື່ອໃຫ້ຊາຍຊະກັນ ມາເສັຍສ່ວຍໃຫ້ຄົບ.

ເວລານັ້ນ ມີບ້ານທີ່ຂຶ້ນກັບເມືອງອັດຕະປື ຈຳນວນ 48 ບ້ານ, ມີຈຳ ນວນຊາຍຊະກັນ ຕ້ອງເສັຍສ່ວຍ 1,280 ຄົນ. ຕາມການກຳນົດຂອງສຍາມ ໃຫ້ຊາຍຊະກັນເສັຍສ່ວຍ (ໃນປີ 1778 ພ.ສ 2321) ເປັນຄຳພູຍ ແລະ ງາຊ້າງ (ຣັຊການທີ 3) ນະຄອນວຽງຈັນ ເສັຍສ່ວຍເປັນຄຳພູຍ ແລະ ຜ້າຂາວ, ສາຣະວັນ ເສັຍສ່ວຍເປັນໝາກແໜ່ງ, ເງິນ, ຄຳພູຍ, ຂີ້ເຜີ້ງ ແລະ ງາຊ້າງ ເປັນຕົ້ນ. ດັ່ງນັ້ນ ຊາຍຊະກັນຊາວອັດຕະປື ຕ້ອງເສັຍສ່ວຍໃຫ້ສຍາມ ເປັນຄຳ ຜູ້ລະ 2 ສະຫລຶງ ກັບງາຊ້າງ ຜູ້ລະ 2.4 ກິໂລ ຕໍ່ປີ. ບາງຫລັກຖານ ກ່າວວ່າ ເມືອງອັດຕະປືເສັຍສ່ວຍໃຫ້ໄທ ປີໜຶ່ງເປັນຄຳພູຍ 6 ຊັ່ງ (3.600 ກຣາມ ຫລື 3 ກິໂລ 6 ຂີດ).

ການສົ່ງສ່ວຍ

ເມື່ອເຖິງເວລາສົ່ງສ່ວຍ ເຖິງວ່າຈະເກັບໄດ້ຄົບ ຫລືບໍ່ກໍ່ຕາມ ກໍ່ຕ້ອງ ສົ່ງ ເຈົ້າເມືອງຈະມອບໃຫ້ອຸປຣາດ ຫລືຣາຊບຸດ ຫລື ຂຸນນາງຜູ້ໃດຜູ້ໜຶ່ງ ແລະ ຊາຍຊະກັນ 10-30 ຄົນ ນຳສ່ວຍໄປສົ່ງກຸງເທບ. ສ່ວຍທີ່ເປັນສິ່ງຂອງ ກໍ່ຈະໃສ່ ເຮືອ ສານດ້ວຍໄມ້ໄຜ່, ເມືອງສີທັນດອນ, ຈຳປາສັກ, ສາຣະວັນ, ອັດຕະປື, ຄຳມວນໃຫຍ່,ຄຳທວນນ້ອຍ, ສອງຄອນດອນດົງ, ລຳເນົາໝອງປຣື, ສະເມັຍະ.

ສະພາດ ນິຍົມໃຊ້ເຮືອ ຂຶ້ນຕາມລຳນ້ຳຂອງ ເຊ້ົານ້ຳມູນ ເຊ້ົາເມືອງອຸບົນ ເກ່ົງ ທ່າຊ້ຳງ (ປັດຈຸບັນຢູ່ເຂດນະຄອນຣາຊະສີມາ) ເຈ້ົາເມືອງນະຄອນຣາຊະສີມາ ຈະຈັດງົວຕ່ຳງ ແລະ ສະບຽງອາຫານມາຮັບ ຈາກນະຄອນຣາຊະສີມາ ໄປຫາ ກຸ່ງເທບ ມີ 2 ທ່ຽງຄື : ທ່ຽງໜ່ຶງຜ່ານເມືອງປັກຫ່ົງໄຊ ໄປເມືອງກະບິນບຸຣີ ຂົນ ສ່ວຍລ່ອງເຮືອ ໄປຕາມແມ່ນ້ຳບ່ຽງປະກ່ົງ ເຊ້ົາຄອງແສນແສບ ເກ່ົງປ່ຽຍທ່ຽງ ທີ່ກຸ່ງເທບ. ສ່ວນອີກທ່ຽງໜ່ຶງ ຈາກນະຄອນຣາຊະສີມາ ຜ່ານດ່ົງພະຍາໄຟ, ສີຄ້ົວ, ປ່ຽກຊ່ອງ, ໝວກເຫລັກ, ແກ້ງຄອຍ ເກ່ົງສະຣະບຸຣີ ເຊ່ົງເປັນເມືອງ ສູນກ່ຽງ ການຂົນສ່ົງສ່ວຍ ທີ່ມ່ຽຈາກລ່ຽວ ອີສ່ຽນ ແລະ ເພັດບຸຣີ. ຈາກສະຣະ ບຸຣີ ເຈ້ົາເມືອງຈະຈັດເຮືອ ແລະ ສະບຽງອາຫ່ຽນ ໃຫ້ກອງຄ່ຽຣະວ່ຽນ ສ່ວຍ ລ່ອງເຮືອໄປຕາມນ້ຳປ່ຽສັກ ຜ່ານອະນຸທະຍາ ເກ່ົງປ່ຽຍທ່ຽງທີ່ກຸ່ງເທບ.

ເມ່ືອສ່ວຍເກ່ົງກຸ່ງເທບ ພະນັກ່ຽນຂອງກົມມະຫ່ຽດໄທ (ຫ້ົວເມືອງ ລ່ຽວຂ້ຶນກັບກົມມະຫ່ຽດໄທ ໃນທ່ຽງປົກຄອງ) ຈະສ່ົງພະນັກ່ຽນກົມພະຄ້ັງ ມະ ຫ່ຽສົມບັດ ເຊ່ົງມີໜ້ຳທ່ີຮັກສ່ຽສ່ວຍ. ພະນັກ່ຽນທ້ັງສອງຝ່ຽຍ ຈະທ່ຳການຊ່ັງ ນ້ຳໜັກສ່ວຍ ລ້ົງບັນຊ ແລະ ອອກໜັງສ ຕ ກ່ຽ ໃຫ້ກົມມະຫ່ຽດໄທ. ກົມມະຫ່ຽດໄທ ກ່ຳຈະອອກໜັງສ ແຈ້ງໄປຍັງເມືອງທ່ີສ່ົງສ່ວຍ ວ່ຽໄດ້ສ່ວຍຊະນ ດໃດ ເວລ່ຽໃດ ຈ່ຳນວນເທ່ົ່ຽໃດ ຄ ບຕາມຈ່ຳນວນ ຫລ ບ່ໍຄ ບ.

ກ້ຳສ່ວຍສ່ົງມ່ຽ ເປັນຂອງທ່ີຈະນ່ຳອອກຕ່ຳງປະເທດ ກົມມະຫ່ຽດໄທ ຈະສ່ົງໄປຍັງກົມພະຄ້ັງສິນຄ້ຳໂດຍກ່ົງ ພະນັກ່ຽນກົມພະຄ້ັງສິນຄ້ຳ ຈະຊ່ັງ ແລະ ອອກໜັງສ ໃຫ້ ກົມມະຫ່ຽດໄທ ເໝ ນທ່ີກ່ຽວແລ້ວເບ ້ອງຕ້ົນ (ໜ້ຳ 78 ປະ ຫວັດສ່ຽດ້ຳງແລ້ວ).

ຂະບວນຕໍ່ຕ້ານການປົກຄອງຂອງສຍາມ

I. ຂະບວນຕໍ່ຕ້ານສຍາມຂອງລາວເທິງ

ປີ 1781 ສຍາມ ໄດ້ຂະຫຍາຍອຳນາດ ການປົກຄອງ ແລະ ເກັບສ່ວຍ ຫົວເມືອງລາວພາກໃຕ້. ເມືອງອັດຕະປື ເສັຍສ່ວຍໃຫ້ສຍາມ ເປັນຄຳພູຍປີລະ 6 ຊັ່ງ (1 ຊັ່ງ ເທົ່າກັບ 600 ກຣາມ) (ເຕີມວິພາກພົດຈະນະກິດ 2530 ໜ້າ (2) 62).

ການເກັບສ່ວຍຈາກຄົນລາວ ແລະ ລາວເທິງ ຂອງສຍາມ ແລະ ການ ຈັບເອົາລາວເທິງໄປເປັນທາດ ແລະຂາຍໃຫ້ນາຍທຶນ ແມ່ນສາເຫດຕົ້ນຕໍ ຂອງ ການຕໍ່ສູ້ ຕ້ານການຍຶດຄອງລາວ ຂອງສຍາມ.

ໜັງສືພົງສ່າວະດານລາວ. ແລະ ໜັງສື " ພື້ນວຽງ " ໄດ້ກ່າວໄວ້ວ່າ ພະຍາຍົກກະບັດ ເມືອງນະຄອນຣາຊສີມາ ໄດ້ເຂົ້າເຝົ້າເຈົ້າຜ່ນດິນສຍາມ ລັຊການທີ 2 ເພື່ອຂໍຣັບອາສາ ໄປປະຕິບັດຣາຊການຢູ່ເມືອງຊາຍແດນ ເມືອງ ໂຂງ ເພື່ອກ້ຽກ່ອມຄົນປ່າຄົນດົງ ຄື " ພວກລາວ " " ຂະເມນ " ແລະ " ຂ້າ " ທີ່ແຂງຂໍ້ບໍ່ຍອມເສັຍສ່ວຍແກ່ໄທ ຈະໃຫ້ເຂົ້າອ່ອນນ້ອມກ່ອມຕົນ ມາຢູ່ກັບໄທໃຫ້ ໄດ້ (ປະຫວັດສາດ ໂດຍສຸວິດ ທິຣະສາສະວັດ ໜ້າ 101).

ຕໍ່ການຮ້ອງຂໍດັ່ງກ່າວ ເຈົ້າຜ່ນດິນຣາຊການທີ 2 ໄດ້ອະນຸຍາດຕາມ ຄຳຮ້ອງຂໍ. ເມື່ອໄປເກ້ຽເມືອງໂຂງ ກໍ່ຕ້ັງທັບຈັບຄົນລາວ. ຂະເມນ. ຂ້າ ແລະ ພວກຄ້າຂາຍທາງເຮືອ ຕາມລຳນ້ຳຂອງ ຈັບມັດໄວ້ ໂດຍບໍ່ຢ້ານກົວໃຜ ເພາະ ໄດ້ເປັນຂ້າຣາຊການ ຂອງເຈົ້ากรุงบางกอก ເຮັດໃຫ້ການຄ້າຂາຍຢຸດສະງັກ

ຄວບຄຸມຫົວເມືອງລາວໄດ້ 8 ເມືອງ ຈັບລາວ. ຂະເມນ ແລະ ຂ້າ ມາເປັນຂ້າ ທາດ. ບ່າວໄພ່ ເປັນຈຳນວນນັບບໍ່ກ້ວນ. ໄດ້ຂ້າລາວເທິງ ເພົ້າຣະຜດ. ອາຮັກ ເຂດເມືອງອັດຕະປື ແລະ ພວກລາວລົ້ມຕາຍເປັນຈຳນວນມາກມາຍ ຈົນນັບ ບໍ່ກ້ວນ.

ການກະທຳຂອງຍົກກະບັດ ເມືອງນະຄອນຣາຊສີມາ ໄດ້ຣັດໃຫ້ເຈົ້າ ເມືອງພາກໃຕ້ ແລະ ພາກອີສານບໍ່ພໍໃຈ ເປັນຢ່າງມາກ ແຕ່ບໍ່ມີໃຜ ກ້າເວົ້າ ຄວາມຈິງ. ມີແຕ່ເຈົ້າເມືອງພູຣັນ (ຊຸຣັນ) ໄດ້ຮ້ອງຟ້ອງໄປຍັງກຸງເທບ. ເຈົ້າ ແຜ່ນດິນໄທ ຈຶ່ງໃຫ້ມະຫາອຳມາດ ມາຈັບຍົກກະບັດ ເມືອງນະຄອນຣາຊສີມາ ມາສອບສວນທີ່ກຸງເທບ. ປະກົດວ່າຍົກກະບັດ ໄດ້ຕິດສິນບົນ ມະຫາອຳມາດ ດ້ວຍເງິນຄຳຫລາຍຊັ່ງ ມະຫາອຳມາດຈຶ່ງກັບເຫັນດີ ໃນການກະທຳຂອງຍົກ ກະບັດ ແລະ ບໍ່ນຳຕົວໄປກຸງເທບ. ເຈົ້າແຜ່ນດິນໄທ ເມື່ອເຫັນວ່າ ມະຫາອຳ ມາດບໍ່ມາດົນ ຈຶ່ງສັ່ງໃຫ້ພະຍາໄກ ມານຳຕົວ ຍົກກະບັດ ແລະ ມະຫາອຳມາດ ມາເຝົ້າ. ເມື່ອຍົກກະບັດ ໄປເຖິງກຸງເທບ ໄດ້ນຳເອົາເຄື່ອງບັນນາການ ເປັນ ຕົ້ນວ່າ ນໍແຮດ. ງາຊ້າງ. ເງິນ. ຄຳ ແລະ ຂ້າທາດຍິງຊາຍ ກວາຍເຈົ້າແຜ່ນ ດິນ ເປັນອັນມາກ (ຕິດສິນບົນ) ເຈົ້າແຜ່ນດິນຊົງພໍໃຈ ຈຶ່ງແຕ່ງຕັ້ງຍົກກະບັດ ເປັນ " ພະຍາພົມພັກດີ " ໃຫ້ໄປເປັນເຈົ້າເມືອງນະຄອນຣາຊສີມາ ແຕ່ນະຄອນ ຣາຊສີມາມີເຈົ້າເມືອງຢູ່ແລ້ວ ພະຍາພົມພັກດີ ຈຶ່ງຂໍໄປຢູ່ເມືອງໂຂງຕາມເດີມ.

ເມື່ອກັບໄປເຖິງ ເມືອງໂຂງແລ້ວ. ກໍໄດ້ມີໜັງສືເຖິງເມືອງຄຳຫອງ ເມືອງອັດຕະປື. ເມືອງແສນປາງ. ເມືອງພູຣັນ. ເມືອງອຸບົນ. ເມືອງສີສະເກດ. ເມືອງພາສັກ ແລະ ເມືອງຈຳປາ ໃຫ້ເຈົ້າເມືອງເກນຊາຍຊະກັນ ມາເປັນທະ ຫານ ສັ່ງມາໂຮມຢູ່ເມືອງໂຂງ ແລ້ວຍົກໄປຕີຂ້າຣະຜດ (ຢູ່ເມືອງອັດຕະປື) ເພາະພວກຣະຜດນີ້ ເປັນຊາວປ່າທີ່ປ່າເກື່ອນທີ່ສຸດ.

ພວກເຜົ່າລະແດ, ກະເສງ, ອາຣັກ, ສະຫລັງ ໄດ້ຕໍ່ສູ້ກັບກອງທັບຂອງ ພະຍາພົມພັກດີ ດ້ວຍຫອກ, ດາບ, ໜ້າໜ້ອງ, ຫລາວ, ທ່າວ ແຕ່ສູ້ບໍ່ໄດ້ ເພາະ ທະຫານຂອງສຍາມ ຈຳນວນຫລວງຫລາຍ ແລະ ມີອາວຸດທັນສະໄໝ. ພວກ ທະຫານສຍາມ ໄດ້ຂ້າຊົນເຜົ່າລາວເທີງ ທັງຍິງທັງຊາຍລົ້ມຕາຍ ຈົນບໍ່ສາມາດ ຄຳນວນໄດ້. ສ່ວນທີ່ຈັບເປັນໄດ້ ສົ່ງໄປກຸງເທບ ເພື່ອເປັນທາດພວກຂຸນນາງ ໃນກຸງເທບ.

ໃນງານຂຽນ ຂອງນັກວິຊາການສະໄໝຫລັງ ໄດ້ກ່າວເຖິງ ພົນຂອງ ການປາບປາມ ພວກຂ້າຢ່າງຂຸນແຄ້ງ " ຂ້າຈຳນວນສາມແສນຄົນ ກືກລົດຈຳ ນວນລ້ຽ ເຫລືອບໍ່ເທົ່າໃດພັນ !. ນິຍາຍເກົ່າ ເລົ່າໄວ້ວ່າ " ພວກສຍາມ ໄດ້ສັ ຫານພວກຂ້າ ຕາຍເກື່ອນກາດ ທົ່ງນາເຕັມໄປດ້ວຍເລືອດ ແມ່ນ້ຳລຳທານ ອຸດຕັນດ້ວຍຊາກສົບ, ຫຸບເຂົາກອງກ້ອມທົ້ນ ໄປດ້ວຍຊາກສົບ ພວກທີ່ລອດ ຕາຍ ຈາກການສັງຫານ ກໍ່ກືກກວາດຕ້ອນໄປເປັນຂ້ອຍຂ້າ ຂອງພວກສຍາມ (ສັດທິບ ນາດສຸພາ ແລະ ປະມຸດຊົບພຍະສານ ໜ້າ 227).

(ຊົນເຜົ່າ ຣະແດ, ກະເສງ, ສະຫລັງ ໂຮມກັນທັງຍິງທັງຊາຍ ປະມານ 3 ແສນ ລຸກຂຶ້ນຕໍ່ສູ້ກັບສຍາມ ຊາວອັດຕະປື ເອີ້ນກັນຕິດປາກວ່າ " ເສິກຂ້າ ສາມແສນ ").

II. ຂະບວນຕໍ່ສູ້ຂອງຊຽງແກ້ວ

ໃນປີ 1791 ການຕໍ່ສູ້ຂອງຂະບວນຊຽງແກ້ວ ໄດ້ເກີດຂຶ້ນ ສືບຕໍ່ຈາກ ຂະບວນເຈົ້າໂອ້ ເຈົ້າອິນ ແລະ ຂະບວນຊົນເຜົ່າຣະແດ, ກະເສງ, ສະຫລັງ ເຊດວັງຕັດ ເມືອງອັດຕະປື ທີ່ແຂງຂໍ້ ບໍ່ຍອມເສັຍສ່ວຍໃຫ້ສຍາມ ຊຽງແກ້ວ ຢູ

ພູເຂົາໂອ່ງ ຝັ່ງນ້ຳຂອງເບື້ອງຕາເວັນອອກ ເມືອງໂຂງ (ສີພັນດອນ) ເປັນທີ່ເລົ່າລືກັນວ່າ ເປັນຜູ້ມີລິດເດດ ມີວິຊາອາຄົມເກັ່ງກ້າ ໄດ້ຮັບຄວາມນິຍົມ ເຊື່ອຖືຢ່າງກວ້າງຂວາງ ຈາກປະຊາຊົນ: ຊຽງແກ້ວ ໄດ້ເຕົ້າໂຮມກຳລັງເພົ່າຣະຜເດ, ກະເສງ, ສະຫລັງ ແລະ ເພົ່າເຈັງ ເຊິ່ງມີມູນເຊື້ອກາບຕໍ່ສູ້ໃນປີ 1780 ສະໄໝເຈົ້າໄອ້ ເຈົ້າອິນ ແລະ ຂະບວນຕໍ່ສູ້ຂອງເພົ່າຣະຜເດ, ກະເສງ, ສະຫລັງ ໃນປີ 1781 ມາເປັນກຳລັງ. ໄດ້ຝຶກຊ້ອມກາບສູ້ຣົບໃຫ້ກຳລັງຂອງຕົນ ໂດຍອາໃສພູເຂົາໂອ່ງ ເປັນກາບທີ່ໝັ້ນ ກ່າວກັນວ່າ ກຳລັງຂອງຊຽງແກ້ວ ມີຈຳນວນຫລວງຫລາຍ ເມື່ອຊຽງແກ້ວຊາບຂ່າວວ່າ ເຈົ້ານະຄອນຈຳປາສັກ (ເຈົ້າໄຊຍະກຸມມານ .) ປ່ວຍໜັກຢູ່ ເປັນໂອກາດເໝາະ ຈຶ່ງເຄື່ອນກຳລັງເຂົ້າລ້ອມນະຄອນຈຳປາສັກ. ເມື່ອເຈົ້ານະຄອນຈຳປາສັກຊາບວ່າ " ສັດຕູໄດ້ລ້ອມນະຄອນໄວ້ໝົດແລ້ວ " ກໍ່ຕົກໃຈ. ແລະ ສິ້ນພະຊົນ ລວມອາຍຸໄດ້ 81 ປີ, ກອງທັບຊຽງແກ້ວ ກໍ່ເຂົ້າຍຶດນະຄອນຈຳປາສັກໄດ້.

ເມື່ອຄວາມຊາບເຖິງກຸງເທບ ຈຶ່ງແຕ່ງໃຫ້ພະຍາ ນະຄອນຣາຊສີມາ (ທອງອິນ) ເມື່ອຄັ້ງຍັງເປັນ " ພະພິມຍົກກະບັດ " ຍົກທັບມາປາບຊຽງແກ້ວ ແຕ່ກອງທັບຍົກຂຶ້ນມາບໍ່ທັນເຖິງ ກອງທັບພະປະທຸມ ສຸຣະຣາດ (ຄຳໜ້ຽ) ນາຍກອງໃຫຍ່ບ້ານວຽງຄ້ອນກອງ ເຊິ່ງຍ້ອຍໄປຕັ້ງຢູ່ຫ້ວຍແຈະລະແມ ກັບທ້າວຝ່ອຍໜ້າ ລູກພະຕາ ບ້ານສີງຫາ ຍົກກຳລັງໄປຕີຊຽງແກ້ວ; ຊຽງແກ້ວ ຍົກກຳລັງມາສູ້ຢູ່ແກ້ງຕະນະ (ປັດຈຸບັນຢູ່ໃນອຳເພີໂຂງຈຽມ) ກອງທັບຊຽງແກ້ວແຕກ ທ້າວຝ່ອຍໜ້າຈັບຊຽງແກ້ວໄດ້ ແລ້ວປະຫານຊີວິດ. ສ່ວນທະຫານແຕກມາສາລະວັນ ແລະ ອັດຕະປື.

III. ຂະບວນຕໍ່ສູ້ " ເຈົ້າສາເກດໃຫ້ "

ຂະບວນຕໍ່ສູ້ຂອງເຈົ້າສາເກດໃຫ້ ປີ 1820 ເປັນຂະບວນຊາວເຜົ່າ ລາວເທິງ ທີ່ໃຫຍ່ທີ່ສຸດ ໃນສະໄໝຣັດຕະນະໂກສິນ. ຕາມໜັງສື " ພື້ນວຽ " (ເອກະສານລາວ) ໄດ້ກ່າວເວ້ລະອຽດວ່າ ພະຂ້າ ຊື່ສາ ແມ່ເປັນຊາວເມືອງ ວຽງຈັນ ແຕ່ກຶກພວກສຍາມກວາດຕ້ອນມາຢູ່ບ້ານໜອງບົວ ເຂດນະຄອນຈຳ ປາສັກ ສາບວດແຕ່ອາຍຸຍັງນ້ອຍ ຄົນທົ່ວໄປເອີ້ນວ່າ " ເຈົ້າເກດໃຫ້ " ເພາະ ອາໃສຢູ່ພູເກດໃຫ້ ເອົາແຜ່ນຫີນມາກໍ່ເປັນບັນລັງ ຊາວບ້ານມີຄວາມ ເຫລື້ອມ ໃສສັດທາຢ່າງກວ້າງຂວາງ ດຸໝັ່ນມາທຳບຸນຕັກບາດ ເຂົ້າວັດຟັງທຳ ເຈົ້າສາ ເກດໃຫ້ ໄດ້ສ້າງວັດ ປູກຕົ້ນໝາກຕົ້ນພ້າວ ປູກດອກໄມ້ບາງຊະນິດ ປູກຕົ້ນ ໝາກໄມ້ຊະນິດຕ່າງໆ ຢ່າງຫລວງຫລາຍ ເປັນໝາກດົກໝາ ທຸກລະດູການ ຂຸດ ສະໃສ່ພະລານຫີນ ປະກົດວ່າມີນ້ຳໃສສະອາດ ເຕັມຢູ່ຕະຫລອດປີ. ເຈົ້າສາເກດ ໃຫ້ ໄດ້ປະກາດໃຫ້ຄົນທັງຫລາຍຊາບວ່າ " ຕົນໄດ້ພິຈາລະນາເບິ່ງ ແລ້ວວ່າ ບ່ອນນີ້ ແຕ່ກ່ອນເຄີຍເປັນບ້ານເປັນເມືອງມາແລ້ວ ເຮົາໄດ້ເກີດທີ່ນີ້ ມາສາມ ຊາດແລ້ວ ຊາດກ່ອນ ເຮົາເປັນພຣະຣາຊາ ພະນາມວ່າ "ເຈີຍຫານ".

ເມື່ອປະຊາຊົນຊາບເລື້ອງນີ້ ກໍພາກັນດີໃຈ ແລະ ເຂົ້າໃຈວ່າ " ເຈົ້າຜູ້ ມີບຸນມາເກີດແລ້ວ ຕໍ່ແຕ່ນີ້ໄປ ພວກເຮົາຈະພົ້ນຈາກຄວາມເດືອດຮ້ອນຕ່າງໆ ຈະມີແຕ່ຄວາມສຸກຄວາມຈະເຣີນ ".

ຊື່ສຽງຂອງເຈົ້າສາເກດໃຫ້ ໄດ້ກະຈາຍເລື່ອງລືທົ່ວໄປ ໃນເຂດລາວ ໃຕ້ຄື ຈຳປາສັກ. ສາລະວັນ. ອັດຕະປື. ເມືອງໂຂງ (ສີທັນດອນ). ຄຳທອງໃຫຍ່. ອາໃສ່ຄວາມສັດທາຂອງປະຊາຊົນ ເຈົ້າສາເກດໃຫ້ ຈຶ່ງໄດ້ລວບລວມພວກ ລາວເທິງ (ກະເສງ. ຣະແວ. ຣະແດງ. ເຈັ. ອາຣັກ. ສະຫລັງ ແລະ ເຜົ່າ

ต່າງໆ ...) ຈາກຈຳປາສັກ. ສາລະວັນ. ອັດຕະປື. ຄຳທອງໃຫຍ່ ເຂົ້າເປັນກຳ ລັງ ລວມໄດ້ປະມານ 8.000 ຄົນ ເຈົ້າສາເກດໄຕ້ງ ໄດ້ຍົກກຳລັງມາຕັ້ງຢູ່ທົ່ງ ນາຫວ້າ ຫ່າງຈາກເມືອງຈຳປາສັກ ຍ່າງ 3 ຄືນ. ຝ່າຍເຈົ້ານະຄອນຈຳປາສັກ ໄດ້ໃຫ້ທ້າວ ເພັຍ ຄຸມກຳລັງໄປຕັ້ງຢູ ບ້ານພະໂພ (ອາດຈະແມ່ນບ້ານພະໂພ ຕັ້ງ ຢູ່ຊາຍແດນອັດຕະປື-ຈຳປາສັກ ປັດຈຸບັນ) ໄດ້ສູ້ຣົບກັບເຈົ້າສາເກດໄຕ້ງ ແຕ່ ຝ່າຍຈຳປາສັກສູ້ບໍ່ໄດ້ ຈຶ່ງຍົກທັບ ຂ້າມນ້ຳຂອງ ກັບມາຕັ້ງຢູ່ຝັ່ງຕາເວັນຕົກ. ເຈົ້າສາເກດໄຕ້ງ ໄດ້ຍົກທັບຂ້າມນ້ຳຂອງມາຕີນະຄອນຈຳປາສັກ ພວກທ້າວ ເພັຍ ທີ່ຮັກສາເມືອງສູ້ບໍ່ໄດ້ ເລີຍເສັຍເມືອງໃຫ້ເຈົ້າສາເກດໄຕ້ງ. ພວກເຈົ້ານະຄອນຈຳປາສັກ ແລະ ທ້າວ ເພັຍ ໄດ້ອົບພະຍົບ ໜີມາຢູ່ບ້ານຈຽມ ແຂວງ ເມືອງອຸບົນ. ເມື່ອເລື່ອງລາບເກີງ ເຈົ້ານະຄອນວຽງຈັນ. ເຈົ້າອະນຸວົງ ຈຶ່ງ ແຕ່ງໃຫ້ ເຈົ້າຣາຊບຸດ (ໄຍ້) ຍົກທັບມາປາບ " ເຈົ້າສາເກດໄຕ້ງ " ແລະ ຈັບ ເຈົ້າສາເກດໄຕ້ງ ແລະ ຄອບຄົວລາວເທີງ ທີ່ເປັນກຳລັງໄດ້ ເປັນຈຳນວນ ຫລວງຫລາຍ ແລ້ວສົ່ງໄປກຸງເທບ ເຈົ້າແຜ່ນດິນສຍາມ ໄດ້ສັ່ງຈຳຄຸກ " ເຈົ້າ ສາເກດໄຕ້ງ " ສ່ວນພວກຄອບຄົວລາວເທີງ ໄດ້ຈັດໃຫ້ເປັນພວກຫາຫຍ້າໃຫ້ ຊ້າງ ໃຫ້ຕັ້ງບ້ານຢູ່ບ້ານບ່ອນ (ເຂດທົ່ນບຸຣີ ປັດຈຸບັນ).

ພາຍຫລັງສົງຄາມເຈົ້າສາເກດໄຕ້ງແລ້ວ. ເຈົ້າແຜ່ນດິນສຍາມ ໄດ້ ຕັ້ງເຈົ້າຣາຊບຸດ (ໄຍ້) ແຫ່ງນະຄອນວຽງຈັນ ເປັນເຈົ້ານະຄອນຈຳປາສັກສືບ ແທນເຈົ້ານະຄອນຈຳປາສັກຄົນເກົ່າ ເພາະເຈົ້າແຜ່ນດິນສຍາມເຫັນວ່າ ກ້າ ຈະໃຫ້ເຈົ້ານະຄອນເກົ່າກັບຄືນ ໄປປົກຄອງຈຳປາສັກອີກ ກໍ່ຄົງຈະບໍ່ສາມາດ ປົກປ້ອງຈຳປາສັກໄດ້.

ນະໂຍບາຍຮຸກຮານລາວຂອງສຍາມ ຫລື ໄທ

ນັບແຕ່ສະຕະວັດທີ 14 ເປັນຕົ້ນມາ ຊົນຊາດລາວ ໄດ້ມີອາບາຈັກລ້ານຊ້າງ ທີ່ເປັນອາບາຈັກເອກະພາບ ແລະ ເຂັ້ມແຂງອາບາຈັກໜຶ່ງ ພ້ອມກັບກັບອາບາຈັກກຳພູຊາ ຫລື ຂະເມນ. ອາບາຈັກທັງສອງ ເປັນເປົ້າໝາຍຮຸກຮານ ເພື່ອຂະຫຍາຍອາບາເຂດ ອັນໂຫດຫ້ຽມຂອງສັກດິນາສຍາມ.

ໃນສັດຕະວັດທີ 15 ແລະ 16 ພາຍຫລັງໄດ້ເຂົ້າຮຸກຮານ ແລະ ຍຶດ ຄອງ ນະຄອນວັດ ນະຄອນທົມຂອງຂະເມນແລ້ວ, ພວກຄຸມອຳນາດໃນສຍາມ ໄດ້ສົ່ງກອງທະຫານ ທຳການຮຸກຮານອາບາຈັກລ້ານຊ້າງຂອງລາວ ເກີງສອງ ຄັ້ງຄື ຄ.ສ 1535 (ພ.ສ 2078) ແລະ ຄ.ສ 1540 (ພ.ສ 2083) ແຕ່ພົບກັບ ການພ່າຍແພ້ປລາໄຊທັງສອງຄັ້ງ.

ໃນສະຕະວັດທີ 18 ໂດຍສວຍໂອກາດເວລາເກີດຄວາມຂັດແຍ້ງແຕກ ແຍກພາຍໃນອາບາຈັກລ້ານຊ້າງ ເຈົ້າຕາກສິນ ເຈົ້າແຜ່ນດິນສຍາມ ທີ່ມີເຊື້ອ ສາຍຈີນ ໄດ້ທຳການຮຸກຮານອາບາຈັກລາວລ້ານຊ້າງ ຢ່າງປ່າເກື່ອນທີ່ສຸດ ແລະ ຍຶດເອົາດິນແດນລ້ານຊ້າງ ມາເປັນປະເທດສະຮາດ (ເມືອງຂຶ້ນ) ລາວ ຕົກເປັນຫົວເມືອງຂຶ້ນສຍາມ ເປັນເວລາ 115 ປີ (ຄ.ສ 1778-1893).

ໃນລະຫວ່າງ 115 ປີ ທີ່ອາບາຈັກລ້ານຊ້າງ ຕົກເປັນເມືອງຂຶ້ນຂອງ ສຍາມ, ພວກສຍາມ ໄດ້ກໍ່ກຳທຳເຂນ ຕໍ່ປະຊາຊົນລາວລ້ານຊ້າງ ຢ່າງລົ້ນຟ້າ ເຫລືອແຜ່ນດິນ, ໄດ້ຕັດຫົວຜູ້ຊາຍຊາວໜອງຄາຍ (ເຊິ່ງເປັນດິນແດນລ້ານ ຊ້າງ) ໃສ່ເຮືອ ແລ້ວໃຫ້ພຸ້ຍິງກໍ່ເຮືອ ຂຶ້ນ-ລ່ອງ ປະກາດຂາຍຫົວຜູ້ຊາຍ ເພື່ອຢູ່ ຂວັນທະຫານລາວ, ຫລັງຈາກຍຶດ ນະຄອນຫລວງວຽງຈັນໄດ້ແລ້ວ ພວກເຂົາ

ກໍ່ໄດ້ຈູດຜາສາດຮາຊວັງ, ຫໍໂຮງ, ບ້ານເຮືອນປະຊາຊົນ, ວັດວາອາຮາມ ໃຫ້ກ້ຽງຄື ໜ້າກອງໄຊ ກວາດຕ້ອນເອົາປະຊາຊົນລາວ ຫລາຍໝື່ນຄົນໄປກຸງເທບ ເພື່ອທຳງານສັບພະທຸກ ເຊັ່ນ ຂຸດຄອງແສນແສບ, ຕັດຕົ້ນຕານຢູ່ພັດບຸຣີ, ກາງປ່າ ຕີບດົງໝາຢູ່ສຸພັນບຸຣີ ແລະ ເປັນຂ້າທາດຂອງຄົນກຸງເທບ ແລະ ຄອບຄົວເຈົ້ານາຍສຍາມ, ພວກເຂົາປຸ້ນສະດົມ ເອົາຂອງມີຄ່າ ຊັບສົມບັດຂອງປະຊາຊົນ ລວມທັງພະແກ້ວມໍລະກົດ, ພະໃສ, ພະເສີມ ແລະ ສົມບັດອັນລ້ຳຄ່າອື່ນໆ ໄປຈົນໝົດກ້ຽງ " ທຳລາຍເພົາພານ ນະຄອນວຽງຈັນ ໃຫ້ເຫລືອໄວ້ແຕ່ເກົ້າກ່ານ ".

ໃນສັດຕະວັດທີ 19 ເມື່ອນັກລ່າອານານິຄົມອັງກິດ ແລະ ຝຣັ່ງເສດ ຄືບຄານເຂົ້າມາແຍ້ງຊີງອານານິຄົມ ໃນເອເຊັຍອາຄະເນ, ກຸ່ມກຳອຳນາດສຍາມ ໄດ້ຊອກຫາທຸກວິທີ ເພື່ອສວຍໃຊ້ຄວາມຂັດແຍ້ງ ລະຫວ່າງອັງກິດ ກັບ ຝຣັ່ງເສດ ເພື່ອຍຶດເອົາດິນແດນຂອງອານາຈັກລ້ານຊ້າງ ຕາມສົນທິສັນຍາ ລົງວັນທີ 3 ຕຸລາ (10) 1893 ຄື : ສຍາມ ຍອມສະລະອະທິປະໄຕຂອງຕົນເໜືອ ດິນແດນຝັ່ງຊ້າຍແມ່ນ້ຳຂອງ ພ້ອມດ້ວຍເກາະດອນ ຕາມລຳນ້ຳຂອງ, ຝ່າຍ ຝຣັ່ງເສດ ກໍ່ຍອມຮັບອະທິປະໄຕຂອງສຍາມ ເໜືອດິນແດນລ້ານຊ້າງທີ່ຢູ່ຝັ່ງ ຂວາແມ່ນ້ຳຂອງ (ພາກອີສານໃນປັດຈຸບັນ). ສຍາມ ແລະ ຝຣັ່ງເສດ ໄດ້ພ້ອມ ກັນແບ່ງດິນແດນອານາຈັກລ້ານຊ້າງ ເພື່ອຄອບຄອງ.

ໃນໄລຍະທີ່ຝຣັ່ງ-ອັງກິດ ອ່ອນແອ ປ່າງສົງຄາມໂລກຄັ້ງທີ II ຍີ່ປຸ່ນ ເຂັ້ມແຂງ, ພວກກຳອຳນາດສຍາມ ໄດ້ອາໃສອິດທິພົນຂອງຍີ່ປຸ່ນ ຍຶດຄອງດິນ ແດນປະເທດເພື່ອນບ້ານ ແລະ ວາງໂຕເປັນໃຫຍ່ໃນພາກນີ້. ຂະນະນັ້ນ ແນວ ຄິດ " ລັດທິໄທໃຫຍ່ " (PANTHAISM) ກໍ່ໄດ້ກຳເລີບຂຶ້ນ. ໄດ້ຈັດຕັ້ງ

" ພັກເສຶອດໄທ " ຂຶ້ນ ປະເທດສຍາມ ກໍ່ປ່ຽນຊື່ມາເປັນ " ປະເທດໄທ " ເມື່ອ ຄ.ສ 1939 (ພ.ສ 2482). ກຸ່ມຂຸນເສິກກຳອຳນາດໄທ ໄດ້ອອກແຮງ ໂຄສະ ນາ ປຸກລະດົມຄົນໄທ (ຄົນລາວທີ່ເອີ້ນໂຕເອງວ່າໄທ ເຊັ່ນ ໄທໃຕ້ ໄທເໜືອ) ຢູ່ໃນລາວ ແລະ ຂະເມນ ໃຫ້ເຂົ້າມາຢູ່ຮ່ວມກັນ ພາຍໃຕ້ໂພທິສົມພານຂອງເຈົ້າ ຊີວິດໄທ. ເພື່ອສ້າງໃຫ້ປະເທດໄທ ເປັນປະເທດທີ່ເຂັ້ມແຂງ. ປ. ພິບູນສົງຄາມ ນາຍົກລັດຖະມົນຕີໄທ ໄດ້ກະແຫລ່ງວ່າ " ຝຣັ່ງເສດ ຈະບໍ່ສາມາດ ຄວບຄຸມ ອິນໂດຈີນ ຕໍ່ໄປໄດ້ອີກແລ້ວ. ພີ່ນ້ອງຊາວໄທຂອງພວກເຮົາ ຈະເຂົ້າມາຮ່ວມຢູ່ ໃຕ້ລະບອບທີ່ມີລັດຖະທຳມະນູນ ແລະ ຈະຢູ່ໃຕ້ພະບໍລົມໂພທິສົມພານ ຂອງເຈົ້າ ຊີວິດຂອງເຮົາ ". (ເບື້ອງຫລັງ ຄວາມຂັດແຍ້ງ ລະຫວ່າງ ລາວ-ໄທ ໂດຍ ຍອດທົງ ທັບທິວໄມ້ ໜ້າ 112).

ເມື່ອຝຣັ່ງເສດພ່າຍແພ້ສົງຄາມ ໃຫ້ແກ່ເຢັຍລະມັນ ໃນເດືອນມີຖຸນາ (6) 1940 ແລະ ຫລັງຈາກກອງທັບຍີ່ປຸ່ນຍຶດຄອງອິນໂດຈີນ ເມື່ອເດືອນກັນຍາ (9) 1940. ກຸ່ມກຳອຳນາດໄທ ກໍ່ຫວງເອົາດິນແດນລາວ ທີ່ສຍາມມອບໃຫ້ ຝຣັ່ງເສດຄືນ. ໃນບັນທຶກຊ່ວຍຈຳ ສະບັບລົງວັນທີ 17 ກັນຍາ (9) 1940 ທີ່ສົ່ງ ເກົ້າຝຣັ່ງເສດ ໃນອິນໂດຈີນ ມີໃຈຄວາມຕອນໜຶ່ງວ່າ " ລັດຖະບານຂອງພະ ບາດສົມເດັດພະເຈົ້າຢູ່ຫົວ ຈະຂອບຄຸນເປັນຢ່າງຍິ່ງ ຕໍ່ລັດຖະບານຝຣັ່ງເສດ ທີ່ຈະໃຫ້ການຮັບຮອງເປັນລາຍລັກອັກສອນວ່າ ໃນກໍລະນີ ທີ່ມີການປ່ຽນແປງ ອຳນາດອະທິປະໄຕຂອງຝຣັ່ງເສດ. ຝຣັ່ງເສດຈະຄືນດິນແດນລາວ ແລ່ະ ກຳພູ ຊາ ໃຫ້ໄທ " ຝຣັ່ງເສດ ໄດ້ປະຕິເສດຕໍ່ຂໍ້ສະເໜີນີ້.

ເດືອນຕຸລາ (10) 1940 ກຸ່ມກຳອຳນາດໄທ ໄດ້ສ້າງສະຖານະການ ຕຶງຄຽດຕາມຊາຍແດນລາວ-ໄທ. ເດືອນທັນວາ (12) 1940 ພວກເຂົາໄດ້ໃຊ້

ປືນກົນຍິງທຳລາຍເຮືອທີ່ຈອດຢູ່ທ່າ ນະຄອນວຽງຈັນ ພ້ອມກັບເອົາເຮືອບິນ ມາກໍ້ມລະເບີດ ນະຄອນຫລວງແຫ່ງນີ້ ເຊິ່ງເປັນການຈົງໃຈຈູດກະນວນສົງ ຄາມ ລະຫວ່າງຝຣັ່ງເສດ ກັບໄທ ໃນປະເທດລາວ.

ຍ້ອນການ ສະໜັບສະໜູນ ຂອງຍີ່ປຸ່ນໃຫ້ແກ່ໄທ ຝຣັ່ງເສດຈຳຍອມ ຕ້ອງເຮັດສັນຍາ ສະບັບລົງວັນທີ 09 ພຶດສະພາ (5) 1941 (2484) ກັບໄທທີ່ ໂຕກຽວ ເພື່ອຍົກດິນແດນ ແຂວງຫລວງພະບາງ ທີ່ຢູ່ຝັ່ງຂວາແມ່ນ້ຳຂອງ (ແຂວງໄຊຍະບູລີປັດຈຸບັນ) ແລະ ແຂວງຈຳປາສັກຂອງລາວ ພ້ອມດ້ວຍດິນ ກຳພູຊາບາງແຂວງ ໃຫ້ແກ່ໄທ.

ເດືອນທັນວາ (12) 1941 ເອກອັກຄະຣາຊທູດຍີ່ປຸ່ນ ປະຈຳກຸງເທບ ໄດ້ຍື່ນຂໍ້ສະເໜີ 3 ຂໍ້ຕໍ່ຣອງນາຍົກລັດຖະມົນຕີ ຫລວງອາດູນເດດຣັດ (ADUL DESARAT) ແລະ ລັດຖະມົນຕີວ່າການ ກະຊວງການຕ່າງປະເທດຂອງໄທ ຂໍ້ສະເໜີ 3 ຂໍ້ຄື :

1. ໃຫ້ກອງທະຫານຍີ່ປຸ່ນ ເຄື່ອນທັບຢ່າງເສລີບົນດິນແດນຂອງໄທ
2. ໃຫ້ໄທຮ່ວມມືກັບຍີ່ປຸ່ນ ໃນການທຳສົງຄາມ
3. ໃຫ້ໄທຮ່ວມມືກັບຝ່າຍ "ອັກສະ" (ຍີ່ປຸ່ນ. ເຢຍລະມັນ ແລະ ອີຕາລີ).

ນາຍົກລັດຖະມົນຕີ ປ. ພິບູນສົງຄາມ ຮັບເອົາຂໍ້ສະເໜີດັ່ງກ່າວ ໃນ ທັນໃດ ແລະ ໄດ້ຖະແຫລງທາງວິທະຍຸກະຈາຍສຽງ ໃນວັນທີ 9 ທັນວາ (12) 1941ວ່າ : ນີ້ເປັນວິທີປົກປ້ອງຮັກສາເອກະລາດຂອງໄທ (Joph Coast : Some Aspects of Siamese Politics New York. 1953 P 18-21).

ວັນທີ 11 ທັນວາ (12) 1941 (2484) ໄທ ແລະ ຍີ່ປຸ່ນ ໄດ້ຮ່ວມລົງ ນາມໃນສັນຍາ ວ່າດ້ວຍ " ການບຸກໂຈມຕີ ແລະ ການປ້ອງກັນໂຕ ". ຕາມສັນ ຍາສະບັບນີ້ ຍີ່ປຸ່ນຮັບຮູ້ອະທິປະໄຕຂອງໄທ ເໜືອດິນແດນ 4 ລັດ ຂອງມາເລ ເຊັຍ ຄື : ລັດເຄດາ (Kedah) ລັດເພີລິດ (Perlis) ລັດກະລັນຕັນ (Kalantan) ແລະ ຕລັງການູ (Talenganu) ພ້ອມດ້ວຍລັດສານຄື ຊຽງຕຸງ (Keng Tung) ແລະລັດມົງປັນ (Mong Pan) ໃນປະເທດພະມ້າ.

ວັນທີ 25 ມັງກອນ (1) 1942 (24858) ປະເທດໄທໄດ້ປະກາດສົງ ຄາມ ຕໍ່ອັງກິດ ແລະ ສະຫະລັດ. ຈາກນັ້ນ ປະເທດໄທ ກໍ່ກາຍເປັນພັນທະມິດ ຂອງຍີ່ປຸ່ນ ພຽງປະເທດດຽວ ໃນເອເຊັຍ.

ເມື່ອສົງຄາມໂລກຄັ້ງທີ II ສິ້ນສຸດລົງ, ຝ່າຍອັກສະ (ຍີ່ປຸ່ນ, ເຢັຍລະ ມັນ, ອີຕາລີ) ປລາໄຊ ປະເທດໄທເຊິ່ງເຂົ້າເປັນພັນທະມິດກັບຍີ່ປຸ່ນ ໄດ້ກາຍ ເປັນອາຊຍາກອນສົງຄາມ ເຊິ່ງເປັນຜົນໃຫ້ປະເທດໄທ ເກີດວິກິດການ ທາງ ເສດກະກິດ ປະເທດລະສໍ່າລະສາຍ, ອັງກິດ ແລະ ຝຣັ່ງເສດ ກັບຄືນມາມີອໍ ານາດ ໃນເອເຊັຍອາຄະເນ ບັງຄັບໃຫ້ໄທ ຕ້ອງສົ່ງດິນແດນ ທີ່ໄທຫຸບເອົາໄປໃນ ປາງສົງຄາມໃຫ້ແກ່ລາວ, ຂະເມນ, ພະມ້າ ແລະ ມາເລເຊັຍ ພ້ອມກັນນັ້ນ ກໍ່ ໃຫ້ໄທຈ່າຍຄ່າປະຕິກໍາສົງຄາມອີກດ້ວຍ. ວັນທີ 16 ສິງຫາ (8) 1945 (2488) ກຸ່ມກໍ່ອໍານາດໄທ ຕ້ອ່ງປະກາດລົບລ້າງ ປະກາດສົງຄາມ ຄັ້ງວັນທີ 25 ມັງກອນ 1942 ທີ່ກະທໍ່າຕໍ່ອັງກິດ ແລະ ສະຫະລັດ.

ພາຍຫລັງສົງຄາມໂລກຄັ້ງທີ II ສິ້ນສຸດລົງ, ສະຫະລັດອະເມລິກາ ໄດ້ ເຂົ້າມາແທນທີ່ອັງກິດ ໃນປະເທດໄທ; ສະຫະລັດ ໄດ້ຫາວິທີສອດແຊກເຂົ້າໃນ

ປະເທດນີ້ ແລະ ຊັກນຳໃຫ້ປະເທດໄທ ເຂົ້າສູ່ວົງໂຄຈອນຍຸດທະສາດຂອງສະຫະ ລັດ. ດ້ວຍເຫດນີ້. ສະຫະລັດ ຈຶ່ງປະກາດວ່າ " ຕົນບໍ່ກືວ່າປະເທດໄທເປັນຝ່າຍ ປລາໄຊໃນສົງຄາມ ຄັ້ງທີ່ຜ່ານ. ຫາວິທີຜ່ອນຜ່ອງການເຈຣະຈາ ລະຫວ່າງ ອັງກິດ-ໄທ ແລະ ຝຣັ່ງເສດ-ໄທ ເພື່ອຊ່ວຍໄທໃຫ້ພົ້ນຈາກການລົງໂທດທີ່ໜັກ ເກີນໄປ.

ວັນທີ 1 ມັງກອນ (1) 1946 (2489) ໄທໄດ້ທຳສັນຍາກັບອັງກິດ ບັງ ຄັບໃຫ້ໄທຄືນດິນແດນ 4 ລັດຂອງມາເລເຊັຍ ທີ່ປະເທດໄທຫຸບເຂົ້າເປັນຂອງ ໄທ ສະໃໝສົງຄາມໂລກຄັ້ງທີ II ໃຫ້ແກ່ມາເລເຊັຍ ແລະ ວັນທີ 27 ພະຈິກ (11) 1946 ສັນຍາລະຫວ່າງໄທ ກັບຝຣັ່ງເສດ ບັງຄັບໃຫ້ຮັບຮູ້ວ່າ ສັນຍາສະບັບ ລົງວັນທີ 9 ພຶດສະພາ (5) 1941 ເປັນໂມຄະ ແລະ ຕ້ອງຄືນດິນແດນລາວ ແລະ ຂະເມນ ທີ່ໄທຫຸບເອົາໃນປາງສົງຄາມ ໃຫ້ແກ່ຝຣັ່ງເສດ.

ເມື່ອສົງຄາມໂລກ ຄັ້ງທີ II ສິ້ນສຸດລົງ ປະເທດໄທ ຕົກເປັນອາຊະຍາ ກອນສົງຄາມ. ຂະບວນການປະຊາທິປະໄຕ ນຳໂດຍທ່ານ ປີ ດີ ພະນົມຍົງ ໄດ້ ຂະຫຍາຍຕົວຢ່າງກວ້າງຂວາງ ແລະໄດ້ຮັບການສະໜັບສະໜູນຈາກມະຫາຊົນ ເປັນຢ່າງດີ. ເດືອນມີນາ (3) 1946 ທ່ານ ປີ ດີ ພະນົມຍົງ ໄດ້ເປັນຫົວໜ້າ ລັດ ຖະບານບໍລິຫານປະເທດ ດຳເນີນການປະຕິຮູບ ປະຊາທິປະໄຕ ພາຍໃນປະເທດ ໃນຫລາຍດ້ານ ໄດ້ໃຫ້ການສະໜັບສະໜູນ ຂະບວນການປົດແອກໃນປະເທດ ລາວ ແລະ ຂະບວນກູ້ຊາດຂອງປະເທດຕ່າງໆ ໃນອິນໂດຈີນ.

ຕໍ່ຂະບວນການປະຊາທິປະໄຕຂອງທ່ານ ປີ ດີ ພະນົມຍົງ ດັ່ງກ່າວແລ້ວ. ສະຫະລັດ ມີຄວາມກັງວົນໃຈຢ່າງຍິ່ງ ຈຶ່ງສະໜັບສະໜູນ ໃຫ້ມີການລັດຖະປະ

ຫາບຂຶ້ນ 2 ເທື່ອ ຄືເດືອນພະຈິກ 1947 ແລະ ເດືອນເມສາ 1948 ໂດຍກຸ່ມ ທະຫາບທີ່ສະຫະລັດສະໜັບສະໜູນ ເພື່ອໂຄ້ນລົ້ມ ຂະບວນປະຊາທິປະໄຕ ນຳ ໂດຍທ່ານ ປີດີ ພະນົມຍົງ ແລ້ວຈັດຕັ້ງກຸ່ມຂຸນສຶກ ຄື ປ. ພິບູນ ສົງຄາມຂຶ້ນ. ເປົ້າໝາຍຂອງລັດຖະບານ ປ. ພິບູນສົງຄາມ ກໍ່ຄືການປາບປາມ ຂະບວນການ ປະຊາທິປະໄຕ. ຕ້ານຂະບວນການກູ້ຊາດຂອງລາວ ແລະ ຂອງປະເທດໃນອິນ ໂດຈີນ ໂດຍລວມ.

. ສະຫະລັດ ໄດ້ໃຊ້ຜູ້ກຳອຳນາດໄທ ແລະ ຜ່ນດີນໄທ ຮຸກຮານລາວ. ຂະເມນ. ຫວຽດນາມ ຕັ້ງແຕ່ບີທີ່ຝຣັ່ງເສດ ກອບອອກຈາກອິນໂຈຈີນ ໃນປີ 1954 ຈົນເກີດການປລາໄຊສົງຄາມ ໃນລາວ-ຫວຽດນາມ ແລະ ຂະເມນ ໃນປີ 1975 ຂອງສະຫະລັດອາເມລິກາ.

ນັບແຕ່ປີ 1949 (2492) ຫລັງຈາກການປະຕິວັດຈີນ ໄດ້ຮັບໄຊຊະນະ ສະຫະລັດອາເມລິກາ ໄດ້ເອົາປະເທດອິນໂດຈີນ ເປັນສູນກາງ ເພື່ອຮັດສົງ ຄາມ ກະກັດກັ້ນລັດທິຄອມມິວນິດ ແລະ ຮັດໃຫ້ປະເທດໄທ ແລະ ຜູ້ກຳອຳນາດ ໄທ ກາຍເປັນເຄື່ອງມືປະຕິບັດຕາມແຜນຍຸດທະສາດ ຂອງພວກເຂົາ ໃນເອ ເຊັຍອາຄະເນ. ກຸ່ມກຳອຳນາດໄທ ນັບວັນນັບກະຫລ່ຳຕົວເຂົ້າຮັບໃຊ້ ນະໂຍ ບາຍອາເມລິກາ ເພື່ອຕ້ານກັບຂະບວນການປົດແອກ ຂອງປະຊາຊົນ ໃນອິນ ໂດຈີນ. ເດືອນມິຖຸນາ (6) 1950 ສົງຄາມຮຸກຮານຂອງອາເມລິກາ ຕໍ່ເກົາຫລີ ໄດ້ເກີດຂຶ້ນ ປະເທດໄທ ເປັນປະເທດທຳອິດ ທີ່ສົ່ງທະຫາບເຂົ້າຮ່ວມໃນສົງຄາມ ດັ່ງກ່າວ.

ສັນຍາເຊີເນວກ່ຽວກັບລາວ. ຫວຽດນາມ ແລະ ຂະເມນ ໄດ້ລົງນາມ ໃນວັນທີ 20 ກໍລະກົດ (7) 1954. ຕໍ່ມາອີກ 2 ເດືອນ ຄືວັນທີ 8 ກັນຍາ (9) 1954 ສະຫະລັດ ໄດ້ກໍ່ຕັ້ງ " ກຸ່ມກາບຫະຫາບຊີອາໂຕ " ຂຶ້ນ ເພື່ອຂັດຂວາງ ການປະຕິບັດສັນຍາເຊີເນວ 1954 ແລະ ກຸ່ມກໍ່ອໍານາດໃຫ ໄດ້ກາຍເປັນຄົນ ຮັບໃຊ້ນະໂຍບາຍຂອງສະຫະລັດຢ່າງຊື່ສັດ.

ພາຍຫລັງກໍ່ຕັ້ງ " ກຸ່ມຊີອາໂຕ " ແລ້ວ ສະຫະລັດ ໄດ້ກົດດັນໃຫ້ສະເດັດ ເຈົ້າສຸວັນນະພູມາ ນາຍົກລັດຖະມົນຕີ ຜູ້ມີນະໂຍບາຍກາງເມືອງ ປອງດອງ ຊາດ ໃຫ້ອອກຈາກຕໍາແໜ່ງ ແລ້ວແຕ່ງຕັ້ງກຸ່ມຂອງຈັດ ຖະຕ່ານ ໂດນສະໂຣລິດ ເປັນນາຍົກລັດຖະມົນຕີແທນ ເດືອນພະຈິກ (11) 1954 ພ້ອມກັບການເພີ້ມ ທະວີການຊ່ວຍເຫລືອທາງທະຫານ. ກໍ່ສ້າງສະໜາມບິນ ແລະ ຖະໜົນຍຸດທະ ສາດໃນລາວ.

ນັບແຕ່ເດືອນ ມີນາ (3) 1955 ລັດຖະບານຂອງຈັດ ໄດ້ສົ່ງກໍາລັງ ບຸກໂຈມຕີ 2 ແຂວງຂອງຝ່າຍປະເທດລາວ ເພື່ອດັບມອດ ກໍາລັງຂອງຝ່າຍ ປະເທດລາວ ແຕ່ບໍ່ສາມາດດັບມອດກໍາລັງຂອງຝ່າຍປະເທດລາວໄດ້. ເດືອນ ກໍລະກົດ (7) 1956 ລັດຖະບານຖະຕ່ານ ກີກໂຄ້ບລົ້ມ ເຈົ້າສຸວັນນະພູມມາ ໄດ້ ກັບມາເປັນນາຍົກລັດຖະມົນຕີ ແຕ່ກໍ່ເປັນໄດ້ພຽງໄລຍະສັ້ນ ກໍ່ກີກໂຄ້ບລົ້ມ. ສະ ຫະລັດ ຈຶ່ງແຕ່ງຕັ້ງ ລັດຖະບານພູຍ ຊະນະນິກອນ ຂຶ້ນໃນເດືອນ ສິງຫາ (8) 1957 ປາບປາມກໍາລັງຮັກຊາດ. ປະຕິເສດສັນຍາເຊີເນວ ກ່ຽວກັບລາວ.

ວັນທີ 19 ພະຈິກ (11) 1957 ລັດຖະບານປະສົມ ໄດ້ຮັບການຈັດຕັ້ງ ຂຶ້ນ ໂດຍມີຕົວແທນຂອງຝ່າຍແນວລາວຮັກຊາດ ເຂົ້າຮ່ວມ 2 ທ່ານ. ວັນທີ 4 ເດືອນພຶດສະພາ (5) 1958 ໄດ້ມີການເລືອກຕັ້ງ ສະມາຊິກສະພາເພີ້ມເຕີມ ຝ່າຍແນວລາວຮັກຊາດ ໄດ້ຮັບໄຊຊະນະຢ່າງທ້ວມທົ້ນ.

ຕໍ່ສະພາບະການດັ່ງກ່າວ ພູມີ ໜໍ່ສະຫວັນ ໄດ້ໄປຂໍຄວາມຊ່ວຍເຫລືອ ນໍາຈອມພົນ ສະຫລິດ ທະນະລັດ ນາຍົກລັດຖະມົນຕີໄທ ເມື່ອກັບມາແລ້ວ ໄດ້ ລວບລວມພັກພວກ ແລ້ວຕັ້ງລັດຖະບານກະບົດ ຢູ່ສະຫວັນນະເຂດ. ກຸ່ມກໍາອໍາ ນາດໄທ ໄດ້ສົ່ງອາວຸດ ແລະ ທະຫານໄທ ໃຫ້ຝ່າຍພູມີ ໜໍ່ສະຫວັນ ແລະ ພ້ອມກັນ ນັ້ນ ທະຫານໄທ ກໍ່ໄດ້ລະດົມຍິງເຂົ້າ ນະຄອນຫລວງວຽງຈັນ ຈາກຈ້ງຫວັດ ໜອງຄາຍທຸກວັນ.

ວັນທີ 13 ທັນວາ (12) 1960 (2503) ກອງທະຫານຝ່າຍຂວາ ເຊິ່ງ ມີທີ່ປຶກສາອະເມລິກາ ບັນຊາ ສົມທົບກັບທະຫານໄທ ແລະບາງປະເທດບໍລິວານ ສະຫະລັດ ເຄື່ອນຈາກສະຫວັນນະເຂດ ຜ່ານດິນແດນໄທ ບຸກໂຈມຕີເຂົ້ານະ ຄອນຫລວງວຽງຈັນ. ສະພາບທູດສະຫະລັດ, ທູດໄທ, ທູດຫວຽດນາມໃຕ້ ແລະ ອົງການຊ່ວຍເຫລືອຂອງສະຫະລັດ ກາຍເປັນກອງບັນຊາການ ຂອງທະຫານ ຝ່າຍຂວາ.

ນັບແຕ່ຕົ້ນປີ 1961 (2504) ນາຍ ແລະ ພົນທະຫານໄທ ຈໍານວນເປັນ ພັນໆຄົນ ໄດ້ປະປົນເຂົ້າໃນກອງທະຫານ ຂອງພູມີ ບາງກົມກອງທະຫານໄທ ມີ ຈໍານວນຫລາຍກວ່າທະຫານຂອງ ພູມີ ໜໍ່ສະຫວັນອີກ. ການບຸກໂຈມຕີຂອງທະ ຫານພູມີ ແລະ ທະຫານໄທ ລ້ວນແຕ່ໄດ້ພ່າຍແພ້ ຢ່າງຍ່ອຍຍັບ. ເຖິງປີ 1961 ກໍາລັງຂອງລັດຖະບານລາວ ທີ່ຖືກກົດໝາຍ ປະສົມກັບກໍາລັງຂອງແນວລາວ ຮັກຊາດ ໄດ້ຄອບຄອງດິນແດນທົ່ວປະເທດ ປະມານ 2/3.

ຍ້ອນໄຊຊະນະຂອງກໍາລັງຕ່າງໆ ທີ່ຮັກຊາດຂອງລາວ ເປັນອະນິສົງ (ເປັນພົນ) ໃຫ້ມີການຢຸດຍິງ. ວັນທີ 3 ພຶດສະພາ (5) 1961 ມີການພົບປະ

ເຈລະນາກັນ 3 ຝ່າຍ (ສຸວັນນະພູມາ ຕາງໜ້າຝ່າຍກາງ, ບຸນອຸ້ມ ນະຈຳປາສັກ ຕາງໜ້າຝ່າຍພູມີ ໜໍ່ສະຫວັນ, ສຸພານຸວົງ ຕາງໜ້າກຳລັງຮັກຊາດ) ແລະ ໄດ້ເປີດກອງປະຊຸມເຊີແນວ ກ່ຽວກັບລາວ ໃນວັນທີ 16 ພຶດສະພາ (5) 1961 (2504).

ປະເທດໄທ ໄດ້ຮັບປາກວ່າ ຈະເຂົ້າຮ່ວມກອງປະຊຸມ ປຶກສາກັນດັ່ງ ກ່າວ ແຕ່ນາຍົກລັດຖະມົນຕີໄທ ໄດ້ຖະແຫລງ (ເດືອນ ພຶດສະພາ 1961) ວ່າ " ກ້າປະເທດລາວເປັນກາງ ຢ່າງແທ້ຈິງ ກໍ່ຈະເປັນຊ່ອງທາງໃຫ້ແກ່ ການຄອບ ຄອງຂອງພວກຄອມມິວນິດ ເຊິ່ງຈະເປັນໄພຕໍ່ປະເທດໄທ ໃນອະນາຄົດ ".

ຈາກທ່າທີເປັນປໍຣະປັກຕໍ່ລາວດັ່ງກ່າວ, ໄທ ສົມທົບກັບສະຫະລັດ ໄດ້ ຊ່ວຍຝ່າຍຂວາວຽງຈັນ ທຳລາຍຂໍ້ຕົກລົງ ກ່ຽວກັບການຈັດຕັ້ງລັດຖະບານປະ ສົມ 3 ຝ່າຍ ແລະ ຄວາມເປັນກາງຂອງລາວ. ຕົ້ນປີ 1962, ພວກເຂົາໄດ້ບຸກ ໂຈມຕີ ກຳລັງແນວລາວຮັກຊາດຢ່າງຕໍ່ເນື່ອງ ແຕ່ໄດ້ປລາໄຊຢ່າງຕໍ່ເນື່ອງ ແລະ ພ່າຍແພ້ຢ່າງເຈັບແສບ ເປັນຕົ້ນແມ່ນປັ້ນຮົບທີ່ຫລວງນ້ຳທາ ພວກທີ່ ລອດຊີວິດ ທີ່ເປັນທະຫານໄທ ແລະ ອະເມລິກາ ຕ້ອງໜີຕາຍເຂົ້າມາປະເທດ ໄທ ຢ່າງໜ້າອະນາດ.

24/VII
ຫ້າມຈຳໜ່າຍ

ຕໍ່ການປລາໄຊດັ່ງກ່າວ, ປະເທດໄທ ໄດ້ອະນຸມັດໃຫ້ສະຫະລັດ ນຳເອົາ ກອງທະຫານຈຳນວນນະຫານສານ ແລະ ອະນຸມັດໃຫ້ສ້າງການທັບສະຫະລັດຂຶ້ນ ໃນດິນແດນໄທ (ຖະແຫລງການຮ່ວມ ລະຫວ່າງດິນຮັດ ລັດຖະມົນຕີຕ່າງປະ ເທດສະຫະລັດ ກັບຖະນັດ ຄໍມັນ ໃນວັນທີ 6 ມີນາ (3) 1962) ພ້ອມກັນນີ້ ກໍ່ໄດ້ ຕັ້ງ " ກອງບັນຊາຮ່ວມໄທ-ສະຫະລັດ ໃນປະເທດໄທ ແລະພາກໃຕ້ຫວຽດນາມ".

ໄຊຊະນະໃນບັ້ນຄົບຫລວງນ້ຳທາ ຂອງປະຊາຊົນ ຜູ້ຮັກຊາດ ໄດ້ສ້າງ ເງື່ອນໄຂໃຫ້ມະຕິກອງປະຊຸມເຊີ່ນວ ກ່ຽວກັບລາວ ໄດ້ຮັບການປະຕິບັດ ຄື ລາວ 3 ຝ່າຍ ໄດ້ລົງນາມໃນກະແຫລງການຮ່ວມ ໃນວັນທີ 12 ມິຖຸນາ (6) 1962 ທີ່ທົ່ງໄຫຫີນ (ຊຽງຂວາງ) ກ່ຽວກັບການຈັດຕັ້ງລັດຖະບານປະສົມ. ວັນ ທີ 24 ມິຖຸນາ (6) 1962 ຢຸດຍິງທົ່ວປະເທດ. ວັນທີ 23 ກໍລະກົດ (7) 1962 ເປີດກອງປະຊຸມເຊີ່ນວ ກ່ຽວກັບລາວ ແລະ ອອກກະແຫລງການ ວ່າດ້ວຍ ຄວາມເປັນກາງຂອງລາວ.

ຫລັງຈາກນັ້ນ ບໍ່ນານ ສະຫະລັດອາເມລິກາ ແລະ ປະຕິການໄທ ໂດຍ ສົມທົບກັບກຳລັງຂວາຈັດລາວ ໄດ້ນຳເອົາທະຫານໝວກຂຽວ ຂອງອະເມລິກາ ເຂົ້າມາລາວ ສ້າງກຳລັງພົເສດວັງປາວ ໂດຍມີໜ່ວຍ ຊີໄອເອ (C.I.A) ທີ່ ເປັນຄົນອະເມລິກາ ແລະ ໄທ ຊ່ວຍເປັນທີ່ປຶກສາໃຫ້ວັງປາວ (ພາບຊາດ ສົງ ຄາມລັບຂອງ CIA ໃນລາວ ໂດຍໂຣເຈີ ວອນເນີ ໜ້າ 92).

ເດືອນມີນາ (3) 1963 (2505) ການສູ້ຮົບໄດ້ລະເບີດຂຶ້ນອີກ ໂດຍ ກຳລັງຝ່າຍຂວາ ໄດ້ບຸກໂຈມຕີ ກຳລັງຮັກຊາດ. ວັນທີ 1 ເມສາ (4) 1963 ທ່ານ ກີນີມ ພົນເສນາ ລັດຖະມົນຕີວ່າການ ກະຊວງການຕ່າງປະເທດຂອງ ລາວ ກີ່ກລອບສັງຫານ.

ເດືອນເມສາ (4) 1964 (2507) ກຸປະສິດ ອະໄພ ໂດຍການສະໜັບ ສະໜູນຂອງອະເມລິກາ ແລະ ກຸ່ມກຳອຳນາດໄທ ເຮັດລັດຖະປະຫານ ກັກຕົວ ເຈົ້າສຸວັນນະພູມາ ແລ້ວບັງຄັບໃຫ້ກອດຜູ້ແທນຝ່າຍແນວລາວຮັກຊາດ ແລະ ຝ່າຍເປັນກາງ ອອກຈາກຄະນະລັດຖະບານປະສົມແຫ່ງຊາດ ຊຸດທີ II.

ນັບແຕ່ມີກະແຫລງການຮ່ວມ ລະຫວ່າງ ດີນຣັດ ແລະ ກະນັດ ຄໍ່ມັນ ໃນປີ 1962 ສະຫະລັດ ໄດ້ຂົນອາວຸດຍຸດໂທປະກອນ ແລະ ທະຫານສະຫະລັດ ເຂົ້າມາໃນປະເທດໄທ ຢ່າງຂະໜານໃຫຍ່. ສະຫະລັດ ໄດ້ສ້າງການທັບຂຶ້ນ ໃນ ປະເທດໄທຫລາຍແຫ່ງຄື ອຸດອນ, ໂຄລາດ, ຕາຄີ, ສັດຕະຫີບ, ອຸບົນ, ຂອນ ແກ່ນ, ນະຄອນພະນົມ ເຊິ່ງເປັນການທັບທີ່ໃຫຍ່ທີ່ສຸດ ໃນເອເຊັຍອາຄະເນ. ສ້າງກະໜົນຍຸດທະສາດ ຕິດຕໍ່ລະຫວ່າງ ກຸງເທບ-ວຽງຈັນ ເອົາປະເທດໄທ ເປັນການທີ່ໝັ້ນ ເພື່ອເຮັດສົງຄາມຮຸກຮານລາວ. ຂະນະນັ້ນ ສະຫະລັດ ສົ່ງທະ ຫານເຂົ້າພາກໃຕ້ຫວຽດນາມ (ໄຊ່ງ່ອນ) ແລະ ດຳເນີນສົງຄາມທາງອາກາດ ເພື່ອທຳລາຍໃຫ້ຮາບກ້ຽງ ຕໍ່ພາກເໜືອຫວຽດນາມ ແລະ ລາວ.

ໜັງສືພິມ ລາຕຣີບູນ ເດີນາຊ໊ງ ຂອງຝຣັ່ງເສດ ລົງຂ່າວ ເມື່ອວັນທີ 3 ມີນາ (3) 1966 ວ່າ " ການຍຶດຄອງຂອງທະຫານສະຫະລັດ ມີການເພີ້ມທະວີ ຍິ່ງຂຶ້ນ. ປະເທດໄທກາຍເປັນການທັບໂອກີນາວາແຫ່ງທີ 2 ແຕ່ມີຂະໜາດໃຫຍ່ ກວ່າ ... ໜັງສືພິມນິວຢອກໄທ ສະບັບລົງວັນທີ 13 ເມສາ (4) 1966 ຂຽນວ່າ: " ປະເທດໄທ ກາຍເປັນການທັບອາກາດ ທີ່ມີຄວາມໝາຍຍິ່ງໃຫຍ່ທີ່ສຸດ ຕໍ່ຍຸດ ທະສາດຂອງສະຫະລັດ ໃນຫວຽດນາມ ແລະ ລາວ ແລະ ປະເທດໄທ ເປັນພັນ ທະມິດທີ່ສຳຄັນມາກ ທີ່ໄດ້ຊ່ວຍຊູເກື້ອໜູນສະຫະລັດ ໃນການທຳສົງຄາມໃນ ອິນດຈີນ.

ສຳນັກຂ່າວ ເອບພີ ວິຈານການຢ້ຽມຢາມໄທ ຂອງປະທານາທິບໍດີ ສະຫະລັດ ລິນດອນ ບີ ຈອນສັນ ລະຫວ່າງວັນທີ 27-29 ຕຸລາ (10) 1966 ວ່າ: " ການຢ້ຽມຢາມຂອງ ຈອນສັນ ສະແດງໃຫ້ເຫັນວ່າ ປະເທດໄທ ໄດ້ຕັດສິນໃຈ ໃຫ້ສະຫະລັດ ໃຊ້ທຸກຂໍ້ສະດວກ ທາງທະຫານ ເຊິ່ງເມື່ອກ່ອນນັ້ນ ຍັງຢູ່ໃນລັກສະ

ນະເຄື່ອງທາງການ ແຕ່ບັດນີ້ ໄດ້ກາຍເປັນທາງການ ຢ່າງສົມບູນແບບ ເປັນຕົ້ນ ວ່າ ເຄື່ອງບິນສະຫະລັດ ສາມາດບິນຈາກການທັບໃນປະເທດໄທ ໄປກົ້ມລະເບີດ ແລະ ຍິງທຳລາຍພາກເໜືອຂອງຫວຽດນາມ ແລະ ລາວໄດ້ ປະເທດໄທ ຈຶ່ງ ກາຍເປັນການປະຕິບັດງານ ຢ່າງມະຫຶມາຂອງສະຫະລັດ.

ພວກກຳອຳນາດໄທ ກັບສະຫະລັດ ໄດ້ໃຊ້ການທັບ ລົບບຸຣີ ເປັນສູນຝຶກ ທະຫານຝ່າຍຂວາ, ທະຫານລາບ ແລະ ທະຫານບືນໃຫຍ່ຂອງໄທ ໄດ້ປະປົນຢູ່ໃນ ກຳລັງຝ່າຍຂວາ ແລະ ກຳລັງພິເສດລັງປາວ ໃນທຸກກົມກອງ ແລະ ຮ່ວມສູ້ຮົບ ໃນທຸກບັ້ນຮົບໃນລາວ.

ການດຳເນີນສົງຄາມຮຸກຮານ 3 ປະເທດໃນອິນດູຈີນ ຂອງສະຫະລັດ ໃນປີ 1968 ໄດ້ພົບກັບການປລາໄຊຢ່າງໜັກໜ່ວງ ແລະ ລຽບຕິດຕໍ່ເນື່ອງ. ການໂຕ້ຕອບຂອງກຳລັງຫວຽດນາມ ໃນປີ 1968 ຕໍ່ພວກຮຸກຮານ ໄດ້ຮັບໄຊຊະ ນະ ແລະ ບັງຄັບໃຫ້ ຈອນສັນ ລົດລະດັບສົງຄາມລົງ ຢຸດຕິການກົ້ມລະເບີດໃນ ບາງເຂດໃນຫວຽດນາມເໜືອ ແລະ ຍອມເຂົ້າຮ່ວມເຈລະຈາ ທີ່ກຸງປາຣີ. ໃນປີ 1969 (25128) ນິກສັນ ໄດ້ເປັນປະທານາທິບໍດີ ໄດ້ດຳເນີນທິດສະດີ " ທຳໃຫ້ ສົງຄາມໃນຫວຽດນາມເປັນຂອງຄົນຫວຽດນາມ, ສົງຄາມໃນລາວ ໃຫ້ຂອງ ຄົນລາວ.

ເມື່ອນິກສັນ ຂຶ້ນດຳລົງຕຳແໜ່ງປະທານາທິບໍດີ ສະຫະລັດ ໄດ້ເພີ້ມກຳ ລັງທາງອາກາດຂຶ້ນສູ່ລະດັບສູງສຸດ ຢ່າງບໍ່ເຄີຍມີມາກ່ອນ, ເພີ້ມກຳລັງທະຫານ ຝ່າຍຂວາວຽງຈັນ ຈາກ 130 ກອງພັນ ເປັນ 150 ກອງພັນ, ເພີ້ມກຳລັງພິ ເສດລັງປາວ ຈາກ 65 ກອງພັນ ເປັນ 85 ກອງພັນ, ພວກປະຕິການໄທ ໄດ້ສົ່ງ ທະຫານເຂົ້າຮ່ວມ ນັບວັນນັບເພີ້ມຂຶ້ນ.

ກຳລັງທະຫານໄທໃນລາວ ເວລາຫລາຍທີ່ສຸດ ມີເກີ່ງ 40,000 ຄົນ ເທົ່າກັບ 2 ໃນ 3 ຂອງກອງທະຫານລາວຝ່າຍຂວາ. ນອກຈາກນີ້ ຍັງມີກຳລັງ ທີ່ເຂົ້າຮ່ວມໃນກົມກອງ ຂອງທະຫານຝ່າຍຂວາອີກ ນັບເປັນຈຳນວນຫລວງ ຫລາຍ. ໜ້າທີ່ຂອງທະຫານໄທ ໃນປີ 1968 ແມ່ນໝູນກຳລັງຂອງຊົນເຜົ່າສ່ວນ ນ້ອຍເປັນຫລັກ ແຕ່ພໍມາເກີ່ງ 1973 (2516), ທະຫານໄທ ໃນກອງທະຫານ ວັງປາວ (ເຜົ່າມົ້ງ) 30,000 ຄົນ. ທະຫານໄທ ເຂົ້າຮ່ວມປັ້ນຄົບກູ້ກຽດ (ທ້າຍ ປີ 1969 ຕົ້ນ 1970) ມີທະຫານ 5,000 ຄົນ. ປັ້ນຄົບທົ່ງໄຫຫີນ ລະດູຝົນ 1971 ມີທະຫານໄທເຂົ້າຮ່ວມ 10 ກອງພັນ.

ແຕ່ວ່າ ຄວາມພະຍາຍາມ ຂອງສະຫະລັດ ທຳສົງຄາມ ໃນສະໝໍ່ລະພູມ ອິນດູຈີນ ຫລື ໃນລາວ ລ້ວນແຕ່ພົບກັບການປລາໄຊຢ່າງໜັກໜ່ວງ. ດັ່ງນັ້ນ ວັນ ທີ 27 ມັງກອນ (1) 1973 (2516) ສະຫະລັດ ຈຳຕ້ອງຍອມເຊັນສັນຍາ ປາຣີ ກ່ຽວກັບຫວຽດນາມ. ຕໍ່ມາປະມານ 2 ເດືອນ ຄື 21 ກຸມພາ (2) 1973 ກໍ່ໄດ້ມີ ການເຊັນສັນຍາຟື້ນຟູສັນຕິພາບ ແລະ ປະຕິບັດຄວາມກ່ຽວຕ້ອງປອງດອງຊາດ ໃນລາວ ຢູ່ທີ່ວຽງຈັນ.

ຫລັງຈາກທຸກຝ່າຍໄດ້ລົງນາມໃນສັນຍາວຽງຈັນແລ້ວ ລັດຖະບານປະ ສົມແຫ່ງຊາດຊຸດທີ 3 ກໍ່ໄດ້ຈັດຕັ້ງຂຶ້ນ ໃນວັນທີ 5 ເມສາ (4) 1974 (2517).

ວັນທີ 2 ທັນວາ (12) 1975 ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວ ປະເທດ ໄດ້ປະກາດລົບລ້າງ ລະບອບອາຊາທິປະໄຕ ສະຖາປະນາ ປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນ ໄດ້ເປີດສັ້ງກາດໃໝ່ຂອງ ປະຫວັດສາດຊາດລາວ.

ບົດທີ III
ລຳດັບເຫດການຝຣັ່ງເສດ
ເຂົ້າປົກຄອງລາວ

ຝຣັ່ງເສດ ເຂົ້າຍຶດຫວຽດນາມພາກໃຕ້ (Cochinchine) ໃນປີ 1858 ຫວຽດນາມພາກກາງ (Annam) ແລະຂະເມນ ໃນປີ 1862 ແລ້ວກໍ່ຍຶດຫວຽດນາມພາກເໜືອ (Tonkin) ໃນປີ 1883 ແລະ ປະເທດລາວໃນປີ 1893 ຕາມລຳດັບ.

ໃນປີ 1886 ລັດຖະບານຝຣັ່ງເສດ ທີ່ໃຊ້ອນ (ຫວຽດນາມພາກໃຕ້) ໄດ້ໃຫ້ຮ້ອຍເອກ ດູກາດ ເດີ ລາ ເກຣ (Ducad de lagré) ເປັນຫົວໜ້າ ຄະນະສຳຫລວດ ພູມປະເທດຕາມລຳນ້ຳຂອງ ເລີ້ມແຕ່ທະເລສາບຂະເມນ ຂຶ້ນມາຈົນເກືອແມ່ນ້ຳລ້ານຊ້າງ ເຂດສິບສອງພັນນາລີ (ເຂດຊຽງຮຸ່ງ) ໃນຄະນະສຳຫລວດດັ່ງກ່າວ ມີ ປາວີ (M. Pavi) ຜູ້ໜຶ່ງຮ່ວມນຳ.

ປີ 1886 ປີດຽວກັນນີ້ ເຂົ້າໃຈວ່າ ເມື່ອສຳເລັດການສຳຫລວດແລ້ວ ຝຣັ່ງເສດ ໄດ້ເຊັນສັນຍາ ລະຫວ່າງ ຝຣັ່ງ-ສຍາມ ລົງວັນທີ 7 ພຶດສະພາ (5) 1886 ຢູ່ກຸງເທບ ສຍາມອະນຸຍາດໃຫ້ຝຣັ່ງ ຈັດຕັ້ງກົງສຸນຝຣັ່ງ ຢູ່ຫລວງພະບາງ ໂດຍແມ່ນທ່ານ ປາວີ (M. Pavi) ເປັນກົງສຸນໃຫຍ່.

ປີ 1886 ນີ້ ຫ້ົເຂົ້າປຸ້ນສິບສອງຈຸໄທ ຫລື ໄລ່ເຈົ່າ ສຍາມໄດ້ສົ່ງທະຫານໄທ ສົມທົບກັບທະຫານລາວ ມາຂັບໄລ່ຫ້ົ ໃຫ້ອອກໄປຈາກສິບສອງຈຸໄທ.

ປີ 1887 ຫໍ້ສົມທົບກັບຜູ້ໄທໄລ່ ຂັດ້ ບ່ຍອມຂຶ້ນກັບ ຫລວງພະບາງ ຍ້ອນນາຍທະຫານໄທ ຊື່ ພັນເອກ ເຈ້ົາໝື່ນ ໄວວໍຣະນາດ (ເຈີມ ແສງຊູໂຣ) ແມ່ທັບໄທ ໄປເກ ີ້ງເມືອງໄລ່ ຈັບລູກຊາຍເຈ້ົາເມືອງ ເມືອງໄລ່ 3 ຄົນ ລ ົ້ງໄປ ກຸງເທບ ເຮັດໃຫ້ເຈ ົ້າເມືອງໄລ່ເຈັບແຄ້ນ ຈ ົ່ງຍົກກ ໍາລ ັງຜູ້ໄທໄລ່ ສົມທົບກັບຫ ໍ້ ມາຕີຫລວງພະບາງ. ທະຫານລາວ ໂດຍການບັນຊາຂອງ ເຈ ົ້າຣາຊພະຄ ີໃນ ບຸນຄົງ ແລະ ແສນທ ້າວພະຍາເມືອງຕ ່າງໆ ລວມກ ໍາລ ັງກັບໂຈມຕ ີພວກຫ ໍ້ ແລະ ຜູ້ໄທໄລ່ແຕກກັບຄ ືນໄປເມືອງໄລ່.

ປີ 1888 (2431) ແຄ ວ້ນສິບສອງຈຸໄທ ຕ ົກຢູ່ໃນອ ໍານາດຄອບຄອງ ຂອງຝຣ ັ່ງເສດ. ເມ ື່ອຝຣ ັ່ງເສດ ເຂ ົ້າຍ ຶດສິບສອງຈຸໄທໄດ ້ໝົດແລ ້ວ ພວກຜູ້ໄທ ຂາວ (ນຸ ່ງຫ ົ່ມຂາວ) ເມືອງໄລ່. ເມືອງຈຽມ. ເມືອງມຸນ ແລະ ເມືອງບາງ. ຜູ້ໄທດ ໍາ (ນຸ ່ງຫ ົ່ມດ ໍາ) ເມືອງແກ ່ງ. ເມືອງຄວາຍ. ເມືອງຄຸງ. ເມືອງມ ່ວຍ. ເມືອງລ ່າ. ເມືອງໂມະ. ເມືອງຫວັດ ແລະ ເມືອງຊ ່າງ ກ ໍ່ບ ່ຍອມຂ ຶ້ນກັບ ຫລວງ ພະບາງຕ ໍ່ໄປ. ຂ ຶ້ນກັບຫວຽດນາມພາກເໜ ືອ (Tonkin) ເມ ື່ອຂ ຶ້ນກັບຫວຽດ ນາມແລ ້ວ ຈ ົ່ງປ ່ຽນຊ ື່ເມືອງແກ ່ງ (ທ ີ່ເປັນຊ ື່ຣາຊທ ່ານິເດ ີມ ຂອງຂຸນບຸ ົ່ມມະ ຫ ່ານຣາຊ ທ ີ່ຕ ັ້ງໃຫ ້ແຕ ່ເດ ີມ) ປ ່ຽນເປັນ " ດຽນບຽນຟູ " (Dien Bien Phu) ຈ ົນເກ ີ້ງປັດຈຸບັນ.

ປີ 1892 ທ ່ານ ປ ່າວີ (M. Pavi) ໄດ ້ກ ີ້ກແຕ ່ງຕ ັ້ງຈາກລັດຖ ະບານ ຝຣ ັ່ງເສດ ໃຫ ້ໄປເປັນທ ູດຝຣ ັ່ງເສດ ປະຈ ໍ່ ກຸງເທບ.

ປີ 1893 (2436) ຝຣ ັ່ງເສດ ໄດ ້ສ ົ່ງກອງທັບຈາກພະນ ົມເປັນ ຂ ຶ້ນມ ່ າ ຕ າມລ ໍ່ານ ້ ໍາຂອງ ໄດ ້ຕ ີປ ິດດ ້ ່ານ ຂອງທະຫານໄທ ທ ີ່ຕ ັ້ງຮ ັກສາດ ່ານ ຢູ ່ກ ້ອງ

ຄອນພະເພັງ (ຫລີພີ) ໂດຍອ້າງວ່າ ເມື່ອຂະເມນ ແລະ ຫວຽດນາມຕົກເປັນ ຂອງຝຣັ່ງເສດແລ້ວ ດິນແດນຝັ່ງຊ້າຍແມ່ນ້ຳຂອງທັງໝົດ ກໍ່ຕ້ອງເປັນຂອງ ຝຣັ່ງເສດ, ທ່ະຫານໄທສູ່ກອງທ່ະຫານຝຣັ່ງບໍ່ໄດ້ ຈຶ່ງແຕກໜີ.

* ວັນທີ 13 ກໍລະກົດ (7) 1893 ຝຣັ່ງເສດ ໄດ້ສົ່ງເຮືອຮົບ 2 ລຳ ໂດຍ ໃຊ້ເຮືອສິນຄ້ານ່ຳໜ້າ ເຂົ້າມາໃນແມ່ນ້ຳເຈົ້າພະຍາ ເກີງກຸງເທບ ພ້ອມດຽວ ກັນນັ້ນ ກໍ່ເຂົ້າຍຶດ ຈັນທະບຸຣີໄວ້ ເພື່ອເປັນປະກັນ.

1893 (ພ.ສ 2436) ສັນຍາຝຣັ່ງເສດ-ສຍາມ ລົງວັນທີ 03 ຕຸລາ (10) 1893 ມີໃຈຄວາມ 10 ຂໍ້ດັ່ງນີ້ :

1. ໄທຍອມສະລະກຳມະສິດ ເໜືອດິນແດນຝັ່ງຊ້າຍ ແມ່ນ້ຳຂອງ ແລະ ບັນດາເກາະດອນທັງຫລາຍ ໃນແມ່ນ້ຳຂອງນັ້ນດ້ວຍ.
2. ຫ້າມບໍ່ໃຫ້ໄທມີເຮືອຮົບໄວ້ ໃນທະເລສາບ ຫລື ແມ່ນ້ຳຂອງ ບໍ່ ພຽງແຕ່ເທົ່ານັ້ນ ໃນແມ່ນ້ຳ ເຊິ່ງແຍກອອກຈາກນ້ຳຂອງ ກໍ່ມີ ເຮືອຮົບບໍ່ໄດ້.
3. ຫ້າມບໍ່ໃຫ້ໄທ ສ້າງປ້ອມຄ້າຍ ຫລື ຕັ້ງກອງທ່ະຫານ ໃນເມືອງ ພະຕະບອງ, ສຽມຣຽບ ແລະ ໃນໄລຍະ 25 ກິໂລແມັດ ບົນຝັ່ງ ຂວາແມ່ນ້ຳຂອງ.
4. ໃນເຂດທີ່ຕັ້ງດັ່ງກ່າວ ໃນຂໍ້ 3 ໄທຈະມີໄດ້ແຕ່ກຳລັງຕຳຫລວດ ເທົ່າທີ່ຈຳເປັນເທົ່ານັ້ນ.
5. ໃນທີ່ກ່າວໄວ້ໃນຂໍ້ 3 ໄທຈະເກັບພາສີສິນຄ້າ ເຂົ້າອອກບໍ່ໄດ້ ເວັ້ນແຕ່ຝຣັ່ງເສດໄດ້ຍິນຍອມ.

6. ເພື່ອຊ່ວຍເຫລືອການເດີນເຮືອ ຂອງຝຣັ່ງເສດໃນແມ່ນ້ຳຂອງ ອາດຈະມີຄວາມຈຳເປັນ ໃນການກໍ່ສ້າງທ່າຈອດເຮືອ ທ່າໄວ້ ຟືນ ແລະ ສິ່ງຂອງໃນຝັ່ງຂວາແມ່ນ້ຳຂອງ ກິດຈະການເຫລົ່ານີ້ ກ້າຝຣັ່ງເສດ ຮ້ອງຂໍ ໄທຈະຕ້ອງເຮັດໃຫ້ຝຣັ່ງ ໄດ້ຮັບຄວາມ ສະດວກທຸກຢ່າງ.
7. ໃຫ້ມີການໄປມາຄ້າຂາຍນຳກັນໄດ້ສະດວກ
8. ຝຣັ່ງເສດຈະຈັດຕັ້ງກົງສຸນຢູ່ບ່ອນໃດກໍ່ໄດ້
9. ກ້າເກີດບັນຫາ ໃນການຕີຄວາມໝາຍ ໃນສັນຍາສະບັບນີ້ ໃຫ້ ຖືເອົາ ສະບັບພາສາຝຣັ່ງເສດເປັນຫລັກ.
10. ຕ້ອງໃຫ້ສັດຕະຍາບັນ ສັນຍາສະບັບນີ້ ພາຍໃນ 4 ເດືອນ.

" ເປັນອັນວ່າ ດິນແດນຝັ່ງຊ້າຍແມ່ນ້ຳຂອງ ຕະຫລອດເກົ້າເກາະ ດອນໃນລຳນ້ຳຂອງທັງໝົດ ໄດ້ຕົກເປັນຂອງຝຣັ່ງເສດ ຕາມສັນຍາສະບັບນີ້ ".

ປີ 1894 (ພ.ສ 2437) ອານາຈັກລ້ານຊ້າງຮົ່ມຂາວຫລວງພະບາງ ໄດ້ຕົກຢູ່ໃນຄວາມປົກຄອງຂອງຝຣັ່ງເສດ ຕາມສັນຍາ ລົງວັນທີ 3 ຕຸລາ (10) 1893 ຝຣັ່ງເສດ ໄດ້ຕັ້ງເມີຊີເອີ ວາກ (Joseph vacle commissaire Principal du gouvernement) ມາເປັນຜູ້ວ່າຣາຊການ ຢູ່ເມືອງຫລວງ ພະບາງ.

ປີ 1895 (ພ.ສ 2438) ຈີນຍອມຍົກເມືອງສີ້ຫູເໜືອ ໃຫ້ຝຣັ່ງເສດ ຕາມສົນທິສັນຍາຝຣັ່ງເສດ ກັບຈີນ ລົງວັນທີ 30 ສິງຫາ (6) 1895 ຝຣັ່ງເສດ ຈຶ່ງແຕ່ງຕັ້ງ ເມີຊີເອີ ກາຣອງເຊ (Garanger) ເພື່ອນຂອງ Mr. Pavi ເປັນຜູ້ແທນ ລັດຖະບານຝຣັ່ງເສດ, ເຈົ້າສັກກະລິນ (ເຈົ້າຊີວິດລາວ) ກໍ່ຍົກ

ແຕ່ງຕັ້ງຜູ້ແທນພະອົງ ຂຶ້ນໄປພ້ອມ ເມືຊີເອ ກາຣອງເຊ ໄປຮອດເມືອງອາຣິນ ແລ້ວກໍ່ຕໍ່ໄປເມືອງອູເໜືອ ຮັບເອົາເມືອງລື້ອູເໜືອ ຈາກນາຍ ຕາວໄຕ ເຈົ້າ ເມືອງອູເອິນ ເຊິ່ງເປັນຜູ້ແທນລັດກະບາບຈີນ ມອບໃຫ້ວັນທີ 07 ກັນຍາ (9) 1895 ຊ້ອງໜ້າໝ່ອມນາງ ທ້າວຊຸນລື້ທ້າຫລວຍ. ຝຣັ່ງເສດ ໄດ້ແຕ່ງຕັ້ງທ່ານ ກາຣອງເຊ (Garanger) ເປັນຜູ້ວ່າຣາຊການ (Gouvernement) ແລະ ເຈົ້າສັກກະລິນ ກໍ່ຊິງແຕ່ງຕັ້ງ ພະຍາຄຸມພົນເສິກຫລວງເມືອງຂວາ (ຈາບກ່ຳ ບ້ານຫລັກຄຳ) ເປັນນາຍແຂວງ (ອາດຈະແມ່ນເຈົ້າເມືອງ ຜູ້ຂຽນ).

ປີ 1896 (ພ.ສ 2439) ຮ້ອຍເອກຊອງເດ (Capitaine Sande) ໄດ້ເປັນຜູ້ວ່າການ (Commissaire) ແທນທ່ານ ກາຣອງເຊ. ນາຍທະຫານ ຄົນນີ້ ໄດ້ເປັນຫົວໜ້າຄະນະກຳມະການຝຣັ່ງ ໄປຕົກລົງກັບຫົວໜ້າ ຄະນະກຳມະ ການຝ່າຍຈີນ ປັກເຂດແດນເມືອງອູ ໂດຍເອົາຕາມສັນພູ ແຕ່ທິດເໜືອ ໄປຫາ ທິດຕາເວັນຕົກ ຍອດນ້ຳອູ ເປັນຂອບເຂດ.

ປີ 1898 (2441) ເຈົ້າສັກກະລິນ ໄດ້ແຕ່ງຕັ້ງພະຍາຄຸມພົນຫລວງ ຊຽງເໜືອ (ທິດຄຳພັນ ບ້ານວັດໝອງ) ໄປເປັນນາຍແຂວງ ເມືອງອູແທນ ພະຍາຄຸມພົນຫລວງ ເມືອງຂວາ ເຊິ່ງເຈັບປ່ວຍ.

ປີ 1902 (2445) ຝຣັ່ງເສດ ຍົກເລີກທີ່ວ່າຣາຊການ (Commissaire de Gouvernement) ເມືອງອູ ແລ້ວຕັ້ງເປັນດ່ານ ຣາຊການ (Poste Administratif) ໃຫ້ທ່ານ ເຊຣາ ເຈົ້າໜ້າທີ່ຝ່າຍຣາຊການ ພົນລະເຮືອນ (Gerard Commissaire de Services Civils) ເປັນນາຍດ່ານ ຂຶ້ນກັບ ຜູ້ວ່າຣາຊການ ເມືອງຫລວງພະບາງ. ເຈົ້າສັກກະລິນ ໄດ້ຊິງແຕ່ງຕັ້ງພະຍາ ຄຸມພົນເສິກຫລວງຊຽງໃຕ້ (ທ້າວ ຄຳພີ ບ້ານປ່າໄຜ) ໄປເປັນນາຍແຂວງ ເມືອງອູ ແທນພະຍາຊຽງເໜືອ. ໃຫ້ພະຍາຊຽງເໜືອ ຍ້າຍໄປເປັນນາຍແຂວງ ເມືອງຂຸນ ຊຽງຂໍ່ງ.

ປີ 1914 ເກີດສົງຄາມໂລກຄັ້ງທີ 1 ຂຶ້ນ, ຜູ້ຮ້າຍຫ້ 30 ຄົນ ປຸ້ນຂ້າ ຫລວງ ທ່ານ ລອມແບ (Auguste Lambert) ຜູ້ວ່າຣາຊການ ແຂວງຫົວພັນ ຕາຍທີ່ເມືອງຊໍ່າເໜືອ ແລ້ວກວາດເອົາເງິນຢູ່ຄັງຂອງທ່ານ ນີວ (Nivou) ໄປໝົດ ພວກຫ້ໄດ້ຕີບ້ານເລັກບ້ານນ້ອຍ ປຸ້ນສະດົມປະຊາຊົນໃນເຂດບຸນເໜືອ, ລ້ອງນາຍ, ສຸນຕະສິນ, ສີນຸຫ້, ນາລິເທ ປະຊາຊົນມີຄວາມເດືອດຮ້ອນ.

ກອງເສນາທິການ ຝຣັ່ງເສດ ຢູ່ຮ່າໂນ້ຍ ຫວຽດນາມເໜືອ ໄດ້ສົ່ງ ພັນຕີ ດຸດໂຊ (Commandant Dussault) ເປັນແມ່ທັບຝ່າຍເໜືອ (Groupe Nord) ມີທະຫານ 3 ກອງຮ້ອຍ (Compagnie) ປະກອບດ້ວຍ ກອງຮ້ອຍທະຫານແດງ, ກອງປືນກົນ, ກອງຮ້ອຍເບີເລີຕ້ງ, ກອງຮ້ອຍທະຫານ ດຳ (ກອງຮ້ອຍທະຫານລາບ), ກອງຮ້ອຍທະຫານປືນໃຫຍ່, ກອງລ່ຳລຽງ ແລະ ກອງທະຫານບ້ານ ໄດ້ເຄື່ອນທັບ ແຕ່ເມືອງແຍ້ ອາປະໃຈ, ລາລິເທ ເກົ້ງ ອູເໜືອ ແລະ ຕັ້ງທັບຢູ່ເມືອງອູເໜືອ.

ປີ 1915 ກອງເສນາທິການຝຣັ່ງເສດ ທີ່ຮ່າໂນ້ຍ ໄດ້ແຕ່ງໃຫ້ນາຍ ພັນເອກ ຟຣິກເກີຍ (Colonel Friguegnon) ເປັນແມ່ທັບຝ່າຍໃຕ້ ມີ 5 ກອງຮ້ອຍຄື ກອງຮ້ອຍທະຫານແດງຫວຽດນາມ, ກອງປືນກົນ, ກອງຮ້ອຍທະ ຫານລາບໝວກແດງຫວຽດນາມ, ກອງຮ້ອຍເບີເລີຕ້ງ ແລະ ເກນເອົາປະຊາ ຊົນຫວຽດນາມ ປົນມາກັບທະຫານລາບໝວກດຳ, ກອງປືນໃຫຍ່, ກອງລ່ຳລຽງ ແລະ ປາຕີຊັ້ງ ເຄື່ອນທັບແຕ່ເມືອງໄລ່, ເມືອງແກ່ງ, ເມືອງຂວາ ທາງນ້ຳອູ ໄປ ບັນຈົບກັນກັບກອງທັບຝ່າຍເໜືອ.

ລວມກອງທັບເໜືອ ແລະ ໃຕ້ ມີນາຍທະຫານຝຣັ່ງເສດ 160 ຄົນ ທະ ຫານຄົນພື້ນເມືອງ 2500 ຄົນ ມ້າ ແລະ ຫໍ້ຕ່າງເຄື່ອງ 800 ຄົນ

ໄດ້ກວາດລ້າງພວກຫ້ ທີ່ບຸນເໜືອ, ລອງນາຍ, ສຸນຕິສິນ, ສີນຸຫ້, ນາວີ ເທີ ແຕ່ປີ 1915 ເຖິງປີ 1916 (1 ປີ ເຕັມ) ຈຶ່ງປາບຫ້ໄດ້ສຳເລັດຮາບຄາບ ປະຊາຊົນຈຶ່ງມີຄວາມສະຫງົບ. ເມື່ອສຳເລັດການປາບຫ້ແລ້ວ ກອງທັບຝ່າຍ ເໜືອ ແລະ ຝ່າຍໃຕ້ ກໍ່ຍົກກັບຄືນຮາໂນຍ.

ປີ 1902 ສັນຍາ ລະຫວ່າງຝຣັ່ງເສດ-ສຍາມ ລົງວັນທີ 07 ຕຸລາ (10) 1902 ມີໃຈຄວາມໂດຍຫຍໍ້ດັ່ງນີ້ :

1. ກຳນົດເສັ້ນຊາຍແດນ ລະຫວ່າງສຍາມ ກັບຂະເມນ ແລະລວມ ເອົາດິນແດນຫລວງພະບາງ ຝັ່ງຂວາແມ່ນ້ຳຂອງ ແຕ່ປາກນ້ຳ ຈອບກັນກັບລຳນ້ຳເຫືອງ ໄປຕາມສັນພູປັນນ້ຳ (ກວມເອົາ ໄຊ ຍະບູລີ ປັດຈຸບັນ) ເປັນຂອງຝຣັ່ງເສດ.
2. ບັງຄັບໃຫ້ສຍາມ ຍົກເມືອງມະໂນໄພ (ຂະເມນ) ແລະ ຈຳປາ ສັກ ໃຫ້ແກ່ຝຣັ່ງເສດ ກ້ອຍົກໃຫ້ແລ້ວ ຝຣັ່ງຈຶ່ງຈະອອກຈາກ ຈັນບຸຣີ.
3. ບັງຄັບໃຫ້ສຍາມ ມີໄດ້ແຕ່ທະຫານ ແລະ ນາຍທະຫານ ທີ່ເປັນ ຄົນສຍາມ ໃນດິນແດນພາກອີສານ.
4. ການສ້າງທ່າເຮືອ ຄອງນ້ຳ ແລະ ທາງລົດໄຟ ໃນດິນແດນພາກ ອີສານ ຈະເຮັດໄດ້ ແຕ່ດ້ວຍທຶນຂອງສຍາມ ແລະ ໂດຍຄົນ ສຍາມເອງເທົ່ານັ້ນ.

ຂໍ້ 5-6-7 ກ່ຽວກັບຄົນໃນບັງຄັບບັນຊາຂອງຝຣັ່ງເສດ

ຂໍ້ 8-9-10 ກ່ຽວກັບພິທີເຮັດສັນຍາ.

ອີງໃສ່ສັນຍາສະບັບນີ້, ດິນແດນຝັ່ງຂວານ້ຳຂອງບໍລິເວນຕໍ່ໜ້າ ປາກ ເຊ ຄືເມືອງຈຳປາສັກ, ເມືອງເກົ່າ, ເມືອງໂພນທອງ, ເມືອງສຸຂຸມມາ ແລະ ເມືອງທີ່ຢູ່ຝັ່ງຂວານ້ຳຂອງ ຕໍ່ໜ້າຫລວງພະບາງ ຄືແຂວງໄຊຍະບູລີໃນປັດຈຸບັນ ຈຶ່ງກາຍເປັນຂອງຝຣັ່ງເສດ ແລະ ເປັນຂອງລາວໃນປັດຈຸບັນ.

ປີ 1904 (2446) ສັນຍາ ສະບັບລົງວັນທີ 13 ກຸມພາ (2) 1904 ມີເນື້ອໃນໂດຍຫຍໍ້ດັ່ງນີ້ :

1. ກຳນົດເຂດແດນສຍາມ ກັບຂະແໝນ ໂດຍຖືເອົາພູເຂົາບັນທັດເປັນຫລັກ ແລະຍົກດິນແດນຝັ່ງຂວາແມ່ນ້ຳຂອງຕໍ່ໜ້າປາກເຊ ໃຫ້ຝຣັ່ງເສດ.
2. ກຳນົດເຂດແດນຫລວງພະບາງ ໂດຍສຍາມ ຕ້ອງຍົກດິນແດນຝັ່ງຂວານ້ຳຂອງ ຕໍ່ໜ້າຫລວງພະບາງ ໃຫ້ຝຣັ່ງເສດ.
3. ໃຫ້ຕັ້ງຂ້າຫລວງປະສົມ ເພື່ອປັກປັນເຂດແດນ ຕາມຄວາມໃນຂໍ້ 1 ແລະ ຂໍ້ 2 ໃຫ້ແລ້ວພາຍໃນ 4 ເດືອນ.
4. ໃຫ້ລັດຖະບານສຍາມ ຍອມສະລະອຳນາດ ທີ່ຈະເປັນເຈົ້າຂ່ອງເໜືອດິນແດນ ເມືອງຫລວງພະບາງ ທາງຝັ່ງຂວາແມ່ນ້ຳຂອງ ແຕ່ອະນຸຍາດໃຫ້ ຄົນສຍາມ ຂຶ້ນລ່ອງໃນແມ່ນ້ຳຂອງ ຕອນທີ່ຕົກເປັນຂອງຝຣັ່ງເສດໄດ້ສະດວກ.
5. (ເນື້ອໃນບໍ່ກ່ຽວກັບດິນແດນ)
6. ທະຫານຂອງສຍາມ ທີ່ປະຈຳຢູ່ດິນແດນພາກອີສານ ຕ້ອງເປັນຄົນສັນຊາດສຍາມທັງໝົດ ສ່ວນຕຳຫລວດນັ້ນ ຍອມໃຫ້ມີນາຍຕຳຫລວດ ເປັນຊາດເດັນມາກໄດ້ ແຕ່ກ້ຳຈະປ່ຽນເປັນຊາດ

ອື່ນ ຕ້ອງໃຫ້ຝຣັ່ງເສດຕົກລົງກ່ອນ. ສ່ວນຕຳຫລວດ ທີ່ຮັກສາ ພະຕະບອງ. ສຽມຮຽບ ແລະ ສີໃສພົນ ນັ້ນ ຕ້ອງເປັນຄົນພື້ນ ເມືອງນັ້ນທັງສິ້ນ.

7. (ເນື້ອໃນບໍ່ກ່ຽວກັບດິນແດນ).
8. ສຍາມຕ້ອງໃຫ້ຝຣັ່ງເສດເຊົ່າທີ່ເຮັດທ່າເຮືອທີ່ຊຽງຄານ,ໝອງ ຄາຍ, ໄຊຍະບຸຣີ, ປາກນ້ຳກ່ຳ, ມຸກດາຫານ ແລະ ປາກນ້ຳມູນ.
9. ສຍາມ ກັບຝຣັ່ງເສດ ຈະຕ້ອງຮ່ວມມືກັນ ສ້າງທາງລົດໄຟ ຈາກ ພະນົມເປັນ ເຖິງພະຕະບອງ.

ຂໍ້ 10 ເຖິງ ຂໍ້ 16 ເປັນເລື່ອງກ່ຽວກັບ ອຳນາດສານ ແລະ ພິທີການກ່ຽວກັບສັນຍາ.

ປີ 1920 (ພ.ສ 2463) ສັນຍາຝຣັ່ງເສດ-ສຍາມ ລົງວັນທີ 14 ກຸມພາ (2) 1920 ຮັບຮອງການກຳນົດເຂດແດນ ລະຫວ່າງຝຣັ່ງເສດ ກັບ ສະຍາມ ໃຫ້ເປັນໄປຕາມສັນຍາ ທີ່ໄດ້ເຊັນກັນແລ້ວ ຄື :

* ສັນຍາ ລົງວັນທີ 03 ຕຸລາ (10) 1893
* ສັນຍາ ລົງວັນທີ 13 ກຸມພາ (2) 1904
* ສັນຍາ ລົງວັນທີ 23 ມີນາ (3).1907

ປີ 1926 (ພ.ສ 2469) ສັນຍາລົງວັນທີ 25 ສິງຫາ (8) 1926 ວ່າ ດ້ວຍການກ່ຽວຂ້ອງ ລະຫວ່າງສຍາມ ກັບອິນໂດຈີນ ຝຣັ່ງເສດ ກຳນົດເຂດ ແດນ ຕາມລຳນ້ຳຂອງ ແລະ ເກາະດອນໃນລຳນ້ຳຂອງທັງໝົດ ເປັນຂອງຝຣັ່ງ ເສດ ເວັ້ນແຕ່ດອນທີ່ເຊື່ອມຕໍ່ກັບ ຝັ່ງສຍາມ ໂດຍທຳມະຊາດ.

ປີ 1937 (ພ.ສ 2480) ສັນຍາ ລົງວັນທີ 07 ທັນວາ (12) 1937 ຢືນຢັນເລື່ອງເຂດແດນ ໃຫ້ເປັນໄປຕາມສັນຍາເດີມ ທີ່ໄດ້ເຊັນກັນແລ້ວທຸກປະ ການ. (ສະບັບຫລ້າສຸດ).

ບົດທີ IV

ເມືອງອັດຕະປື ພາຍໃຕ້ການປົກຄອງຝຣັ່ງເສດ

ດັ່ງທີ່ໄດ້ຊາບແລ້ວວ່າ ຝຣັ່ງເສດ ໄດ້ສົ່ງກອມມີແຊ ເດີ ກູແວກເນີມັ (Commissire de governement) ທ່ານ ຣຸດເຕ M. Ruthe ມາປົກຄອງ ເມືອງອັດຕະປື ໃນປີມະເສັງ ຄ.ສ 1894 (ພ.ສ 2437 ຈ.ສ 1256) ໃນສະໄໝ ພຣະຣາຊວົງສາໄມ ເປັນເຈົ້າເມືອງອັດຕະປື. ເມື່ອພຣະຣາຊວົງສາໄມ ລາ ອອກຈາກຣາຊການແລ້ວ, ຝຣັ່ງເສດຈຶ່ງແຕ່ງຕັ້ງ ທ້າວ ແສງ (ອຸປະຣາດ) ເປັນເຈົ້າເມືອງ, ອຸປະຣາດລວງ ເຣັດຜິດຣາຊການ ຝຣັ່ງເສດຈຶ່ງໃຫ້ທ້າວ ລວງ ອອກຈາກໜ້າທີ່ ຈຶ່ງແຕ່ງຕັ້ງ ຣາຊວົງສີ ເປັນອຸປະຣາດ, ຕັ້ງທ້າວ ບຸນຈັນ ເປັນຣາຊວົງ, ຕັ້ງ ທ້າວ ເສີຍ ເປັນຣາຊບຸດ.

ເຈົ້າເມືອງແສງ ,ເປັນຄະດີກັບ ນາຍພາສາພັນ (ຄຸນຫວຽດນາມ) ເລື້ອງຊ້າງ ໄດ້ຕໍ່ສູ້ກັນຣອດວຽງຈັນ. ກອມມີແຊ ເດີ ກູແວກເນີມັ ຈຶ່ງຕັ້ງທ້າວ ພ່ານ (ລູກເຈົ້າເມືອງກົ່ງ) ໃຫ້ເປັນຜູ້ຣັກສາການ ເຈົ້າເມືອງອັດຕະປື. ແຕ່ ເຣັດວຽກໄດ້ບໍ່ເກີ່ງໜຶ່ງປີ ກໍ່ເຣັດຜິດ ຣາຊການ ຝຣັ່ງເສດ ຈຶ່ງກອດອອກຈາກ ຕຳແໜ່ງ.

ປີ ຄ.ສ 1907 (ພ.ສ2450, ຈ.ສ1269) ກອມມີແຊ ເດີກູແວກເນີມັ ເອມເມີຣິດ (M. Emmerich) ຕັ້ງອຸປະຣາດສີ ເປັນເຈົ້າເມືອງ, ຕັ້ງຣາຊວົງ ບຸນຈັນ ເປັນອຸປະຣາດ, ຕັ້ງທ້າວ ຄຳພູນເປັນຣາຊວົງ ແລະ ຕັ້ງທ້າວ ເຄນ ເປັນຣາຊບຸດ.

ໃ ຄ.ສ 1912 (ພ.ສ 2455, ຈ.ສ 1274) ເຈົ້າເມືອງສີງເກົ້າຜ່ ຫລາຍ ຈຶ່ງລາອອກຈາກຣາຊການ, ຜູ້ສຳເລັດຣາຊການ ປະເທດລາວ ຈຶ່ງຕັ້ງ ອຸປະຣາດ ບຸນຈັນ ເປັນເຈົ້າເມືອງອັດຕະປື, ຕັ້ງຣາຊວົງ ຄຳພູນ ເປັນອຸປະ ຣາດ, ຕັ້ງຣາຊບຸດ ເຄນ ເປັນຣາຊວົງ, ຕັ້ງທ້າວ ເສືອ ເປັນຣາຊບຸດ. ປີ ຄ.ສ 1912 ກອມມີແຊ ເດີກູແວກເປີມັງ ຝຣັ່ງ ປະຈຳອັດຕະປື ແມ່ນ M. Merou.

ປີ ຄ.ສ 1914 ຜູ້ສຳເລັດຣາຊການຝຣັ່ງເສດ ປະຈຳປະເທດລາວ ໄດ້ ປ່ຽນແປງລະບຽບ ຂ້າຣາຊການໃໝ່ ສຳລັບຂ້າຣາຊການ ປະຈຳເມືອງຕ່າງໆ ໃຫ້ມີເງິນເດືອນ ແລະ ມີຂ້າຣາຊການຊ່ວຍວຽກ 8 ຄົນ ເຈົ້າເມືອງ ໄດ້ຮັບເງິນ ເດືອນ 25 ກີບ, ອຸປະຣາດໜຶ່ງຄົນ ໄດ້ເງິນເດືອນໆລະ 18 ກີບ ບໍ່ໃຫ້ມີຕຳແໜ່ງ ຣາຊບຸດ ແລະ ຣາຊວົງ ມີຜູ້ຊ່ວຍວຽກ 3 ຄົນ ຄົນທີ່ໜຶ່ງ ໄດ້ເງິນເດືອນໆລະ 13 ກີບ 30 ອັດ, ຄົນທີສອງ ເດືອນລະ 12 ກີບ, ຄົນທີສາມ ເດືອນລະ 10 ກີບ 50 ອັດ. ມີສະໝຽນ 3 ຄົນ: ຄົນທີໜຶ່ງ ເດືອນລະ 9 ກີບ, ຄົນທີສອງເດືອນລະ 7 ກີບ 50 ອັດ, ຄົນທີສາມ ເດືອນລະ 5 ກີບ 70 ອັດ.

ປີ ຄ.ສ 1919 ລະຫວ່າງເດືອນ ກຸມພາ-ມີນາ (ເດືອນ 2-3) ເກີດ ພະຍາດອະຫີວາລະບາດ ມີຄົນລົ້ມຕາຍຈຳນວນ 217 ຄົນ, ໃນຈຳນວນນີ້ ອຸປຣາດ ຄຳພູນ ແລະ ຣາຊວົງເຄນ ລວມຢູ່ດ້ວຍ.

ຜູ້ສຳເລັດຣາຊການຝຣັ່ງເສດ ປະຈຳປະເທດລາວ ຈຶ່ງສົ່ງ ທ້າວ ສາຍ ສະໝອນ ຄົນວຽງຈັນ, ທ້າວ ທອງດຳ ຄົນສະຫວັນນະເຂດ, ທ້າວ ຈຽມ ແລະ ທ້າວ ຄ່າຕີ ທັງສອງເປັນຄົນອັດຕະປື ມາເປັນຜູ້ຊ່ວຍ ແລະ ສະໝຽນຕາມລຳ ດັບ. ພ້ອມກັນນີ້ ກອມມີແຊ ອັງເດຣ (André) ໄດ້ສົ່ງຈາບ ຄຳພອງ ສະໝຽນ ໂຮງການຂອງເພິ່ນເອງ ມາເປັນຜູ້ຊ່ວຍອີກຜູ້ໜຶ່ງ.

ປີ ຄ.ສ 1920 ເດືອນມີນາ (3) ກອມມີແຊ ດູຊັງ (Duzan) ຕັ້ງຈານ ຄ່ຳພອງ ເປັນອຸປະຣາດ ຂັ້ນ 10, ສົ່ງທ້າວ ຄ່ຳຕີ ໄປຢູ່ວຽງຈັນ ທ້າວ ຈຽມ ໄປຢູ່ຈຳປາສັກ.

ປີ ຄ.ສ 1921 ທ່ານ ເບຊິ (Besson) ມາເປັນກອມມີແຊ, ໄດ້ ຍ້າຍເມືອງຈາກບ້ານຝັງແດງ ເມືອງເກົ່າ ມາຕັ້ງຢູ່ບ້ານຊຸກອງ ບ່ອນເກົ່າ ຄຸ້ມເຈົ້າເມືອງກົງ ຕັ້ງເທື່ອກ່ອນ (ຄ.ສ 1835) ແລະ ຢູ່ເທົ່າສູ່ມື້ນີ້ (ສະໄໝ ທ່ານ ບຸນຈັນ ເປັນເຈົ້າເມືອງ).

ປີ ຄ.ສ 1922 ເຈົ້າເມືອງບຸນຈັນ ມີອາຍຸ 60 ປີ ໄດ້ລາອອກຈາກ ຣາຊການ ຈຶ່ງຕັ້ງຈານຄ່ຳຟອງ (ອຸປະຣາດຂັ້ນ 10 ລູກ ທ. ສີລາ ແລະ ນ. ກ້ອນ ບ້ານທາດຊາຕີ) ເປັນເຈົ້າເມືອງອັດຕະປື, ຕັ້ງທ້າວ ຄ່ຳໃບ (ຄົນເມືອງຈຳປາ ສັກ) ເປັນອຸປະຣາດ, ຕັ້ງທ້າວ ສາຍສະໝອນ ແລະ ທ້າວ ທອງດ່ຳ ເປັນຜູ້ຊ່ວຍ ທ້າວໝັ້ນ ເມືອງໂຂງ ເປັນສະໝຽນ.

ປີ ຄ.ສ 1933 ທ້າວ ຄ່ຳຕີ ອຸປະຣາດ ຂັ້ນ 6 ຄືນມາແຕ່ວຽງຈັນ ເປັນ ຫົວໜ້າສານລາວ ແຂວງອັດຕະປື, ທ້າວ ພິມ ຄົນຈຳປາສັກ ເປັນຕຸລາການ, ທ້າວ ອິນຕອງ ຄົນແກ້ງກອກ ສະຫວັນນະເຂດ ເປັນສະໝຽນ ຈ່ານສານ. ປີ 1933 ນີ້ ກອມມີແຊ ປະຈຳອັດຕະປື ແມ່ນທ່ານ ເທັຍຣີ (Thierry).

ປີ ຄ.ສ 1934 ຣາຊການລາວ ເຫັນດີຕາມການຮ້ອງຂໍ ຂອງທ່ານ ສາຣະວັດ ໂດໄປລ (Dauplay) ຈຶ່ງຍຸບແຂວງອັດຕະປື ໃຫ້ເປັນສາຂາອະທິບໍດີ ໃຫ້ທ່ານ ຝັງແລ (Fendler) ເປັນຜູ້ປົກຄອງ.

ທ່ານ ຟັງແລ (Fendler) ໄດ້ແຕ່ງດອງກັບ ແມ່ດຳໄທ (ບ້ານຟັງແດງ) ໄດ້ລູກນຳກັນ 5 ຄົນ ແມ່ຍິງ 3 ຄົນ ຄື : ນ. ທ່ອນ, ນ. ພັນຕາ ແລະ ນ. ທຸມມາ, ຜູ້ຊາຍ 2 ຄົນ ຄື ອີແບ ແລະ ອາແລງ (ນ. ທ່ອນ ແຕ່ງດອງກັບ ທ່ານ ສ້າງແກ້ວ, ນ. ພັນຕາ ແຕ່ງດອງກັບ ທ່ານ ຄູຈັນທະເສນີ ຈຽມສີສຸລາດ, ນ. ທຸມມາ ແຕ່ງກອງກັບ ທ່ານ ຄູສະຫວັນ ສຸຕະທຳມາ) ທ່ານຟັງແລ ມັກລ່າສັດ ປະເພດກວາງ, ໂອງ, ມັ່ງ, ເສືອ, ແຮດ, ເມີຍ ແລະ ຊ້າງ ໄດ້ຫລາຍສິບໃຕ ຢູ່ເຮືອນພັກ ແລະ ຫ້ອງການຂອງທ່ານ ມັກເອົາເຂົາງົວປ່າ, ເຂົາເມີຍ, ກວາງ, ຟານ ປະດັບປະດາ ຕາມເສົາຕ່າງໆ ເຕັມໄປໝົດ.

ພໍ່ເກົ້າ ສີຍາ ກົມມະເມືອງ ແລະ ທ່ານ ຄຳໄພ ອາມາດມຸນຕີ ໄດ້ເລົ່າວ່າ : ເວລາຝຣັ່ງມາຢູ່ອັດຕະປືນັ້ນ, ໄດ້ສ້າງຄ້າຍຢູ່ແປະວັດຟັງແດງ ແຄມຫ້ວຍ ພາເຕີນ ໄດ້ປຸກຕຶກກໍ່ 2 ຊັ້ນ ສຳລັບເປັນຫ້ອງການ ແລະ ທີ່ພັກຂອງ ທ່ານ ເດເລເກ (Délégué) ມີທະຫານປ້ອງກັນເວນຍາມ ຢ່າງເຂັ້ມງວດ. ພາຍໃນຄ້າຍທີ່ພັກ ເດເລເກ ມີຕຶກແກວຍາວ ສຳລັບໃຫ້ທະຫານປ້ອງກັນຢູ່. ຕໍ່ໜ້າ ຄ້າຍ ມີຄ້າຍທະຫານແດງ ແລະ ຄ້າຍທະຫານຂີ້ວ (ທະຫານແດງ ຄຽນຂາ ແດງ ໃສ່ໝວກແກັບແດງ, ທະຫານຂີ້ວ ຄຽນຂາຂີ້ວ ແລະ ໃສ່ໝວກແກັບສີຂີ້ວ) ພົນທະຫານຂອງຝຣັ່ງ ແມ່ນຄົນລາວ, ຫວຽດນາມ ແລະ ຝຣັ່ງ ບັນຊາການໂດຍຄົນຝຣັ່ງ. ນອກຈາກນີ້ ຝຣັ່ງຍັງໄດ້ສ້າງຫໍພະພາພວງ (ມໍຣະກົດ) ໃສ່ແຄມຫ້ວຍ ພາເຕີນ ແປະບ້ານຄັນມະກ່ອງ ຍາວໄປຕາມລຳນ້ຳຫ້ວຍ ມີການເວນຍາມຕະຫລອດທັງເວັນ ແລະ ຄືນ ມີທະຫານປະຈຳ 1 ໝວດ (ເມື່ອຝຣັ່ງໜີແລ້ວ ກາຍເປັນບ່ອນຢູ່ຂອງເສືອ ບາງປີມັນອອກລູກໃສ່ໃນຫໍພະພາພວງນີ້).

ເມື່ອທ່ານ ຟ້ງແລ (Fendler) ມາເປັນ ແດລເກ ປົກຄອງອັດຕະປື ໄດ້ນຳພາປະຊາຊົນ ແລະ ທະຫານ ໄປນ້ຳເອົາຫີນ ຢູ່ປາສາດຫີນຂອມ (ເຮືອນຫີນ) ເຊິ່ງສະໝັຍຂອມ ໄດ້ມາສ້ຳໄວ້ (ຈະໄດ້ກ່າວໄວ້ ໃນບົດໜ້ຳ ຕ່ຳໆຫາກ) ຢູ່ປາກນ້ຳເຊຊຸ ມາກໍ່ເປັນຂັ້ນໄດຫີນ ຢູ່ທ່າຟ້ງແດງ (ເວລານັ້ນນ້ຳ ຄອນຍັ່ງເລິກ ໄຫລຕະຫລອດປີ ບໍລິເວນທີ່ເປັນທ່າຂັ້ນໄດຫີນນັ້ນ ເປັນເວີ້ນ ແລະ ເລິກສົມຄວນ) ສ່ວນແຜ່ນທີ່ມີດອກດວງ ແລະ ຮູບເທວະຮູບ ຫລືທັບຫລັ້ງ ນັ້ນ ໄດ້ເອົາມາໄວ້ດ້ຳນຫລັ້ງ (ຕິດຝ່ຳ) ຫໍແຈກວັດຟ້ງແດງ ໃນປັດຈຸບັນ.

ປີ ຄ.ສ 1936 ທະຫານລ່ຳວ ພ່ຳຍໃຕ້ການນຳພ່ຳຂອງຝຣັ່ງເສດ ໄດ້ຕໍ່ ສູ້ກັບກອງກ່ຳລັ້ງ ຕໍ່ສູ້ເພື່ອເອກະລ່ຳດ ຂອງອ້ຳງກົມ່ມະດ່ຳ ຢູ່ພູເທວະດ່ຳ ພ່ຳຍ ຫລັ້ງຕີຊະນະກ່ຳລັ້ງດັ່ງກ່ຳວ ກໍ່ໄດ້ເອົາມາເປັນບ່ຳວ ຂອງພວກຝຣັ່ງເສດ.

ປີ ຄ.ສ 1939 ເພ່ຍຈ່ຳນ ຄ່ຳພອງ ເຈົ້ຳເມືອງຕ່ຳຍ, ຣາຊການ ໄດ້ ແຕ່ງຕັ້ຳງອຸປະຣາດ ຄ່ຳຕີ ເປັນເຈົ້ຳເມືອງ, ຕັ້ຳງອຸປະຣາດ ຄູນ ບ້ຳນດອນໂຄ ເມືອງປ່ຳກເຊ ເປັນຫົວໜ້ຳສ່ຳນ, ຕັ້ຳງທ້ຳວອິນຕອງ ເປັນຜູ້ຊ່ວຍຕຸລ່ຳການ ທ້ຳວ ພັນ ຄົນຈ່ຳປ່ຳສັກ ເປັນສະໝຽນຈ່ຳສ່ຳນ.

ປີ ຄ.ສ 1940 ໄທຕໍ່ສູ້ໃຫ້ຝຣັ່ງເສດ ສົ່ງດິນແດນລ່ຳວໃຫ້ໄທຄືນ ຝຣັ່ງ ແລະ ຣາຊການລ່ຳວ ໄດ້ເກນເອົາຊ່ຽຍສະກັນ ເມືອງອັດຕະປື ຈ່ຳນວນ 39 ຄົນ ເປັນທະຫານ ໄປສູ້ຣົບກັບໄທ. ເມື່ອແລ້ວເສິກ ທະຫ່ານ 39 ຄົນ ໄດ້ກັບຄືນມ່ຳ ບ້ຳນເມືອງຢ່ຳງປອດໄພ ທັ້ງ 39 ຄົນ.

* ວັນທີ 9 ມີນ່ຳ (3) 1945 ກອງທັບຍີ່ປຸ່ນ ປົດປ່ອຍແຫລມອິນດູຈີນ ອອກຈ່ຳກອ່ຳນ່ຳດການປົກຄອງຂອງຝຣັ່ງເສດໄດ້. ປະເທດລ່ຳວ, ຫວຽດນ່ຳມ

ແລະ ຂະເມນ ປະກາດຕົນເປັນເອກະລາດ ໄດ້ປະມານ 5 ເດືອນປາຍ ວັນທີ 23 ກັນຍາ (9) 1945 ຍີ່ປຸ່ນເສັຍໄຊສົງຄາມ ຍ້ອນອາເມລິກາ ກົ້ມລະເບີດປະລະມະນູ ສອງໜ່ວຍໃສ່ເມືອງຮີໂຣຊິມາ ແລະ ນາງາຊາກີ ຂອງຍີ່ປຸ່ນ.

* ໃນລະຫວ່າງຍີ່ປຸ່ນ ຍຶດຄອງອິນໂດຈີນນັ້ນ, ໄດ້ຈັບກຸມພວກຝຣັ່ງເສດ ຈຳນວນໜຶ່ງ ທີ່ໜີບໍ່ທັນ, ແຕ່ຈຳນວນຫລວງຫລາຍໄດ້ໜີໄປລີ້ຢູ່ຕາມພູພາ ແລະ ກ້ຳບ່ອນຕ່າງໆ ໂດຍການຊ່ວຍເຫລືອຂອງຄົນລາວ ທີ່ເຄີຍຢູ່ ແລະເຮັດວຽກ ນຳຝຣັ່ງເສດ.

ໃນເວລາຍີ່ປຸ່ນຂັບໄລ່ຝຣັ່ງເສດ ອອກຈາກອິນໂດຈີນນັ້ນ, ປະເທດ ລາວ ໄດ້ຈັດຕັ້ງລັດກະບານຂຶ້ນ ເພື່ອປົກຄອງປະເທດ ເຊັ່ນດຽວກັບຂະເມນ ແລະ ຫວຽດນາມ. ເມື່ອຍີ່ປຸ່ນປະລາໄຊສົງຄາມແລ້ວ ຝຣັ່ງເສດ ກັບຄືນມາມີ ອຳນາດຄອບຄອງອິນໂອຈີນຕື່ມອີກ. ລັດກະບານລາວ ຈຶ່ງໄດ້ອົບພະຍົບ ໄປຢູ່ ປະເທດໄທ ກາຍເປັນລັດກະບານພັດກຸ່ນ, ຈຳນວນໜຶ່ງ ກໍ່ລີ້ຢູ່ຕາມພູພາປ່າດົງ ເປັນກອງຫລອນ ລັດຕີຝຣັ່ງເສດ.

ປີ ຄ.ສ 1946 ລັດກະບານຝຣັ່ງເສດ ຍອມເຊັນສັນຍາ ປ່ອຍໃຫ້ລາວ ເປັນເອກະລາດ ຢູ່ໃນເຄືອຈັກກະພົບຝຣັ່ງເສດ. ປະເທດລາວ ຈຶ່ງໂຮມລາວ ແຕ່ເໜືອຮອດໃຕ້ ເປັນອານາຈັກອັນດຽວ ມີລັດກະທັມມະນູນ, ມີສະພາ ຜູ້ແທນຣາຊດອນ, ຕັ້ງລັດກະບານ ແລະ ມີພຣະມະຫາກະສັດອົງດຽວປົກຄອງ ອານາຈັກລາວ ເອກະພາບ.

ເວລານີ້ເມືອງອັດຕະປື ໄດ້ຍົກຖານະໃຫ້ເປັນກິ່ງແຂວງ ຂຶ້ນກັບແຂວງ ຈຳປາສັກ. ໂດຍແມ່ນທ່ານ ຄຳຕີ ຄຳມູນວົງ ເປັນເຈົ້າເມືອງເໝືອນເດີມ.

ຖ້ວັນທີ ๑ ຂ້ວຣັ ๑๙๕๔.
ປະທານສພາແຫ່ງຊາດໄປຣາຊການຕ່ວງປະເທດ,
ຮອງປະທານເຊັ້ນຕ່ວງ
ເຊັ້ນນາມ : ກິ້ນ ພິ້ນເສນາ
ປະກາດໃຊ້ໂດຍພຣະຣາຊໂອ້ງການເລກທ່ີ ๒๔๐ ລ້ວັນທ່ີ ๑๓/ก/๕๔.

ກົດໝາຍສບັບເລກທ່ີ ๑ກ๓ ລ້ວັນທ່ີ ๓๑ ມ້ວກສ໌ ๑๙๕๔
ວ່ວ້ດ້ວຍການຕ້ັງແຂວ້ງອ້ັຕະປ ື

ມ້ວດຣ້ວ ๑ ๒ ๓.- ພຣະຣ້ວຊໂອ້ງການເລກທ່ີ ๓๓๑ ລ້ວັນທ່ີ ๑๒ ເດ້ວ້ມ ๑๙๕๓ ຊ ຶ່ງສ ັ່ງໃ ຫ ້ຈ ັດ ຕ ້ ັ ງ ແຂວ້ງອ້ັຕະປ ື ກ ່ ອ ນ ໄ ດ ້ ຮ ັ ບ ຄ ໍ ້ ວ ະ ບ ຸ ນ ັ ດ ຂ ອ ້ ງ ສ ພ າ ຍ ້ ແ ທ ນ ຣ າ ສ ດ ອ ນ ນ ້ ັ ນ ບ ັ ດ ນ ີ ້ ສ ພ າ ບ ຸ ້ ແ ທ ນ ຣ າ ສ ດ ອ ນ ແ ຕ ່ ວ ້ ຊ າ ດ ໄ ດ ້ ພ ິ ຈ າ ຣ ະ ນ າ ແ ລ ະ ເ ຫ ັ ນ ຊ ອ ບ ໃ ຫ ້ ອ ອ ກ ເ ປ ັ ນ ກ ົ ດ ໝ າ ຍ ໄ ດ ້.

ຢ ້ ງ ປ ນ ວ ່ າ ສ ພ າ ແ ຕ ່ ວ ້ ຊ າ ດ ໄ ດ ້ ພ ິ ຈ າ ຣ ະ ນ າ ແ ລ ະ ລ ້ ວ ນ ະ ຕ ິ ຮ ັ ບ ຮ ອ ້ ງ ເ ອ ົ ້ ເ ນ ື ້ ອ ກ ວ າ ມ ປ ຸ ່ ງ ທ ້ ວ ງ ບ ້ ໃ ນ ກ ວ ້ ວ ປ ະ ຊ ຸ ມ ໃ ຕ ຍ ่ ເ ມ ື ້ ອ ວ ັ ນ ທ ่ ี ม ิ ถ ุ ม ภ ์ ๑๙๕๔.

ປ ະ ທ ານ ສ ພ າ ແ ຕ ່ ວ ້ ຊ າ ດ ໄ ປ ຣ າ ຊ ການ ຕ ່ ວ ງ ປ ະ ເ ທ ດ
ຮ ອ ງ ປ ະ ທ ານ ເ ຊ ັ ້ ນ ຕ ່ ວ ງ
ເ ຊ ັ ້ ນ : ກ ິ ້ ນ ພ ິ ້ ນ ເ ສ ນ າ

ປ ະ ກ າ ດ ໃ ຊ ້ ໂ ດ ຍ ພ ຣ ະ ຣ າ ຊ ໂ ອ ້ ງ ການ ເ ລ ກ ທ ่ ี ๑๕ ป ี / ๑ ป ี - CR.

ປີ ຄ.ສ 1947 ເຈົ້າເມືອງ ຄ່ຳຕີ້ ຄ່ຳມູນວົງ ກືກຍ້າຍໄປເປັນເຈົ້າ ເມືອງຢູ່ເມືອງຫີນບູນ ແຂວງຄ່ຳມ່ວນ, ຣາຊການລາວ ໄດ້ສົ່ງທ້າວ ກໍ ອິນສີ ຊຽງໃໝ່ (ຄົນເມືອງຈຳພອນ ແຂວງສະຫວັນນະເຂດ) ມາເປັນເຈົ້າເມືອງ ອັດຕະບືແທນ ທ່ານ ຄ່ຳຕີ້.

ປີ 1949 ລັດກະບານລາວ ຊຸດທີ 2 ໂດຍແມ່ນເຈົ້າບຸນອູ້ມ ນະຈ່ຳປາ ສັກ ເປັນນາຍົກ ໄດ້ສົ່ງທ້າວ ເພັງ ສຸວັນລາສີ (ຄົນເມືອງໂຂງ) ມາເປັນເຈົ້າ ເມືອງອັດຕະບື ແທນທ້າວ ກໍ ອິນສີຊຽງໃໝ່.

1950 ລັດກະບານລາວ ຊຸດທີ 3 ໂດຍແມ່ນທ່ານ ພູຍ ຊະນະນິກອນ ເປັນນາຍົກ ໄດ້ສົ່ງທ້າວ ສ້ຽ. ວໍຣະວົງ (ຄົນເມືອງສະຫວັນນະເຂດ) ມາເປັນ ເຈົ້າເມືອງອັດຕະບື ແທນທ້າວ ເພັງ ສຸວັນລາສີ.

1951 ທ້າວ ຄ່ຳຊັດ (ລູກເຈົ້າເມືອງ ຄ່ຳພອງ) ກືກແຕ່ງຕັ້ງມາເປັ
ເຈົ້າເມືອງອັດຕະບື ແທນທ້າວ ສ້ຽ ວໍຣະວົງ (ສະໄໝ ເຈົ້າສຸວັນນະພູມມາ ເປັນນາຍົກ).

1953 ກ່ຳລັງແນວລາວຮັກຊາດ ໄດ້ປົດປ່ອຍເມືອງອັດຕະບື, ຝຣັ່ງໄດ້ ເອົາເຮືອບິນ ມາກົ້ມລະເບີດໃສ່ບ້ານຟ້ງແດງ ຫລາຍລູກ ເຮັດໃຫ້ໄຟໄໝ້ເຮືອນ ຊານປະຊາຊົນ; ປະຊາຊົນ ບ້ານຟ້ງແດງ ຄັນມະກ່ອງ ບ້ານນ້ອຍ ບ້ານດອນ ແລະ ເມືອງເກົ່າຟ້ງກວັດຫລວງ, ວັດທາດ, ວັດໜືອ ໄດ້ແຕກໄປຢູ່ປ່າ ຈົນ ເຖິງເວລາເຮັດນາ ຈຶ່ງໄດ້ຍ້າຍກັບມານາໃໝ່ລາວ.

ເວລານັ້ນ, ຂ້າພະເຈົ້າ ຜູ້ຂຽນ ບວດເປັນສາມະເນນນ້ອຍ ຢູ່ນຳຄູບາ ພໍ່ເກົ້າຈານເຜດ ວັດຫລວງ ເມືອງເກົ່າ ຮ່ວມກັບສາມະເນນສຸວັນ (ນະບ່າວ) ສາມະເນນສອດ ແລະ ຄູບາອາຈານ ແລະ ສາມະເນນ ເກືອບ 30 ອົງ ໄດ້ຜ່ຕກ ໄປຈຳພັນສາຢູ່ນາສາວຫວາ ແຄມຫ້ວຍລຽງ (ຕາມທາງໄປຫານາຕາກເຜດ ແລະບ້ານຕາກເຜດ ເຊຊ). ເວລາເປັນສາມະເນນ ຢູ່ວັດຫລວງນັ້ນ ໄດ້ ຮັບການເອົາໃຈໃສ່ຈາກຄູບາພໍ່ເກົ້າ, ສາມະເນນສຸວັນ ແລະ ສາມະເນນສອດ ໄດ້ສອນໃຫ້ອ່ານໜັງສືທັມໄດ້. ສ່ວນໂຕລາວ ແລະ ເລກບວກ ລົບ ຄູນ ຫານ ແມ່ນສາມະເນນສອດ ເປັນຜູ້ສອນ. 2 ປີຕໍ່ມາ (1955) ຈຶ່ງເຂົ້າຮຽນນັກທັມ ຊັ້ນຕີ ຢູ່ວັດສີຮອງວາສ ບ້ານຝັ່ງເຜດ ຕາມຫລັກສູດ ປະຣິນຍາຕີທັມ-ບາລີ ເວລານັ້ນ.

ໃນປີ 1953 ນີ້ເອງ ກອງທັບລາວ ອິສະລະ (ກອງທັບປະຊາຊົນລາວ) ໄດ້ສົມທົບກັບ ກອງທັບຫວຽດນາມ ແລະ ກຳປູເຈັຍ ເປີດບັ້ນຣົບຕ່າງໆ ທັ່ງຢູ່ ໃນລາວ, ຫວຽດນາມ ແລະ ກຳປູເຈັຍ ເຮັດໃຫ້ກອງທະຫານຝຣັ່ງເສດ ປະລາ ໄຊ ໃນບັ້ນຣົບຕ່າງໆ ຢ່າງຕໍ່ເນື່ອງ. ຝ່າຍລັດຖະບານລາວ ອັນມີສະເດັດ ເຈົ້າ ສຸວັນນະພູມາ ເປັນນາຍົກ ກໍ່ໄດ້ຕໍ່ສູ້ທາງການເມືອງ ພາຍໃນອຳນາດ ການ ປົກຄອງຂອງຝຣັ່ງເສດເອງ ເພື່ອໃຫ້ລາວ ໄດ້ຮັບເອກະລາດ ຄື ເຈົ້າສຸວັນນະ ພູມາ ໄດ້ຮຽກຮ້ອງໃຫ້ ລັດຖະບານຝຣັ່ງເສດ ໂອນການບໍລິຫານ ການປົກຄອງ ແຂວງຕ່າງໆ ເຊິ່ງຝຣັ່ງເສດ ຍັງບໍ່ຍອມປ່ອຍໃຫ້ລາວ ດຳເນີນການປົກຄອງ ເອງນັ້ນ ໃຫ້ລັດຖະບານລາວ ເຂົ້າບໍລິຫານ.

ລັດຖະບານຝຣັ່ງເສດ ແລະ ລັດຖະບານລາວ ໄດ້ເປີດການເຈລະຈາ ຕາມຂໍ້ຮຽກຮ້ອງດັ່ງກ່າວນີ້ຂຶ້ນ ໃນວັນທີ 15 ຕຸລາ (10) 1953 (ພ.ສ 2496)

ທີ່ປາຣີ ໃນອາທິດຕໍ່ມາ ທັງສອງຝ່າຍ ຈຶ່ງໄດ້ລົງນາມ ໃນສັນຍາ ສະບັບໃໝ່ ເພື່ອໃຊ້ແທນສັນຍາສະບັບລົງວັນທີ 19 ກໍລະກົດ (7) 1949 (ພ.ສ 2492) ເປັນຜົນໃຫ້ຝຣັ່ງເສດ ຍອມມອບເອກະລາດໃຫ້ລາວໂດຍສົມບູນ ໂດຍໃຫ້ລາວ ຍັງຄົງຢູ່ໃນກາບະ ສະມາຊິກສະຫະພາບຝຣັ່ງເສດ ເຊິ່ງລາວມີສິດໄດ້ຮັບການ ຄຸ້ມຄອງປ້ອງກັນ ຈາກຝຣັ່ງເສດ ເມື່ອມີການຮຸກຮານຈາກພາຍນອກ (ສັນຍາ ມິດຕະພາບ ລະຫວ່າງລາວ-ຝຣັ່ງເສດ ວັນທີ 22-10-1953).

ພາຍຫລັງ ລັດກະບານລາວ ໄດ້ຮັບສິດບໍລິຫານ ການປົກຄອງແຂວງ ຕ່າງໆ ຈາກຝຣັ່ງເສດແລ້ວ. ລັດກະບານລາວ ໂດຍແມ່ນສະເດັດເຈົ້າສຸວັນນະ ພູມມາ ເປັນນາຍົກ ຈຶ່ງຍົກກາບະ ກົ່ງແຂວງອັດຕະປືຂຶ້ນເປັນ "ແຂວງອັດຕະປື" ໂດຍພຣະຣາຊໂອງການ ເລກທີ 361 ລົງວັນທີ 18 ທັນວາ (12) 1953 ສັ່ງໃຫ້ ຕັ້ງແຂວງອັດຕະປື (ກ່ອນໄດ້ຮັບອະນຸມັດຈາກ ສະພາຜູ້ແທນຣາສະດອນ). ຕໍ່ມາ ກອງປະຊຸມສະພາຜູ້ແທນຣາສະດອນ ໄດ້ຮັບຮອງເອົາ ການຈັດຕັ້ງແຂວງ ອັດຕະປືດັ່ງກ່າວ ໂດຍໄດ້ອອກເປັນກົດໝາຍ ສະບັບເລກີ 176 ລົງວັນທີ 31 ມີນາ (3) 1954 ວ່າດ້ວຍການແຕ່ງຕັ້ງ ແຂວງອັດຕະປື ເຊັ່ນແທນປະທານ ສະພາແຫ່ງຊາດ ແມ່ນທ່ານ ກີນີມ ພົນເສນາ ແລະ ປະກາດໃຊ້ເປັນທາງການ ໂດຍພຣະຣາຊໂອງການ ເລກທີ 153/16-CR.

ພາຍຫລັງຈັດຕັ້ງແຂວງອັດຕະປືແລ້ວ. ລັດກະບານສະເດັດເຈົ້າສຸວັນ ນະພູມມາ ເປັນນາຍົກລັດກະມົນຕີ ໄດ້ສົ່ງພະຍາ ຄໍາເສັງ ບໍຣິຮັກ (ຄໍາແສນ ບຸນຍະແສງ) ມາເປັນເຈົ້າແຂວງຜູ້ທໍາອິດ ໃນປີ 1954.

ປີ ຄ.ສ 1959 ພະຍາຣາຊພັກດີ (ຄຳເລື່ອນ ບຸນຍະຜລ) ນ້ອງຊາຍ ທ່ານ ຄຳຜສນ ບຸນຍະຜລ ໄດ້ມາເປັນເຈົ້າຜຂວງຜທນ ພະຍາຄຳສັ ບໍຣິຣັກ (ຄຳຜສນ ບຸນຍະຜລ). ໃນເວລາດຽວກັນນັ້ນ ທ່ານ ຄຳເລື່ອນ ບຸນຍະຜລ ຍັງໄດ້ເປັນຜູ້ຜທນຣາສະດອນ ຜຂວງອັດຕະປື ໃນປີ 1957-60 ອີກດ້ວຍ.

ຕໍ່ຈາກທ່ານ ຄຳເລື່ອນ ບຸນຍະຜລ ຜມ່ນທ່ານ ຄຳພອນ (ຄົນລະທາ ນ້ຳ ສະຫວັນນະເຂດ) ໄດ້ມາເປັນເຈົ້າຜຂວງອັດຕະປື ໃນປີ 1963 ຕໍ່ຈາກທ່ານ ຄຳພອນ ຜມ່ນທ່ານ ພົນຈັດຕະວາ ຄຳຄອງ ວົງນະຣາດ ຈົນອັດຕະປື ກືກປົດ ປ່ອຍ ໃນປີ 1970.

ນັບຜຕ່ປີ 1958 ລັດກະບວນຊຸດທີ 8 ພູຍ ຊະນະນິກອນ ເປັນນາຍົກ ລັດກະມົນຕີ ໄດ້ດຳເນີນນະໂຍບາຍ ຕໍ່ຕ້ານກັບຝ່າຍຜນວລາວອັກຊາດ (ຍ້ອນ ໄດ້ຮັບການສະໜັບສະໜູນ ຈາກສະຫະລັດອາເມລິກາ) ໄດ້ໃຫ້ທະຫານໃນກອງ ທັບຜຕ່ຊາດ ຜລະ ກົມປະສານງານ ຢູ່ຕາມຜຂວງຕ່າງໆ ປາບປາມ ຈັບກຸມ ຜລະ ລອບສັງຫານ ອະດີດພະນັກງານ ຜນວລາວອັກຊາດ ທີ່ປົດປ່ອຍ ອອກ ເປັນປະຊາຊົນ ຢູ່ຕາມທ້ອງກິ່ນຕ່າງໆ ທົ່ວປະເທດ. ສົ່ງທະຫານກອງທັບຜຕ່ ຊາດ ຈຳນວນ 2 ກອງພັນ ໄປປົດລ້ອມ ກອງພັນທີ 2 ຢູ່ທົ່ງໄຫຫີນ ຈຳ່ນວນ 1500 ຄົນ ເຊິ່ງກຽມເຂົ້າປະສົມກັບ ທະຫານຝ່າຍລັດກະບວນ ຕາມສັນຍາ ເຊີຜນວ ຈັບກຸມ ເຈົ້າສຸວັນນະພູມມາ ຜລະ ຜູ້ນຳຜນວລາວອັກຊາດ ອີກ 7 ຄົນ ເຮັດໃຫ້ຄວາມຂັດຜຍ້ງທາງການເມືອງ ລະຫວ່າງ ຝ່າຍລັດກະບວນວຽງຈັນ ກັບຜນວລາວອັກຊາດ ຮຸນຜຮງຂຶ້ນໃນທົ່ວປະເທດ. ອະດີດພະນັກງານຜນວ ລາວອັກຊາດ ທີ່ປົດປ່ອຍອອກເປັນປະຊາຊົນ ກືກຈັບ ຜລະ ລອບສັງຫານເປັນ ຈຳນວນຫລວງຫລາຍ.

ຢູ່ແຂວງອັດຕະປື ຜູ້ກຶກລອບສັງຫວນ ແລະ ຈັບໄປຂ້າ ໄດ້ແກ່ປະຫວນ ສ້ອຍ ແລະຈວນຈ້ວຍ ບ້ານວັດຫລວງ ເມືອງເກົ່າ, ຈວນກົມ ບ້ານສີເຊ໋ງ ແລະ ຜູ້ອື່ນໆ ນອກນັ້ນ ກໍ່ໂຕນເຂົ້າປ່າໄປຮ່ວມກັບຂະບວນລາວອັກຊວດ ເຊິ່ງຕໍ່ມາໄດ້ ກາຍເປັນພະນັກງານການນຳຂອງການປະຕິວັດ ລະດັບຊວດຫລາຍທ່ານ.

ລາຍຊື່ ຂ້າຣາຊການຝ່ຣັ່ງເສດ ປົກຄອງອັດຕະປື

(Commissaire du Gouvernement)

1.	M. Ruthe	1894	16.	M. Merou	1912
2.	M. Berland	1894	17.	M. Boudenne	1913
3.	M. Castanier	1895	18.	M. André	1919
4.	M. Bastard	1895	19.	M. Duzan	1919
5.	M. Odend'hal	1896	20.	M. Bauchenne	1921
6.	M. Castanier	1897	21.	M. Besson	1921
7.	M. De Belakouvic	1902	22.	M. Fendler	1924
8.	M. Leautier	1903	23.	M. Monier	1924
9.	M. Dulac	1904	24.	M. Besson	1926
10.	M. Jench dit Bardin	1906	25.	M. Dauplay	1927
11.	M. Emmerich	1907	26.	M. Garric	1929
12.	M. Sale	1907	27.	M. Dauplay	1931
13.	M. Jench dit Bardin	1908	28.	M. Thierry	1932
14.	M. Marty	1910	29.	M. Fendler	1934
15.	M. Boucier	1911		Délégation	
				M. Fendler	1934

ภาษีอากรแสตมป์ และ ภาษีสรรพสามิต

ก. ภาษีอากรแสตมป์

นับแต่ปี 1894 ที่ฝรั่งเศส เข้ามาปกครองเมืองอัตตะปือ ในสะใหม่ พะธาตุวังสาไม เป็นเจ้าเมือง. ฝรั่งเศส ได้ออกกฎหมายให้ผู้ชายลาว ที่มีอายุ 18-60 ปี ให้ไปเสียเวรให้ฝรั่ง อย่างน้อย 100 วันต่อปี. ได้จัดประเภทผู้ชายลาว เป็น 2 ประเภท คือ : ลาวลุ่ม และ ลาวสูง ต้องไปเสียเวรเดือนละ 16 วัน, ลาวเทิง ต้องไปเสียเวร เดือนละ 20 วัน, ก้าบ่สามารถไปด้วยตัวเองได้ ก็ต้องจ้างคนไปเสียเวรแทน ค่าจ้างในเวลานั้น เป็นเงิน 50-100 กีบ, ก้าบ่ไปเอง หรือ บ่จ้างคนไปแทน จะต้องกักคุก หรือ กักปับใหม่อย่างหนัก หรือ ก้าบ่ไปเอง หรือ บ่สามารถหาคนไปเสียเวรแทนได้ จะต้องเสียเงินให้หลวง (ฝรั่งเศส) คนละ 4.30 กีบ ต่เดือน สะเพาะคนลาว และ ลาวสูง, ก้าเป็นลาวเทิง จะต้องเสียคนละ 2.40 กีบ ต่เดือน ก้าเป็นคนต่างประเทศ ฮาวเอเชีย จะต้องเสียคนละ 7 กีบ ต่เดือน (ประหวัดสาดลาว หน้า 227).

นอกจากนั้น, ชายฉะดับลาวทุกคน ยังจะต้องกักเกบไปออกแรงบริจาคอีก ปีละ 3 เดือน ๆละ 16 วัน สะเพาะลาวลุ่ม และลาวสูง ได้ค่าจ้างวันละ 0.40 กีบ, ส่วนลาวเทิง ต้องไปเสียเวรครั้งละ 20 วันๆละ 0.20 กีบ ก้าบ่ไป หรือ บ่จ้างคนไปแทน จะกักปับใหม่.

ภาษีอากรแสตมป์ของฝรั่งเศส เสียกับชายฉะกันลาว ได้จัดเป็นตารางดังนี้ :-

ປະເພດແຮງງານ	ປະເພດຂອງຄົນ		
	ລາວລຸ່ມ ແລະ ລາວສູງ	ລາວເທິງ	ຕ່າງດ້າວ ລາວເອເຊັຍ
ກ. ເກນແຮງງານບໍ່ຈ່ຽຍ ຄ່າຈ້າງ			
+ ຕໍ່ປີ	100	100	
+ ໄປແຕ່ລະເທື່ອ (ວັນ)	16	20	
+ ກ້າບໍ່ໄປຕ້ອງເສັຍເງິນ ຕໍ່ເທື່ອ	4.30	2.40	7
ຂ. ເກນໄປເຮັດວຽກໄດ້ ຄ່າຈ້າງ			
+ ໄປເຮັດວຽກປີລະ 3 ເທື່ອໆລະ (ວັນ)	16	20	
+ ໄດ້ຄ່າແຮງງານວັນລະ	0.40	0.20	
ລວມ 2 ປະເພດ ຕ້ອງເຮັດ ວຽກປີລະ (ວັນ)	148	160	
ຄິດເປັນຮ້ອຍລະຂອງເວລາ ທັງປີ	40.55%	43.84%	

ອີງໃສ່ຕາຕະລາງນີ້ ຈະເຫັນໄດ້ວ່າ ຊາຍຊະກັນລາວ ກຶກເກນໄປເຮັດ ວຽກໃຫ້ຝຣັ່ງເສດ ປີລະ 148-160 ມື້ ກ້າລວມທັງເວລາໄປ ແລະ ກັບ ເວລາ ເຮັດວຽກ ປີໜຶ່ງ ປະມານ 265-295 ວັນ. ຊາຍຊະກັນລາວ ຈະມີເວລາ ຫາ ລ້ຽງຄອບຄົວ ພຽງແຕ່ປີລະ 70-97 ມື້ເທົ່ານັ້ນ. ດັ່ງນັ້ນ ພາລະຄອບຄົວ ຈຶ່ງ ຕົກເປັນພາລະຂອງຜູ້ຍິງແບກຫາບເກືອບທັງໝົດ.

๒. ภาษีภาษี

ภาษีภาษีของฝรั่งเศสกับคนลาว ແມ່ນຝຣັ່ງເສດ ປະຕິບັດ ຢ່າງເຂັ້ມງວດ ແລະ ເອົາເປັນເອົາຕາຍ (ທອງສາ ໄຊຍະວົງຄໍາດີ ໜ້າ 29) ฝรั่งได้วางกิดเกนภาษีภาษี และ ภาษีล้างโทด ภาษีหลีกหลีกภาษี ເສັຍພາສີ ໂດຍກໍານົດໂທດໄວ້ວ່າ ຜູ້ໃດໄປເສັຍພາສີຊ້ໍາ (ບໍ່ກົກຕາມກໍານົດ) ຈະກົກປັບໃໝ 7-20 ກີບ ແລະ ກົກຄຸກ ແລະ ເຮັດວຽກໜັກ ແຕ່ 10 ວັນ ເຖິງ 1 ເດືອນ. ฝรั่งเสด ได้กำนิดพาสีไว้ 2 ประเพดถี :

พาสีหางกิง : ถีพาสี ที่ต้องเสียเป็นประจำทุกปี หลี ເວລາທີ່ກໍາ ນົດໃຫ້ເສັຍຕາຍໂຕ ถี :

1. **พาสีค่าหัวคน** เก็บจากผู้ชาย อายุ 18-60 ปี อัดตามภาษี เสียปรุงแปง เป็นแต่ละไลยะ ฉลี่ย 1897 ลาวลุ่มเสีย คนละ 0.50 กีบ ปี 1919 เสียคนละ 2.50 กีบ, ปี 1940 ลาวลุ่ม และ ลาวสูง คนละ 9.60 กีบ, ลาวเทิงเสีย 4.80 กีบ ถ้าต่างด้าวคนเอเฉีย 12.50 กีบต่ำปี.

2. **ภาษีกเว้นภาษีเป็นทะหาน** ฝรั่งเสด ได้ออกกิดหมาย กำนิดให้ชายฉะกันทุกคน ต้องเป็นทะหาน หลีต่างหลอด ไลยะหนึ่ง ก้างใผบ่ยากเป็น ต้องเสียค่ายกเว้น หลีค่าใบ ต่างปีฐูบประพันคนละ 20 กีบ.

3. **ພາສີຝິ່ນ** ຕັ້ງແຕ່ປີ 1916 ເປັນຕົ້ນມາ ຝຣັ່ງກຳນົດໃຫ້ຊາຍ ລາວສູງທຸກຄົນເສັຍພາສີຝິ່ນ ຄົນລະ 1 ປ່ຽ (1 ປ່ຽ=480 ກຼາມ) ເມື່ອເສັຍພາສີຝິ່ນແລ້ວ ຈະໄດ້ຮັບຍົກເວັ້ນ ການເສັຍສ່ວຍ ແລະຄ່າໄປເຮັດວຽກປະຈຳປີ.

4. **ພາສີຮ້ານຄ້າ (ປະຕັງ)** ເຈົ້າຂອງຮ້ານຄ້າ ທີ່ເປັນຈີນ ແລະ ຫວຽດນາມ ຕ້ອງເສັຍພາສີ ປີລະ 2 ກີບ ປີຕໍ່ມາເພີ້ມຂຶ້ນຕາມ ລຳດັບ. ຄົນລາວ ແລະ ຝຣັ່ງ ບໍ່ຕ້ອງເສັຍ. ແຕ່ຄົນລາວ ບໍ່ຄ່ອຍ ມີໃຜເປີດຮ້ານຄ້າ ເພາະບໍ່ມີເງິນທຶນ ແລະ ບໍ່ມີເວລາ ເພາະ ຜູ້ຊາຍ ຕ້ອງໄປເຮັດວຽກໃຫ້ຫລວງ ສ່ວນແມ່ຍິງ ຕ້ອງເຮັດນາ ແລະ ລ້ຽງລູກຢູ່ເຮືອນ.

5. **ພາສີຄ່າຕົ້ມເຫລົ້າ ແລະ ດື່ມເຫລົ້າ** ຝຣັ່ງຕັ້ງໂຮງງານຕົ້ມ ເຫລົ້າ ໃນຫວຽດນາມ ເປັນໂຮງງານຜູກຂາດການຜະລິດເຫລົ້າ ແລະ ຂາຍເຫລົ້າໃນອິນໂດຈີນ ຜູ້ໃດຕ້ອງການຕົ້ມເຫລົ້າ ແລະ ຂາຍ ເຫລົ້າ ຕ້ອງເສັຍພາສີໃຫ້ໂຮງງານ ປີລະ 20ກີບ ຕໍ່ໝໍ້ຕົ້ມເຫລົ້າ ໜ່ວຍໜຶ່ງ (ອັດຕາປີ 1901). ພ້ອມກັນນີ້ ຝຣັ່ງເສດ ຍັງເກັບ ພາສີດື່ມເຫລົ້າຄົວເຮືອນໜຶ່ງ 0.25 ກີບຕໍ່ປີ (1901) ບໍ່ວ່າ ຄອບຄົວນັ້ນຈະດື່ມ ຫລືບໍ່ກໍ່ຕາມ. ຕໍ່ມາປີ 1925 ໄດ້ເພີ້ມ ເປັນ 5 ເທົ່າ.

6. **ພາສີຄ່າຫົວຊ້າງ** ຜູ້ມີຊ້າງຕ້ອງເສັຍພາສີ ແລະ ເວລາຂາຍ ກໍ່ ຕ້ອງເສັຍພາສີອາກອນຕື່ມອີກ (ບໍ່ໄດ້ກຳນົດໄວ້ລະອຽດ).

7. **ພາສີຍານພາຫະນະ ແລະ ສັດແກ່ກວຽນ (ງົວ)** ງົວ 1ຄູ່ ກວຽນ 1 ຫລັງ ເສັຍ 10 ກີບຕໍ່ປີ.

8. **ພາສີປືນ** ເຈົ້າຂອງປືນ ຕ້ອງເສັຍພາສີດັ່ງນີ້ : ປືນແກັບ, ປືນເພິ່ງ 5 ກີບຕໍ່ປີ, ປືນສູກຊອງ ຫລືປືນອື່ນໆ ເສັຍລໍ່າກ້ອງລະ 10 ກີບ, ປືນແຝດປືລະ 20 ກີບ. ຕໍ່ມາອີກ 5 ປີ ເສັຍເພີ້ມເປັນ 2 ເທົ່າ (ທອງສາ ໄຊຍະວົງຄໍາດີ ໜ້າ 30-31).

9. **ຄ່າປັບໃໝ** ເກັບຈາກຜູ້ທີ່ກະທໍາຜິດກົດໝາຍຕ່າງໆ ເຊັ່ນ ຜູ້ມາເສັຍພາສີຊ້າ, ຜູ້ບໍ່ໄປເຮັດວຽກຫລວງ, ຜູ້ຫລົບຫລີກການເກນທະຫານ, ຜູ້ເສັຍຄະດີ, ເປັນຕົ້ນ.

<u>**ພາສີທາງອ້ອມ**</u> : ເກັບຈາກວິສາຫະກິດ ແລະກິດຈະການຕ່າງໆທາງເສດຖະກິດ ແລະ ອື່ນໆ ດັ່ງນີ້ :

1. ພາສີກະສິກໍາ ອຸດສາຫະກໍາ ການຂຸດຄົ້ນບໍ່ແຮ່ (ບໍ່ໄດ້ກໍານົດຕາຍໂຕ).

2. ພາສີຕົ້ນໄມ້: ຕົ້ນໄມ້ປະເພດຕ່າງໆ ເຊິ່ງເຈົ້າຂອງສວນຈະຕ້ອງເສັຍເວລາຂາຍສິນຄ້າ ເຊັ່ນ ສວນຢາ, ກາເຟ, ຊາ, ໝາກແໜ່ງ, ກ່ອດິນ, ກ່ອເຫລືອງ, ໝາກພິກ ແລະ ອື່ນໆ (ບໍ່ໄດ້ກໍານົດລະອຽດ).

3. ພາສີຈາກອຸດສາຫະກຳ ແລະ ການຄ້າ ເກັບຈາກເຈົ້າຂອງ ບໍລິສັດ ຄື : ການຂົນສົ່ງ, ໂຮງສີເຂົ້າ, ໂຮງເລື່ອຍໄມ້, ບໍລິສັດ ການຄ້າຕ່າງໆ ສ່ວນຫລາຍເປັນຂອງຝຣັ່ງເສດ.

4. ອາກອນຕ່າງໆ ມີອາກອນສິນຄ້າຂາເຂົ້າ-ຂາອອກ ອາກອນ ຈົດທະບຽນບັນຊີຊັບສິນ, ອາກອນໜັງສືເດີນທາງ, ອາກອນ ສະແຕມ, ເຫລົ້າຕ່າງປະເທດ, ອາກອນເກືອ, ອາກອນນ້ຳມັນ ເຊື້ອໄຟ, ອາກອນໄມ້ຂີດໄຟ, ອາກອນຂາຍສັດ, ອາກອນການ ພະນັນ ເປັນຕົ້ນ (ທອງສາ ໄຊຍະວົງຄຳດີ 30-32).

ຂະບວນການຕໍ່ສູ້ຂອງຊາວອັດຕະປື ຕໍ່ການກົດຂີ່ຂູດຮີດ ຂອງຈັກກະພັດຝຣັ່ງເສດ

ນັບແຕ່ມີສັນຍາລະຫວ່າງ ຝຣັ່ງ-ສຍາມ ສະບັບລົງວັນທີ 3 ຕຸລາ (10) 1893 ໄດ້ເຮັດໃຫ້ອານາຈັກລ້ານຊ້າງ ໃນປະຫວັດສາດ ເຊິ່ງໄດ້ຄົງຕົວມາ ໄດ້ພັນກວ່າປີນັ້ນ ໄດ້ກືກພວກສຍາມ ແລະ ຈັກກະພັດຝຣັ່ງ ແບ່ງກັນຄອບຄອງ ນັ້ນ ແມ່ນ " ສັດຕູປະຫວັດສາດ " ຂອງປະຊາຊົນລາວ. ການເກັບສ່ວຍ, ການກົດຂີ່ ຂູດຮີດຜຣາງາບ, ການຈ່ອງຈ່ຳ, ການກວາດຕ້ອນຄົນລາວ ໄປເປັນຊະເລີຍ, ໄປເປັນຂ້າທາດ, ການຈັບລາວເທິງໄປຂາຍເປັນທາດ ຂອງພວກສຍາມ ແລະ ຈັກກະພັດຝຣັ່ງນັ້ນ " ເປັນຮອຍແຄ້ນ ທີ່ຝັງເລິກລົງໃນດວງໃຈ ຂອງຄົນລາວ ທັງຊາດ " (ປະຫວັດສາດການຕໍ່ສູ້ຂອງກ່ອງທັບ ແລະ ປະຊາຊົນ ໜ້າ 53).

ເພື່ອຕ້ານຕໍ່ການຂູດຮີດຜຣາງາບ ແລະການເກັບສ່ວຍຢ່າງໂຫດຫ້ຽມ ທາລຸນຂອງນັກລ່າເມືອງຂຶ້ນຝຣັ່ງ ຈຶ່ງມີຂະບວນການລຸກຂຶ້ນຕໍ່ສູ້ ທົ່ວປະເທດ. ໃນທີ່ນີ້ ຈະກ່າວສະເພາະ ທີ່ກ່ຽວພັນກັບອັດຕະປືເທົ່ານັ້ນ.

I. ຂະບວນການຕໍ່ສູ້ຂອງຊາວອັດຕະປື ພາຍໃຕ້ການນຳຂອງ ສັງຄີ ວໍຣະຣາດ (1900-1901)

ໂດຍສືບຕໍ່ຂະບວນຕໍ່ສູ້ ຂອງຊົນເຜົ່າລາວເທິງ ຕ້ານການເກັບສ່ວຍ ແລະລັກຄົນໄປຂາຍເປັນຂ້າທາດ ຂອງພວກສຍາມ ແລະ ຂະບວນຂອງເຈົ້າໂອ້ ເຈົ້າອິນ ຕ້ານການປົກຄອງຂອງສຍາມ ເພື່ອປົດປ່ອຍແຜ່ນດິນອອກຈາກຄໍ ປະຊາຊົນອັດຕະປື, ແຕ່ເມື່ອສະໄໝການຍຶດຄອງຂອງສຍາມແລ້ວ ຈັກກະພັດຝຣັ່ງ ກໍ່ໄດ້ໂດດເຂົ້າມາ ໄດ້ເພີ້ມການກົດຂີ່ຂູດຮີດ ຊາວອັດຕະປື ໃຫ້ໜັກຂຶ້ນ ຕື່ມອີກ.

ທ່ານ ສັງຄີ ວໍຣະຣາດ ເກີດຢູ່ເມືອງໄຊເສດຖາ (ເດີມເປັນເມືອງອັດຕະປື) ເຊື້ອໃຈວ່າ ເກີດຢູ່ບ້ານວັດຫລວງ ເມືອງເກົ່າ (ຜູ້ຂຽນ) ເພິ່ນໄດ້ນໍາພາທະຫານອັດຕະປື 39 ຄົນ ຕາມຄໍາສັ່ງຂອງພວກສຍາມ ໃຫ້ໄປຕໍ່ສູ້ກັບທະຫານຝຣັ່ງ ທີ່ກໍາລັງເຄື່ອນຂຶ້ນມາຕາມລໍານໍ້າຂອງ ມາເກີງຄອນພະເພັງ ໃນປີ 1893 ການສູ້ຮົບດັ່ງກ່າວ ທະຫານອັດຕະປື 39 ຄົນ ໄດ້ສູ້ຮົບຈົນສຸດຄວາມສາມາດ ແຕ່ບໍ່ສາມາດສະກັດກັ້ນ ການບຸກຄືບໜ້າຂຶ້ນມາຂອງຝຣັ່ງເສດໄດ້. ທະຫານ 39 ຄົນ ໄດ້ກັບຄືນອັດຕະປີດ້ວຍຄວາມປອດໄພ.

ຕໍ່ມາຝຣັ່ງເສດ ກໍໄດ້ເຂົ້າມາປົກຄອງ ເມືອງອັດຕະປື, ໄດ້ເກນຜູ້ຊາຍຊະກັນ ໃຫ້ໄປເຮັດວຽກໃຫ້ຫລວງ, ເກັບສ່ວຍຕ່າງໆ ຢ່າງໜັກໜ່ວງ ປະຊາຊົນບໍ່ສາມາດຫາເງິນເສັຍສ່ວຍໄດ້ ກໍພາກັນແຕກໜີໄປລີ້ຢູ່ຕາມປ່າດົງ ມີແຕ່ແມ່ຍິງ ເດັກນ້ອຍ ຢູ່ບ້ານ. ຜູ້ໄປເຮັດວຽກໃຫ້ຫລວງ ຕາມການເກນຜູ້ຊາຍ ກໍບໍ່ໄດ້ສ້າງຢູ່ທໍາກິນ ມີແຕ່ແມ່ຍິງເຮັດນາເຮັດສວນ ສ່ວນຜູ້ຊາຍມີແຕ່ໄປເຮັດວຽກໃຫ້ຫລວງ ບໍ່ໄດ້ເງິນມາອຸດໜູນຈຸນເຈືອຄອບຄົວ. ປະຊາຊົນທຸກຍາກແສນສາຫັດ.

ທ່ານ ສັງຄີ ວໍຣະຣາດ ກັບອ້າຍແກ້ວ ຈຶ່ງໄດ້ກໍ່ຕັ້ງຂະບວນການຕໍ່ສູ້ ດ້ວຍອາວຸດຕ້ານພວກລ່າເມືອງຂຶ້ນຝຣັ່ງ ໂດຍແບ່ງຄວາມຮັບຜິດຊອບກັນຄືໃຫ້ທ່ານສັງຄີ ວໍຣະຣາດ ເຄື່ອນໄຫວຢູ່ເຂດເມືອງອັດຕະປື ສ່ວນອ້າຍແກ້ວນັ້ນເຄື່ອນໄຫວຢູ່ເຂດເມືອງສາລະວັນ.

ເພິ່ນໄດ້ປຸກລະດົມປະຊາຊົນບັນດາເຜົ່າຢູ່ເຂດເມືອງອັດຕະປື (ແຂວງອັດຕະປື) ໃຫ້ມີຄວາມຕື່ນຕົວ ສາມັກຄີກັນ ຫ້າວຫັນເຂົ້າຮ່ວມຂະບວນການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງ ທີ່ກົດຂີ່ຂູດຮີດແຮງງານ ແລະ ເກັບສ່ວຍຈາກປະຊາຊົນ.

ປີ 1901 ທ່ານ ສັງຄີ ວໍຣະຣາດ ໄດ້ນຳພາກອງທະຫານອັດຕະປື ປະກອບອາວຸດພົ້ນເມືອງເຂົ້າໂຈມຕີທະຫານສົ້ວ ຂອງຝຣັ່ງຢູ່ດ້ານຝັ່ງຜດາ ເມືອງໄຊເສດຖາ ເຮັດໃຫ້ພວກເຂົາເສັຍຫາຍຫລາຍ. ພວກລ່າເມືອງຂຶ້ນ ມີຄວາມຢ້ານກົວ ໄດ້ກອບກຳລັງຈາກປ້ອມຕ່າງໆ ມາຕໍ້ານໂຮມກັນຢູ່ດ້ານຝັ່ງຜດາ ເພື່ອຮັກສາເມືອງອັດຕະປື.

ໄຊຊະນະ ແລະທ່າຂະຫຍາຍຕົວ ຂອງຂະບວນການຕໍ່ສູ້ ຂອງປະຊາຊົນໃນເມືອງອັດຕະປື ໄດ້ເຮັດໃຫ້ຝຣັ່ງ ຕ້ອງລະດົມກຳລັງ ແລະດຳເນີນການກວາດລ້າງ ປາບປາມປະຊາຊົນ ເພື່ອດັບສູນຂະບວນການຕໍ່ສູ້ຂອງປະຊາຊົນ. ພ້ອມກັນນັ້ນ, ພວກຝຣັ່ງກໍ່ປະກາດວ່າ " ຈະຫລຸດຜ່ອນການເສັຍສ່ວຍ ແລະການເກນແຮງງານ ". ຝຣັ່ງໄດ້ເຊີນ " ທ່ານ ສັງຄີ ວໍຣະຣາດ ເຂົ້າພົບປະເຈລະຈາ ". ພ້ອມກັນນັ້ນ ກໍ່ໄດ້ໃຫ້ກຳລັງຂອງຕົນ ເລັດລອດເຂົ້າໄປຮ່ວມ ໃນກອງກຳລັງຂອງຂອງທ່ານ ສັງຄີ ວໍຣະຣາດ. ກຳລັງພວກນີ້ ຈຶ່ງໄດ້ຈັບໂຕທ່ານ ສັງຄີ ມາມອບໃຫ້ຝຣັ່ງ ຢູ່ເມືອງອັດຕະປື.

ເຫດການດັ່ງກ່າວ ໄດ້ສ້າງຄວາມໂກດແຄ້ນ ໃຫ້ປະຊາຊົນເມືອງອັດຕະປື ແລະ ກຳລັງຕໍ່ສູ້ຂອງເພີ່ນ. ພາຍຫລັງທ່ານ ສັງຄີ ວໍຣະຣາດ ໄດ້ເສັຍຊີວິດແລ້ວ ກຳລັງຂອງເພີ່ນ ທີ່ຍັງເຫລືອ ໄດ້ແຕກໜີເຂົ້າປ່າ ເພື່ອໄປຮ່ວມກັບ ຂະບວນການຂອງອ້ຽແກ້ວ ເພື່ອສືບຕໍ່ການຕໍ່ສູ້ກັບຝຣັ່ງຕໍ່ໄປ.

II ຂະບວນຕໍ່ສູ້ພາຍໃຕ້ການນຳຂອງອ້າຍແກ້ວ ອ້ຽກົມມະດຳ (1901-1937)

" ອ້າຍແກ້ວ " ຊື່ເດີມຊື່ວ່າ " ມີ " ຊາວບ້ານມັກເອີ້ນວ່າ " ນາຍມີ " ຊົນເຜົ່າແຈະ (ເຜົ່າໝຶ່ງຂອງລາວເທິງ) ເກີດຢູ່ຈ່າວານ ເມືອງທ່າແຕງ ແຂວງສາລະວັນ (ໃນເມື່ອກ່ອນ ປັດຈຸບັນຄືແຂວງເຊກອງ). ຍ້ອນເພິ່ນມີຈິດໃຈຮັກຄວາມເປັນທຳ. ຮັກຊາດ. ມີຈິດໃຈກວ້າງຂວາງ ທັງເປັນໝໍຢາພື້ນເມືອງ ເປັນທີ່ເຊື່ອກືຂອງປະຊາຊົນ ປະຊາຊົນຈຶ່ງເອີ້ນເພິ່ນວ່າ " ອ້າຍແກ້ວ ຫລື ພູ້ມີບຸນ ".

ຄະນະນຳພາ ການຕໍ່ສູ້ຂອງອ້າຍແກ້ວ ແມ່ນອ້ຽກົມມະດຳ (ເຜົ່າລະເວນ). ອ້ຽພະນ້ອຍ (ເຜົ່າຍາເຫີນ). ອ້ຽນາງ (ເຜົ່າຕະລຽງ). ອ້າຍແກ້ວ ເປັນຄົນສະຫລາດ ຫລັກແຫລມ ມີຄວາມຄິດກວ້າງຂວາງ ໄດ້ເຕົ້າໂຮມເອົາຜູ້ຮັກຊາດເຜົ່າຕ່າງໆໄວ້ໄດ້ຫລາຍຄົນ. ທ່ານເປັນນາຍທະຫານທີ່ສະຫລາດ ໄດ້ເຕົ້າໂຮມກຳລັງຊົນເຜົ່າໄດ້ຫລາຍ ຈັດຕັ້ງເປັນກອງທະຫານ ປະກອບອາວຸດ ທີ່ປະດິດຂຶ້ນເອງ ຄືປືນເພິ້ງ. ໜ້າໝ້ອງ. ຫອກ. ດາບ. ເຂດທີ່ໝັ້ນທຳອິດ ຂອງຂະບວນການຂອງທ່ານ ອ້າຍແກ້ວ ຕັ້ງຢູ່ບ້ານຕອກ ຕາແສງເຊກອງ ເມືອງເຊກອງ ແຂວງສາລະວັນ (ປັດຈຸບັນເປັນແຂວງເຊກອງ).

ວັນທີ 12 ເມສາ (4) 1901 ອ້າຍແກ້ວ ນຳກອງທະຫານຮັກຊາດ ດຳເນີນການເຄື່ອນໄຫວເທື່ອທຳອິດ ໂຈມຕີ ກອງທະຫານຝຣັ່ງ ຢູ່ວັດທ່າແຕງ. ທະຫານ 1.500 ຄົນ ຂອງອ້າຍແກ້ວ ໄດ້ປິດລ້ອມກອງທະຫານຝຣັ່ງ ເຊິ່ງບັນຊາໂດຍ ເຣມີ (M. Remy Commissaire) ເຈົ້າແຂວງສາລະວັນ ແຕ່ທະຫານຝຣັ່ງ ໄດ້ຜ່າລົ້ງລ້ອມແຕກໜີໄປສາລະວັນ.

ໃຊຊະນະ ຄ້ຳປະຫວັດສາດ ຂອງອ້ຳແກ້ວ ທີ່ທ່ຳແຕ່ງນີ້ ໄດ້ໃຂສ້ຳງກ່ຳດ ໃໝ່ ໃຫ້ແກ່ກ່ຳນລຸກຮື້ຂຶ້ນປະກອບອ່ຳວຸດ ເພື່ອຕ້ຳສູ້ຢ່ຳງກວ້ຳງຂວ້ຳງ ແລະ ຂະ ຫຍ່ຳຍຕົວໄປທົ່ວທຸກແຂວ້ຳ ໃນພ່ຳກໃຕ້ຂອງລ່ຳວ.

ຝຣັ່ງຢ້ຳນກົວຫລ່ຳຍ ຄ້ຳປະກົດໃນຈົດໝ່ຳຍຂອງກ່ຳດສະຕ່ຳນີ (Guastani) ເຈ້ຳເມືອງອັດຕະປື ສ່ຳງເກ່ຶງບ່ຳດຫລວ້ຳ ກວກລ່ຳດ ສະບັບລົ່ຳວັນທີ 8 ມີກຸນ່ຳ 1901 ເວ້ຳວ່ຳ : ຢູ່ພູພຽ້ຳງດ່ຳງບໍ່ລິເວນ ສະກ່ຳນະກ່ຳນ ເປັນໄປຢ່ຳງຮ້ຳຍແຮ້ຳ ໜັກໜ່ວ້ຳ, ເພື່ອນຮ່ວມງ່ຳນຂອງຂ້ຳພະເຈ້ຳ ຢູ່ສ່ຳລະວັນ ແລະຈ່ຳປ່ຳສັກ ລ້ວນ ແຕ່ກ່ອຍໄປຫ່ຳລ່ຳນ້ຳຂອ້ຳ ເພ່ຳະວ່ຳກ່ຳນກະບົດເປັນອຸປະສັກ.

ພວກຝຣັ່ຳ ໄດ້ເອ່ຶຳກ່ຳລ້ຳງຈ່ຳກພ່ຳກເໜ່ືອ ແລະ ພ່ຳກກ່ຳງຫວຽດນ່ຳມ ມ່ຳເພ່ີມ ເພ່ືອປ້ອ້ຳງກັນ ເມືອ້ຳງອັດຕະປື, ສ່ຳລະວັນ ແລະ ແຂວ້ຳງຈ່ຳປ່ຳສັກ ພວກ ເຂ່ຶຳໄດ້ຈັດຕ້ຳ້ຳງກອ້ຳງພົນພ່ິເສດຂ້ຶ້ນ 2 ກອ້ຳງພົນ ຢູ່ພ່ຳກໃຕ້ຂອ້ຳງພູພຽ້ຳງບໍ່ລະເວນ ເພ່ືອກຽມບຸກທ່ີໝ້ັນກ່ຳລ້ຳງຂອ້ຳງອ້ຳງແກ້ວ ຢູ່ໝອ້ຳງນ່ົກເຄ້ຳ (ໝອ້ຳງບ່ົກເກ່ົ່ຳ).

ປ່ ີ 1902 ຢູ່ໃນເມືອ້ຳງສ່ຳລະວັນ, ຂະບວນລຸກຮ້ຶ້ຂ້ຶ້ນ ໄດ້ສ່ືບຕ່ ແລະ ຂະ ຫຍ່ຳຍຕົວຢ່ຳງແຂ່ຳງແຮ້ຳ ກ່ຳນປະທະກັນ ລະຫ່ວ່ຳງກ່ຳລ້ຳງຕ່ ຕ້ຳ້ນ ແລະ ທະຫ່ຳ້ນ ຝຣັ່ຳ ໄດ້ເກ່ີດຂ້ຶ້ນຢູ່ເລ້ ຶ້ອຍໆ. ໃນຕະຫລອດໄລຍະ 2 ປ່ ີ ພວກຝຣັ່ຳ ໄດ້ເອ່ຶຳທະ ຫ່ຳ້ນສ ຶ້ ຈ່ຳນວນຫລ່ຳ້ຍ ຈ່ຳກຄ້ຳ້ຍທ່ຳ້ແຕ່ຳ ເພ່ືອມ່ຳ້ປ່ຳ້ບປະຊ່ຳ້ຊ ຶ້ນ ແລະ ກ່ຳ ລ້ຳ້ຍັກຊ ຳ້ດ ໂດຍກ່ຳ້ນນ່ຳ້ຳຂອ້ຳ້ງອ ຶ້ ຳ້ງທ ຳ້ (ຫ ຶ ຳ້ ຳ ຶ ຳ ຶ ຳ ຶ

ປີ 1905 ກຳລັງຮັກຊາດປະກອບອາວຸດ ໄດ້ຂະຫຍາຍຕົວຢ່າງກວ້າງ ຂວາງ ແລະ ໂຈມຕີ ຄ້າຍໝອງນົກເຄົ້າ ໃນວັນທີ 30 ພະຈິກ (11) 1905. ວັນ ທີ 4 ມັງກອນ (1) 1906 ພວກລ່າເມືອງຂຶ້ນຝຣັ່ງ ໄດ້ຈັດກອງປະຊຸມ ເພື່ອຄົ້ນ ຄວ້າສະພາບການທາງທະຫານ ຢູ່ເມືອງສາລະວັນ ເພື່ອວາງແຜນຕອບໂຕ້ ກຳ ລັງຮັກຊາດ.

ເດືອນເມສາ (4) 1906 ຝຣັ່ງໄດ້ຈັດຕັ້ງກອງພົນນ້ອຍຂຶ້ນ ເຂົ້າຕີ ກອງທະຫານຂອງອ້ຶງທອງ ຢູ່ພູກະແຕ ອ້ຶງທອງໄດ້ຕໍ່ສູ້ ຢ່າງພິລະອາດຫານ ແຕ່ ຍ້ອນກຳລັງຂ່ອງຝຣັ່ງ ມີຈຳນວນຫລາຍ ມີອາວຸດທັນສະໄໝ ຈຶ່ງເຂົ້າຍຶດທີ່ໝັ້ນ ອ້ຶງທອງໄດ້. ອ້ຶງທອງ ຈຳເປັນຕ້ອງນຳກຳລັງກອຍຂ້າມນ້ຳຂອງ ໄປຫາຄະນະຜູ້ ມີບຸນ ຢູ່ຝັ່ງຂວາແມ່ນ້ຳຂອງ ແຕ່ກີກອຳນາດສຍາມຈັບໄດ້ ເອົາອ້ຶງທອງໃສ່ຄຸກ ເກີ່ງປີ 1908 ພວກສຍາມຈຶ່ງປະຫານຊີວິດອ້ຶງທອງ.

ເພື່ອດັບມອດ ຂະບວນຕໍ່ສູ້ຂອງອ້ຶງແກ້ວ. ພວກຝຣັ່ງອາໄສສັກດິນາ ລາວ ຜູ້ຂາຍຊາດ ໃຫ້ເປັນຜູ້ຕິດຕໍ່ກັບອ້ຶງແກ້ວ ສະເໜີໃຫ້ມີການພົບປະເຈລະ ຈາ ເພື່ອຢຸດຕິການຕໍ່ສູ້. ພວກເຂົາຫລອດອ້ຶງແກ້ວວ່າ " ຈະເຮັດຕາມຄວາມ ຕ້ອງການຂອງປະຊາຊົນທຸກຢ່າງ " ຍ້ອນເຊື່ອຄຳເວົ້າຂອງສັດຕູ ອ້ຶງແກ້ວ ຕົກ ລົງພົບກັບ ໂດໂປຣແຟງດະແລ ເຈົ້າເມືອງສາລະວັນ ໂດຍເອົາວັດກາງ ເມືອງ ສາລະວັນ ເປັນບ່ອນພົບປະກັນ. ຕາມລະບຽບການ ທັງສອງຝ່າຍຈະຕ້ອງກວດ ກາເຊິ່ງກັນ ແລະ ກັນ ກ່ອນການພົບປະກັນ ໃນກອງປະຊຸມ ແລ້ວກຳລັງຂອງທັງ ສອງຝ່າຍ ຈະກອຍອອກໄປ ປະໃຫ້ຫົວໜ້າເຈລະຈາກັນ.

" ເມື່ອສອງຝ່າຍເຂົ້າໂຕະເຈລະນາຜ່ລ້ວ ຜຟ້ງດະຜລ ໄດ້ເອົ້າປຶ້ນ ສັ້ນ ທີ່ເຊື່ອງໄວ້ໃນໝວກ ທີ່ມັນໃສ່ເຂົ້ານາ ຢ້ງອ້ງຜກ້ວ ຕ້ຽຄ້ຽທີ່ ໃນວັນທີ 13/10/1907.

ເມື່ອອ້ງຜກ້ວເສັຍຊີວິດຜລ້ວ. ອ້ງກົມມະດ່ຳ ເຊ່ິ້ງເປັນຜູ້ທີ່ມີປັນຍ້ ສະຫລ້ວດຫລັກຜຫລມ ທ້ວ້ງດ້ານກ້ານທະຫ້ານ. ກ້ານເມືອ້ງ ຜລະ ກ້ານຈັດຕັ້ງ. ກ່ອນອ້ງຜກ້ວຈະເຂົ້າເຈລະຈ້ ກັບຜຟ້ງດະຜລ ກໍ່ໄດ້ມອບໝ້ຽທີ່ນ່ຳພ້ ກ້ານຕ່ໍສູ ໃຫ້ອ້ງກົມມະດ່ຳສືບຕ່ໍ. ອ້ງກົມມະດ່ຳ ໄດ້ວ້ງວິທີພົວພັນກັບເຈົ້ຽກົກ ເຈົ້ຽຫລ່ຳ ເພ່ຳລ້ວເທ້ງ ລ້ວລຸ່ມ ທ້ງພ້ຽໃນຜຂວ້ງ ຜລະ ຕ່ວ້ງຜຂວ້ງ ເພ່ືອ ເຊ່ືອມສ່ຳພັນໃຫ້ຜໜ້ນຜຟ້ນ ລະຫ່ວ້ງເພ່ຳຊົນຕ່ວ້ງໆ ໃນເຂດລ້ວໃຕ້ ຍ້ອນມີ ກ້ານພົວພັນກັນຜໜ້ນ ອ້ງກົມມະດ່ຳ ຈ່ືງສ້ມ້ດ ສ້ວ້ງກ່ຳລັ້ງກອ້ງຫລອນ ໄດ້ ຫລ້ຽ ຢູ່ຫລ້ຽຜຫ່ວ້ງຜຕກຕ່ວ້ງກັນ. ປະຊ້ຊົນຢູ່ຈ່ຳປ້ສັກ. ສີພັນດອນ. ປ້ກ ເຊ. ສ້ລະວັນ ຜລະ ອັດຕະປື ໄດ້ເຂົ້ານ່ວມຂະບວນກ້ານຕ້ານຝຣ່ັ ໂດຽກ້ານ ນ່ຳຂອ້ງອ້ງກົມມະດ່ຳ ຢ່ວ້ງຜຂ້ງຜຮ້ງທ່ີສຸດ.

ຮູບກ້ານຕ່ໍຕ້ານຂອ້ງອ້ງກົມມະດ່ຳ ເພ່ິນໄດ້ຮ້ຽກຮ້ອ້ງຕ່ໍປະຊ້ຊົນ ໃຫ້ ສ້ມັກຄີກັນ ຕ້ານຝຣ່ັ ໂດຽກ້ານບ່ໍເສັຍສ່ວຽ. ບ່ໍເສັຍພ້ສ້ອ້ກອນ. ບ່ໍໄປເປັນ ທະຫ້ານ. ບ່ໍໄປເປັນກູລ (ຄົນຫ້ວ້ມເຄ່ືອ້). ອ້ງກົມມະດ່ຳ ໄດ້ດັດຜປ້ງຕ໋ວໜ້ງສ ຂອ້ມ ນ້ວ້ງເປັນຕ໋ວໜ້ງສ ຂອ້ງຊົນເພ່ຳລ້ວເທ້ງ ໂດຽສະເພ້ະ ເພ່ືອຮັບໃຊ້ວຽກ ງ້ນໂຄສະນ້ວ້ງປຸກລະດົ້ມມວນຊົນ ເພ່ືອຕ້ານຝຣ່ັ. ນອກຈ້ວ້ກນັ້ນ ອ້ງກົມມະດ່ຳ ຍ້ງໃຊ້ກ້ວ້ງປະທັບ ໂດຽສະເພ້ະ ຂອ້ງຕົນຕ່ໍ້ມອ້ກ.

ອ້າງກົມມະດຳ ໄດ້ສ້າງທີ່ໝັ້ນ ຢາຍໄປຕາມຝັ່ງເຊກະຕາງ ຄືທ່ົງຫວາຍ, ທ່ົງຫຸ່ງ, ປ່ົງລີ່ງ, ທ່ົງສາລາ, ທ່ົງລ້ຳ; ພູຫລວງ ... ເພິ່ນໄດ້ຈັດຕັ້ງໜ່ວຍຜະລິດ ອາວຸດເອົາເອງຄື ຕີເຫລັກ, ຫລອມກ໋ວ, ຕົ້ມຂີ້ເຈັຍ ເພື່ອຜະລິດປືນແກັບ ປືນ ເຟ້ ແລະ ປັບປຸງກຳລັງ ເພື່ອກຽມການສູ້ຮົບ.

ພາຍຫລັງອ້າງແກ້ວ ເສັຍຊີວິດແລ້ວ, ພວກລ່າເມືອງຂຶ້ນຝຣັ່ງ ຄິດວ່າ ຈະບໍ່ມີຜູ້ນຳພາຂະບວນການຕໍ່ຕ້ານອີກ ຂະບວນການອາດຈະໝົດໄປເອງ ຝຣັ່ງ ຈຶ່ງໃຊ້ກຳລັງ 1 ກອງພົນນ້ອຍ ບຸກເຂົ້າເຂດທີ່ໝັ້ນ ເພື່ອດັບສູນກຳລັງລຸກຮື້ຂຶ້ນ ຕໍ່ສູ້ຂອງປະຊາຊົນ ແຕ່ພັດກົ໊ກຂະບວນການຕໍ່ສູ້ ດັກສະກັດ ຕີກອງທະຫານພວກ ລ່າເມືອງຂຶ້ນ ຈົນແຕກກະຈາຍໄປ.

ປີ 1914-1918 ປະເທດຢູໂຣບ ແລະ ຝຣັ່ງ ກຳລັງປະເຊີນກັບສົງ ຄາມໂລກຄັ້ງທີ 1, ພວກລ່າເມືອງຂຶ້ນຝຣັ່ງຢູ່ລາວ ກໍ່ບໍ່ໄດ້ປາບປາມປະຊາຊົນ ລາວຫລາຍປານໃດ ແລະ ເວລານັ້ນ ຢູ່ພາກໜືອຂອງລາວ ຂະບວນການຕໍ່ສູ້ ຕ້ານຝຣັ່ງ ກຳລັງຟົດເດືອດ, ພວກເຂົາຈຶ່ງໂຍນກຳລັງໄປພາກໜືອ, ຈຶ່ງເປັນ ໂອກາດໃຫ້ ທ່ານ ກົມມະດຳ ປັບປຸງກຳລັງ ເພື່ອຂະຫຍາຍການຕໍ່ສູ້.

ລະຫວ່າງສົງຄາມໂລກຄັ້ງທີ 1, 1914 ເກ່ົງ 1925 ທ່ານ ກົມມະດຳ ໄດ້ນຳພາປະຊາຊົນ ປັບປຸງເຂດທີ່ໝັ້ນ ແລະ ປັບປຸງກຳລັງຜະລິດອາວຸດ, ຈັດ ຕັ້ງ ການຜະລິດກຸ້ມຕົນເອງ, ຈັດຕັ້ງການຮຽນໜັງສືຂອມ ແລະ ອື່ນໆ ....

ປີ 1925 ທ່ານ ກົມມະດຳ ໄດ້ອອກປະກາດ ເປັນໜັງສືຂອມ ໃນທ່ົວ ພາກກາງ ແລະ ພາກໃຕ້ວ່າ " ພາຍໃນ 2 ປີ ຈະບໍ່ມີຝຣັ່ງຢູ່ເມືອງລາວອີກ, ດິນ ແດນ ບໍລະເວນ ແລະ ທ່ົວປະເທດ ຈະໄດ້ຮັບເອກະລາດ ".

ວັນທີ 30 ມີກຸນາ (6) 1926. ພວກຝຣັ່ງໄດ້ໃຫ້ເຈົ້າເມືອງ ແລະ ນາຍ ດ່ານຂອງຝຣັ່ງ ໄປພົບກັບ ທ່ານ ກົມມະດຳ ສະເໜີວ່າ " ຈະໃຫ້ ທ່ານ ກົມມະດຳ ເປັນຫົວໜ້າເຜົ່າລາວເທິງ ທີ່ໃຊ້ຕົວໜັງສືຂອມທັງໝົດ ພ້ອມກັນນີ້ ກໍ່ມອບສິດ ໃຫ້ເກັບພາສີຄ່າຫົວຄົນ ຈາກປະຊາຊົນລາວລຸ່ມ ແລ້ວມອບໃຫ້ຜູ້ຕາງໜ້າຂອງ ພວກຝຣັ່ງ " ແຕ່ ທ່ານ ກົມມະດຳ ບໍ່ຍອມພົບປະກັບພວກເຈົ້າເມືອງ ແລະ ນາຍ ດ່ານເຫລົ່ານັ້ນ.

1929-1933 ຂະບວນການຕໍ່ສູ້ຂອງ ທ່ານ ກົມມະດຳໄດ້ເຄື່ອນໄຫວແຮງ ຢູ່ສາລະວັນ, ອັດຕະປື ໂດຍສະເພາະດົງບໍ່ລະເວນ. 1,934 ໄດ້ຕັ້ງທີ່ໝັ້ນຂຶ້ນຕື່ມຢູ່ ພູຫລວງ ແລະ ພູພຽງບໍ່ລະເວນ ໄດ້ຕັ້ງໜ້າເພີ່ມພູນ ປູກຝັງ ລ້ຽງງົວຄວາຍ ເພື່ອສະໜອງສະບຽງອາຫານໃຫ້ແກ່ການຕໍ່ສູ້ ຍາວນານ.

ປີ 1936 ພວກລ່າເມືອງຂຶ້ນຝຣັ່ງ ໄດ້ລະດົມກຳລັງໃນອິນໂດຈີນ ເພື່ອ ຕີເຂດພູຫລວງ ແລະ ທົ່ງຫວ້ຽ ເຊິ່ງເປັນເຂດທີ່ໝັ້ນຂອງຂະບວນການຕໍ່ສູ້ ເພື່ອດັບສູນກຳລັງການຕໍ່ສູ້. ພວກເຂົາວາງແຜນສັ່ງຫານ ທ່ານ ກົມມະດຳ ໂດຍໄດ້ອາໄສຄົນລາວທໍລະຍົດຄົນໜຶ່ງ ເປັນຜູ້ພາທາງ ໄປເກົ່ງສຳນັກຂອງທ່ານ ກົມມະດຳ. ພວກສັດຕູໄດ້ຫລອນຕີສຳນັກ ຂອງ ທ່ານ ກົມມະດຳຢ່າງບໍ່ຮູ້ຕົວ ໃນ ເດືອນກັນຍາ (9) 1936 ໄດ້ສັ່ງຫານທ່ານກົມມະດຳ ພ້ອມທັງທະຫານ 6 ຄົນ ຕາຍຄາທີ່ ລູກຊາຍ 2 ຄົນກໍ່ກບາດເຈັບ ແລະ ຈັບໄປຄຸ ທ. ສີທົນ ກົມມະດຳ ແລະ ທ. ຍຸຍສິງ ກົມມະດຳ. ພາຍຫລັງ ທ່ານ ກົມມະດຳ ເສັຍຊີວິດແລ້ວ: ລູກ ຊາຍຜູ້ທີ 3 ຂອງເພິ່ນ ຊື່ ທ. ຄຳພັນ ກົມມະດຳ ກໍ່ໄດ້ສືບຕໍ່ ນຳພາການຕໍ່ສູ້. ຮອດປີ 1937 ທ້າວ ຄຳພັນ ກົມມະດຳ ກໍ່ກຈັບໄດ້ອີກ. ມາຮອດທ້າຍເດືອນ ກໍລະກົດ (7) 1937 ຂະບວນການຕໍ່ສູ້ຈຶ່ງຄ່ອຍໆ ສະຫລາຍຕົວ (ປະຫວັດສາດ ການຕໍ່ສູ້ຂອງ ກອງທັບ ໜ້ 58-70).

ບົດທີ V

ການຕໍ່ສູ້ຕ້ານຝຣັ່ງ ເພື່ອເອກະລາດ ຂອງຂະບວນການລາວອິສະຫລະ

I. ຄວາມເປັນມາ

ຂະບວນການຕໍ່ສູ້ ຂອງຂະບວນການຮັກຊາດ ຂອງ 3 ຊາດ ໃນອິນດູຈີນ ໄດ້ເລີ່ມເປັນຮູບປະທຳ ເບື້ອງຕົ້ນ ໃນວັນທີ 3/2/1930 ຍ້ອນພົນຂອງກອງປະຊຸມຜູ້ຕາງໜ້າ ຂະບວນຮັກຊາດ ຂອງ 3 ປະເທດ ທີ່ປະຊຸມກັນ ໃນວັນທີ 3-7/2/1930 ຢູ່ຮົງກົງ ພາຍໃຕ້ການເປັນປະທານ ຂອງສະຫາຍ ຫງຽນອາຍ ກວັກ. ກອງປະຊຸມໄດ້ຕົກລົງ ຈັດຕັ້ງ " ພັກກອມມູນິດຫວຽດນາມ " ຂຶ້ນ ເພື່ອນຳພາການຕໍ່ສູ້. ຕໍ່ມາຜູ້ຕາງໜ້າຂອງ 3 ປະເທດ ຄື ຫວຽດນາມ, ລາວ ແລະ ກຳປູເຈັຍ ໄດ້ເຫັນດີເປັນເອກະພາບກັນ ປ່ຽນຊື່ " ພັກຄອມມູນິດຫວຽດນາມ " ມາເປັນ " ພັກກອມມູນິດອິນດູຈີນ ". ສຳນັກງານຂອງພັກກອມມູນິດອິນດູຈີນ ຈັດຕັ້ງຮາກຖານຢູ່ພາກອີສານ ຂອງສຍາມ (ໄທ) ໄດ້ເຄື່ອນໄຫວລັບເຂົ້າລາວ, ຜ່ານທາງເລກທີ 13 ໄປຂະເມນ ແລະ ໄຊ່ງ່ອນ (ໂຫຈີມິນ).

ຕໍ່ມາໄດ້ຈັດຕັ້ງ " ພັກແຄ້ນລາວ " ຂຶ້ນ ໃນວັນທີ 7/9/1934. ຢູ່ດອນຊີງຊູ້ ນະຄອນວຽງຈັນ ຕາມການຕົກລົງຂອງ " ພັກກອມມູນິດອິນດູຈີນ ". ໂດຍມີຄະນະບໍລິຫານງານ (ຄະນະກໍ່ຕັ້ງ) 5 ສະຫາຍຄື ສະຫາຍຄຳແສງ, ສະຫາຍ ສະຫວາດ (ຫລື ສຸຣິນ) ຄົນຜິວຂາວ ເປັນຂ້າຣາຊການໂຍທາວຽງຈັນ, ສະຫາຍ ທິດພຸຍ ແລະ ສະຫາຍ ພັນດີ (ຫົວໜ້າຊາວໜຸ່ມ ແລະ ກຳລັງຢູ່ປາກເຊ)

ແລະ .... ໃນນີ້ ເປັນຄະນະປະຈຳ 3 ສະຫາຍ. ມີສະມາຊິກພັກແຄ້ນລາວ ໃນ ເວລານັ້ນ 32 ສະຫາຍ ແບ່ງເປັນ 6 ໜ່ວຍພັກ. ມີສະມາຊິກລາວໜຸ່ມ 25 ຄົນ. ອົງການແມ່ຍິງ 5 ຄົນ. ນັກສຶກສາ ປັນຍາຊົນ ມີ 20 ຄົນ (ນາຍພົນ ສົງກະໂປ ໜ້າ 20).

ວັນທີ 12 ກັນຍາ (9) 1934 " ໜ່ວຍພັກແຄ້ນລາວ " ຢູ່ນະຄອນ ວຽງຈັນ. ບໍ່ໂພນຕ້ວ. ສະຫວັນນະເຂດ. ປາກເຊ. ໄດ້ນຳພາປະຊາຊົນ ປັກທຸງ ແດງ ເພື່ອລະນຶກເຖິງການລຸກຂຶ້ນຕ້ານພວກລ່າເມືອງຂຶ້ນຝຣັ່ງ ຂອງຂະບວນ ການໂຊຫວຽດ-ເງ້ຕິ໋ງ (ຫວຽດນາມ) ຄັ້ງທີ 4.

ຕາມເອກະສານຂອງ ຊີໄອເອ (CIA) ກ່ຽວກັບຄວາມເປັນມາຂອງ ພັກປະຊາຊົນປະຕິວັດລາວ ໄດ້ລະບຸວ່າ : " ແນວຄວາມຄິດ ໃນການຕໍ່ສູ້ ເພື່ອ ຄວາມເປັນເອກະລາດ ຈາກຝຣັ່ງເສດນັ້ນ ບໍ່ໄດ້ເກີດຂຶ້ນ ສະເພາະແຕ່ໃນລາວ ເທົ່ານັ້ນ. ແຕ່ໄດ້ເກີດຂຶ້ນໃນຫວຽດນາມ ແລະ ຂະເມນດ້ວຍ. ໃນຫວຽດນາມ ມີ ໂຫຈີມິນ ແລະ ໃນຂະເມນມີ ເສີ້ຍກມິນ " ເປັນຜູ້ນຳພັກຄອມມູນິດ ຄົນທຳອິດ ຂອງປະເທດທັ້ງສອງນັ້ນ ສຳລັບໃນລາວ ແມ່ນມະຫາຄຳແສນ ອະດີດຂ້າຣາຊ ການໄອຍະການ ເມືອງຫລວງພະບາງເປັນຜູ້ນຳ ໂດຍມະຫາຄຳແສນ ເປັນຜູ້ ນຳຜູ້ທຳອິດ ຂອງຂະບວນການຄອມມູນິດລາວ. ບຸກຄົນທັ້ງ 3 ຄື : ໂຫຈີມິນ. ເສີ້ຍກມິນ ແລະ ມະຫາຄຳແສນ ໄດ້ຮ່ວມກັນປະກາດ ຕັ້ງຄະນະກຳມະການຊີ້ ນຳໃນອິນດູຈີນຂຶ້ນ ໃນປີ 1929 (ພ.ສ 2472) ທີ່ " ກ້ຳປັກປ໋ " ແຂວງດິນກວາງ ພາກເໜືອຫວຽດນາມ ຕິດຊາຍແດນຈີນ.

ຈາກເອກະສານຜ່ມປະຫວັດ ຂອງຊີໄອເອ (CIA) ດັ່ງກ່າວນີ້ ອາດ ຈະມີການຜິດພາດຕ່າງໆທາງດ້ານ ວັນເດືອນປີ ໃນການຈັດຕັ້ງພັກຜູ້ນລາວ ແຕ່ ຍັງຢືນຢັນວ່າ "ຜູ້ລິເລີ້ມກໍ່ຕັ້ງພັກຜູ້ນລາວ ແມ່ນມະຫາຄໍາຜົນ ຫລື ຄໍາຜົງ ອະດີດ ຂ້າ ຣາຊການໄອຍະການ ຫລວງພະບາງ ເຊັ່ນດຽວກັບເອກະສານອື່ນໆ ທີ່ສາມາດ ຫາໄດ້ ".

ທ່ານ ສີຊະນະ ສີສານ ນັກປະພັນຊັ້ນເອກ ຂອງລາວ, ອະດີດກໍາມະ ການສູນກາງພັກປະຊາຊົນ ປະຕິວັດລາວ, ອະດີດລັດຖະມົນຕີວ່າການ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທໍາ ແຫ່ງ ສ.ປ.ປ.ລາວ ໄດ້ກ່າວວ່າ : ພັກຄອມ ມູນິດອິນດູຈີນ ໄດ້ຈັດຕັ້ງຂຶ້ນ ໃນປີ 1930 ຕໍ່ມາໄດ້ມີພັກຜູ້ນລາວ, ເມືອງ ທ່າແຂກ ໄດ້ມີໜ່ວຍພັກກ່ອນໜ່ໃນລາວ ພ້ອມໆກັບເມືອງວຽງຈັນ ມີນັກເຄື່ອນ ໄຫວປະຕິວັດ ຫລາຍຄົນຖືກຝຣັ່ງຈັບ ຂະບວນການປະຕິວັດຖືກສະຫລາຍ ຈົນ ເຖິງປີ 1943 ໜ່ວຍພັກຄອມມູນິດອິນດູຈີນ (ພັກຜູ້ນລາວ) ທີ່ທ່າແຂກ, ບໍ່ໂພນຕ້ວ, ບໍ່ແໜ່ງ, ສະຫວັນນະເຂດ ຈຶ່ງໄດ້ຮັບການຟື້ນຟູ ແລະ ປັບປຸງໃຫ້ ໝັ້ນຄົງ ໂດຍມີຄະນະພັກຜູ້ນລາວ ອັນເປັນພາກສ່ວນໜຶ່ງ ຂອງພັກຄອມມູ ນິດອິນດູຈີນ ເປັນແກນນໍາ.

ທ້າຍປີ 1934-ຕົ້ນປີ 1935 ຂະບວນການເຄື່ອນໄຫວປະຕິວັດຢູ່ລາວ ໄດ້ຂະຫຍາຍຕົວກວ້າງຂຶ້ນ ຢູ່ບໍ່ໂພນຕ້ວ, ບໍ່ແໜ່ງ ມີການແຈກໃບປົວ ປັກທຸງ ແດງ ແລະ ນັດຢຸດງານ ປະທ້ວງຕໍ່ຕ້ານນາຍຈ້າງ ເຊິ່ງເປັນຄົນຝຣັ່ງ.

ວັນທີ 10/5/1940 ฝ่ายฝรั่งเศยละมัน ใช้เวลาพรุ่งแต่ 35 ວັນ ສามาดตีฮะนะ และ ยึดนะคอนหลวงปาธีสได้ ฝรั่งเสดยอมจำนົน ต่ำ กองทับเยัยละมัน และ ภึกปิดอาจุด. สวยโอกาดที่ฝรั่งปลาไสนี้ ยี่ปุ่น ได้เข้ายึดอินดูจีน พวกล่าเมืองขึ้นฝรั่ง จำต้องเสัยอินดูจีน ให้แก่ ยี่ปุ่น.

ในเวลายี่ปุ่นกำลังโค้นล้มฝรั่งยู่นั้น, ละนะปะจำพักดอมมูนิด อินดูจีน ได้ดำเนินกองปะชุม เพื่อชี้น่าขะบวนกาบปะติวัด ในไลยะใหม่ โดยได้กำนົดว่า " สะพาบกาบเวลานี้ กำลังสุกงอม. ทุกหน่วยพัก ต้อง นำพามะหาชົน ลุกขึ้นยึดอำนาด ก่าบปົกคองในท่ออินดูจีน ".

ວັนທี 28 ມีนา (3) 1945 ได้สร้างตั้งเขดที่หมั้น ของกาบปะติวัด ลาวขึ้น ยู่บางแก (ขึ้นกับจังหวัดสากົมนะคอน พากอีสานของไท) มี ชาวหนุ่มลาว และ ทวยดนามต่างด้าว จำนวน 40 คົน เป้นกำลังปะ กอบอาวุด ต่มาได้เพิ่มขึ้น เป้น 120 คົน ให้ชื่อว่า " กองทะหาบอิดสะ หละ ". ขะบวนกาบนี้ ได้เดิบใหย่ขึ้นเลื้อยๆ จินสร้างความกังวินใจ ให้ แก่ฝรั่งเสดยี่ปุ่น ย่างหนักหน่วง.

เดือนเมสา (4) 1945 พายใต้กาบนำพาของบันดาสะหาย สะ มาชิกละอมมูนิดอินดูจีน สะมาคົมกู้ชาดทวยดนาม-ลาว และ ไท ได้ พ้อมกับจัดตั้ง เขดที่หมั้น เพื่อเผิกผอบกาบทะหาบ ให้กำลังปะกอบ อาวุด กรุมลุกขึ้น. หลังจากเผิกผอบแล้ว ก่ได้แจกยาย ให้ไปธับผิด ชอบยู่แต่ละเขดคื : แขวงวรงจัน, ท่าแขก, สะหวับนะเขด, ปากเซ

ເປັນການ ສ້າງກໍາລັງປະກອບອາວຸດ ຍຸດທໍາອິດຢູ່ລາວ ເວລານັ້ນ ສູນການພັກ ຄອມມູນິດ ອິນດູຈີນ ໄດ້ສັບຊ້ອນ ເອົາກໍາລັງທີ່ຈໍາເປັນມາຊ່ວຍ ກອງທະຫານ ລາວອິດສະຫລະ.

ເດືອນ ພຶດສະພາ (5) 1945 ນັກຮຽນ ນັກສຶກສາ ປັນຍາຊົນ ຜູ້ຊົງ ຄຸນວຸດທິ ນາຍທະຫານ ແລະ ຂ້າຣາຊການ ແຕ່ລະທ້ອງຖິ່ນ ໄດ້ເຂົ້າປະຊຸມຢູ່ ວຽງຈັນ ກອງປະຊຸມຄັ້ງນີ້ ສະເດັດເຈັ້ນເພັດຊະຣາດ ແລະ ພະຍາ ຄໍາມ້ວ ວິໄລ ເຂົ້າຮ່ວມກອງປະຊຸມ ໄດ້ຕົກລົງສ້າງຕັ້ງສະມາຄົມ " ລາວເປັນລາວ " ຫລື " ປະເທດລາວເປັນຂອງຄົນລາວ " ໂດຍມີຄະນະກໍາມະການບໍລິຫານ 8 ທ່ານ ຄະນະເລຂາ 3 ທ່ານ.

ໃນການກຽມລຸກຮືຂຶ້ນ, ກໍາລັງລາວອິດສະຫລະ ໄດ້ສົມທົບກັບສະມາ ຄົມ " ລາວເປັນລາວ " ຢ່າງສະນິດແໜ້ນ. ສະມາຄົມລາວເປັນລາວ ມີທ່າຂະ ຫຍາຍທາງການເມືອງ ເປັນ 2 ກຸ່ມ ຄື : ກຸ່ມໜຶ່ງມີທ່າອ່ຽງໄປນໍາເສຣີໄທ, ອີກ ກຸ່ມໜຶ່ງໄດ້ຮັບພົນສະທ້ອນຈາກພັກຄອມມູນິດ ອິນດູຈີນ.

ອີງການຈັດຕັ້ງ " ລາວເປັນລາວ " ຂະຍາຍຕົວໄວຢ່າງບໍ່ເຄີຍຄາດ ຄິດມາກ່ອນ ໂດຍມີການທີ່ໝັ້ນ ຢູ່ແຂວງຫລວງພະບາງ, ວຽງຈັນ, ຄໍາມ່ວນ, ສະຫວັນນະເຂດ ແລະ ແຂວງພາກໃຕ້.

ວັນທີ 18 ສິງຫາ (8) 1945 ຍີ່ປຸ່ນຍອມຈໍານົນ ໃຫ້ກອງທັບໂຊຫວຽດ ແລະ ພັນທະມິດຢ່າງບໍ່ມີເງື່ອນໄຂ. ກ່ອນໜ້ານັ້ນ 2-3 ວັນ ຄືວັນທີ 12-15

ສິງຫາ (8) 1945 ສູນກາງພັກຄອມມູນິດອິນດູຈີນ ໄດ້ຈັດຕັ້ງກອງປະຊຸມຂຶ້ນ ຢູ່ ກອງບັນຊາການເຕີນຈາວ (ຫວຽດບັກ) ກອງປະຊຸມໄດ້ສັງເກດຕີລາຄາ ສະ ພາບການ ແລະ ກຳນົດແນວທາງຍຸກຖືຂຶ້ນ ເພື່ອຍຶດອຳນາດການປົກຄອງ ກ່ອນກອງທະຫານພັນທະມິດ ຈະເຂົ້າມາເກີງອິນດູຈີນ ແລະກ່ອນທະຫານຝຣັ່ງ ຈະຟື້ນຕົວຂຶ້ນ ແລະ ກັບຄືນມາຮຸກຮານອິນດູຈີນອີກ.

ວັນທີ 23- ສິງຫາ 1945 ຢູ່ສະໜາມກິລາແຫ່ງຊາດ ນະຄອນຫລວງ ວຽງຈັນ ໄດ້ຈັດການໂຮມຊຸມນຸມໃຫຍ່ ຂອງມວນຊົນ ກ່ວາ 2 ໝື່ນຄົນ. ຄະນະ ກຳມະການປະຊາຊົນລາວ ແລະ ລັດກະບານເອກະລາດ ໄດ້ປະກາດເອກະລາດ ແລະ ອິດສະຫລະພາບ ຈາກຍີ່ປຸ່ນ ຢ່າງເປັນທາງການ.

ວັນທີ 23 ສິງຫາ ນີ້ເອງ ຢູ່ທ່າແຂກ ໄດ້ມີການໂຮມຊຸມນຸມ ຄັ້ງປະຫວັດ ສາດຂຶ້ນ ພາຍໃຕ້ການເປັນປະທານຂອງທ່ານ ສີງກະໂປ ສີໂຄດຈຸນນະນາລີ ປະທານຄະນະປະຕິວັດຂອງເມືອງທ່າແຂກ ສົມທົບກັບສະມາຄົມຫວຽດນາມ ຢູ່ ສະໜາມກິລາເມືອງທ່າແຂກ ໂດຍມີປະຊາຊົນເຂົ້າຮ່ວມ ທີ່ມາຈາກ ເມືອງເຊ ບັ້ງໄຟ, ໜອງບົກ. ຫີນບູນ, ເມືອງເກົ່າ ແລະ ເທສະບານເມືອງທ່າແຂກ ລວມ ທັງຄົນຫວຽດນາມ ທີ່ຢູ່ທ່າແຂກ ແລະ ນະຄອນພະນົມ ກໍ່ໄດ້ເຂົ້າຮ່ວມ. ນອກ ຈາກນັ້ນ ຍັງມີຄົນຈີນ, ອິນເດັຍ ແລະ ຄົນຕ່າງປະເທດອື່ນໆ ກໍ່ໄດ້ເຂົ້າຮ່ວມ. ສະໜາມກິລາເມືອງທ່າແຂກ ອັນກວ້າງໃຫຍ່ ລ້ວນແຕ່ໜາແໜ້ນໄປດ້ວຍຜູ້ຄົນ ທີ່ມາພ້ອມກັບທຸງຊາດ ແລະ ຄຳຂວັນ " ປະເທດລາວ ເອກະລາດ ໝັ້ນຍືນ " " ຄວາມສາມັກຄີ ລາວ-ຫວຽດນາມ ໝັ້ນຍືນ ". ປະທານທີ່ປະຊຸມ ໄດ້ປະກາດ ຍຶດອຳນາດການປົກຄອງຂອງປະຊາຊົນ ເມືອງທ່າແຂກ. ປະກາດເອກະລາດ ບ່ຍອມເປັນຫົວເມືອງຂອງຕ່າງດ້າວ. ສະໜັບສະໜູນຢູ່ເບື້ອງຫລັງ ຂອງການ

ໂຮມຊຸມນຸມຄັ້ງນີ້ ແມ່ນຄະນະພັກແຄ້ນລາວ. ຂະບວນການລາວໝຸ່ມລາວຮັກຊາດ ແລະ ຄະນະຮ່ວມສຳພັນ ລາວ-ຫວຽດນາມ.

ວັນທີ 2 ກັນຍາ (9) 1945 ຢູ່ນະຄອນຫລວງຮາໂນຍ ທ່ານປະທານໂຮ່ຈີມິນ ໃນນາມລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນຫວຽດນາມ ປະກາດເອກະລາດ ຢ່າງເປັນທາງການ ຕໍ່ປະຊາຊົນຫວຽດນາມ ແລະ ປະຊາຄົມໂລກ.

ວັນທີ 20 ສິງຫາ (8) 1945 ທະຫານອັງກິດ ໄດ້ໂດດຈ້ອງລົ່ງພາກອີສານຂອງໄທ ແລະ ເຄື່ອນກຳລັງ ຂ້າມນ້ຳຂອງ ເຂົ້າພາກໃຕ້ຂອງລາວ (ໃຕ້ເສັ້ນຂະໜານທີ່ 16 ຄື : ແຂວງຈຳປາສັກ. ສາລະວັນ ແລະ ອັດຕະປື) ພວກເຂົາ ອ້າງເຫດຜົນວ່າ ມາຕີຂັບໄລ່ທະຫານຍີ່ປຸ່ນ ແຕ່ໃນກອງກຳລັງດັ່ງກ່າວ ມີທະຫານຝຣັ່ງປອມໂຕເຂົ້າມາ ເພື່ອສົມທົບກັບ ທະຫານຝຣັ່ງແຕກທັບຢູ່ລາວ. ອັງກິດ ໄດ້ສວຍໂອກາດນີ້ ຊ່ວຍເຫລືອໃຫ້ຝຣັ່ງໄດ້ກັບຄືນມາຄອບຄອງລາວຄືນໃໝ່.

ວັນທີ 28 ສິງຫາ (8) 1945 ກອງທະຫານ " ຈີນກົກມິນຕັ໋ງ " ປະມານ 100.000 ຄົນ ໄດ້ເຄື່ອນທັບເຂົ້າພາກເໜືອຂອງລາວ. ກອງທະຫານຈີນກົກມິນຕັ໋ງສ່ວນໜຶ່ງ ໄດ້ຂ້າມຊາຍແດນ ຈາກຫວຽດນາມ ເຂົ້າສູ່ພາກກາງ ແລະ ພາກໃຕ້ຂອງລາວ ໂດຍອ້າງວ່າ ຈະເຂົ້າມາຂັບໄລ່ ພວກຂຸນເສິກຍີ່ປຸ່ນ ຢູ່ບັນດາ ແຂວງພາກກາງ ແລະ ພາກໃຕ້ຂອງລາວ ແຕ່ຢູ່ເບື້ອງຫລັງ ຂອງທະຫານຈີນກົກມິນຕັ໋ງ ແມ່ນອະເມລິກາ ເພື່ອຈະເຂົ້າມາຍຶດອິນດູຈີນ ໃຫ້ຢູ່ໃຕ້ " ອຳນາດການປົກຄອງສາກົນ " ເນື້ອແທ້ ແມ່ນຂຶ້ນກັບນັກລ່າເມືອງຂຶ້ນແບບໃໝ່ ຂອງອະເມລິການັ້ນເອງ.

ພົນສຳເລັດຂອງການລຸກຮືຂຶ້ນ ຍຶດອຳນາດການປົກຄອງ ຢູ່ນະຄອນ ວຽງຈັນ ໃນວັນທີ 23 ສິງຫາ (8) 1945 ໄດ້ແຜ່ຂະຫຍາຍໄປທົ່ວປະເທດ ອັນ ເປັນກຳລັງແຮງໃຫ້ແກ່ ປະຊາຊົນບັນດາເຜົ່າ ທັງຢູ່ໃນຕົວເມືອງ ແລະ ຊົນນະ ບົດ ໄດ້ສືບຕໍ່ລຸກຮືຂຶ້ນຕໍ່ສູ້ ເພື່ອຍຶດອຳນາດການປົກຄອງຢູ່ທ້ອງກິ່ນ.

ບັນດາແຂວງພາກເໜືອ ແລະ ພາກກາງ ໄດ້ສຳເລັດການຍຶດອຳນາດ ການປົກຄອງໄດ້ຢ່າງມີໄຊ. ສ່ວນຢູ່ພາກໃຕ້ບໍ່ມີການຍຶດອຳນາດ ເພາະຢູ່ປາກ ເຊ ແລະ ບັນດາແຂວງພາກໃຕ້ ພວກຝຣັ່ງໄດ້ເຂົ້າຍຶດຄອງ ແລະ ປັບປຸງອຳ ນາດການປົກຄອງຂອງພວກເຂົາ ໂດຍອາໄສທະຫານອັງກິດ ເປັນຜູ້ປ້ອງກັນ ແລະ ໃຫ້ການຊ່ວຍເຫລືອ ຂອງເຈົ້າບຸນອູ້ມ ເຈົ້ານະຄອນຈຳປາສັກ. ດັ່ງນັ້ນ. ບັນດາແຂວງພາກໃຕ້ ຈຶ່ງຕົກຢູ່ໃນກຳມືຂອງພວກຝຣັ່ງ ອັນໄດ້ສົ່ງພົນສະທ້ອນ ຕໍ່ຂະບວນການຕໍ່ສູ້ ປະຕິວັດຂອງປະຊາຊົນພາກໃຕ້.

ວັນທີ 1 ກັນຍາ (9) 1945 ເຈົ້າມະຫາອຸປະຣາດ ເພັດຊະຣາດ ໄດ້ ອອກກະແຫລງການ ປະກາດເອກະລາດ ອະທິປະໄຕ ແລະ ບູລະນະພາບແຜ່ນ ດິນແດນ ອອກຈາກການປົກຄອງຝຣັ່ງເສດວ່າ " ບັນດາສັນຍາ ແລະ ຂໍ້ຜູກພັນ ທາງການເມືອງ ທີ່ມີມາ ລະຫວ່າງຝຣັ່ງເສດ ກັບລາວນັ້ນ ທັງໝົດກໍ່ວ່າໝົດ ຄຸນຄ່າ ແລະ ເປັນໂມຄະທັງສິ້ນ " .

ວັນທີ 3 ກັນຍາ (9) 1945 ເຈົ້າມະຫາອຸປະຣາດ ເພັດຊະຣາດ ໄດ້ ໄຫລະເລກໄປປົກສາ ເຈົ້າຊີວິດ ເຈົ້າສີສະຫວ່າງວົງ ເລື້ອງການລວມລາວ 2 ເຂດ ເຂົ້າເປັນພຣະຣາຊອານາຈັກອັນໜຶ່ງອັນດຽວກັນ (ສະໄໝຝຣັ່ງປົກຄອງ ແບ່ງລາວເປັນ 2 ເຂດ ຄືເຂດເໜືອ ແລະເຂດໃຕ້: ເຂດເໜືອມີຫລວງພະບາງ ເປັນເມືອງຫລວງ ເຂດໃຕ້ມີວຽງຈັນເປັນເມືອງຫລວງ).

ກ່ອນຈະໂທລະເລດໄປປຶກສາ ເຈົ້າເພັດຊະຣາດ ໄດ້ປະຊຸມປຶກສາກັບ ເຈົ້າແຂວງພາກໃຕ້ສ່ວນໃຫຍ່ແລ້ວ ຄື ພະຍາບົວຄຳ ນາກຄຳຜີວ ເຈົ້າແຂວງ ອັກຕະປື, ທ່ານຊຸນອ່ອນ ວໍຣະວົງ ເຈົ້າເມືອງປາກເຊ ແຂວງຈຳປາສັກ, ພະຍາ ໂພທິທັດ ເຈົ້າແຂວງສະຫວັນນະເຂດ, ພະຍາຄຳມ້ວ ວີໄລ ເຈົ້າແຂວງວຽງ ຈັນ ເປັນຕົ້ນ ແລະ ເຈົ້າແຂວງເຫລົ່ານີ້ ກໍ່ມີຄຳເຫັນເປັນເອກະພາບວ່າ " ເຂດ ເໜືອ ເຂດໃຕ້ ຄວນລວມກັນເປັນຣາຊອານາຈັກ ອັນໜຶ່ງອັນດຽວກັນ ".

ແທນທີ່ ເຈົ້າຊີວິດ ສີສະຫວ່າງວົງ ຈະຕອບໂທລະເລກ ດ້ວຍພຣະອົງ ເອງ ກັບໄປສັ່ງໃຫ້ລັດຖະມົນຕີມະຫາດໄທ ຕອບໂທລະເລກ ໃນວັນທີ 7 ກັນຍາ (9) 1945 ໃຈຄວາມໂທລະເລກມີວ່າ : " ຂໍທູນກາບຊາບວ່າ ພຣະເຈົ້າຢູ່ຫົວ ຊົງປະກາດໃຫ້ຣາຊດອນທັງປະເທດ ແລະ ຣາຊອານາຈັກຫລວງພະບາງ ຢູ່ໃຕ້ ການປົກຄອງຂອງຝຣັ່ງເສດຕໍ່ໄປຕາມເດີມ ແລະ ພ້ອມກັນນັ້ນ ເຈົ້າສີສະຫວ່າງ ວົງ ໄດ້ຮຽກຮ້ອງໄປຍັງ ເຈົ້າແຂວງ ເຈົ້າເມືອງທົ່ວປະເທດ ໃຫ້ລໍຄອຍການ ຄືນມາຂອງຝຣັ່ງເສດ.

ດ້ວຍຄວາມຮັກຊາດ ແລະຮັກຄວາມເປັນເອກະລາດ ຂອງພຣະອົງ ແລະ ດ້ວຍການສະໜັບສະໜູນຂອງຂະບວນການລາວກູ້ຊາດ ພຣະອົງ ຈຶ່ງຕ້ອງ ກ້າວໄປພ້ອມກັບປະຊາຊົນ ເພື່ອພົ້ນປະໂຫຍດຂອງປະຊາຊົນ ແລະ ອະທິປະໄຕ ຂອງຊາດ.

ດັ່ງນັ້ນ, ວັນທີ 15 ກັນຍາ 1945 ເຈົ້າມະຫາອຸປະຣາດ ເພັດຊະຣາດ ໃນນາມນາຍົກລັດຖະມົນຕີ ໄດ້ປະກາດລວມທຸ່ກແຂວງ ຂອງປະເທດລາວ ເຂົ້າ ເປັນຣາຊອານາຈັກລາວ ອັນໜຶ່ງອັນດຽວກັນ ເປັນລັດດຽວ ເອກະພາບ.

ວັນທີ 4 ຕຸລາ (10) 1945 ເຈົ້າເພັດຊະຣາດ ຜູ້ແທນອຳນາດການ ປົກຄອງສູນກາງ ຂອງປະເທດລາວ ຄືນາຍົກລັດຖະມົນຕີ ໄດ້ອອກຖະແຫລງ ການ ໄດ້ຮຽກຮ້ອງໄປຍັງປະເທດພັນທະມິດ ເພື່ອໃຫ້ຮັບຮູ້ລັດຖະບານລາວ ແລະ ເຄົາຣົບນັບຖືເອກະລາດ ອະທິປະໄຕ ແລະ ບູຣະນະພາບແຜ່ງດິນແດນ ຂອງລາວ.

ຈາກການປະກາດຍົກເລີກສັນຍາກັບຝຣັ່ງເສດ ວັນທີ 1/9/1945 ປະ ກາດລວມລາວເປັນອັນໜຶ່ງອັນດຽວກັນ ໃນວັນທີ 15/9/1945 ແລະ ປະກາດ ໃຫ້ສຳພັນທະມິດຮັບຮູ້ເອກະລາດ ອະທິປະໄຕຂອງລາວ ຂອງເຈົ້າເພັດຊະຣາດ ໄດ້ສ້າງຄວາມເຈັບແຄ້ນໃຫ້ຝຣັ່ງເສດ ຢ່າງມະຫັນ. ຝຣັ່ງເສດ ຈຶ່ງຫາວິທີຕ່ອບ ໂຕ້ເຈົ້າເພັດຊະຣາດ.

ພັນເອກ ເອມແຟນ (Col. Em Fend) (ເວລາຍີ່ປຸ່ນ ຍຶດອຳນາດ ໃນອິນດູຈີນ ເອມແຟນ ໄດ້ເປລ້ຍຢູ່ປ່າໃນລາວ) ໄດ້ເຂົ້າພົບເຈົ້າສີສະຫວ່າງ ວັດທະນາ ອົງມົງກຸດ (ລູກຊາຍສີສະຫວ່າງວົງ) ຕົວະວ່າ " ການທີ່ເຈົ້າເພັດ ຊະຣາດ ທ້ອນໂຮມລາວ ເປັນອັນດຽວກັນນີ້ ແມ່ນເພື່ອເຈົ້າເພັດຊະຣາດ ຈະ ເປັນເຈົ້າຊີວິດດ້ວຍຕົນເອງ. ເຈົ້າສີສະຫວ່າງວັດທະນາ ຫລົງເຊື່ອ ຈຶ່ງນຳ ຄວາມເຂົ້າກວາຍ ແກ່ເຈົ້າສີສະຫວ່າງວົງ ແລະສະເໜີໃຫ້ປົດເຈົ້າເພັດຊະຣາດ ອອກຈາກເຈົ້າມະຫາອຸປະຣາດ ແລະ ປົດອອກຈາກນາຍົກລັດຖະມົນຕີ. ແຕ່ ເຈົ້າສີສະຫວ່າງວົງ ຍັງມີສະຕິຢູ່ ຈຶ່ງສັ່ງໃຫ້ເອີ້ນເຈົ້າເພັດຊະຣາດ ມາສືບການ ໃຫ້ໄດ້ຄວາມຈິງເສັຍກ່ອນ. ແຕ່ເຈົ້າສີສະຫວ່າງ ວັດທະນາ ຄັດຄ້ານວ່າ ກ້າ ເກີງຕອນນັ້ນ ເຈົ້າເພັດຊະຣາດ ຄົງຈະຂຶ້ນມາພ້ອມກັບກອງທັບ ກໍ່ຈະແກ້ໄຂ ບໍ່ໄດ້ແລ້ວ.

ວັນທີ 10 ຕຸລາ (10) 1945 ເຈົ້າສີສະຫວ່າງວົງ ເຈົ້າຊີວິດລາວ ໄດ້ສັ່ງກອດເຈົ້າເພັດຊະຣາດ ອອກຈາກກາງນະ ເຈົ້ານະຫາອຸປະຣາດ ແລະ ປົດ ອອກຈາກຕຳແໜ່ງນາຍົກລັດກະມົນຕີ.

ເມື່ອຂ່າວເລື້ອງການກອດຍົດ ແລະ ປົດເຈົ້າເພັດຊະຣາດ ອອກຈາກ ນາຍົກລັດກະມົນຕີ ແຜ່ອອກໄປ ຈຶ່ງເກີດການວຸ້ນວາຍ ລະສຳລະສາຍຂຶ້ນ ທັ່ງຢູ່ ໃນຫລວງພະບາງ. ວຽງຈັນ. ທ່າແຂກ. ສະຫວັນນະເຂດ ແລະ ເມືອງໃຫຍ່ອື່ນໆ ຍ້ອນເຈົ້າເພັດຊະຣາດ ປະກາດເອກະລາດຈາກຝຣັ່ງເສດ ແລະລວມປະເທດ ລາວເປັນອັນໜຶ່ງອັນດຽວກັນ ເຮັດໃຫ້ຈົ້າຊີວິດບໍ່ພໍໃຈ.

ຜູ້ນຳໃນວຽງຈັນ ຈຶ່ງໄດ້ຮຽກຮ້ອງໃຫ້ມີການປະຊຸມ ຜູ້ແທນລາວ ຜູ້ຮັກ ຊາດ ຈາກແຂວງຕ່າງໆທົ່ວປະເທດ ເພື່ອປຶກສາຫາລື ສະພາບການທີ່ພັນຜ່ານ ໄປຢ່າງວ່ອງໄວ ທີ່ປະຊຸມມີຄວາມເຫັນເປັນເອກະສັນ ຈັດຕັ້ງ " ລັດກະບານ ລາວອິດສະຫລະຂຶ້ນ " ເພື່ອທົດແທນລັດກະບານຫລວງພະບາງ ຊຶ່ງມີເຈົ້າເພັດ ຊະຣາດ ເປັນນາຍົກ ແລະ ກຶກປົດອອກແລ້ວ. ເຈົ້າເພັດຊະຣາດເຫັນດີ ຕາມ ມະຕິກອງປະຊຸມ ແຕ່ບໍ່ຂໍເປັນນາຍົກ ເມື່ອທີ່ປະຊຸມຮ້ອງຂໍ ພຣະອົງກໍ່ຮັບທີ່ຈະ ຊ່ວຍເຫລືອ ຈົນສຸດຄວາມສາມາດ ແລະ ຈະເຮັດທຸກວິທີ ເພື່ອໃຫ້ລັດກະບານ ລາວອິດສະຫລະ ດຳເນີນໄປໄດ້.

ວັນທີ 12 ຕຸລາ (10) 1945 ລັດກະບານລາວອິດສະຫລະ ກໍ່ໄດ້ຈັດຕັ້ງ ຂຶ້ນ ໂດຍການສະໜັບສະໜູນຈາກ ຂະບວນການຊາວໜຸ່ມລາວຮັກຊາດ. ໄດ້ ສ້າງຄວາມປິຕິຍິນດີ ຂອງປະຊາຊົນວຽງຈັນ ແລະ ທົ່ວປະເທດ.

ລັດກະບານລາວອິດສະຫລະ ປະກອບດ້ວຍ

ພະຍາ ຄຳມ້ວ ວີໄລ	ເປັນນາຍົກລັດກະມົນຕີ
ພ.ຕ ສີງ ຣັດຕະນະສະໄໝ	ລັດກະມົນຕີປ້ອງກັນປະເທດ
ເຈົ້າສົມສະບົດ	ລັດກະມົນຕີ ກະຊວງມະຫາດໄທ ແລະ ຍຸດຕິທຳ
ເຈົ້າສຸພານຸວົງ	ລັດກະມົນຕີວ່າການ ກະຊວງການຕ່າງປະເທດ
	ຕໍ່ມາໄດ້ຮັບຕຳແໜ່ງເປັນຜູ້ບັນຊາ
	ການທະຫານສູງສຸດ ອີກຕຳແໜ່ງໜຶ່ງ
ພະຍາ ອຸ່ນເຮືອນ ນໍຣະສີງ	ລັດກະມົນຕີຊ່ວຍວ່າການ ກະຊວງຍຸດຕິທຳ
ທ້າວ ອຸ່ນ ຊະນະນິກອນ	ລັດກະມົນຕີ ກະຊວງເສດກະກິດ
ເຈົ້າສຸວັນນະພູມາ	ລັດກະມົນຕີວ່າການ ກະຊວງໂຍທາ ແລະຂົນສົ່ງ
ທ້າວ ກະຕ່າຍ ໂດນສະໂສລິດ	ລັດກະມົນຕີວ່າການ ກະຊວງການຄ້າ
ທ້າວ ຫຍູຍ ອະໄພ	ລັດກະມົນຕີວ່າການ ກະຊວງສຶກສາທິການ
ທ້າວ ເກື່ອງ ປະທຸມຊາດ	ລັດກະມົນຕີຊ່ວຍວ່າການ ກະຊວງເສດກະກິດ
ທ້າວ ທຳ ໄຊຍະສິດເສນາ	ລັດກະມົນຕີ ຊ່ວຍວ່າການ ກະຊວງ
	ຕ່າງປະເທດ
ເຈົ້າເພັດຊະຣາດ	ເປັນທີ່ປຶກສາ ລັດກະບານລາວອິດສະຫລະ

ພາຍຫລັງລັດກະບານລາວອິດສະຫລະ ໄດ້ຈັດຕັ້ງຂຶ້ນແລ້ວ ກໍໄດ້ປະກາດໃຊ້ລັດກະທຳມະນູນ ສະບັບຊົ່ວຄາວຂຶ້ນ ໂດຍໃຫ້ກະສັດຢູ່ພາຍໃຕ້ກົດໝາຍລັດກະທຳມະນູນ ແລະ ໄດ້ສົ່ງໄປກວາຍເຈົ້າຊີວິດ ສີສະຫວ່າງວົງ ເພື່ອລົງພຣະປຣະມາພິໄທ ແຕ່ບໍ່ໄດ້ຮັບການສະໜອງຕອບ ຈາກເຈົ້າຊີວິດ, ລັດກະບານລາວອິດສະຫລະ ໄດ້ຕົກລົງກຳນົດທຸງຊາດ ແລະ ເພງຊາດລາວອີກດ້ວຍ.

ວັນທີ 15 ພະຈິກ (11) 1945 ຄົນລາວໃນນະຄອນຫລວງພະບາງ ທີ່ສະໜັບສະໜູນ ລັດຖະບານລາວອິດສະຫລະ ໂດຍການນຳຂອງເຈົ້າບູນວັດ ອຸ່ນແກ້ວ, ຮ້ອຍຕີອ້ວນ ລາທິກຸນ, ພ້ອມດ້ວຍຕຳຫລວດທະຫານ ຂ້າຣາຊການ ແລະ ປະຊາຊົນ ໄດ້ຍົກກຳລັງເຂົ້າອ້ອມພຣະຣາຊວັງ ແລ້ວຄວບຄຸມເຈົ້າຊີວິດ ແລະ ຣາຊວົງ ໄວ້ໃນທີ່ນັ້ນ.

ຕໍ່ມາ ລັດຖະບານລາວອິດສະຫລະ ໄດ້ສົ່ງຄະນະຜູ້ແທນ ເຊິ່ງປະກອບ ດ້ວຍ ພະຍາເມືອງແສນ ພະຍາສີທົນໄຊ ທ້າວ ພູວົງ ແລະ ຮ້ອຍເອກວິຊຽນ ໄປ ເຂົ້າເຝົ້າເຈົ້າຊີວິດ ທີ່ປະຊາຊົນຄວບຄຸມຕົວໄວ້ນັ້ນ ໃນວັນທີ 20 ພະຈິກ (11) 1945 ເພື່ອຍັບເຊີນຂຶ້ນຄອງຣາຊສົມບັດ ເປັນມິ່ງຂວັນຂອງປະຊາຊົນລາວ ທົ່ວໄປ. ສົມເດັດເຈົ້າສີສະຫວ່າງວົງ ຮັບຄຳເຊີນ ກັບຄືນຂຶ້ນຄອງຣາຊບັນລັງ ເປັນກະສັດແຫ່ງ ຣາຊອານາຈັກລາວອີກເທື່ອໃໝ່.

ຫລັງຈາກ ປະກາດຈັດຕັ້ງ ລັດຖະບານລາວ ອິດສະຫລະ ໃນວັນທີ 12/10/1945 ແລ້ວ ຕໍ່ມາອີກ 2 ມື້ ຄືວັນທີ 14 ຕຸລາ (10) 1945 ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ສັງຄົມນິຍົມຫວຽດນາມ ກໍ່ໄດ້ອອກຖະແຫລງ ການຮັບຮູ້ລັດຖະບານລາວ ຂອງຄະນະລາວອິດສະຫລະ. ຫລັງຈາກນັ້ນ, ຄະນະ ຜູ້ແທນ ຕາງໜ້າລັດຖະບານລາວອິດສະຫລະ ແລະລັດຖະບານຫວຽດນາມ ກໍ່ໄດ້ ປຶກສາຫາລືກັນ ສ້າງຕັ້ງກອງບັນຊາການທະຫານລາວ-ຫວຽດນາມ ເພື່ອປະ ສານກັນຕີສັດຕູ ແລະ ປົກປັກຮັກສາ ຄວາມເປັນເອກະລາດ ຂອງແຕ່ລະ ປະເທດ.

ฝรั่งกับคืนมายึดเอาลาวครั้งที่ II

ຢູ່ພາກໃຕ້ ທະຫານຝຣັ່ງ ໄດ້ຮັບການຊ່ວຍເຫລືອຢ່າງເຂົ້ມງວດ ຈາກ ເຈ້ົ້ານຸ ບອຸ້ມ ນະຈຳປາສັກ ແລະ ພັກພວກ ໄດ້ອອກຈາກພູພາປ່າດົງ ກັບຄືນມາ ຍຶດເອົາຕົວເມືອງໃຫຍ່ ຢູ່ພາກໃຕ້ ຄືວັນທີ 7 ກັນຍາ (9) 1946 ຍຶດເມືອງ ສາລະວັນ. ວັນທີ 14 ກັນຍາ (9) ຍຶດເມືອງປາກເຊ. ວັນທີ 15 ກັນຍາ (9) ຍຶດເທສະບານເມືອງຫາດຊາຍຄູນ ໄດ້ຈັດຕັ້ງຄ້າຍຢູ່ປາກຊ່ອງ (ພູພຽງບໍ່ລະ ເວນ) ແລະ ຕົວເມືອງອັດຕະປື ແລະ ຕົວເມືອງສຳຄັນອີກຫລາຍແຫ່ງ. ຝຣັ່ງ ແລະ ລູກມື ໄດ້ສະກັດກັ້ນ ການລຸກຂຶ້ນຍຶດອຳນາດ ຂອງປະຊາຊົນ ຢູ່ບັນດາ ແຂວງພາກໃຕ້ ແລະ ໄດ້ປັບປຸງອຳນາດການປົກຄອງ ຂອງພວກເຂົາ ຢູ່ຕາມ ເມືອງຕ່າງໆ ທີ່ຝຣັ່ງໄດ້ຍຶດຄອງ.

ຫລັງຈາກຝຣັ່ງເສດ ເຂ້ົາຍຶດເມືອງທ່າແຂກ ໃນວັນທີ 21 ມີນາ (3) 1946 ໄດ້ແລ້ວ ກໍ່ໄດ້ສືບຕໍ່ເຂ້ົາຍຶດນະຄອນວຽງຈັນ ໃນວັນທີ 25 ເມສາ (4) 1946 ຫລັງຈາກທີ່ໄດ້ຮັບການຕໍ່ຕ້ານຢ່າງໜຽວແໜ້ນ ຈາກກອງກຳລັງຮັກ ຊາດລາວ ແລະ ກອງກຳລັງກູ້ຊາກຫວຽດນາມ ພາຍໃຕ້ການນຳຂອງ ຄະນະ ພັກແຄ້ວລາວ. ແຕ່ການເຂ້ົາຍຶດວຽງຈັນ ໃນວັນທີ 25 ນັ້ນ ມີແຕ່ເມືອງຮ້າງ ບໍ່ມີຄົນ ເພາະລັດຖະບານລາວຕໍ່ຕ້ານ ໄດ້ອົບພະຍົບປະຊາຊົນ ອອກຈາກວຽງ ຈັນໝົດແລ້ວ ແລະ ລັດຖະບານກໍ່ໄດ້ອົບພະຍົບຂ້ามຂອງ ໄປຢູ່ຝັ່ງໄທ ຮ່ວมกับ ກອງກຳລັງສ່ວนໜຶ່ງ ຂອງສະເດັດເຈ້ົາສຸພານຸວົງ ແລະ ທ່ານ ສີງກະໂປ ສີໂຄດ ຈຸນລະมะนี ທີ່ອົບພະຍົບອອກຈາກທ່າແຂກ ໃນວັນທີ 21/3/1946 ນັ້ນແລ້ວ.

ກອງກຳລັງຈຳນວນໜຶ່ງ ອອກຈາກ ວຽງຈັນ ປະມານ 600 ຄົນ ເປັນ ກອງກຳລັງປະສົມລາວ-ຫວຽດນາມ ພາຍໃຕ້ການບັນຊາຂອງທ່ານໂຊດ ເພັດ ລາສີ (ລາວ) ແລະ ທ່ານເຈີນຮວານ (ຫວຽດນາມ) ໄດ້ກຸອບອອກຈາກວຽງຈັນ ຂຶ້ນໄປເມືອງຊະນະຄາມ ແລະບ້ານຕາກແດດ ຄອຍດັກສະກັດໂຈມຕີ ກອງກຳ ລັງສັດຕູເທົ່າທີ່ໂອກາດອຳນວຍໃຫ້. ຕໍ່ມາໄດ້ອອກສູ່ຊົນນະບົດ ປຸກລະດົມປະຊາ ຊົນ ແລະ ເຄື່ອນໄຫວຈັດຕັ້ງກອງຫລອນ.

ການຈັດຕັ້ງ ກຳລັງພື້ນການ ໃນເຂດຊົນນະບົດ ຈັດຕັ້ງກຳລັງກອງ ຫລອນ ໄດ້ຮັບການຕ້ອນຮັບ ຈາກປະຊາຊົນໃນທ້ອງຖິ່ນ ເປັນຢ່າງດີ ແລະ ມີ ການຂະຫຍາຍໂຕອອກ ຢ່າງກວ້າງຂວາງ. ນອກຈາກນີ້ ກໍ່ໄດ້ຈັດຕັ້ງກຳລັງ ຫລວງ ມີຫລາຍກອງຮ້ອຍ ຕໍ່ມາໄດ້ກາຍເປັນກອງພັນ ທີ່ສັດຕູໄດ້ຍຶບແລ້ວ ເປັນ ທີ່ຢ້ານກົວຄື :

* " ກອງເຈົ້າຢ້ວງ " ການທີ່ໝັ້ນຢູ່ເຂດປາກງື່ມ-ໂພນພິໄສ (ໝອງ ຄາຍ) ເຄື່ອນໄຫວຢູ່ເຂດຕາເວັນອອກ ແລະ ຕາເວັນຕົກຂອງ ນະຄອນວຽງຈັນ.
* " ກອງໄຊຍະເສດການທິຣາດ " ເຄື່ອນໄຫວຢູ່ບໍລະພາ, ອ່ຽງຄຳ ມະຫາໄຊຍົມມະລາດ ແຂວງຄຳມ່ວນ.
* " ກອງເມືອງເຊໂປນ " ເຄື່ອນໄຫວຢູ່ເມືອງເຊໂປນ ເມືອງພີນ ແລະ ທິດຕາເວັນອອກ ຂອງແຂວງສະຫວັນນະເຂດ.
* " ກອງໄຊຈັກກະພັດ (ເຈົ້າສຸພານຸວົງ ໃສ່ຊື່ໃຫ້) ມີການທີ່ໝັ້ນຢູ່ ເຂດອຳເພີວາລີ, ອຳເພີພີບູນ, ເມືອງໂພນທອງ, ເມືອງມູນລະ ປາໂມກ ເມືອງໂຂງ.

* “ ກອງຮາຊວົງ “ ເປັນກອງທີ່ ທ່ານ ໄກສອນ ພົມວິຫານ ຈັດຕັ້ງ ຂຶ້ນຢູ່ພາກເໜືອຂອງລາວ ແລະ ກອງນີ້ ໄດ້ກາຍເປັນກອງພື້ນ ຖານຂອງກອງທັບປະຊາຊົນ ປະຕິວັດລາວ ໃນຕໍ່ມາ.

ຢູ່ພາກໃຕ້ຂອງລາວ ຍ້ອນຢູ່ຫ່າງໄກການຊີ້ນຳ ນຳພາ ແລະ ການກໍ່ ສ້າງຮາກຖານປະຕິວັດຍັງອ່ອນນ້ອຍ ປະຊາຊົນບັນດາແຂວງພາກໃຕ້ ບໍ່ສາ ມາດລຸກຮືຂຶ້ນຢຶດອຳນາດການປົກຄອງໄດ້.

ຊາວໜຸ່ມຈຳປາສັກ ພາຍໃຕ້ການນຳຂອງທ່ານ ເສີມມະໂນວົງ ເມື່ອ ໄດ້ຍິນຂ່າວ ປະຊາຊົນວຽງຈັນ ແລະ ປະຊາຊົນພາກກາງ ແລະ ພາກເໜືອລຸກ ຂຶ້ນຢຶດອຳນາດການປົກຄອງ ຈຶ່ງໄດ້ຈັດຕັ້ງເປັນໜ່ວຍປະກອບອາວຸດຂຶ້ນ ມີຈຳ ນວນ 30 ຄົນ ກຽມຈະລຸກຂຶ້ນຢຶດອຳນາດ ແຕ່ອຳນາດການປົກຄອງຫຸ່ນ ຢູ່ ປາກເຊ ໄດ້ກີດຂວາງ ແລະ ປາບປາມ ຂະບວນຂອງທ່ານ ເສີມ ຈຶ່ງບໍ່ສາມາດ ຢຶດອຳນາດໄດ້. ກອງກຳລັງຂອງທ່ານ ເສີມມະໂນວົງ ເບ້ອງຕົ້ນຕັ້ງຢູ່ເມືອງ ເກົ່າ ເຄື່ອນໄຫວຢູ່ທິດເໜືອຈຳປາສັກ ຫລັງຈາກໄດ້ກີກຕໍ່ຕ້ານຢ່າງໜັກ ຈຶ່ງໄດ້ ຖອຍໄປຈ້ຳທ່າ ຢູ່ຊາຍແດນລາວ-ໄທ ເພື່ອລໍ້ກ້ຳການລະໂອກາດ. ກອງທະຫານ ຝຣັ່ງ ໄດ້ເພີ້ມກຳລັງປາບປາມຢ່າງໜັກໜ່ວງ ທ່ານ ເສີມ ມະໂນວົງ ຈຶ່ງໄດ້ນຳ ກຳລັງເຂົ້າໄປໃນເຂດໄທ ຕັ້ງທັບຊົ່ວຄາວຢູ່ພູພີບູນ ແລະ ທົ່ງທວາຍ ອຳເພີ ວາລິນ ຈັງຫວັດອຸບົນ.

ກົມກອງຂອງທ່ານ ເສີມ ໄດ້ຮັບການຊ່ວຍເຫລືອຢ່າງໝົດຈິດໝົດໃຈ ຈາກປະຊາຊົນທ້ອງຖິ່ນ ຕົ້ນຕໍແມ່ນຄົນໄທ ເຊື້ອສາຍລາວ ແລະ ຫວຽດກຽວ ຢູ່ທີ່ນັ້ນ.

ກອງທ່ານ ເສີມ ມະໂນວຽງ ໄດ້ຮັບເອົາພະນັກງານ ນັກຮົບ ຈາກກອງ ສາມແສນໄທ ເຊິ່ງບັນຊາໂດຍ ທ່ານ ພູນ ສີປະເສີດ ເຂົ້າມາເພີ້ມ ຈຳນວນພົນ ເພີ້ມຂຶ້ນເປັນ 100 ກວ່າຄົນ ແລະ ໄດ້ຮັບການປັບປຸງກົມກອງໃຫ້ດີຂຶ້ນ.

ນອກຈາກກອງທ່ານ ເສີມ ມະໂນວຽງ ແລ້ວ ຍັງມີກອງທ່ານ ບຸນກອງ ຊຶ່ກອງໄຊເສດຖາ ກຳລັງພົນສ່ວນຫລາຍແມ່ນຄົນໄທ ເຊື້ອສາຍລາວ ເຄື່ອນ ໄຫວຢູ່ເຂດຄົງເຊໂດນ (ທິດເໜືອເມືອງປາກເຊ) ຍ້ອນພາຍໃນມີຄວາມຫຍຸ້ງ ຍາກ ບໍ່ໄດ້ຮັບການສະໜັບສະໜູນ ຈາກປະຊາຊົນ ຕໍ່ມາ 1948 ອ້າຍນ້ອງຈຳ ນວນໜຶ່ງ ໄດ້ເຂົ້າມາຢູ່ ໃນກອງໄຊຈັກກະພັດ.

ຈັດຕັ້ງກອງໄຊຈັກກະພັດ

ໃນນາມລັດກະມົນຕີ ວ່າການ ກະຊວງການຕ່າງປະເທດ ຂອງລັດກະ ບານເອກະລາດ ລາວອິດສະຫລະ ແລະ ໃນນາມ ກອງບັນຊາການສູງສຸດ ກຳ ລັງປະກອບອາວຸດລາວອິດສະຫລະ. ທ້າຍປີ 1946 ສະເດັດເຈົ້າສຸພານຸວົງ ໄດ້ ອອກຄຳສັ່ງໃຫ້ກຳລັງປະກອບອາວຸດ ຢູ່ແຂວງຈຳປາສັກ ເຂົ້າໄປຕັ້ງໃສມກັບ ຢູ່ປະເທດໄທ ຢູ່ອຳເພີພິບູນ ເພື່ອຮຽນວິຊາການທະຫານ ແລະ ການເມືອງ. ເມື່ອສຳເລັດແລ້ວ ໄດ້ຈັດສົ່ງຄືນມາ ເພື່ອເຂົ້າຮ່ວມຂະບວນຕໍ່ຕ້ານ ພວກລ່າ ເມືອງຂຶ້ນຝຣັ່ງ. ສະເດັດ ໄດ້ມອບໝາຍໜ້າທີ່ໃຫ້ທ່ານ ຄຳໄຕ ສີພັນກອນ ຄະນະ ເສນາທິການພາກໃຕ້ ຈັດຫາອາວຸດ ສະບຽງອາຫານ ເຄື່ອງປະກອບສິລປະຍຸດ ແລະ ຍຸທວິທີຕ່າງໆ ເພື່ອຊ່ວຍໃຫ້ກົມກອງປະກອບອາວຸດ ຢູ່ເຂດໃຕ້ ໄດ້ຝຶກ ແອບ ແລະ ເຄື່ອນໄຫວຕີສັດຕູ.

ທ່ານ ຄຳໄຕ ສີພັນດອນ ໄດ້ເຕົ້າໂຮມປັບປຸງກຳລັງທ້ອນໂຮມອາວຸດ ສະບຽງອາຫານ ສະໜອງໃຫ້ແກ່ກົມກອງ ໄດ້ເຄື່ອນໄຫວ ຫັດແອບສິລປະຍຸດ-ຍຸທວິທີ ອົບຮົມການເມືອງແນວຄິດ ປັບປຸງການຈັດຕັ້ງ ລະບຽບວິໃນ ໃຫ້ກົມກອງສູ້ຮົບພາກໃຕ້ ທີ່ພວມຕັ້ງທັບຢູ່ດິນແດນໄທ ໃຫ້ສູງຂຶ້ນ.

ມາເຖິງ ເດືອນພຶດສະພາ (5) 1946 ສະເດັດເຈົ້າສຸພານຸວົງ ໄດ້ມາຢ້ຽມຢາມ ກົມກອງສູ້ຮົບ ທີ່ຕັ້ງຢູ່ຫາດສວນຢາ ແຄມຝັ່ງແມ່ນ້ຳມູນ ຈັງຫວັດອຸບົນ ປະເທດໄທ ໄດ້ຈັດຕັ້ງການໂຮມຊຸມນຸມ ພະນັກງານ ນັກຮົບຂຶ້ນ ຢູ່ຫາດສວນຢານັ້ນເອງ ສະເດັດ ໄດ້ປະກາດສ້າງຕັ້ງ ກົມກອງສູ້ຮົບ ລາວອິດສະຫລະຢູ່ພາກໃຕ້ລາວຂຶ້ນ ໃຫ້ຊື່ວ່າ " ກອງໄຊຈັກກະພັດ " ແລະ ມອບທຸງໄຊໃຫ້ກອງນັ້ນ ແລະ ໄດ້ປະກາດລາຍຊື່ ຄະນະບັນຊາການ ກອງໄຊຈັກກະພັດ ມີ 5 ທ່ານຄື : ທ່ານ ເສີມ ມະໄນວຽງ ແລະ ທ່ານ ສີທົນ ກົມມະດຳ ເປັນຄະນະບັນຊາ. ພ້ອມກັນນີ້ ທ່ານ ເສີມ ມະໄນວຽງ ທັງດຳລົງຕຳແໜ່ງປະທານເຂດລາວໃຕ້ ແລະ ທ່ານ ສີທົນ ກົມມະດຳ ດຳລົງຕຳແໜ່ງຫົວໜ້າການທະຫານເຂດ.

ກອງໄຊຈັກກະພັດ ໄລຍະເລີ້ມຕົ້ນກໍ່ຕັ້ງ ມີນັກຮົບທີ່ກົກຄັດເລືອກໄດ້ 89 ຄົນ ມີປືນປະເພດຕ່າງໆ 79 ກະບອກ ໃນນັ້ນ ມີປືນຄົກ 60 ມມ 1 ກະບ່ອກ. ອ້າຍນ້ອງໃນກອງທຸກຄົນ ມີຄວາມອິດທົນ ຜ່ານຜ່າຄວາມທຸກຍາກຕ່າງໆ ທັງອອກແຮງງານຮັບຈ້າງເລື່ອຍໄມ້. ເຜົ້າກ່ານ. ຂຸດສ້າງ ໄປຮັບຈ້າງເຮັດວຽກຕ່າງໆ ພ້ອມກັນນັ້ນ ກໍ່ອອກແຮງຫາກິນ ຫັດແອບສິລປະຍຸດ-ຍຸທວິທີໄປພ້ອມ. ພາຍຫລັງກໍ່ຕັ້ງໄດ້ໜຶ່ງອາທິດ ກອງໄຊຈັກກະພັດ ໄດ້ຕີສັດຕູຢູ່ເມືອງມູນ ໃກ້ຊາຍແດນລາວ-ໄທ ສັດຕູຢູ່ບ້ານດົງກະດຽນທົ່ງ ໂດຍການບັນຊາຂອງທ່ານ ເສີມ ມະໄນວຽງ ແລະ ທ່ານ ປັນຍາ. ສັດຕູເສັຍຊີວິດ 2 ຄົນ. ພວກເຮົາເສັຍຊີວິດ

1 ຄົນ ຄືທ້າວ ເບີຍ (ຄົນເມືອງໄພນທອງ) ທ່ານ ແກ້ວ ຫລວງເສນາ ກົກບາດ ເຈັບ ສະເດັດເຈົ້າສຸພານຸວົງ ໄດ້ເອົາເພິ່ນໄປປິ່ນປົວຢູ່ໂຮງໝໍ ແຂວງອຸບົນ (ປະ ເທດໄທ).

ກາງປີ 1947 ກອງທະຫານຫວຽດກຽວ 1 ກອງຮ້ອຍ ບັນຊາໂດຍ ສະຫາຍ ຫງວຽນຈ້ອງກຽດ ຈາກຊາຍແດນປະເທດໄທ ມາສົມທົບເຄື່ອນໄຫວ ກັບກອງໄຊຈັກກະພັດ. ທ່ານ ສີທົນ ກົມມະດຳ ແລະ ທ່ານ ຫງວຽນຈ້ອງກຽດ ໄດ້ສົ່ງກອງກຳລັງປະສົມລົງເຄື່ອນໄຫວ ທາງທິດໃຕ້ຂອງທາງເລກທີ 10 ຈົນ ເກີງທິດຕາເວັນຕົກຂອງສຸຂຸມາ.

ທ້າຍເດືອນທັນວາ (12) 1947 ການສູ້ຮົບຢູ່ພາກເໜືອຫວຽດນາມ (ຫວຽດບັກ) ເປັນເວລາ 75 ວັນ ກອງທັບຫວຽດນາມ ໄດ້ຕ້ານການເຄື່ອນ ທັບຂອງຈັກກະພັດຝຣັ່ງໄປຫວຽດບັກແຕກ . ກອງທັບຫວຽດນາມ ຂ້າສັດຕູ 6.000 ກວ່າຄົນ. ຍິງຍົນຕົກ 16 ລຳ. ຍິງກຳປັ່ນຈົມ 11 ລຳ. ທຳລາຍລົດຮົ່ນ ສົ່ງທະຫານ ນັບເປັນຮ້ອຍ. ໄຊຊະນະຄັ້ງນີ້ ໄດ້ມີຜົນສະທ້ອນຕໍ່ການສູ້ຮົບໃນລາວ ແລະ ກຳປູເຈັຍຢ່າງໃຫຍ່ຫລວງ.

ເດືອນພຶດສະພາ (5) 1948 ກອງບັນຊາການທະຫານສູງສຸດ ກອງ ທັບຫວຽດນາມ ໄດ້ມອບໜ້າທີ່ໃຫ້ ເຂດທະຫານຫວຽດນາມ ປະຕິບັດໜ້າທີ່ ຊ່ວຍເຫລືອລາວ ທາງດ້ານການທະຫານ ຄືໃຫ້ສະຫະເຂດທະຫານທີ 10 ຊ່ວຍ ບັນດາແຂວງພາກເໜືອຂອງລາວ. ສະຫະເຂດທະຫານທີ 3 ຊ່ວຍ 2 ແຂວງຄື ຫົວພັນ ແລະ ຊຽງຂວາງ. ສະຫະເຂດທະຫານທີ 4 ຊ່ວຍບັນດາແຂວງພາກ ກາງ. ສະຫະເຂດທະຫານທີ 5 ຊ່ວຍບັນດາແຂວງພາກໃຕ້ຂອງລາວ ແລະ ທິດ ຕາເວັນອອກສຽງເໜືອກຳປູເຈັຍ.

ຍ້ອນຫລັງໄປຫ້າປີ 1947 ເວລາທີ່ກອງກຳລັງຮັກຊາດຂອງລັດກະບາບພັດກີນ ລາວອິດສະຫລະ ບາງສ່ວນຈາກພາກກາງ (ຄຳມ່ວນ, ສະຫວັນນະເຂດ) ແລະ ພາກໃຕ້ ອາໃສຢູ່ດິນໄທ ເພື່ອເປັນບ່ອນຝຶກແອບ ແລະ ເຕົ້າໂຮມກຳລັງໃນສະໄໝລັດກະບາບເສຣີໄທ ປຣີດີ ພະນົມຍົງນັ້ນ, ທ່ານ ປຣີດີ ພະນົມຍົງ ໄດ້ມອບໃຫ້ກຸ່ມ ເສຣີໄທ ພາກອີສານ ໂດຍແມ່ນ ທ່ານ ຕຽງ ສີຣິຂັນ, ທ່ານ ທອງອິນ ພູຣິທັດ, ທ່ານ ກວີນ ອຸດົມ, ທ່ານ ຈ່າລອງ ດາວເຮືອງ ຮ່ວມກັບ ທ່ານ ຟອງ ສິດທິທຳ ທ່ານ ທົມ ພູຣິພັດ ເປັນຜູ້ຈັດຫາອາວຸດ-ຍຸທພັນ ອາຫານ ການກີນ ແລະ ອຳນວຍຄວາມສະດວກຕ່າງໆໃຫ້ ເພື່ອສະໜັບສະໜູນໃຫ້ລາວ ໄດ້ພົ້ນອອກຈາກ ການຄອບຄອງ ຂອງຈັກກະພັດຕ່າງດ້າວ.

ຕໍ່ມາເມື່ອລັດກະບາບປຣີດີ ໄດ້ຮັບຄຳຮ້ອງຂໍຈາກຝຣັ່ງເສດໃນລາວ ໃຫ້ປົດອາວຸດທະຫານອິດສະຫລະ ແລະ ໃຫ້ຍ້າຍໄປຕັ້ງຢູ່ໄກຈາກແຄມຂອງ. ລັດກະບາບປຣີດີ ຈຶ່ງໃຫ້ລັດກະບາບລາວພັດກີ່ນ ຍ້າຍເຂົ້າໄປຢູ່ໃນກຸງເທບ. ບຸກຄົນສຳຄັນໃນລັດກະບາບພັດກີ່ນລາວ ມີສະເດັດ ເຈົ້າເພັດຊະຣາດ ດຳຣົງຕຳແໜ່ງ ປະມຸກລັດຂອງລັດກະບາບພັດກີ່ນ, ພະຍາຄຳມ້ວ ວີໂວ ນາຍົກລັດກະມົນຕີ, ສະເດັດເຈົ້າສຸວັນນະພູມາ, ສະເດັດເຈົ້າສຸພານຸວົງ, ກະຕ່າຍ ໄດນສະໄສລິດ, ພູມີ ວົງວິຈິດ, ເຈົ້າສຸກ ວົງສັກ, ຄຳໄຕ ສີພັນດອນ ແລະ ຜູ້ອື່ນໆ ....

ໃນປາຍປີ 1947 ໄດ້ມີການປ່ຽນແປງທາງການເມືອງ ໃນເມືອງໄທ ໂດຍພົນໂທ ພິນ ຊຸນຫະວັນ ໄດ້ເຮັດຣັດກະປະຫານ ໂຄ່ນລົ້ມລັດກະບາບ ທ່ານຮ້ອງ ນາວາສະຫວັດ ໃນວັນທີ 8 ພະຈິກ (11) 1947 ໃຫ້ນາຍຄວງ ອະໄພວົງ ເປັນ ນາຍົກ ແລະ ຕໍ່ມາແມ່ນ ປ. ພິບູນສົງຄາມ. ການຊ່ວຍເຫລືອທີ່ລັດກະບາບປຣີດີ ພະນົມຍົງ ເຄີຍໃຫ້ກໍ່ສິ້ນສຸດລົງ.

ຕໍ່ສະພາບການດັ່ງກ່າວ ລັດກະບານພັດກິ່ນ ລາວອິດສະຫລະ ໄດ້ຮຽກ ໂຮມກອງປະຊຸມຜູ້ແທນ ເຂດຕໍ່ຕ້ານໃນລາວ ຢູ່ທີ່ບ້ານກອກ ປະເທດໄທ ເພື່ອ ປຶກສາຫາລື ຫາວິທີຕໍ່ຕ້ານພວກລ່າເມືອງຂຶ້ນຝຣັ່ງ ຜູ້ເຂົ້າຮ່ວມປະຊຸມມີສະ'ເດັດ ເຈົ້າສຸພານຸວົງ, ທ່ານ ພູມີ ວົງວິຈິດ, ທ່ານ ເຈົ້າສຸກ ວົງສັກ, ທ່ານ ຄຳໄຕ ສີພັນດອນ ແລະຜູ້ອື່ນໆ ... ທີ່ປະຊຸມໄດ້ເຫັນດີເປັນເອກະພາບ ກັບຄຳເຫັນຂອງ ທ່ານ ຄຳໄຕ ສີພັນດອນ ທີ່ວ່າ " ການເຄື່ອນໄຫວຕໍ່ຕ້ານຂອງລາວ ກ້າສືບຕໍ່ອີງ ໃສ່ດິນໄທ ຄືຜ່ານມາ ຈະພົບກັບອຸປະສັກ ຫຍຸ້ງຍາກຫລາຍທີ່ສຸດ ພວກເຮົາຕ້ອງ ສ້າງກຳລັງເຂົ້າເຄື່ອນໄຫວ ກໍ່ສ້າງຮາກຖານການເມືອງ ກໍ່ສ້າງທີ່ໝັ້ນຢູ່ໃນລາວ ເພື່ອອີງໃສ່ປະຊາຊົນ ນຳພາປະຊາຊົນ ດຳເນີນການຕໍ່ຕ້ານ ແລະ ເສີມຂະ ຫຍາຍຂະບວນການຕໍ່ຕ້ານ ໃຫ້ເຕີບໃຫຍ່ເຂັ້ມແຂງ ".

ພາຍຫລັງກອງປະຊຸມ ທ່ານ ຄຳໄຕ ສີພັນດອນ ໄດ້ຖືກເລືອກຕັ້ງໃຫ້ ເປັນຜູ້ຕາງໜ້າ ລັດກະບານລາວອິດສະຫລະຈົ່ອລາວ ຮັບຜິດຊອບເຂດພາກໃຕ້ ເພື່ອປັບປຸງກຳລັງການຕໍ່ສູ້ ກັບຈັກກະພັດຝຣັ່ງສືບຕໍ່ໄປ.

ປີ 1947-48 ກອງກຳລັງສັດຕູ ຈັດຕັ້ງເປັນເຂດຍ່ອຍ ຢູ່ພາກກາງ ມີ ສຳນັກງານຢູ່ເຊໂນ, ຢູ່ເຂດໃຕ້ຂອງລາວ ມີກອງບັນຊາການຍ່ອຍ ຢູ່ປາກເຊ. ເຂດໃຕ້ສັດຕູໄດ້ແບ່ງເປັນ 4 ເຂດຍ່ອຍຄື : ເຂດຍ່ອຍປາກຊ່ອງ ມີໜ້າທີ່ກວດ ກາ ຢູ່ພູພຽງບໍລະເວນ, ເມືອງປາກຊ່ອງ, ທ່າແຕງ ແລະ ຫ້ວຍກອງ. ເຂດ ຍ່ອຍສາລະວັນ ມີໜ້າທີ່ກວດກາຕົວ ເມືອງສາລະວັນ, ເລົ່າງາມ, ຄົງເຊໂດນ ແລະ ຈ່າວານ. ເຂດຍ່ອຍອັດຕະປື ມີໜ້າທີ່ກວດກາ ເທສະບານເມືອງໃໝ່,

ເມືອງເກົ່າ. ກອງມີ ແລະ ສະໜາມໄຊ. ເຂດຍ່ອຍຈຳປາສັກ ກອງກຳລັງຕັ້ງຢູ່ ຕາມເສັ້ນທາງເລກທີ 13 ໃຕ້ ມີໜ້າທີ່ກວດກາເມືອງໂພນທອງ. ປາກເຊ. ເມືອງມຸນ ເພັຍໄຟ ແລະ ເມືອງໂຂງ.

ເມືອງສຳເລັດກອງປະຊຸມຜູ້ແທນເຂດຕໍ່ຕ້ານຂອງລາວ ຢູ່ບາງກອກ ແລ້ວ. ຕົ້ນປີ 1948 ລັດຖະບານລາວອີດສະຫລະຊົ່ວຄາວ ໄດ້ສະເໜີລັດຖະບານ ຫວຽດນາມຢ່າງເປັນທາງການ ຂໍໃຫ້ຊ່ວຍເຫລືອກໍ່ສ້າງເຂດຕໍ່ຕ້ານ ຢູ່ພາກໃຕ້ ເພື່ອກໍ່ສ້າງກຳລັງ ແລະ ປຸກລະບອບການຕໍ່ຕ້ານຢູ່ພາກໃຕ້.

ກາງປີ 1948 ກອງໄຊຈັກກະພັດ ໂດຍການບັນຊາຂອງທ່ານ ເສີມ ມະໄນວຽງ. ທ່ານ ກາວອນ ສີຈະເຣີນ ແລະ ທ່ານ ແກ້ວ ຫລ້າເສນາ ພ້ອມກັບ ກອງຫວຽດກຽວ 1 ໝວດ ບັນຊາໂດຍ ສະຫາຍ ດິນວັນຕວນ ໄດ້ເຂົ້າໄປອົບຮົມ ການທະຫານ ແລະ ການເມືອງຢູ່ສະຫະເຂດ 5 ຂອງຫວຽດນາມ. ທ່ານ ຟາມ ວັນດົງ ເປັນຜູ້ຕາງໜ້າ ສູນກາງພັກ ແລະ ລັດຖະບານຫວຽດນາມ ຢູ່ພາກໃຕ້ ຂອງພາກກາງຫວຽດນາມ ໄດ້ມອບໃຫ້ ຄະນະພັກແຂວງກວາງນາມ-ດາໜັງ ແລະ ກອງພັນໃຫຍ່ 93 ໂດຍແມ່ນ ສະຫາຍ ຣວາງຕັ ຕ້ອນຮັບ ແລະ ອົບຮົມ ການທະຫານ ແລະ ການເມືອງ.

ສ້າງຕັ້ງເຂດພິເສດ

ວັນທີ 10 ກໍຣະກົດ (7) 1948 ສະຫາຍ ຟາມວັນດົງ ຕາງໜ້າລັດຖະ ບານຫວຽດນາມ ເຊັນຂໍ້ຕົກລົງ " ສ້າງຕັ້ງເຂດພິເສດ " ຂຶ້ນເພື່ອຊ່ວຍເຫລືອ ລາວກໍ່ສ້າງຣາກຖານ ແລະ ທີ່ໝັ້ນ ຢູ່ພາກໃຕ້ຂອງລາວ ໂດຍມີສະຫາຍ ເຈີນ

ກ່ຽວ ເປັນຫົວໜ້າເຂດ. ສະຫາຍ ຫງວຽນຈິນເກົ່າ ເປັນການເມືອງເຂດ. ທີ່ໝັ້ນ ຂອງເຂດພິເສດດັ່ງກ່າວ ຕັ້ງຢູ່ " ບໍລິເວນຕາໃງ " ເມືອງເບັນຍາງ ແຂວງກວາງນາມ-ດາໜັງ ເຊດີ ຕິດກັບຊາຍແດນຫວຽດນາມ-ລາວ. ມີປະຊາຊົນເຜົ່າກະຕູ ດຳລົງຊີວິດຢູ່.

ເພື່ອຊ່ວຍກອງໄຊຈັກກະພັດ ໃນການເຄື່ອນໄຫວກໍ່ສ້າງທີ່ໝັ້ນ ແລະ ຊົນຂວາຍປະຊາຊົນ. ສະຫະເຂດ 5 ໄດ້ສົ່ງກຳລັງມາຊ່ວຍ 1 ກອງຮ້ອຍ ທີ່ໄດ້ຮັບການເລືອກເຟັ້ນລະອຽດ ທັງພະນັກງານສະພາທິການ ການເມືອງ ພລາທິການ ນອກນັ້ນ ຍັງມີພະນັກງານການເມືອງ ທີ່ພວມຮຽນຢູ່ ໂຮງຮຽນມັດທະຍົມ ສາມັນ ຈຳນວນ 19 ຄົນ ກໍ່ໄດ້ຖືກເລືອກມາເຮັດວຽກ ຊ່ວຍກອງໄຊຈັກກະພັດ ເທື່ອນີ້ດ້ວຍ.

ການປຸກລະດົມຊົນຂວາຍປະຊາຊົນເວລານັ້ນ ຢູ່ບໍລິເວນທິດຕາເວັນ ອອກຂອງສອງແຂວງຄື ແຂວງສາລະວັນ ແລະ ອັດຕະປື. ຈຳນວນບ້ານທີ່ ເຄື່ອນໄຫວມີ 50 ບ້ານ ຈຳນວນພົນ 5.000 ຄົນ ປະກອບດ້ວຍຫລາຍເຜົ່າ ພາສາ ແລະ ຮີດຄອງປະເພນີແຕກຕ່າງກັນ ເວລາເຄື່ອນໄຫວ 6-7 ເດືອນ ທີ່ ຕັ້ງຂອງສັດຕູ ຢູ່ໃນເຂດເຄື່ອນໄຫວ ຄືຈ່ຽວນ ແລະ ດັກຈີ. ຈ່ຽວນ ເປັນ ປ້ອມດ່ານໜ້າຂອງສັດຕູ ຢູ່ສາລະວັນ. ສ່ວນຢູ່ດັກຈີ ແມ່ນປ້ອມດ້ານໜ້າຂອງ ສັດຕູຢູ່ກົງຕູມ (ຫວຽດນາມ).

ບັນຫາການປຸກລຸກຊົນຂວາຍປະຊາຊົນ ແມ່ນບ້ານປະຊາຊົນ ຢູ່ຫ່າງ ໄກກັນ ເສດກະກິດ ແລະ ຊີວິດການເປັນຢູ່ຫຍຸ້ງຍາກ, ຂາດເຂີນ ລ້າຫລັງ. ພະ ຍາດຂອງປະຊາຊົນມັກເປັນ ແມ່ນໄຂ້ຍຸງ, ພະຍາດລຳໄສ້, ປະຊາຊົນຂາດ ຄວາມສາມັກຄີກັນ ແບ່ງແຍກ ແລະ ເກາະຜິດກັນເປັນປະຈຳ.

ບັນຫາພາຍໃນພວກເຮົາ ພະນັກງານນັກຮົບພວກເຮົາ ຫຍໍ້ທໍ້ ບໍ່ຢາກເຄື່ອນໄຫວ, ງໍ້ຫ່ຽງ. ຢາກກັບຄືນໄປເຮັດວຽກສູ້ຮົບ. ພະນັກງານຫວຽດນາມຈຳນວນໜຶ່ງ ບໍ່ຢາກເຮັດວຽກນີ້ ຢາກກັບຄືນເມືອສູ້ຮົບຢູ່ປະເທດຂອງຕົນ.

ສ້າງຕັ້ງເຂດຕໍ່ຕ້ານລາວໃຕ້

ທ້າຍປີ 1948 ທ່ານ ຄຳໄຕ ສີພັນດອນ ແລະ ທ່ານ ສີທົນ ກົມມະດຳ ໄດ້ເປັນຜູ້ບັນຊາການ ກອງໄຊຈັກກະພັດໂດຍກົງ. ໄດ້ເຄື່ອນກຳລັງໄປຢູ່ຕິດຊາຍແດນຫວຽດນາມ ອາໃສເພືອນຫວຽດນາມຊ່ວຍເຫລືອ. ເດືອນ 2 ປີ 1949 ໄດ້ນຳພາກອງທັບມາເກົ່ງສະຫະເຂດ 5. ທ່ານ ຄຳໄຕ ສີພັນດອນ ໄດ້ສົ່ງຈົດໝາຍຂອງສະເດັດເຈົ້າສຸພານຸວົງ ໃຫ້ທ່ານ ຟາມວັນດົງ ຜູ້ຕາງໜ້າລັດກະບານຫວຽດນາມ ຢູ່ສະຫະເຂດ 5 ໃນຈົດໝາຍໄດ້ຂໍໃຫ້ຫວຽດນາມ ຊ່ວຍເຫລືອສ້າງຕັ້ງເຂດຕໍ່ຕ້ານພາກໃຕ້ລາວ ແລະ ໄດ້ສະເໜີໃຫ້ທ່ານ ສີທົນ ກົມມະດຳ ເປັນຫົວໜ້າເຂດ, ທ່ານ ເສີມ ມະໂນວົງ ເປັນປະທານຄະນະກຳມະການປົກຄອງເຂດ.

ທ່ານ ຄຳໄຕ ສີພັນດອນ ແລະ ທ່ານ ຟາມວັນດົງ ແລະ ບັນດາສະຫາຍໃນສະຫະເຂດ 5 ໄດ້ແລກປ່ຽນຄວາມຄິດຄວາມເຫັນນຳກັນ ຢ່າງກວ້າງຂວາງ ແລະ ໄດ້ຕົກລົງກັນ " ສ້າງຕັ້ງເຂດຕໍ່ຕ້ານລາວໃຕ້ຂຶ້ນ " ຢ່າງເປັນທາງການ ແລະ ຈັດຕັ້ງຄະນະຜູ້ແທນ ຄະນະກຳມະການຕໍ່ຕ້ານພາກໃຕ້ ຂອງພາກການຫວຽດນາມ ເພືອຊ່ວຍເຫລືອລາວ ແລະ ໄດ້ຈັດຕັ້ງ " ກອງບັນຊາການປະສົມ " ເພືອບັນຊາກຳລັງຫວຽດ-ລາວຂຶ້ນ ແຕ່ຍັງຮັກສາ ການຈັດຕັ້ງຄຸ້ມຄອງຂອງແຕ່ລະຝ່າຍໄວ້. ຄະນະບັນຊາການກອງກຳລັງປະສົມແມ່ນທ່ານ ສີທົນ ກົມມະດຳ ເປັນຜູ້ບັນຊາການ. ສະຫາຍ ດ່ວນຮວຽນ ເປັນຮອງຫົວໜ້າ (ຮອງຜູ້ບັນຊາການ) ສະຫາຍ ຫງວຽນຈີງຟາວ ເປັນການເມືອງ.

ພາຍຫລັງການພົບປະ 2 ຝ່າຍ ຂອງຜູ້ນຳ 2 ປະເທດແລ້ວ, ກອງໄຊຈັກກະພັດ ກໍໄດ້ຮັບການປັບປຸງ ແລະ ພ້ອມກັບພະນັກງານ ກອງໂຄສະນາ ປະກອບອາວຸດຫວຽດນາມ ຂ້າມສັນພູຫລວງ ເຂົ້າມາເຄື່ອນໄຫວຢູ່ເຂດຕາເວັນອອກ ຂອງແຂວງອັດຕະປື ແລະ ສາລະວັນ ເພື່ອທຳໜ້າທີ່ໂຄສະນາ ຊົນຊວນ ປະຊາຊົນ ກໍ່ສ້າງຮາກຖານການເມືອງ. ໄລຍະນີ້ ກອງໄຊຈັກກະພັດ ມີກຳລັງ ພົນ 500 ຄົນ ມີອາວຸດຊະນິດຕ່າງໆຄົບກ້ວນ. ໂດຍໄດ້ແບ່ງອອກເປັນ 3 ພາກ ສ່ວນຄື :

+ **ພາກສ່ວນທີໜຶ່ງ** ເຄື່ອນໄຫວຢູ່ບໍລິເວນ ສາມຫລ້ຽມ ເຊກະໝາບ ເຊກອງ ເກິ່ງເຂດກອງນາ ແລະ ແກ້ງໄຊ ໂດຍແມ່ນພະນັກງານ ລາວເປັນຫົວໜ້າກອງຮ້ອຍ.

+ **ພາກສ່ວນທີ 2** ເຄື່ອນໄຫວຢູ່ເຂດ ກອງນາ ແກ້ງໄຊ ມຸ່ງຮາ ຈ່າວາບ ເພື່ອປ້ອງກັນເສັ້ນທາງຕິດຕໍ່ຊົນສົ່ງ ໃຫ້ແກ່ອັດຕະປື.

+ **ພາກສ່ວນທີ 3** ເຄື່ອນໄຫວຢູ່ເຂດດັກເປຣມ-ດັກໄຣ ເຊິ່ງແມ່ນ ຮາກຖານ ຕັ້ງແຕ່ເວລາສ້າງຕັ້ງເຂດພິເສດ ເພື່ອປັບປຸງເສັ້ນ ທາງຕິດຕໍ່ສະຫະເຂດ 5 ແລະ ເຂດດັກໄຣ.

ວັນທີ 1 ມີນາ (3) 1949 ຢູ່ເຂດທີ່ໝັ້ນຈ່າວາບ ກອງປະຊຸມໄດ້ຄັດເລືອກ ທ່ານ ສີທົນ ກົມະດຳ ເປັນຫົວໜ້າເຂດ, ທັງເປັນຜູ້ບັນຊາການທະຫານ, ທ່ານ ເສີມ ມະໂນວຽງ ໄດ້ຮັບເລືອກຕັ້ງໃຫ້ເປັນປະທານ ອຳນາດການປົກຄອງ ເຂດ. ແຕ່ງຕັ້ງ ທ່ານ ບຸນ ພົມມະທາໄຊ ເປັນຮອງຫົວໜ້າ ກອງຮ້ອຍໄຊຈັກກະ

ພັດ. ທ່ານ ສະໝານ ວິຍະເກດ ເປັນຮອງການເມືອງ. ສະຫາຍ ພົມມາ. ປະດິດ. ທອງພູນ ເປັນຫົວໜ້າໝວດຕ່າງໆ. ສ່ວນທ່ານ ຄຳໄຕ ສີພັນດອນ ເປັນຜູ້ຕາງໜ້າລັດຖະບານຕໍ່ຕ້ານ ແລະ ຜູ້ບັນຊາການທະຫານເຂດໃຕ້. ພ້ອມກັບນັ້ນ ກໍ່ເຣັດໜ້າທີ່ ອຳນາດການປົກຄອງສູງສຸດ ຂອງຂະບວນຕໍ່ຕ້ານຢູ່ພາກໃຕ້.

ຍ້າຍທີ່ໝັ້ນຕໍ່ຕ້ານ ໄປທິດຕາເວັນຕົກອັດຕະປື

ພາຍຫລັງເຄື່ອນໄຫວຢູ່ທິດຕາເວັນອອກຂອງອັດຕະປື ແລະສາລະວັນ ມາເປັນເວລາ 6 ເດືອນກວ່າ ຈຶ່ງໄດ້ຍ້າຍທີ່ໝັ້ນຕໍ່ຕ້ານ ໄປຢູ່ເຂດບ້ານໃໝ່. ຫີນລາດ ບ້ານເຈັງ. ອິນທີ. ບ້ານສົ້ມປ່ອຍ. ບ້ານອຸກ ແລະ ບ້ານແທ ລຽບຕາມແຄມນ້ຳເຊປຽນ. ເພື່ອຊ່ວຍໃນການຍົກຍ້າຍ ສະຫະເຂດ 5 ຫວຽດນາມ ໄດ້ສົ່ງກຳລັງມາເພີ້ມໃຫ້ກອງບັນຊາການທະຫານເຂົ້າ ມີທະຫານຫລວງ 2 ກອງ ຣ້ອຍ ພ້ອມທັງພະນັກງານ ເສນາທິການ. ການເມືອງ. ພລາທິການ (ກອງຣ້ອຍ 200 ບັນຊາໂດຍ-ສະຫາຍ ເລກີ (LECU) ກອງຣ້ອຍ 44 ບັນຊາໂດຍ ສະຫາຍ ວໍລຽນ (Volien). ສະຫະເຂດ ຍັງໄດ້ຈັດຕັ້ງໜ່ວຍພລາທິການ ໂດຍແມ່ນ ສະຫາຍ ຫງວຽນເຕີນໂຕນ (Nguyen-Ten-Ton) ມີໜ້າທີ່ສ້ອງຕ້ຽກອງລຳ ລຽງ. ສ້ອງລະບົບສອງ. ສອງຣັບສົ່ງ. ຣັບປະກັນດ້ານເຄື່ອງອຸປະໂພກ ແລະ ບໍລິໂພກ.

ວັນທີ 24 ຕຸລາ (10) 1949 ກຳລັງເຄື່ອນຍ້າຍກອງທີ 1 ໄດ້ຂ້ຳມນ້ຳ ເຊກອງ ເໜືອເທສະບານ ແຂວງອັດຕະປື ໄປເຖິງບ້ານເຈັງ. ບ້ານອິນທີ ຕາມ ການນັດໝາຍ ດ້ວຍຄວາມປອດໄພ. ມື້ຕໍ່ມາ (25/10) ຂະບວນດັ່ງກ່າວ ໄດ້ສືບ ຕໍ່ເດີນ ທາງໄປເຖິງບ້ານໃໝ່. ບ້ານຫີນລາດ.. ບ້ານແທ ແຄມນ້ຳເຊປຽນ ແລ້ວຢຸດພັກ ກຳລັງຢູ່ທີ່ນີ້.

ກອງທີ 2 ເຄື່ອນເຂົ້າແນວຫລັງສັດຕູ ຢູ່ສາລະວັນ ໄດ້ເລັດລອດປິດ ຄ້າຍຂອງສັດຕູ ແລ້ວກໍ່ໄດ້ຂ້າມນ້ຳເຊກອງ ໄປທາງທິດເໜືອ ແລ້ວໄປໂຮມກັນ ຢູ່ບ້ານໃໝ່ ຫີນລາດ. ພະນັກງານການນຳໃນກອງທີ 2 ນີ້ມີ ທ່ານ ຈຳນຽນ ບຸນລອດ, ພົມມາ ດວງມາລາ ແລະ ສະຫາຍ ກວາຍ ເຊິ່ງເປັນພະນັກງານບັນ ຊາ ຈາກກອງໃຊຈັກກະພັດ. ຝ່າຍອາສາສະມັກຫວຽດນາມ ຄືສະຫາຍ ເຈີນ ຈອງເຄີມ (Tran Trong Kham) ຮັບຜິດຊອບກອງໂຄສະນາ ປະກອບ ອາວຸດ, ສະຫາຍ ດັ່ງເຄ (Dang Khe) ຮັບຜິດຊອບກອງປຸກລຸກຈິນຂວາຍ.

ການປັບປຸງກຳລັງ ແລະ ກຳສະພາບການ ຈຸດທີ່ຕັ້ງບ້ານໃໝ່ ບ້ານຫີນ ລາດ ແຄມນ້ຳເຊປຽນ ພຽງໄລຍະສັ້ນ. ກອງປະຕິບັດງານ ຂອງການປະຕິວັດ ແລະ ເພື່ອເພື່ອນບ້ານຫວຽດນາມ ໄດ້ແບ່ງກັນລົງກໍ່ສ້າງຮາກຖານ ການເມືອງ ຢູ່ທົ່ວເຂດແນວຫລັງສັດຕູ ເພື່ອຂະຫຍາຍກຳລັງ ເປີດການຕໍ່ຕ້ານ ໄປທົ່ວ 3 ແຂວງພາກໃຕ້. ກອງກຳລັງ ປະຕິວັດ ໄດ້ແບ່ງເປັນ 4 ເຂດຄື : ທິດຕາເວັນຕົກ ຢູ່ເຂດບຶງພະໄພ, ເຂດພູພຽງບໍລິເວນ. ທິດຕາເວັນຕົກສຽງໃຕ້ ຂອງອັດຕະປື ແລະ ເຂດຊາຍແດນລາວ-ກຳປູເຈັຍ.

ເຖິງການປີ 1950 ກົມກອງໂຄສະນາ ປະກອບອາວຸດ ໄດ້ເອົາໃຈໃສ່ ປຸກລະດົມປະຊາຊົນ ກໍ່ສ້າງພື້ນຖານການເມືອງ, ຈັດຕັ້ງສະມາຄົມລາວກູ້ຊາດ, ສະມາຄົມແມ່ນັກຮົບ ເພື່ອເປັນພື້ນຖານສ້າງຄວາມສາມັກຄີ ລະຫວ່າງນັກຮົບ ກັບປະຊາຊົນ ກ້າວໄປເຖິງການກໍ່ຕັ້ງແນວໂຮມເອກະພາບ ຢູ່ພາກໃຕ້ລາວ. ປີ 1950 ນີ້ ສາມາດສ້າງສະມາຊິກ ສະມາຄົມລາວກູ້ຊາດໄດ້ເກືອບ 2.000 ຄົນ ໃນນີ້ ຢູ່ທິດໃຕ້ ເມືອງອັດຕະປື ມີ 307 ຄົນ, ແຄມຝັ່ງແມ່ນ້ຳເຊກອງ ມີ 150 ຄົນ ເຂດບຶງພະໄພ ເພັຍໄຟ ມີ 92 ຄົນ, ເຂດເມືອງຈຳປາສັກ ມີ 670 ຄົນ, ພູພຽງ ບໍລະເວນ ມີ 550 ຄົນ, ທິດໃຕ້ເມືອງສາລະວັນ ມີ 120 ຄົນ ທັງໝົດນີ້ ໄດ້ຈັດ ເປັນ 2 ໜ່ວຍ ໂດຍມີຄະນະບໍລິຫານງານພັກ ຊີ້ນຳ-ນຳພາຢ່າງລະອຽດ.

ສະມາຄົມແມ່ນັກຮົບ ໄດ້ຮັບການສ້າງຕັ້ງຂຶ້ນ ຢູ່ບາງທ້ອງຖິ່ນ ໂດຍສະ
ເພາະຢູ່ພາກຕາເວັນຕົກສຽງໃຕ້ ແຂວງອັດຕະປື ມີສະມາຊິກ 414 ຄົນ. ເຂດ
ບະຊາດມີ 400 ຄົນ.

ປີ 1950 ແມ່ນປີທຳອິດ ໃນການຍຶດເອົາເຂດທີ່ມີປະຊາຊົນອາໃສ ຢູ່
ຢ່າງໜ້າແໜ້ນ. ດຳເນີນການກໍ່ສ້າງຮາກຖານການເມືອງ ແລະ ກໍ່ແມ່ນບາດ
ກ້າວທຳອິດ ທີ່ໄດ້ປັບປຸງ ແລະ ຂະຫຍາຍກຳລັງ. ປີ 1950 ທົ່ວເຂດໃຕ້ ມີກຳລັງ
ຫຼວງ 1 ກອງຮ້ອຍ (ກອງໄຊຈັກກະພັດ) ກອງໂຄສະນາປະກອບອາວຸດ 6 ກອງ
ແຕ່ລະກອງມີພະນັກງານນັກຮົບ 35-40 ຄົນ. ກອງໂຄສະນາເວລານັ້ນ ໄດ້
ແກ່ກອງຮ້ອຍ 10 ບັນຊາໂດຍທ່ານ ແກ້ວ ຫລວງເສນາ. ກອງ 11 ບັນຊາໂດຍ
ທ່ານ ກາວີນ. ກອງ 12 ບັນຊາໂດຍ ທ່ານ ກາວອນ. ກອງ 13 ບັນຊາໂດຍ
ທ່ານ ກວາຍ. ກອງ 14 ບັນຊາໂດຍ ທ່ານ ພົມມາ ດວງມາລາ ແລະ ທ່ານ
ປະດິດ ທ່ຽງທຳ. ເຄື່ອນໄຫວໃນເຂດເມືອງໂພນທອງ. ຈຳປາສັກ. ສຸຂຸມາ.
ມຸນລະປາໂມກ ແລະ ເມືອງໂຂງ. ກອງທີ 15 ບັນຊາໂດຍ ທ່ານ ຈຳນຽນ
ບຸນລອດ ກອງນີ້ເຄື່ອນໄຫວສົມທົບກັບ ທະຫານອິດສະຫລະກຳປູເຈັຍ ໂດຍ
ແມ່ນສະຫາຍ ບູທອງ ແລະ ສະຫາຍ ເສີຍແກ້ວ ບັນຊາຢູ່ເຂດຊາຍ ແດນລາວ-
ກຳປູເຈັຍ ຕາເວັນອອກ.

ນອກຈາກໄດ້ປັບປຸງກຳລັງຫລວງແລ້ວ. ກໍໄດ້ກໍ່ສ້າງກຳລັງກອງຫຼອນ
ແຕ່ 1 ຫາ 2 ໜ່ວຍ ຢູ່ແຕ່ລະບ້ານ ຄືຢູ່ທິດຕາເວັນຕົກສ່ຽງໃຕ້ຂອງອັດຕະປື ມີ
ກອງຫລອນ 120 ຄົນ. ຢູ່ລຽບຝັ່ງຂອກອງ ມີ 59 ຄົນ. ເຂດປົ່ງພະໄພ-ເພັຍໄພ
ມີກອງຫລອນ ແລະ ກອງປ້ອງກັນຕົວຢູ່ທຸກບ້ານ. ເຂດບະຊາດມີ 200 ຄົນ. ຢູ່
ພູພຽງບໍ່ລະເວນ ແລະ ສາລະວັນ ກໍ່ໄດ້ຈັດຕັ້ງກອງຫລອນ ແລະ ກອງປ້ອງກັນ
ຕົວຂຶ້ນທຸກບ້ານ.

ສະພາບສັດຕູໃນປີ 1949 ພວກເຂົາບໍ່ໄດ້ເອົາໃຈໃສ່ ສະໜາມຮົບພາກ ໃຕ້ຫລາຍພໍປານໃດ, ບັນດາປົດຄ້າຍຢູ່ກະແຈກກະຈາຍ, ຈຳນວນພົນແຕ່ລະ ໜວດມີນ້ອຍ, ປົດຄ້າຍ ແລະ ຂຸມຄອງ ມີລັກສະນະງ່າຍດາຍ ທະຫານເຜີຕົວ ແລະ ບໍ່ມັກອອກກວດກາສາລະເວ. ພໍມາເຖິງປີ 1950 ພວກເຂົາໄດ້ອອກແຮງ ປັບປຸງປົດຄ້າຍ, ຂຸມຄອງສູ້ຮົບ, ສັບຊ້ອນກຳລັງ ແລະ ວາງວິທີສະກັດກັ້ນ ການ ເຄື່ອນໄຫວຂອງຝ່າຍປະຕິວັດ. ນັບແຕ່ເດືອນ ກຸມພາ (2) 1950 ພວກສັດຕູ ໄດ້ເກນທະຫານເພື່ອເພີ້ມກຳລັງພົນໃຫ້ກົມກອງຕ່າງໆ. ກ່ອນໜ້ານີ້ (ປີ 1949) ມີກຳລັງພົນພຽງແຕ່ 1ກອງພັນ ປະຈຳຢູ່ເຂດໃຕ້, ເດືອນ 3/1950 ເພີ້ມຂຶ້ນ 2 ກອງຮ້ອຍ, ເຖິງກາງປີ 1950 ເພີ້ມຂຶ້ນ 1 ກອງພັນ ທ້າຍປີເພີ້ມຂຶ້ນເປັນ 3 ກອງພັນ, ຕັ້ງປົດຄ້າຍຢູ 23 ຈຸດ ເພື່ອເຄື່ອນໄຫວກວດກາສາລະເວ ແລະ ຍ້າຍ ມາຢູ່ຕາມສາຍທາງເລກທີ 13, 23 ແລະ ເພີ້ມຈຳນວນພົນໃນຄ້າຍບາຊາດ ເພື່ອປ້ອງກັນສາຍທາງລຳລຽງ ໄປອັດຕະປື ແລະ ຕົວເມືອງປາກເຊ. ພ້ອມກັນ ນີ້ ພວກສັດຕູ ກໍ່ໄດ້ສ້າງເຂດພື້ນການ ສ້າງພູພຽງບໍລະເວນ ໃຫ້ກາຍເປັນສະ ໜາມຮົບ, ຕັ້ງໜ່ວຍປະຈັນບານ ຮັກສາເສັ້ນທາງເລກທີ 23 ແລະ ທີ່ຕັ້ງຢູ່ ເມືອງປາກຊ່ອງ, ທ່າແຕງ, ຫີນລາດ, ປາກເຊ, ຫ້ວຍກອງ ປະກອບອາວຸດໃຫ້ ນັກສືບສອດແນມ ເຂົ້າທຳລາຍເຂດທີ່ໝັ້ນຂອງຝ່າຍປະຕິວັດ.

ການສູ້ຮົບໄດ້ເກີດຂຶ້ນຢູ່ທົ່ວພາກໃຕ້ ທັງຢູ່ອັດຕະປື, ສາລະວັນ, ຈຳປາ ສັກ ແຕ່ລະຝ່າຍມີການລົ້ມຕາຍ ເປັນຈຳນວນຫລວງຫລາຍ ປະຊາຊົນ ໄດ້ຮັບ ຄວາມເດືອດຮ້ອນສຸດແສນສາຫັດ.

ປັບປຸງກຳລັງ ແລະ ການບັນຊາການຮົບ

ເດືອນກໍລະກົດ (7) 1950 ຄະນະຜູ້ແທນລັດຖະບານລາວຕໍ່ຕ້ານ ແລະ ກອງບັນຊາການທະຫານເຂດໃຕ້ ໄດ້ເປີດກອງປະຊຸມ ສະຫລຸບຕີລາຄາສະພາບການ ແລະ ວາງທິດທາງການເຄື່ອນໄຫວ ປະຕິບັດໜ້າທີ່ຂອງກອງກຳລັງຕໍ່ສູ້ກັບພວກລ່າເມືອງຂຶ້ນຝຣັ່ງ. ພາຍຫລັງກອງປະຊຸມ ຄະນະກອງບັນຊາການ ທະຫານເຂດໃຕ້ ໄດ້ແບ່ງກັນລົງຊີ້ນຳວຽກຢູ່ຮາກຖານ ແລະ ຈັດຕັ້ງການຊີ້ນຳ ຢູ່ແຕ່ລະເຂດ ເພື່ອເປັນເອກະພາບກັບ ອາສາສະມັກຫວຽດນາມ ດັ່ງນີ້ :

- ດ້ານຮົບຕາເວັນຕົກສ່ຽງໃຕ້ ແຂວງຈຳປາສັກ ກວມເອົາເມືອງປາກຊ່ອງ. ປາກເຊ ແລະ 6 ຕົວເມືອງ ຢູ່ຕາເວັນຕົກ ແລະ ທົ່ງພຽງແມ່ນ້ຳຂອງ ບັນຊາໂດຍ ສະຫາຍ ຫງວຽນໂມ (Nguyen Mo) ກອງອາສາສະມັກຫວຽດນາມ ໄດ້ແກ່ກອງຮ້ອຍ 44 ກອງຮ້ອຍ 52 ແລະ ກອງໄຊຈັກກະພັດ.

- ດ້ານຮົບສາລະວັນ ລວມເອົາພູພຽງບໍລະເວນ ນັບແຕ່ເມືອງອຸດົມສີນ ເລົ່າງາມ.ທ່າແຕງ. ສາລະວັນ. ຄົງເຊໂດນ. ວາປີຄຳຫອງ ບັນຊາໂດຍສະຫາຍ ເຈີນກຽດ (Tran Quyet) ກຳລັງອາສາສະມັກຫວຽດນາມ 1 ກອງຮ້ອຍ ຢູ່ເລົ່າງາມ. ກຳລັງ 1 ໝວດກົມມະດຳ ຢູ່ເມືອງອຸດົມສີນ ແລະ 1 ໝວດຢູ່ເລົ່າງາມ.

- ດ້ານຮົບເຊກອງ ແລະ ອ້ອມແອ້ມເມືອງອັດຕະປື ແລະ ທາງທິດໃຕ້ຄື ເມືອງສະໜາມໄຊ. ໄຊເສດຖາ. ພູວົງ ໂດຍແມ່ນ ສະຫາຍ ມາຍຈອງດິງ (Mai Trong Dins) ມີກອງອາສາສະມັກຫວຽດນາມ ແລະ ກອງຮ້ອຍ 200 ທະຫານຫລວງຂອງກອງໄຊຈັກກະພັດ.

ໃນໄລຍະນີ້ ທ່ານ ຄຳໄຕ ສີພັນດອນ, ທ່ານ ສີທົນ ກົມມະດຳ ແລະ ທ່ານ ເສີມ ມະໄໝວຽງ ຕົກລົງສ້າງຕັ້ງ ອຳນາດການປົກຄອງຕໍ່ຕ້ານ ເມືອງສະໜາມໄຊ ແລະ ເມືອງໄຊເສດຖາ ຂຶ້ນກັບແຂວງອັດຕະປື. ສ້າງຕັ້ງເມືອງ ຈັນທະອຸດົມ ຢູ່ເຂດບ້ຽພະໄພ ແລະ ເມືອງອຸດົມສິນ ຢູ່ເຂດໃຕ້ປາກຊ່ອງ ຂຶ້ນກັບຈຳປາສັກ ມອບໃຫ້ສະຫາຍ ຈັນໝັ້ນ ແລະ ສະຫາຍ ສີ ຮັບຜິດຊອບເມືອງເລົ່າງາມ, ສະຫາຍ ທ້າວແທ່ນ ຮັບຜິດຊອບເມືອງທ່າແຕງ, ສະຫາຍ ທ້າວດວນ ຮັບຜິດຊອບທິດຕາເວັນອອກ ຂອງແຂວງອັດຕະປື ແລະ ສາລະວັນ.

(ສະຫາຍ ຈັນໝັ້ນ ປ່ຽນຊື່ເປັນ ສົມຊື່ນ, ສີ ປ່ຽນ ປ່ຽນຊື່ເປັນ ສະໝັ້ນ ສຸດທິຈັກ, ສະຫາຍ ແທ່ນ ປ່ຽນຊື່ເປັນ ຄຳສຸກ. ບັນດາສະຫາຍດັ່ງກ່າວ ຕໍ່ມາໄດ້ກາຍເປັນກຳມະການ ສູນກາງພັກ ແລະ ລັດຖະມົນຕີ ກະຊວງຕ່າງໆ)

ຈັດຕັ້ງລັດຖະບານລາວຕໍ່ຕ້ານ

ກອງປະຊຸມໃຫຍ່ ຜູ້ແທນແນວລາວຕໍ່ຕ້ານ ທົ່ວປະເທດ ໄດ້ໄຂຂຶ້ນໃນ ວັນທີ 13-15 ສິງຫາ (8) 1950 ຢູ່ທີ່ບໍລິເວນຈາຍແດນລາວ-ຫວຽດນາມ ເຊິ່ງເປັນທີ່ໝັ້ນຂອງແຂວງຫົວພັນ ໂດຍມີຜູ້ແທນເຂົ້າຮ່ວມທັງໝົດ 150 ກວ່າ ທ່ານ ຕາງໜ້າໃຫ້ອົງການມະຫາຊົນ, ກຳລັງປະກອບອາວຸດ, ອົງການຈັດຕັ້ງ ສາສນາ, ນັກສຶກສາປັນຍາຊົນ ຜູ້ກ້າວໜ້າ ທີ່ມາຈາກເຂດທີ່ໝັ້ນ ປະຕິວັດ ຕ່າງໆ ຕາງໜ້າກອງຫລອນທົ່ວປະເທດ.

ກອງປະຊຸມ ໄດ້ເຫັນດີ ຮັບຮອງເອົາໂຄງການການເມືອງ 12 ຂໍ້. ກຳ ນົດນະໂຍບາຍຮ່ວມມືກັບຫວຽດນາມ ແລະ ກຳປູເຈັຍ ເພື່ອຂັບໄລ່ຈັກກະພັດ. ສ້າງປະເທດລາວ ໃຫ້ມີເອກະລາດ, ອິດສະຫລະພາບ, ປະຊາທິປະໄຕ, ເອກະ ພາບ ແລະ ວັດທະນາຖາວອນ. ກອງປະຊຸມໄດ້ຕົກລົງ " ສ້າງຕັ້ງລັດກະບານຕໍ່ ຕ້ານ " ແລະ " ແນວລາວອິດສະຫລະຂຶ້ນ ". ກອງປະຊຸມໄດ້ປ່ອນບັດຄັດເລືອກ ເອົາສະເດັດເຈົ້າສຸພານຸວົງ ເປັນນາຍົກລັດຖະມົນຕີ ລັດຖະບານລາວຕໍ່ຕ້ານ. ທ່ານ ໄກສອນ ພົມວິຫານ ເປັນລັດຖະມົນຕີ ກະຊວງປ້ອງກັນປະເທດ..

ພາຍຫລັງກອງປະຊຸມ ວັນທີ 25 ສິງຫາ (8) 1950, ນາຍົກລັດຖະມົນ ຕີແຫ່ງລັດກະບານຕໍ່ຕ້ານ ໄດ້ມີມະຕິຕົກລົງ ແບ່ງປະເທດລາວອອກເປັນ 4 ເຂດຄື : ເຂດຕາເວັນຕົກສ່ຽງເໜືອ, ເຂດຕາເວັນອອກສ່ຽງເໜືອ, ເຂດກາງ ແລະ ເຂດໃຕ້. ຢູ່ເຂດໃຕ້ມີ 2 ແຂວງຄື : ແຂວງເຊກອງ (ລວມເອົາອັດຕະປື) ແລະ ແຂວງຈຳປາສັກ (ລວມເອົາ ແຂວງສາລະວັນ). ແຕ່ງຕັ້ງທ່ານ ຄຳໄຕ ສີພັນດອນ ເປັນປະທານ ຄະນະກຳມະການຕໍ່ຕ້ານ ປະຈຳເຂດກາງ, ທັງ ເປັນ ຜູ້ຕາງໜ້າລັດຖະບານລາວຕໍ່ຕ້ານ ແລະ ປະທານແນວໂຮມອີກດ້ວຍ. ແຕ່ງຕັ້ງ ທ່ານ ພູມ ສີປະເສີດ ເປັນປະທານຄະນະກຳມະການລາວຕໍ່ຕ້ານ ແລະ ຜູ້ຕາງ ໜ້າລັດຖະບານລາວຕໍ່ຕ້ານ ປະຈຳເຂດໃຕ້.

ທ້າຍປີ 1950 ເຂດໃຕ້ ໄດ້ແບ່ງເຂດເຄື່ອນໄຫວຂອງກຳລັງຕໍ່ຕ້ານ ເປັນ 4 ເຂດຕື່ມອີກຄື :

+ ເຂດທີ່ໝັ້ນຕົ້ນຕໍ ແມ່ນແຕ່ອັດຕະປື ຫາເສັ້ນທາງເລກທີ 13 ຂຶ້ນ ຫາພູພຽງບໍລະເວນ.

+ ເຂດທີ່ໝັ້ນເມືອງຈຳປາສັກ ແຕ່ສຸຂຸມ ຫາຊາຍແດນລາວ-ກຳປູເຈັຍ.
+ ເຂດທີ່ໝັ້ນ ແຕ່ແຄມນ້ຳເຊກອງ ຫາຊາຍແດນສະຫະເຂດ 5 ຫວຽດນາມ (ເມືອງອັດຕະປື ຫາຊາຍແດນຫວຽດນາມ).
+ ເຂດທີ່ໝັ້ນ ແຂວງສາລະວັນ ແຕ່ທາງເລກທີ 13 ເໜືອ ແລະ ທາງເລກທີ 16 ຈາກເຊກອງຫາເຊໂດນ.

ການເຄື່ອນໄຫວທັງ 4 ເຂດ ລ້ວນແຕ່ປະສົບຜົນສຳເລັດເປັນຢ່າງດີ.

ທ້າຍປີ 1952 ຈຳນວນກອງຫລອນ ໄດ້ເພີ້ມຂຶ້ນຫລາຍທີບ ເມື່ອ ທຽບໃສ່ເມື່ອກ່ອນ. ກອງຫລອນຢູ່ທິດຕາເວັນຕົກສ່ຽງໃຕ້ ຂອງອັດຕະປື ມີ 1.476 ຄົນ. ຢູ່ຝັ່ງຂວາແມ່ນ້ຳເຊກອງ ມີ 700 ຄົນ. ເຂດບາຊາດ ແລະ ລຽບ ຕາມທາງເລກທີ 13 (ເພັຍໄຟ) ມີ 4.510 ຄົນ. ເຂດບໍ່ລະເວນ ມີ 572 ຄົນ. ເຂດທ່າແຕງມີ 400 ຄົນ. ເຂດຍອດນ້ຳຕາມຊາຍແດນລາວ-ຫວຽດນາມ ມີ 900 ຄົນ (ປະຫວັດສາດກອງທັບ ໜ້າ 195).

ການຮ່ວມສຳພັນສູ້ຮົບລາວ-ຫວຽດນາມ-ກຳປູເຈັຍ ປີ 1951-1954

ທ້າຍປີ 1950 ສະຫະລັດອາເມລິກາ ໄດ້ເຊັນສັນຍາຮ່ວມມືກັບໄທ ແລະ ຝຣັ່ງເສດ " ຮ່ວມມືສຳພັນກັນ ປ້ອງກັນ ແລະ ຕ້ານການຂະຫຍາຍໂຕ ຂອງ ຄອມມູນິດ " ໂດຍໄທອະນຸຍາດໃຫ້ອາເມລິກາ ກໍ່ສ້າງ ແລະປັບປຸງເດີ່ນບິນ. ກໍ່ ສ້າງເສັ້ນທາງຍຸດທະສາດ ຈາກບາງກອກ ຫາຊາຍແດນໄທ-ລາວ. ໝອງຄາຍ ໃຫ້ໄທຈັດສົ່ງກຳລັງທະຫານມາຢູ່ຕາມຊາຍແດນ ກຽມພ້ອມຊ່ວຍການຮົບໃນລາວ.

ຕົ້ນປີ 1951 ອາເມລິກາ ໄດ້ເຊັນສັນຍາ ຮ່ວມມືກັບລັດຖະບານຝຼຍ ຊະນະນິກອນ (24/8/1950-20/11/1951) ຮັບເອົາການຊ່ວຍເຫລືອຂອງ ອາເມລິກາ ທາງດ້ານເສດຖະກິດ ແຕ່ຕົວຈິງ ແມ່ນການຊ່ວຍເຫລືອທະຫານ ເພື່ອຕ້ານກັບ ຂະບວນການຮັກຊາດ ພາຍໃຕ້ການນຳຂອງລັດຖະບານລາວຕໍ່ ຕ້ານ ໂດຍການນຳຂອງ ສະເດັດເຈົ້າສຸພານຸວົງ ແລະ ນັກຕໍ່ສູ້ ເພື່ອເອກະລາດ ຫລ່ຽທ່ານ.

ພາຍຫລັງ ໄດ້ມີສັນຍາຕ່າງໆແລ້ວ ອາເມລິກາ ໄດ້ຈັດຕັ້ງອົງການ ຢູ່ສິດ (USIS) ຢູ່ເສດ (USAID) ແລະ ຢູ່ຊອມ (USOM) ຈັດຕັ້ງບໍລິສັດ ການບິນແອຊາເຕ (AIR CHARTER) ຢູ່ໃນລາວ ເພື່ອປະຕິບັດສັນຍາ ແລະ ປະຕິບັດນະໂຍບາຍຮຸກຮານລາວ ຕາມແຜນການຂອງຕົນ ສ່ວນຢູ່ໃນປະເທດ ໄທ, ອາເມລິກາ ໄດ້ກໍ່ສ້າງ ແລະ ປັບປຸງເດີ່ນຍົນ ອູ່ຕະເພົາ ອຸດອນທານີ, ອຸບົນ ຣາຊທານີ, ເດີ່ນຍົນນະຄອນພະນົມ ແລະ ເດີ່ນຍົນບ່ອນອື່ນໆ, ກໍ່ສ້າງເສັ້ນທາງ ຈາກບາງກອກ ຫາຊາຍແດນໄທ-ລາວ (ກະໝົນມິດຕະພາບ) ແລະ ເສັ້ນທາງ ຍຸທສາດຕ່າງໆ ເພື່ອເຊື່ອມຕໍ່ ຈາກບາງກອກ ຫາຊາຍແດນລາວ ແລະ ກຳປູ ເຈັຍ. ອາເມລິກາ ໄດ້ຍົນທະຫານມາປະຈຳຢູ່ປະເທດໄທ, ສ້າງການທັບອາກາດ ຢູ່ຕາມພາກຕ່າງໆ ຂອງປະເທດໄທ ນຳເອົາເຄື່ອງບິນປະເພດຕ່າງໆ ລວມທັງ ເຄື່ອງບິນກີ້ມລະເບີດ B52 ມາປະຈຳປະເທດໄທ ໃຊ້ການທັບອາເມລິກາໃນໄທ ເຊື່ອມເຂົ້າມາລາວ ແລະ ກີ້ມລະເບີດໃນລາວ. ສຳນັກງານໃຫຍ່ ໜ່ວຍສືບ ຣາຊການລັບ ຊີໄອເອ (CIA) ຕັ້ງຢູ່ອຸດອນ ແລະ ສົ່ງໜ່ວຍສືບຂ່າວເຂົ້າມາ ປະຕິບັດງານໃນລາວ ໃນຮູບການຊ່ວຍເຫລືອຕ່າງໆ ເຊັ່ນອົງການພັດທະນາ ຊົນນະບົດ, ໜ່ວຍງານອະນຸລັກສັດປ່າ (ງົວບາ) ແລະ ອື່ນໆ. ອາເມລິກາ ໄດ້ ອາໃສສັນຍາເຫລົ່ານີ້ ສ້າງຄວາມຊອບທຳ ໃຫ້ຕົນເອງ ເພື່ອຮຸກຮານລາວ.

ພາຍຫລັງຝຣັ່ງເສດ ປລາໄຊ ໃນສະໜາມຮົບບັ້ນຕ່າງໆ ທັງຢູ່ພາຍໃນ ລາວ ແລະ ຫວຽດນາມ ໄດ້ເຮັດໃຫ້ ທະຫານ ແລະ ນັກທຸລະກິດຝຣັ່ງ ເສັຍຂວັນ ລັດກະບານຝຣັ່ງ ຈຶ່ງໄດ້ສົ່ງພົນເອກ ເດີລາດ ເດ ຕາດຊີຍີ (Delas de Tajigy) ເຊິ່ງເປັນນາຍພົນທີ່ມີປະສົບການ ການຮົບ ແລະ ມີອິດທິພົນທີ່ສຸດ ມາເປັນຜູ້ບັນຊາການສູງສຸດ ໃນອິນດູຈີນ ໃນເດືອນທັນວາ (12) 1950 ນາຍ ພົນ ເດີລາດ ໄດ້ປັບປຸງກອງທະຫານຝຣັ່ງ ໃນອິນດູຈີນ ແລະ ກອງບັນຊາການ ທະຫານຫຸ່ນຂອງ 3 ຊາດອິນດູຈີນ. ເພີ້ມກຳລັງທະຫານ ທັງເກັບເອົາທະຫານ ເຂົ້າໃໝ່ ແລະ ເຄື່ອນຍ້າຍທະຫານ ມາຈາກຫົວເມືອງຂຶ້ນ ຈາກທະວີບອັຟຣິກາ ເຂົ້າມາເສີມ. ຢູ່ພາກໃຕ້ ເດີລາດ ໄດ້ເພີ້ມກຳລັງທະຫານຢູ່ປາກເຊ, ປາກຊ່ອງ, ສາສະວັນ ແລະ ອັດຕະປື. ສົມທົບກັບກຸ່ມບຸນອູ້ມ ນະຈຳປາສັກ ສັບຊ້ອນອຳນາດ ການປົກຄອງຂັ້ນບ້ານ ຕາແສງຄືນໃໝ່ ເອົາບຸກຄົນທີ່ເປັນໄມ້ມືຂອງພວກເຂົາ ເຂົ້າໃນຕຳແໜ່ງສຳຄັນ. ດຳເນີນການປາບປາມ ຈັບກຸມ ບຸກຄົນທີ່ສົງໄສວ່າ ເປັນຝ່າຍປະຕິວັດ. ຈັດຕັ້ງທະຫານບ້ານຂຶ້ນ ແຕ່ລະບ້ານ. ຫ້າມບໍ່ໃຫ້ປະຊາຊົນ ຊຸມນຸມກັນເກີນກວ່າ 3 ຄົນຂຶ້ນໄປ. ດຳເນີນການກວາດລ້າງ ຈັບກຸມ ຊອກຫາ ກຳລັງຂອງຝ່າຍແນວລາວອັກຊາດ. (ປະຫວັດສາດ ກອງທັບ ໜ້າ 215).

ໃນປີ 1951 ນີ້. ສະພາບການຂອງໂລກ ມີການປ່ຽນແປງ ເຊິ່ງເປັນ ຜົນດີໃຫ້ແກ່ການຕໍ່ສູ້ ຂອງ 3 ຊາດອິນດູຈີນ ໂດຍໄດ້ຮັບການຊ່ວຍເຫລືອຈາກ ສະຫະພາບໂຊຫວຽດ ແລະ ຈີນ ທັງທາງດ້ານວັດຖຸ ແລະ ຈິດໃຈ. ການຕໍ່ສູ້ຂອງ 3 ຊາດ ມີການຂະຫຍາຍຕົວ ເຕີບໃຫຍ່ ເຂັ້ມແຂງ. ກອງທະຫານຫວຽດນາມ ໄດ້ໄຊຊະນະ ໃນບັ້ນຮົບ ບຽນຫ້ຽ (ຫວຽດນາມ) ທະຫານຝຣັ່ງເສັຍຊີວິດ 8.300 ຄົນ (2 ກອງພົນ). ສ່ວນຢູ່ໃນປະເທດລາວ ການຕໍ່ສູ້ນັບແຕ່ມີກໍ່ຕັ້ງ 1945 ເປັນຕົ້ນມາ ເຖິງ 1950 ເປັນເວລາ 5-6 ປີ ສາມາດຈັດຕັ້ງລັດກະ ບານຕໍ່ຕ້ານຂຶ້ນສຳເລັດ ໄດ້ເຮັດໃຫ້ການຕໍ່ຕ້ານຂະຫຍາຍຕົວ ຢ່າງໄວວາ ແລະ ມີໄຊຊະນະ ໃນບັ້ນຮົບຕ່າງໆ ທົ່ວປະເທດ.

ລັດກະບວນຕໍ່ຕ້ານແຫ່ງຊາດ ໄດ້ຈັດຕັ້ງຂຶ້ນ ໃນວັນທີ 14 ສິງຫາ (8) 1950 ມີລາຍຊື່ດັ່ງນີ້ :

- ສະເດັດເຈົ້າສຸພານຸວົງ	ນາຍົກລັດກະມົນຕີ
- ທ່ານ ສີງກະໂປ ສີໂຄດຈຸນລະມະນີ	ຮອງນາຍົກ
- ທ່ານ ໄກສອນ ພົມວິຫານ	ລັດກະມົນຕີ ກະຊວງປ້ອງກັນ ປະເທດ
- ທ່ານ ພູມີ ວົງວິຈິດ	ລັດກະມົນຕີ ມະຫາດໄທ
- ທ່ານ ໝູຮັກ ພູມສະຫວັນ	ລັດກະມົນຕີ ເສດກະກິດ
- ທ່ານ ສີທົນ ກົມມະດຳ	ລັດກະມົນຕີ ຄົມຂົນ
- ທ່ານ ເຈົ້າສຸກ ວົງສັກ	ລັດກະມົນຕີສຶກສາ, ວັດທະນະທຳ ແລະ ສັງຄົມ
- ທ່ານ ທ້າວຈະເຣີນ	ລັດກະມົນຕີ ຄົມມະນາຄົມ

(700 ປີ ແຫ່ງມໍຣະສຸມ ໃນພຣະຣາຊອານາຈັກລາວ ໜ້າ 52)

ພາຍຫລັງກອງປະຊຸມໃຫຍ່ ຄັ້ງທີ 2 ແລ້ວ ຕໍ່ມາວັນທີ 11/3/1951 ໄດ້ກໍ່ຕັ້ງ " ຄະນະແນວໂຮມສາມັກຄີ ຮ່ວມສຳພັນລາວ-ຫວຽດນາມ-ກຳປູເຈັຍ " ຂຶ້ນ ໂດຍມີ ໝຸກຄົນສຳຄັນ ແລະ ມີຊື່ສຽງເວລານັ້ນ ເຂົ້າຮ່ວມຄື : ທ່ານ ຟາມ ວັນດົງ, ຮວ້ຽງກວາກຫວຽດ, ສະເດັດເຈົ້າສຸພານຸວົງ, ໝູຮັກ ພູມສະຫວັນ, ເຊີນອອກມົງ, ຕຸດເຊີມຸດ. ການເຄື່ອນໄຫວຂອງຄະນະແນວໂຮມ ແມ່ນຄວາມສະມັກໃຈ, ສະເໝີພາບ, ເຄົາຣົບນັບຖືອຳນາດອະທິປະໄຕ ເຊິ່ງກັນ ແລະ ກັນ. ເປັນເຈົ້າຕົນເອງ, ເອົາໃຈໃສ່ຊ່ວຍເຫລືອເຊິ່ງກັນ ແລະ ກັນ ດ້ານການເມືອງ, ການທະຫານ, ເສດກະກິດ ແລະ ວັດທະນະທຳ ... ແລະ ພ້ອມກັນຕີຂັບໄລ່ພວກຝຣັ່ງຜູ້ຮຸກຮານ ແລະ ການແຊກແຊງຂອງອາເມລິກາ.

ຢູ່ພາກໃຕ້ ເມື່ອທ່ານ ພູນ ສີປະເສີດ ໄດ້ຮັບແຕ່ງຕັ້ງມາເປັນປະທານ ຄະນະກຳມະການລາວຕໍ່ຕ້ານ ແລະ ທັງເປັນຜູ້ຕາງໜ້າລັດຖະບານລາວຕໍ່ຕ້ານ ປະຈຳເຂດໃຕ້ ຕາມມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງວັນທີ 13-15/8/1950, ທ່ານ ພູນ ສີປະເສີດ ໄດ້ແຕ່ງຕັ້ງ ທ່ານ ສີທິນ ກົມມະດຳ ເປັນຫົວໜ້າກອງບັນຊາການທະຫານເຂດໃຕ້, ທ່ານ ບຸນ ພົມມະຫາໄຊ ເປັນເລຂາພັກ, ທ່ານ ພົມມາ ດວງມາລາ ເປັນຫົວໜ້າເສນາທິການ, ທ່ານ ຈວງ ສີວິໄລ ແລະ ທ່ານ ສະໝານ ວິຍະເກດ ຮັບຜິດຊອບ ຫ້ອງການ ການເມືອງ, ທ່ານ ສົມໝັ້ນ ຮັບຜິດຊອບຫ້ອງການພະລາທິການ.

ໃນປີ 1951 ນີ້ ສະຫະເຂດ 5 ຫວຽດນາມ ໄດ້ສົ່ງກອງພັນ 49 ເຊິ່ງ ເປັນກຳລັງຫລວງ ຂອງເຂດຕີດລຽນ ເຄື່ອນໄຫວຢູ່ສະໜາມຄົບ ກວາງນາມ-ດາໜັງ ບັນຊາໂດຍ ສະຫາຍ ເຈີນ ແທງ ເຮືອງ ເປັນຫົວໜ້າ, ສະຫາຍ ຫວໍ ຊວານລຸກ ເປັນຫົວໜ້າການເມືອງ ໄດ້ເຂົ້າມາສົມທົບກັບ ກອງໄຊຈັກກະພັດ ເຄື່ອນໄຫວຢູ່ເຂດພາກໃຕ້ຂອງລາວ. ໄດ້ສົມທົບກັບກອງຮ້ອຍ 8 ແລະ ກອງ ຮ້ອຍ 9 ເຄື່ອນໄຫວຢູ່ເຂດອຸດົມສີນ, ເລົ່າງາມ, ຮັກສາເຂດໃຕ້ ແລະ ເຂດ ເໜືອ ຂອງທົ່ງພຽງບໍລະເວນ. ຕໍ່ມາໄດ້ຮ່ວມກັບກອງໄຊຈັກກະພັດ ເຄື່ອນໄຫວ ໃນເຂດອັດຕະປື ແລະ ຈຳປາສັກ ໂດຍປະຕິບັດ 2 ໜ້າທີ່ ຄືກໍ່ສ້າງຮາກຖານ ການເມືອງ ຈັດຕັ້ງກອງຫລອນ ແລະ ຂົນຂວາຍນັກຮຽນນັກສຶກສາ ບັນຍາຊົນ ຜູ້ຊົງຄຸນວຸດທິ ແລະ ພຣະສົງ ເຂົ້າຮ່ວມກັບຂະບວນປະຕິບັດ. ຕ້ານພວກລ່າ ເມືອງຂຶ້ນ ແລະ ລູກແຫລ້ງຕີນມີ. ໜ້າທີ່ອັນໜຶ່ງອີກ ແມ່ນການຕີສັດຕູ ປ້ອງກັນ ເຂດທີ່ໝັ້ນ ແລະ ປະຊາຊົນ.

ກອງຮ້ອຍ 44 ຂອງກອງພັນ 49 ອາສາສະມັກຫວຽດນາມ ຮ່ວມກັບ ທະຫານກອງໄຊຈັກກະພັດ ບັນຊາໂດຍ ສະຫາຍ ທ່າວ໋ງ ໄດ້ຮ່ວມກັບກອງຫລອນ ໄດ້ຈັດຕັ້ງ ນຳເອົາກຳລັງຫລວງ ລອດເຂົ້າເຂດຜນວຫລັງສັດຕູ ແລະ ຕີສັດຕູ ຢູ່ທາງເລກທີ 13. ພູພຽງບໍ່ລະເວນ ແລະ ເຊກອງ. ການສູ້ຮົບ ຢູ່ສະໜາມຮົບ ເຊກອງ ໄດ້ດຳເນີນໄປຢ່າງດຸເດືອດ ຂ້ຽວຂາດ. ພ່ານການສູ້ຮົບໃນບັ້ນນີ້ ມີນັກ ຮົບຜູ້ພິລະອາດຫານຫລາຍຄົນເກີດຂຶ້ນ ຄື ສະຫາຍ ຈັນທາ ບ້ານຄັນມະກ່ອງ ເມືອງໄຊເສດຖາ ເຊິ່ງເປັນພະນັກງານເກົ່າຂອງເມືອງໄຊເສດຖາ. ສະມາຊິກ ພັກຄອມມູນິດອິນດູຈີນ ຜູ້ທຳອິດຂອງອັດຕະປື ໄດ້ກືກສັດຕູຈັບ ແລະ ໄດ້ໃຊ້ວິທີ ຊີ້ຈ່າງ່ຈອບອອຍ ແລະ ທຸບຕີທໍລະມານຢ່າງປ່າເຖື່ອນ ແຕ່ສະຫາຍ ຈັນທາ ກໍ່ບໍ່ ຍອມໄຂຄວາມລັບ ສະຫາຍໄດ້ຊັດຊີ່ປ໋ລີສຸດຕໍ່ພັກ ຈົນເກົ້າລົມຫາຍໃຈສຸດທ້າຍ. ສະຫາຍ ຫາວຽນກວ໋ງແຄ່ງ ໃນເວລາສູ້ຮົບກືກບາດເຈັບຢູ່ທ້ອງ ແລະ ກືກ ສັດຕູຈັບສົ່ງໄປເມືອງໃໝ່. ສັດຕູໄດ້ສອບກາມເອົາຄວາມລັບ ສະຫາຍບໍ່ຍອມ ບອກ ຍິ່ງກວ່ານັ້ນ-ສະຫາຍຍັງໄດ້ດ່າ ປະນາມພວກສັດຕູ ແລ້ວຈີກຜ້າບັງ ທີ່ພັນ ທ້ອງຂອງຕົນອອກ ແລ້ວຈົກເອົາໃສ້ຂອງຕົນອອກມາ ເພື່ອສະແດງເຖົ້າຄວາມ ພິລະອາດຫານ ບໍ່ຍອມຈຳນົນຕໍ່ສັດຕູ ຂອງນັກຮົບປະຕິວັດ (ປະຫວັດສາດກອງ ທັບ ໜ້າ 223-224).

ສະພາບສັດຕ ໃນປີ 1952-1953

ປີ 1952 ສັດຕູໄດ້ເພີ້ມກຳລັງຂຶ້ນຕື່ມ 1 ກອງພັນ ປະຈັນບານ ແລະ ເອົ້າກືວ່າ " ເຂດໃຕ້ເປັນການທີ່ໝັ້ນ " ເອົ້າ " ເຂດຈຳປາສັກ ເປັນເຂດປອດ ໄພ " ພວກສັດຕູໄດ້ປ່ຽນທິດເຄື່ອນໄຫວ ໄປທາງເລ້ົ່ງງາມ. ຟື້ນຟູການຂົນສົ່ງ

ທາງເລກທີ 16 (ທ່າແຕງ-ອັດຕະປື) ໃຊ້ນັກຮົບສອດແນມ ດຳເນີນການກວດ ລ້າງ ໂດຍໃຊ້ກຳລັງຕີນາທາງກອນຕູມ (ຫວຽດນາມ) ປະສານສົມທົບກັບ ກຳ ລັງຢູ່ພາກກາງ ແລະ ພາກຕາເວັນອອກ ຂອງກຳປູເຈັຍ ແລະ ທິດເໜືອ ມາ ຈາກເຕີຍທາວຽນ ເພື່ອກວາດລ້າງການປະຕິວັດລາວຢູ່ພາກໃຕ້.

ພວກສັດຕູ ໄດ້ປັບປຸງອຳນາດການປົກຄອງ ຢູ່ໃນເຂດຄວບຄຸມຄື ຈຳປາສັກ, ລຽບຕາມທາງເລກທີ 13, ປາກເຊ, ຄົງເຊໂດນ, ປາກຊ່ອງ, ຍາເຫີນ, ທ່າແຕງ, ລະແວ ແລະ ທິດຕາເວັນອອກສ່ຽງເໜືອຂອງກຳປູເຈັຍ, ພວກສັດຕູ ໄດ້ເພີ້ມການເຄື່ອນໄຫວ ນັກສືບສອດແນມ ແລະ ຊື້ຈ້າງເອົາເຈົ້າ ກົກເຈົ້າເຫລົ່າ ແລະ ນາຍບ້ານ່ເກົ່າ ຕາແສງເກົ່າ. ພ້ອມດຽວກັນນີ້ ສັດຕູໄດ້ ເກັບເກນທະຫານ ເພື່ອເພີ້ມກຳລັງໃນກອງທັບຂອງພວກເຂົາ.

ອາດເວົ້າໄດ້ວ່າ ໃນປີ 1952 ນີ້ ພວກສັດຕູ ໄດ້ເອົາໃຈໃສ່ ກໍ່ສ້າງອຳ ນາດການປົກຄອງ ເພີ້ມທະວີວິທີການທາງທະຫານ, ການເມືອງ ເພື່ອປາບ ປາມ ໃຫ້ພາກໃຕ້ ມີຄວາມສະຫງົບ.

ປີ 1953 ພວກສັດຕູ ໄດ້ເພີ້ມທະວີກໍ່ສ້າງຮາກການ ນັກສືບສອດແນມ, ປັບປຸງອຳນາດການປົກຄອງ ໃນເຂດທີ່ເຂົາຍຶດໄດ້, ເກັບເກນຊາວໜຸ່ມໄປເປັນ ທະຫານ, ເພີ້ມທະວີການກວາດລ້າງ, ຍຶດເອົາຈຸດຕ່າງໆ ເພື່ອໝຶບຮັດເຂດ ພາກຕາເວັນອອກ. ເຂດຍ່ອຍຂອງເຂດໃຕ້ ມີ 2 ເຂດຄື : ເຂດປາກຊ່ອງ ແລະ ເຂດປາກເຊ.

- ເຂດປາກເຊ ແບ່ງເປັນ 3 ເຂດຍ່ອຍຄື : ປາກເຊ, ຈຳປາສັກ, ແລະ ຕາມເສັ້ນທາງເລກທີ 13.

- ເຂດປາກຊ່ອງ ແບ່ງເປັນ 3 ເຂດຍ່ອຍຄື : ສາລະວັນ, ປາກຊ່ອງ ແລະ ອັດຕະປື.

ກຳລັງທະຫານຂອງສັດຕູ ໃນປີ 1952 ມີຈຳນວນ 3.800 ຄົນ ເຖິງປີ 1953 ເພີ້ມເປັນ 5.000 ຄົນ. ທ້າຍປີ 1953 ສັດຕູມີ 39 ກອງຮ້ອຍ ເພີ້ມກາບປະກອບອາວຸດ ໃຫ້ທະຫານ. ຕັ້ງໜ້າປັບປຸງຂຸ້ມຄອງ. ປັບປຸງກໍ່ສ້າງປ້ອມຍາມ. ປົດຄ້າຍ ເພື່ອກຽມພ້ອມສູ້ຮົບ.

ເດືອນ 10/1952 ສັດຕູໄດ້ກວາດລ້າງ ແລະ ຢຶດເລົ່າງ່ວມ, ພູພຽງ ບໍລະເວນ, ສະໜາມໄຊ ພໍເຖິງເດືອນ 2/1953 ພວກເຂົາຂະຫຍາຍກາບຢຶດ ຄອງໄປທາງບ້ານປູຍ ເດືອນ 3/1953 ຢຶດເອົາຈຳປີ. ເດືອນ 5/1953 ພວກເຂົາໄດ້ບຸກເຂົ້າບ້ານໂພນ. ຈຸດປະສົງຂອງພວກເຂົາ ຢາກຢຶດເອົາບ້ານໂພນ ແລະ ພະໄພ ເພື່ອຄວບຄຸມພູພຽງບໍລະເວນ ໃຫ້ມີຄວາມສະຫງົບ.

ພ້ອມໆກັບການກວາດລ້າງ, ພວກເຂົາໄດ້ຂະຫຍາຍເຂດປະກອບອາວຸດ ຢູ່ບ້ານຍອງເຫີນ ລົງໄປຕາມທາງເລກທີ 16 ເພື່ອເຊື່ມຕໍ່ໃສ່ເສັ້ນທາງລຳລຽງ ໄປອັດຕະປື ແລະ ບ້ານປູຍ ສ້າງໜ່ວຍໃຕ້ດິນ ເຂົ້າເມືອງສານໄຊ, ເຊກອງ ທີ່ຂຶ້ນກັບພາກຕາເວັນອອກ ແລະ ດັນດາ ເຂດລະແວ.

ໃນປີ 1953 ນີ້ ສັດຕູໄດ້ປະສານກາບເຄື່ອນໄຫວ ຂອງກຳລັງຢູ່ເຂດໃຕ້ຂອງລາວກັບພາກກາງຂອງລາວ ທິດເໜືອກັບເຕີຍຫງວຽນ (ຫວຽດນາມ) ທິດຕາເວັນອອກສຽງເໜືອຂອງກຳປູເຈັຍ.

ດ້ານການເມືອງ, ພວກເຂົາໄດ້ໂຄສະນາ ເຜີ່ຍແຜ່ຄວາມສາມັກຄີ ລາວ-ຫວຽດນາມ, ເຜີ່ຍແຜ່ລາວລຸ່ມ-ລາວເທິງ, ເຜີ່ຍແຜ່ພະນັກງານນັກ ຮົບກັບປະຊາຊົນ. ອອກແຮງຊີ້ຈ້ຳເຈົ້າກົກເຈົ້າເລົ່າ, ຜູ້ມີອິດທິພົນ, ພໍ່ຄ້າ, ນັກສຶກສາ ປັນຍາຊົນ ເພື່ອໃຫ້ເປັນໄມ້ມືຂອງເຂົາເຈົ້າ ຢູ່ຕາມທ້ອງຖິ່ນ ແລະ ບ້ານຕ່າງໆ ໃນເຂດພາກໃຕ.

ກອງບັນຊາການທະຫານເຂດໃຕ້ ໄດ້ຕີລາຄາສະພາບການ ປີ 1952 ແລະ 1953 ໄວ້ດັ່ງນີ້ :

" ຍ້ອນສັດຕູດຳເນີນການປາບປາມຢ່າງຮຸນແຮງ, ສະນັ້ນ ບັນດາໜ້າ ວຽກຂອງພວກເຮົາ ພົບກັບຄວາມຫຍຸ້ງຍາກຫລາຍຢ່າງ, ຮາກຖານກຶກຮັດ ແຄບ ແລະ ຕັດແບ່ງ, ເຂດຍາດເຫີນ ແລະ ເຂດບາຊາດ ທີ່ເປັນເຂດຮາກຖານ ເກົ່າຂອງພວກເຮົາ ບໍ່ທັນໄດ້ຮັບການຟື້ນຟູເທື່ອ, ຮາກຖານເຂດລະແວ ຍັງ ແຄບ. ສ່ວນຮາກຖານຕ່າງເວັນອອກ ຍັງບໍ່ທັນແໜ້ນໜາ ... ເຂດ 3 ຫລ່ຽມ ຈຸດ ໃຈກາງສະໜາມໄຊ-ອຸດົມສິນ-ຈັນທະອຸດົມ ແມ່ນຍັງບໍ່ທັນໄດ້ຮັບການປັບປຸງ ... ການສະໜັບສະໜູນຂອງປະຊາຊົນ ຕໍ່ການຕີຕ້ານ ແລະ ສູ້ຮົບກັບສັດຕູ ຍັງບໍ່ທັນ ກວ້າງຂວາງ ພາຍໃນພະນັກງານ ປະກົດມີແນວຄິດຄອບແຄບ ຂາດຄວາມອົດ ທົນ ໃນການປຸກລະດົມປະຊາຊົນ ຫລືບໍ່ເຂົ້າຮ່ວມສູ້ຮົບ ". (ປະຫວັດສາດກອງ ທັບ ໜ້າ 262-263).

ປັ້ນອະວະສານ ຂອງນັກລ່າເມືອງຂົ້ນຝຣັ່ງ

ຫລັງຈາກກອງທັບຫວຽດນາມ ມີໄຊຊະນະ ຢູ່ປັ້ນຮົບເຕີຍບັກ (ພາກຕາເວັນຕົກສ່ຽງເໜືອ) ເຊິ່ງເປັນປັ້ນຮົບຂະໜາດໃຫຍ່ ຂອງສັດຕູ ແລະ ໄດ້ ເຮັດໃຫ້ສັດຕູເສັຍຫາຍຢ່າງໜັກໜ່ວງ. ໄຊຊະນະດັ່ງກ່າວ ໄດ້ສ້າງເງື່ອນໄຂໃຫ້ ກອງທັບຫວຽດນາມ ສາມາດເປີດກວ້າງ ເຂດປົດປ່ອຍ ແຕ່ຝັ່ງຂວາແມ່ນ້ຳ ທາວ ເກີງແມ່ນ້ຳດາ ແລະ ລຽບຕາມຊາຍແດນ ລາວ-ຫວຽດນາມ ຕັ້ງແຕ່ ມົກເຈົາ-ດຽນບຽນຟູ ແຕ່ເຂດທີ່ໝັ້ນຫວຽດບັກ ໄປເກີງຊາຍແດນ ຫວຽດ ນາມ- ລາວ. ເຊື່ອມຕໍ່ກັບເຂດປົດປ່ອຍເຕີຍບັກ ຫວຽດນາມ ກັບເຂດທີ່ໝັ້ນ ກອງຫລອນຂອງລາວ ຢູ່ພາກເໜືອ.

ປັ້ນຮົບປົດປ່ອຍລ່ຳເໜືອ. ຊຽງຂວາງ ໂດຍການເຂົ້າຮ່ວມຂອງທະ ຫານຫວຽດນາມ ກ.ອ.ງ.ພົນ 308. 312. 316. 304 ແລະ ກອງພັນໃຫຍ່ 148 (ລວມທັງໝົດ 10 ກອງພັນໃຫຍ່) ແລະ ກຳລັງທະຫານລາວ ແລະ ທະຫານ ກອງຫລອນປະຈຳຢູ່ແຕ່ລະແຂວງ ໃນເຂດປັ້ນຮົບ. ຈຳນວນພົນພັນຄົນ ບັນຊາ ການຮົບໂດຍ ສະຫາຍ ຫວ່ຫງວຽນຢາບ ຜູ້ບັນຊາການທະຫານສູງສຸດຫວຽດ ນາມ ແລະ ສະເດັດເຈົ້າສຸພານຸວົງ ນາຍົກລັດຖະມົນຕີລາວຕໍ່ຕ້ານ ແລະ ທ່ານ ໄກສອນ ພົມວິຫານ ລັດຖະມົນຕີ ກະຊວງປ້ອງກັນປະເທດ ຂອງລັດຖະບານ ລາວຕໍ່ຕ້ານ. ປົດປ່ອຍລ່ຳເໜືອ ໃຊ້ເວລາສູ້ຮົບ 8 ວັນ 8 ຄືນ ສຳເລັດສົມບູນ ປົດປ່ອຍໝອງແຮດ, ບ້ານບານ ຕົວເມືອງຊຽງຂວາງສຳເລັດ, ຕີສັດຕູຢູ່ນ້ຳອູ, ປົດປ່ອຍເມືອງຂວາ, ເມືອງງອຍ, ນ້ຳບາກ, ປາກແຊ່ງ ໝີບຮັດສັດຕູຢູ່ຫລວງ ພະບາງ ເຮັດໃຫ້ສັດຕູຕ້ອງເພີ້ມກຳລັງເກີງ 5 ກອງພັນ ຈາກທົ່ງພຽງພາກ ເໜືອຫວຽດນາມ ມາຊ່ວຍປ້ອງກັນຫລວງພະບາງ.

ການປລາໄຊດ້ານການທະຫານ ການເມືອງ ແລະ ຂໍ້ຫຍຸ້ງຍາກທາງ ດ້ານເສດຖະກິດ-ສັງຄົມ ເຮັດໃຫ້ຝຣັ່ງ ຕ້ອງຂໍການຊ່ວຍເຫລືອ ຈາກອາເມ ລິກາ ເພື່ອຫາທາງອອກ. ລັດຖະບານຝຣັ່ງ ໄດ້ແຕ່ງຕັ້ງນາຍພົນ ຮັງກຣີນາວາ (Hangri NAVA) ຫົວໜ້າເສນາທິການທະຫານບົກ ເຂດຕາເວັນຕົກສຽງ ເໜືອມະຫາສະໝຸດປາຊີຟິກ ມາເປັນຜູ້ບັນຊາການສູງສຸດ ທະຫານຝຣັ່ງ ໃນ ອິນດູຈີນ ນາວາ ຝ່າງແລນ ເຮັດໃຫ້ 3 ປະເທດອິນດູຈີນ ມີຄວາມສະຫງົບພາຍ ໃນ 18 ເດືອນ. ນາວາ ອາໃສການຊ່ວຍເຫລືອຈາກສະຫະລັດອາເມລິກາ ເພື່ອ ຈັດຕັ້ງກຳລັງຫລວງ ສຸມໃສ່ການກໍ່ສ້າງກຳລັງເຄື່ອນທີ່ຍຸດທະສາດ ເພື່ອຕີກຳ ລັງຫລວງຂອງຫວຽດນາມ ເມື່ອສຳເລັດຕາມແຜນແລ້ວ ສະພາບຂອງທາງ ການທະຫານ ຈະມີການປ່ຽນແປງໄປໃນທາງທີ່ດີຂຶ້ນ.

ເພື່ອປະຕິບັດແຜນດັ່ງກ່າວ ນາວາ ໄດ້ຮັກສາເຂດຈັ້ງທ່າຍຸດທະສາດ ນັບແຕ່ເສັ້ນສະໜານທີ່ 18 ຂຶ້ນໄປ ຫລີກລ້ຽງບໍ່ໃຫ້ມີການປະທະກັນໃນທຸກດ້ານ. ໃຫ້ມີຄວາມສະຫງົບ ຢູ່ໃນຫວຽດນາມ ແລະ ພວກກາງອິນດູຈີນ. ເມື່ອກຽມທະ ຫານພ້ອມແລ້ວ. ລະດູຝົນ 1954 ຈະເຄື່ອນທັບບຸກຕີຂຶ້ນທິດເໜືອເສັ້ນຂະໜານ ທີ 18 ເພື່ອສ້າງທ່າແຮງທາງດ້ານການທະຫານ ສະພາບສົງຄາມ ຈະມີການ ປ່ຽນແປງ ແລະ ມີໃຊໃນທີ່ສຸດ ແຜນການນີ້ ຈະປະຕິບັດໃຫ້ສຳເລັດພາຍໃນ 18 ເດືອນ.

ເພື່ອໃຫ້ ນາວາ ໄດ້ກອບທະຫານຝຣັ່ງອອກຈາກ ອັຟຣິກາເໜືອ ມາ ເພີ້ມໃຫ້ອິນດູຈີນ. ຊຸ້ນຊ້ຽວເກນທະຫານ ເພື່ອສ້າງກຳລັງຍຸທສາດເຄື່ອນທີ່. ປັບປຸງກຳລັງຫລວງ ທີ່ມີຢູ່ແລ້ວ ໃຫ້ເຂັ້ມແຂງ. ພັດທະນາທະຫານທີ່ປະຈຳຢູ່ແຕ່ ລະບ່ອນ ໃຫ້ມີປະສິດທິພາບສູງຂຶ້ນ.

ເດືອນ 11 ປີ 1953 ນາວາ ເຫັນກໍ່ລັງຫລວງຫວຽດນາມ ເຄື່ອນ ທັບຂຶ້ນທິດຕາເວັນຕົກສຽງເໜືອ. ການກໍ່ສ້າງກຸ່ມທີ່ຕັ້ງທາງທະຫານຢ່າງແໜ້ນ ໜາ ເພື່ອປ້ອງກັນ ທິດຕາເວັນຕົກສຽງເໜືອຫວຽດນາມ ແລະ ປ້ອງກັນພາກ ເໜືອຂອງລາວ. ເພື່ອຊ່ວຍ ແລະ ປ້ອງກັນດຽນບຽນຟູ (ທິດຕາເວັນອອກ ສຽງເໜືອ ຫວຽດນາມ) ນາວາ ໄດ້ເປີດປັ້ນເຄື່ອນທັບ ບຽດຢຶດອາແກຣສເຊີ (Agresseur) ໃຊ້ກໍ່ລັງ 6 ກອງພັນ ເຂົ້າຢຶດເອົາເມືອງອຍ ນ້ຳບາກ ເມືອງຂວາ. ສ້າງຄ້າຍຕາມສາຍນ້ຳຊູ.

ການຕອບໂຕ້ແຜນການຂອງນາວາ ໃນສະໜາມຮົບລາວ

ຢູ່ສະໜາມຮົບພາກກາງ

ກອງທັບ ແລະ ປະຊາຊົນລາວ ພ້ອມດ້ວຍອາສາສະມັກຫວຽດນາມ ໄດ້ສືບຕໍ່ເປີດປັ້ນຮົບໃຫຍ່ຂຶ້ນ ໃນເດືອນ 2 ປີ 1953 ຕາມເສັ້ນທາງເລກທີ 12. 8 ແລະ ທາງເລກ 9 ເປີດເສັ້ນທາງຍຸດທະສາດ ຕໍ່ກັບພາກເໜືອ. ພາກກາງ ແລະ ພາກໃຕ້ຂອງລາວ. ການສູ້ຮົບໃນພາກກາງ ຂໍຍົກບາງປັ້ນຮົບສຳຄັນດັ່ງນີ້:

ວັນທີ 21 ເດືອນ 12 ກອງທັບລາວ ໄດ້ຫລອນຕີຄ້າຍຄ່ຳແຮ ທຳລາຍ ກອງພັນທະຫານອານເຊຣີ ແລະ ກອງຮ້ອຍປືນໃຫຍ່ 105 ວັນທີ 22 ສືບຕໍ່ຕີ ປົດຄາມາ. ວັນທີ 23 ຕີຄ້າຍປ່າກ້ວຍ ວັນທີ 24 ຕີປົດປ່ອຍເທສະບານ ເມືອງ ຍົມມະລາດ. ວັນທີ 25 ຕີປົດປ່ອຍ ຕາແສງທ່າແຂກ.

ເມື່ອເຫັນສະພາບແນວນັ້ນ, ນາວາ ໄດ້ເພີ້ມກຳລັງໃຫ້ພາກກາງ ປະກອບດ້ວຍກອງພັນເຄື່ອນທີ່ທະຫານລາບ 19 ກອງພັນ, ກອງພັນປືນໃຫຍ່ 3 ກອງພັນ, ແລະ ສ້າງຕັ້ງສູນບັນຊາການຢູ່ເຊໂນ ເພື່ອເປັນສູນເຕົ້າໂຮມກຳລັງເຄື່ອນທີ່ໃໝ່ຂອງນາວາ.

ການສູ້ຮົບ ຢູ່ສະໜາມຮົບພາກກາງ ໄດ້ແກ່ຍາວ ໄປເຖິງເດືອນ ມັງກອນ (1) 1954.

ຢູ່ສະໜາມຮົບພາກໃຕ້

ທ້າຍເດືອນ 11 ປີ.1953 ກອງພັນ 436 ໄດ້ຮັບຄຳສັ່ງໃຫ້ເຄື່ອນທັບແຕ່ເງ້ອາບ ລັດປ່າຂ້າມສາຍພູຫລວງ ລົງສູ້ພາກໃຕ້ລາວ ເຄື່ອນທັບຢ່າງລຳບາກຫຍຸ້ງຍາກ ໄລຍະທາງ 300 Km ຕາມເສັ້ນທາງພູພາປ່າດົງ ທຸລະກັນດານ ແຕ່ກອງພັນກໍ່ໄປເຖິງພາກໃຕ້ ໃນກາງເດືອນ 1 ປີ 1954 ຕາມກຳນົດເວລາປິດລັບ. ກອງບັນຊາການທະຫານເຂດໃຕ້ ໄດ້ຮັບຄຳສັ່ງຈາກສູນກາງ ໃຫ້ກຳສະພາບສັດຕູ ກຽມສະໜາມຮົບ ເພື່ອຮັບໃຊ້ໃຫ້ກຳລັງຫລວງຫວຽດນາມ ມາ ປົດປ່ອຍອັດຕະປື, ສາລະວັນ.

ທ້າຍປີ 1953 ສັດຕູຢູ່ສາລະວັນ, ປາກຊ່ອງ, ປາກເຊ ແລະ ອັດຕະປື ກຳລັງກະວົນກະວາຍ ຍ້ອນໄດ້ຮັບຂ່າວ ການປລາໄຊ ຂອງກອງພັນອັຟຣິກາ ຢູ່ພາກກາງ ແລະ ຄາດຄະເນວ່າ ຈະມີການໂຈມຕີໃນໄວໆນີ້, ດັ່ງນັ້ນ, ພວກເຂົາຈຶ່ງເອົາໃຈໃສ່ສາລະເວ ເວນຍາມ ປ້ອແປງທີ່ຕັ້ງປ້ອງກັນ ບໍ່ໃຫ້ໂຈມຕີໄດ້ງ່າຍ.

ກອງທະຫານ ຝ່າຍປະຕິວັດ ປະກອບດ້ວຍກອງຮ້ອຍ 200. ກຳລັງ ເຄື່ອນທີ່ເຂດ. ກອງຮ້ອຍ 4. ກອງຮ້ອຍໄຊຈັກກະພັດ ເຊິ່ງກຳລັງເຄື່ອນໄຫວ ຢູ່ຜາສາດ. ກອງຮ້ອຍ 8 ເຄື່ອນໄຫວຢູ່ຈັນທະອຸດົມ. ກອງຮ້ອຍ 7 ຢູ່ອຸດົມສິນ. ກອງຮ້ອຍ 9 ຢູ່ສາລະວັນ. ກອງຮ້ອຍ 44 ຢູ່ອັດຕະປື ພ້ອມກັບທະຫານກອງ ຫລອນ ຕາແສງ ແລະ ໝວດທະຫານທ້ອງຖິ່ນ.

ວັນທີ 28 ມັງກອນ (1) 1954 ໄດ້ເປີດກອງປະຊຸມຂຶ້ນ ຢູ່ແຄມຫ້ວຍ ຄຳໄຊ (ຫ່າງຈາກເມືອງໃໝ່ ໄປທາງທິດຕາເວັນອອກສຽງເໜືອ ປະມານ 20 ກິໂລແມັດ). ມີພະນັກງານຂັ້ນກອງຮ້ອຍຂຶ້ນໄປເຂົ້າຮ່ວມ. ຮອງຜູ້ບັນຊາ ການກອງພັນ 436 ກໍໄດ້ເຂົ້າຮ່ວມທີ່ປະຊຸມ ໄດ້ຄົ້ນຄວ້າຄຳສັ່ງຂອງທ່ານ ພົນເອກ ວໍຫງວຽນຢາບ. ຮັບຟັງການລາຍການສະພາບສັດຕູ ຢູ່ອັດຕະປື. ທີ່ປະ ຊຸມໄດ້ເປັນເອກະພາບກັນ ຮັບເອົາແຜນການສູ້ຮົບ ແລະ ກຳນົດເປົ້າໝາຍບຸກ ໂຈມຕີ ດັ່ງນີ້ :

ການບຸກໂຈມຕີ ແຮັດເປັນ 2 ບາດກ້າວ :

+ **ບາດກ້າວທີ 1** ກຳລັງກອງພັນ 436 ທັງໝົດ ຕີສັດຕູຢູ່ຄ້າຍບ້ານປຸຍ. ສ່ວນກອງຮ້ອຍ 200. 400 ແລະ ທະຫານທ້ອງຖິ່ນ ທະຫານກອງຫລອນອັດຕະ ປື ຕີປ້ອມຢູ່ນອກເທສະບານເມືອງໃໝ່. ປິດລ້ອມສັດຕູ ຢູ່ເຂດເທສະບານ. ແລະ ເດີ່ນຍົນ.

+ **ບາດກ້າວທີ 2** ຫລັງຈາກຕີປິດປ່ອຍບ້ານປຸຍແລ້ວ ກອງພັນ 436 ຮີບກອນກຳລັງອອກຈາກບ້ານປຸຍ ໄປສົມທົບກັບກຳລັງທີ່ປິດລ້ອມເທສະບານ ເມືອງໃໝ່ ແລ້ວສືບຕໍ່ປິດປ່ອຍເທສະບານ ແຂວງອັດຕະປື.

ສະພາບສັດຕູຢູ່ອັດຕະປື

ຢູ່ເທສະບານເມືອງໃໝ່ : ກຳລັງສັດຕູປະມານ 1.000 ຄົນ ແບ່ງ ເປັນ 2 ກຸ່ມຄື : ກຸ່ມທີ່ 1 ຢູ່ຂອບເຂດເທສະບານເມືອງໃໝ່ ແລະ ຢູ່ເດີ່ນຍົນ ອັດຕະປື ລວມກຳລັງພົນມີ 4 ກອງຮ້ອຍ. ກຸ່ມທີ່ 2 ຢູ່ປ້ອມບ້ານປູຍ ມີ 1 ກອງ ຮ້ອຍ. 1 ໝວດປືນໃຫຍ່. ນອກນັ້ນ ກໍ່ມີກຳລັງທ້ອງກິ່ນ ແລະ ພວກປຸ້ນ ຕັ້ງປົດ ຄ້າຍນ້ອຍກະຈັດກະຈາຍ ຢູ່ແຕ້ລະບ່ອນ. ຜູ້ບັນຊາການຢູ່ແຂວງອັດຕະປື ແມ່ນ ຄົນຝຣັ່ງຊື່ ກະຣັງຊັງ (Grand Jean) ສະພາບພູມີສາດ ມີແມ່ນ້ຳອ້ອມ 3 ດ້ານ ມີປະຊາຊົນຢູ່ຢ່າງໜາແໜ້ນ.

ຢູ່ຄ້າຍບ້ານປູຍ : ຄ້າຍບ້ານປູຍ ຕັ້ງຂຶ້ນໃນເດືອນ 10 ປີ 1952 ເພື່ອ ປ້ອງກັນເມືອງໃໝ່. ປ້ອມຈ້ຳທ່າ ໄດ້ຕັ້ງຢູ່ທິດໃຕ້ບ້ານປູຍ 1 ກິໂລແມັດ. ຫ່າງ ຈາກເທສະບານເມືອງໃໝ່ 19 ກິໂລແມັດ ປ້ອມສ້າງດ້ວຍໄມ້ ປະສົມດິນ. ມີຂຸມ ຄອງຫລາຍຊັ້ນ ແລະ ຂຸມມໍຣະກົດ. ໄດ້ສ້າງສິ່ງກີດຂວາງໄວ້ 3 ຊັ້ນ ອ້ອມດ້ວຍ ໜາມໝາກຈັບ ແລະ ມີແສງສະຫວ່າງອ້ອມປະມານ 100-150 ແມັດ ທິດຕາ ເວັນອອກ ແລະ ທິດໃຕ້ ແມ່ນແມ່ນ້ຳເຊກອງ ເຊິ່ງເປັນສາຍນ້ຳເລິກ ແລະ ຂ້າມຍາກ. ບັນຊາໂດຍ ທ. ສູນທອນ.

ການສືບສະພາບກ່ອນເຂົ້າຕີ

ພາຍຫລັງໄດ້ຮັບຄຳສັ່ງ ໃຫ້ກຽມສະໜາມຮົບ. ໄດ້ສົ່ງພະນັກງານສືບ ຂ່າວ ໂດຍສົມທົບກັບທ້ອງກິ່ນ 1 ໝວດ ເພື່ອສືບສະພາບ ຢູ່ຄ້າຍບ້ານປູຍ. ສະຫາຍ ແກວັກບາດາດ ໄດ້ໃຫ້ພະນັກງານ ເຂົ້າໄປໃນຄ້າຍສັດຕູ ເພື່ອກຳສະ

ພາບກຳລັງ. ອາວຸດ. ວິທີຈັດວາງຂອງສັດຕູພາຍໃນຄ້າຍ ແລະ ກົດເກນກາບເຄື່ອນໄຫວຂອງພວກເຂົາ. ໜ່ວຍຮາກກາບໄດ້ແຕ່ງ ສະຫາຍ ດາດ ແລະ ສະຫາຍ ຮວາຍ ລົງປະຈຳກັບປະຊາຊົນ ແນະນຳປະຊາຊົນ ໃຫ້ເຄື່ອນໄຫວຢ່າງມີແບບແຜນ ແລະ ປິດລັບ. ນອກຈາກນີ້ ຍັງໄດ້ແຕ່ງໃຫ້ພະນັກງານຂອງເຂດ ລົງຕິດແທດຄ້າຍສັດຕູ ເພື່ອໃຫ້ຮູ້ສິ່ງກິດຂວາງ. ຂຸມມໍຣະກົດ. ຫລັງຈາກນັ້ນ. ຈຶ່ງ ແຕ້ມແຜນທີ່ ເພື່ອໃຫ້ກອງພັນ 436 ໄດ້ຮູ້ ແລະ ເຂົ້າໃຈທີ່ຕັ້ງໄດ້ກົງກັບ.

ຕີຄ້າຍຢູ່ບ້ານປຸຍ

ຕອນຄ່ຳວັນທີ 29 ມັງກອນ (1) ປີ 1954 ກອງພັນ 436 ໄດ້ຮັບກາບ ຊ່ວຍເຫລືອຈາກເຂດ ໃນການເຄື່ອນທັບເຂົ້າສູ່ສະໜາມ. ເວລາດຽວກັນນີ້ ກົມກອງຂອງເຂດ ກໍ່ໄດ້ປິດລ້ອມຄ້າຍຕ່າງໆ ຢູ່ເມືອງໃໝ່. ເວລາ 0 ໂມງຂອງ ວັນທີ່ 30 ມັງກອນ (1) 1954 (ວັນສົ່ງທ້າຍປີເກົ່າ ຕ້ອນຮັບປີໃໝ່ຫວຽດນາມ) ທະຫາບຢູ່ຕາມປີກຕ່າງໆ ໄດ້ລະດົມຍິງ ແລະ ບຸກເຂົ້າຕີຄ້າຍບ້ານປຸຍ ໂດຍການປະສານສົມທົບກັນເປັນຢ່າງດີ: ສຽງໝາກແຕກ ໝາກຝາ ສຽງປືນ ໄດ້ດັງກອງໄປທົ່ວພູພາປ່າດົງ ໄດ້ຍິນຮອດເມືອງໃໝ່ ແສງຂອງລູກປືນ ແສງໄຟໃໝ້ໃນຄ້າຍ ຮຸ່ງແຈ້ງປານກາງເວັນ ຮັດໃຫ້ສັດຕູຢູ່ຄ້າຍເມືອງໃໝ່ ມີຄວາມຢ້ານກົວ.

ໃນເບື້ອງຕົ້ນ ທະຫາບໃນຄ້າຍບ້ານປຸຍ ຕ້ານຄືນ, ທະຫາບພວກເຮົາ ມີບົດຮຽນ ໃນການຕີເປົ້າໝາຍທີ່ສຳຄັນ. ຮູ້ນຳໃຊ້ກຳລັງໄຟ ທຳລາຍສິ່ງກີດຂວາງ, ທຳລາຍຂຸມມໍຣະກົດ. ປ້ອມສັງເກດການ. ການໂຈມຕີໃຊ້ເວລາພຽງ ແຕ່ 30 ນາທີ ກໍ່ສາມາດເປັນເຈົ້າການສະໜາມໄດ້ (ຍຶດໄດ້) ໂດຍສົມບູນ ຈັບໄດ້ 84 ຄົນ. ສ່ວນ ທ. ສູນທອນ ຜູ້ບັນຊາການໄດ້ຫລົບໜີໄປໄດ້.

ພ້ອມກັບການຕີຄ້າຍບ້ານປູຍນັ້ນ. ກຳລັງຂອງເຂດ ໄດ້ປິດລ້ອມເດີ່ນ ບິນ ແລະ ຄ້າຍຫ້ວຍຕໍ່ໃຫ້ໄວ້ ໄດ້ໃຊ້ປືນຄົກ 60 ມມ ຍິງຈາກບ້ານສະເພົາ ແລະ ເຊກະໜານ ໃສ່ຄ້າຍສັດຕູໃນເມືອງໃໝ່.

ຕີເມືອງໃໝ່

ເຊົ້າວັນທີ 30 ມັງກອນ (1) ຊາວເມືອງໃໝ່ ໄດ້ຍິນຂ່າວວ່າ ທະຫານ ອິດສະຫລະ ປິດລ້ອມຄ້າຍບ້ານປູຍ. ພວກທະຫານຝຣັ່ງໄດ້ອອກມາຍອມໝົດ. ໄດ້ຍິນວ່າທະຫານຫວຽດນາມ ກຳລັງລົງມາພາກໃຕ້ ເພື່ອໄລ່ຝຣັ່ງອອກໜີ. ປັ້ນ ກຽມການເພື່ອຕີເມືອງໃໝ່ ກອງບັນຊາການເຂດໄດ້ໃຫ້ ພະນັກງານຜນວລາວ ອິດສະຫລະ ໄປລະດົມປະຊາຊົນເມືອງໃໝ່ ທີ່ມີລູກ ຜົວ ເປັນທະຫານ ໃຫ້ລູກ ຜົວ ໜີອອກມາ ກ່ອນຈະມີການບຸກໂຈມຕີ ຂອງທະຫານອິດສະຫລະ. ທ. ກະຣ້ັງຈ້ັງ (Grand Jean) ໄດ້ສັ່ງໃຫ້ທະຫານທຳລາຍຄັງອາ ວຸດ. ອາວຸດໜັກ ແລ້ວນຳກຳລັງເລັດລອດໜີ ໄປຕາມແຄມນ້ຳເຊກອງ ຜ່ານ ບ້ານກະຍີ. ລະຍາວ ຂົ້ນພູຫລວງ ໄປຫາຫ້ວຍກອງ ຍາເຫີນ ເພື່ອໄປປາກຊ່ອງ ຝ່າຍກອງພັນ 436 ໄດ້ເຄື່ອນທັບຈາກບ້ານປູຍ ຕາມທາງເລກທີ 18 ຮອດ ບ້ານຣົມ ພໍດີແຈ້ງ. ກອງພັນໄດ້ຟ້າວເຂົ້າເມືອງໃໝ່ ຍັງເຫັນແປວໄຟຢູ່ໃນຄ້າຍ ໃນເທສະບານເມືອງໃໝ່ ຍັງລຸກໄໝ້ຢູ່ ກອງພັນສົມທົບກັບເຂດ ໄດ້ເຂົ້າຕີທະ ຫານແຕກທັບ ຈັບເປັນໄດ້ 100 ຄົນ. ຍຶດອາວຸດ. ລູກກະສຸນ. ເຄື່ອງອຸປະໂພກ ບໍລິໂພກ ໄດ້ຈຳນວນຫລວງຫລາຍ ພໍເກີ່ງເວລາ 21 ໂມງຂອງວັນທີ 30 ເດືອນ ມັງກອນ (1) 1954 ກຳລັງທະຫານຂອງຝ່າຍປະຕິວັດ ສາມາດຍຶດສະໜາມ ທ້ົງໝົດໄດ້ ໂດຍສົມບູນ.

ພາຍຫລັງຕີຄ້າຍເມືອງໃໝ່ສຳເລັດແລ້ວ, ກອງພັນ 436 ໄດ້ມອບ ກອງຮ້ອຍໜຶ່ງ ໄວ້ຮັກສາເທສະບານເມືອງໃໝ່ ເພື່ອກຳຈັດສັດຕູແຕກທັບ, ສ່ວນທີ່ເຫລືອ ໄດ້ຮີບຮ້ອນປັບປຸງກຳລັງ, ຮັບສະບຽງອາຫານ ແລະ ລູກປືນ ແລ້ວສືບຕໍ່ໄລ່ສັດຕູ ທີ່ປົບໜີໄປທາງພູພຽງບໍ່ລະເວນ.

ຄືນວັນທີ 1 ເດືອນ 2 ກອງພັນ 436 ໄດ້ໄປຮອດພູພຽງບໍ່ລະເວນ, ທະຫານຢູ່ອັດຕະປື ພ້ອມກັບກຳລັງຢູ່ຍາເຫີນ, ແກ້ງຈ່ອງຢູ່ຕີນພູ ແລະ ຫ້ວຍກອງ ຄາດວ່າ ຈະປົບໄປທາງປາກຈ່ອງ ກອງພັນໄດ້ຕັດສິນໃຈ ບໍ່ຕີສັດຕູຢູ່ຄ້າຍຫ້ວຍ ກອງ, ກອງພັນໄດ້ຈັດຕັ້ງສະກັດ ຢູ່ເຂດຄ່ຳທອງ ທາງໄປປາກຈ່ອງ ເປີດວົງປິດ ລ້ອມຫລອກສັດຕູໃຫ້ເຂົ້າແລ້ວ"

ເຊົ້າວັນທີ 2 ເດືອນ 2 ພວກສັດຕູໄດ້ປະຄ້າຍຫ້ວຍກອງ ແຕກໜີໄປ ປາກຈ່ອງ ລອດເຂົ້າສະໜາມດັກສະກັດຂອງພວກເຮົາ. ພວກເຮົາລະດົມຍິງ ແຕ່ຮູບແກວຂອງສັດຕູຍາວ ດັ່ງນັ້ນ ຈຶ່ງດັບສູນໄດ້ແຕ່ 1 ກອງຮ້ອຍ ເຫລືອນັ້ນ ແຕກໜີເຂົ້າປ່າ ໂດຍອາໃສຄວັນນ້ຳໝອກປົດບັງ ລັດໄປຫາສາລະວັນ.

ພວກທະຫານສັດຕູຢູ່ເມືອງໃໝ່, ບ້ານປູຍ, ຍາເຫີນ ແລະ ຫ້ວຍກອງ ໄດ້ແຕກໜີໄປໂຮມກັນຢູ່ປາກຈ່ອງ ແລະ ສາລະວັນໝົດ. ກອງພັນ 436 ພ້ອມ ກັບກອງກຳລັງຂອງເຂດ ໄດ້ສືບຕໍ່ໄລ່ຕີສັດຕູໄປເຖິງສາລະວັນ. ວັນທີ 5 ເດືອນ 2 ກອງພັນ 436 ແລະ ກຳລັງຂອງເຂດ ໄປເຖິງສາລະວັນ ຫລັງຈາກໄດ້ເຂົ້າຕີ ປ້ອມບຸ່ງເກີ່ມ ແລະ ເລົ່າງາມແລ້ວ ທະຫານຈາກ 2 ຄ້າຍນີ້ ໄດ້ແຕກມາໂຮມ ກັນຢູ່ສາລະວັນທັງໝົດ ສ່ວນທະຫານຢູ່ເທສະບານທ່າແຕງ (ອຽງຫອງ) ຄ້າຍ ຫ້ວຍເສັດ, ແສນຈັງ, ບ້ານໂພນ ເມື່ອໄດ້ຍິນຂ່າວວ່າ ທະຫານຫລວງຫວຽດ

ບາມມາຮອດເຂດໃຕ້. ພວກເຂົາຢ້ານກົວ ແລ້ວແຕກໜີໄປສາລະວັນຈົນໝົດ. ກອງພັນ 436 ໄດ້ເຂົ້າປິດລ້ອມທະຫານ ຢູ່ເທສະບານສາລະວັນ ເປັນເວລາ 2 ວັນ ແຕ່ເຫັນວ່າ ບໍ່ຄົບເງື່ອນໄຂທີ່ຈະຕີສັດຕູ. ດັ່ງນັ້ນ. ວັນທີ 7 ເດືອນ 2 ຈຶ່ງ ໄດ້ຖອນອອກ.

ພາຍຫລັງກອງພັນ 436 ຖອນອອກ. ພວກລ່າເມືອງຂຶ້ນຝຣັ່ງ ໄດ້ເອົາ ທະຫານຢູ່ພາກເໜືອ ແລະ ກອງພັນ 51 ຢູ່ເຊໂນ ມາສົມທົບຢູ່ສາລະວັນ ໄດ້ຕັ້ງ ຄ້າຍໃໝ່ ຢູ່ສາລະວັນ ແລະ ປາກເຊ. ກອງພັນ 436 ແລະ ກຳລັງຂອງເຂດໃຕ້ ໄດ້ສູ້ຮົບກັບສັດຕູເກືອບ .10 ວັນ ຈຶ່ງຍາດໄດ້ໄຊຊະນະຢ່າງສົມບູນ ສຳເລັດຍຸ້ນ ຮົບທີ I.

ຕີປົດປ່ອຍຈຳປາສັກ

ກອງພັນໃຫຍ່ 101 ຂຶ້ນກັບກອງພັນ 325 (ກອງທັບຫວຽດນາມ) ເມື່ອສຳເລັດໜ້າທີ່ຢູ່ພາກກາງ ຂອງລາວແລ້ວ. ໄດ້ຮັບຄຳສັ່ງໃຫ້ລົງມາພາກ ໃຕ້ລາວ ເພື່ອສືບຕໍ່ຕີສັດຕູ ເພື່ອສົມທົບກັບຍຸ້ນຮົບດຽນບຽນຟູ ໃນກາງເດືອນ 2 ປີ 1954 ສະຫາຍ ເຈີນກຸ່ຍຮາຍ ຫົວໜ້າກອງພົນ 325 ໄດ້ກືກແຕ່ງຕັ້ງໃຫ້ ເປັນຜູ້ຕາງໜ້າ ຫົວໜ້າກົມໃຫຍ່ ລົງມາພ້ອມກັບກອງພັນໃຫຍ່ 101 ເພື່ອຮ່ວມ ປະຕິບັດງານການສູ້ຮົບຢູ່ພາກໃຕ້. ກອງທະຫານຫລວງຫວຽດນາມ ຢູ່ພາກໃຕ້ ລາວເວລານີ້ ມີກອງພັນໃຫຍ່ 101. ກອງພັນທະຫານລາບ 319. 328 ແລະ 436.

ບັ້ນຮົບທີ II ເລີ້ມແຕ່ເດືອນ 3 ປີ 1954 ເປົ້າໝາຍແມ່ນຕີກວາດລ້າງສັດຕູຢູ່ທາງທິດໃຕ້ ແຂວງຈຳປາສັກ. ກຳລັງສູ້ຮົບນອກຈາກກອງພັນໃຫຍ່ 101 ແລ້ວ ຍັງມີກອງຮ້ອຍ 200. ກອງຮ້ອຍ 44. ກອງຮ້ອຍ 8. ກອງຮ້ອຍ ໄຊຈັກກະພັດ. ທະຫານທ້ອງຖິ່ນ ແລະ ທະຫານກອງຫລອນຂອງເຂດ ໄດ້ກວາດລ້າງຄ້າຍຊົ່ວໂຕະໂມະ. ທ້ວຍແມ່ສົງ, ເປັນເຈົ້າການຄວບຄຸມການລຳລຽງຕາມເສັ້ນທາງເລກທີ 13 ແຕ່ທ້ວຍບ້າລຽງ ຮອດຂຶ້ນພາກ ຕິດແດນກຳປູເຈຍ. ທຳລາຍສາງນ້ຳມັນ ຢູ່ຂຶ້ນພາກ. ເຄື່ອນໄຫວຢູ່ກ້ຳຊ້າຍແມ່ນ້ຳຂອງ ແລະ ທິດຕາເວັນອອກສຽງເໜືອຂອງກຳປູເຈັຍ.

ກອງພັນໃຫຍ່ 101 ໄດ້ນຳເອົາກຳລັງສ່ວນໜຶ່ງ ຂ້າມໄປທາງທິດຕາເວັນຕົກແມ່ນ້ຳຂອງ ສົມທົບກັບກຳລັງຂອງເຂດ ຕີປົດປ່ອນແຄບທ່ຽງ ຈຳປາສັກ. ສ່ວນກຳລັງສ່ວນໃຫຍ່ ຂອງກອງພັນໃຫຍ່ 101 ໄດ້ຂ້າມນ້ຳຂອງ ເຂົ້າຕີຄ້າຍດອນຕະລາດ. ສຸຂຸມາ ແລະ ເມືອງມຸນ. ກອງພັນ 328 ທີ່ຂຶ້ນກັບກອງພັນໃຫຍ່ 101 ໄດ້ຕີທຳລາຍຢ່າງດຸເດືອດ ໃສ່ສັດຕູທີ່ຍັງເຫລືອຢູ່ຄ້າຍກຸດຈີກ. ສຸຂຸມາ. ບ້ານເວີນ. ອຸທຸມເກົ່າ.

ບັ້ນສູ້ຮົບລະດູບານໃໝ່ 1954 ຢູ່ເຂດໃຕ້ຂອງລາວ. ໄດ້ປະສານສົມທົບກັບການສູ້ຮົບໃນທົ່ວອິນດູຈີນ ແລະສະໜາມຮົບດຽນບຽນຟູ ເພາະວ່າ ສະໜາມຮົບ ຢູ່ພາກຕາເວັນອອກສຽງເໜືອ ກຳປູເຈັຍ. ສະໜາມຮົບ ເຕີຍຫາວຽນ (ຫວຽດນາມ) ແລະ ສະໜາມຮົບຢູ່ເຂດໃຕ້ຂອງລາວ ໄດ້ຈ່ອງດຶງກຳລັງຂອງຈັກກະພັດຝຣັ່ງ ໃຫ້ຢູ່ກະແຈກກະຈາຍ ບໍ່ໃຫ້ເຕົ້າໂຮມກຳລັງ ເພື່ອໄປຊ່ວຍການສູ້ຮົບຢູ່ສະໜາມຮົບດຽນບຽນຟູ ພາກເໜືອຫວຽດນາມໄດ້.

ການປະສານສົມທົບຢ່າງແໜ້ນແຟ້ນ ລະຫວ່າງກຳລັງປະກອບອາວຸດ ກັບປະຊາຊົນພາກໃຕ້ຂອງລາວ ໃນລະດູບານໃໝ່ 1954 ເປັນການປະກອບ ສ່ວນ ເຂົ້າໃນໄຊຊະນະໃຫຍ່ຫລວງ ຂອງປະຊາຊົນຫວຽດນາມ ໃນຊັ້ນຮົບ ດຽນ ບຽນຟູ ວັນທີ 07/05/1954 ຢ່າງສະນິດແໜ້ນ ແລະ ໄຊຊະນະໃນຊັ້ນຮົບດຽນ ບຽນຟູ ຂອງກອງທັບຫວຽດນາມ ເປັນປັດໄຈ ຕັດສິນການສິ້ນສຸດ ການຍຶດ ຄອງອິນດູຈີນ ຂອງຈັກກະພັດຝຣັ່ງອີກດ້ວຍ.

ບົດທີ VI

ອານາຈັກຂອມ

ຂອມໃນສະຕະວັດທີ 1-6 ມີຊື່ຕາມພາສາຈີນວ່າ " ຟູນັນ " ມີສູນກາງ ການປົກຄອງຢູ່ທີ່ບໍລິເວນທ່ຽງປາກນ້ຳຂອງ. ຕົ້ນສະຕະວັດທີ 3 ຂອມໄດ້ຂະ ຫຍາຍຕົວອອກ ທາງດ້ານການເມືອງ ແລະ ການທະຫານ ກວມເອົາເນື້ອທີ່ 1,500 ກມ (3,000 ລີ້) ທິດຕາເວັນອອກ ຕິດກັບທະເລຈີນ. ທິດເໜືອຕິດກັບ ສາຍພູດົງເລັກ. ທິດໃຕ້ຮອດຄໍຄອດກະ ໃນປະເທດໄທ. ທິດຕາເວັນຕົກ ຮອດ ອ່າງບ້ຳການ: ມີປະເທດສະຮາດ ເກົ່ງ 10 ປະເທດ. ແຕ່ເມື່ອເກົ່ງສະຕະວັດທີ 6 ໄດ້ເສື່ອມອຳນາດ ແລະ ເປັນຫົວເມືອງຂຶ້ນຂອງກຳພູຊາ.

ຂອມໃນລະຫວ່າງສະຕະວັດທີ 6-9. ມີຊື່ຕາມພາສາຈີນວ່າ "ເຈນລະ" (Chenla) ແຕ່ກ່ອນເປັນຫົວເມືອງຂຶ້ນຂອງຟູນັນ (Founan) ປົດແອກອອກ ຈາກຟູນັນ ແລ້ວໄດ້ຂະຫຍາຍດິນແດນ ຮອດເຂດຈຳປາສັກ ມີເມືອງຫລວງ ຊື່ວ່າ: "ພະວະປຣະ" ເຊິ່ງຢູ່ທາງຕາເວັນຕົກສ່ຽງເໜືອຂອງກຳປົງກົມ ປະມານ 32 ກມ ເຈນລະໃນສະໄໝ ເຈົ້າມະຫິນທະຣະວໍຣະມັນ (Mahintharavarman) ໄດ້ທຳລາຍອານາຈັກຟູນັນ ແລະ ໄດ້ຍ້າຍເມືອງຫລວງ ໄປຕັ້ງຢູ່ໃກ້ກັບ ສາມບໍ (Sambor Preikuk) ເໜືອເມືອງກະແຈ ຂຶ້ນມາຕາມລຳນ້ຳຂອງ. ເຈນລະ ມີອຳນາດທາງການເມືອງ ແລະ ການທະຫານ ມາຮອດສະຕະວັດທີ 8 ກໍ່ເສື່ອມ ອຳນາດ.

ໃນປີ ຄ.ສ 802 ອານາຈັກຂອມ ຫລື ຂະເມນບູຮານ ມີຊື່ວ່າ ອານາ ຈັກກຳພູຊາ ໂດຍແມ່ນພຣະເຈົ້າໄຊຍະວໍຣະມັນທີ 2 ເປັນເຈົ້າແຜ່ນດິນ ມີເມືອງ

ຫລວງຊື່ " ອິນທະປຸຣະ " (Inthapura) ຫລືອິນທະປັດກະນະຄອນ ເຊິ່ງຕັ້ງຢູ່ ໃກ້ໆກັບເມືອງກຳປົງຊະມຸມ ທາງຕາເວັນອອກຂອງກຳປົງຈາມ ຕໍ່ມາໄດ້ຍ້າຍ ເມືອງ ມາຕັ້ງຢູ່ " ຫະຣິຫະໄຣ " ປະມານ 20 ກມ ທາງຕາເວັນອອກສ່ຽງໃຕ້ ຂອງ " ນະຄອນທົມ ". ພາຍຫລັງພຣະອົງ ໄດ້ທ້ອນໂຮມກຳພູຊາ ໃຫ້ເປັນອັນໜຶ່ງ ອັນດຽວກັນແລ້ວ ພຣະອົງໄດ້ຍ້າຍນະຄອນຫລວງ ມາຢູ່ທີ່ນະຄອນວັດ ໃຫ້ຊື່ວ່າ ອະມະເຣນທະຣະປຸຣະ (Amarentharapura) ພຣະອົງສຸຣະຄົດ ໃນປີ ຄ.ສ 850 ຣາຊວົງໄຊຍະວໍຣະມັນ ໄດ້ປົກຄອງກຳພູຊາ ສືບມາຈົນເຖິງປີ ຄ.ສ 877 ຈຶ່ງປ່ຽນເປັນຣາຊວົງ ອິນທະຣະວໍຣະມັນ (Intharavaraman).

ພຣະເຈົ້າອິນທະຣະວໍລະມັນ ທີ 1 ໄດ້ຂົ້ນຄອງຣາດ ແລ້ວກໍ່ໄດ້ເຮັດສົ່ງ ຄວາມຂະຫຍາຍອານາຈັກກຳພູຊາໃຫ້ກວ້າງອອກໄປ. ເມື່ອພຣະອົງສຸຣະຄົດແລ້ວ ໃນ ຄ.ສ 899 ຍະໂສທະວໍຣະມັນ (ລູກຊາຍ) ກໍ່ໄດ້ຂົ້ນຄອງອານາຈັກ ກຳພູຊາ ແທນ ແລະ ໄດ້ຂະຫຍາຍອານາຈັກກຳພູຊາອອກໄປຕື່ມອີກ ·ພຣະອົງໄດ້ສ້າງ ເມືອງຫລວງຂົ້ນ 2 ແຫ່ງຄື ກຳພູປຸຣະ (Kampupura) ແລະ ຍະໂສທະຣະປຸຣະ (Yasotharapura) ພຣະອົງເປັນກະສັດທີ່ເຂັ້ມແຂງ ແລະສຳຄັນທີ່ສຸດຂອງວົງ ຕະກູນ " ອິນທະຣະວໍຣະມັນ ". ພຣະອົງສຸຣະຄົດ ໃນ ຄ.ສ 90 ແລະ ມີຜູ້ສືບສັນ ຕະຕິວົງຕໍ່ມາຈົນຮອດ ເຈົ້າໄຊຍະວໍຣະມັນທີ 4 (Jayavaraman IV) ຜູ້ ຄອງອານາຈັກກຳພູຊາແຕ່ປີ ຄ.ສ 968-1001 ກໍ່ເປັນອັນວ່າສ້ຽງສຸດຣາຊວົງ " ອິນທະຣະວໍຣະມັນ ".

ອານາເຂດຂອງອານາຈັກກຳພູຊາ ໃນສະໄໝ ຣາຊວົງ ອິນທະຣະວໍ ຣະມັນ (877-1001) ກວ້າງຂວາງຫລາຍ ທິດເໜືອກວມເອົາປະເທດລາວ ·ໃນປັດຈຸບັນ ຮອດເຂດອານາຈັກອ້າຍລາວ ໜອງແສ ແລະ ເຂດຕົ້ງແກ ຂອງ

ທ່ວງດນາມ: ທິດຕາເວັນຕົກ ກວມເອົາປະເທດສຍາມ ເຊິ່ງທາງເໜືອເກົ່ງ ກຳແພງເພັດ. ທາງໃຕ້ເກົ່ງອ່າວໄທ.

ການປົກຄອງລາວຂອງຂອມ ຄືການປົກຄອງແຕ່ວຽງຈັນ ລົງໄປຮອດ ຈຳປາສັກ ມີອຸປະຣາດຂອມ ປົກຄອງໂດຍກົງ ເຊິ່ງຢູ່ທີ່ຊາຍຟອງ. ສາກົນນະ ຄອນ. ພິມາຍ ແລະ ລະວະບຸຣີ (ລົບບຸລີ) ສ່ວນແຕ່ເໜືອວຽງຈັນຂຶ້ນໄປ ຂອມ ໄດ້ແຕ່ງໃຫ້ເຈົ້າຂອງອ້າຍລາວ ປົກຄອງແຕ່ຕ້ອງສົ່ງສ່ວຍໃຫ້ຂອມ ເປັນປະຈຳ ທຸກປີ. (ຄຳຈຳປາ ແກ້ວມະນີ).

ອິດທິພົນທາງການເມືອງຂອງຂອມ ກວມເກົ່ງ ເຂັມຣັດ (ຊຽງຕຸງ) ໃຍນົກຊຽງແສນ. ທາງໃຕ້ຮອດແຫລມມາລາຢູ (ຮອດຄໍຄອດກະ) ຫລັງຈາກ ເຈົ້າອິນທະວໍຣະມັນທີ 4 ສາຣະຄົດແລ້ວ ໄດ້ເກີດສົງຄາມກາງເມືອງ ເປັນ ເວລາ 10 ປີ ຈົນຮອດປີ ຄ.ສ 1010 (ສົງຄາມ ລະຫວ່າງສັກດິນາຂອມດ້ວຍ ກັນເອງ).

ເຈົ້າສຸຣິຍະວໍຣະມັນ (Suriyavaraman I) ຂຶ້ນຄອງອຳນາດ ໄດ້ໃຊ້ ເວລາ 6 ປີ ຈຶ່ງເຮັດໃຫ້ປະເທດຊາດ ມີຄວາມສະຫງົບ ແລະ ເປັນອັນໜຶ່ງອັນ ດຽວກັນ. ໃນສະໄໝ ສຸຣິຍະວໍຣະມັນ ທີ I ນີ້ ໄດ້ຂະຫຍາຍອານາເຂດ ຮອດຕອນ ເໜືອຂອງສຍາມ ແລະ ໄດ້ສ້າງຣາການດ້ານສິລະປະ ແລະ ວັດທະນະທຳທາງ ສັງຄົມ ຂອງຂອມ ລົງໃນທົ່ງພຽງແຄບແມ່ນ້ຳເຈົ້າພະຍາ ຕັ້ງແຕ່ປາກນ້ຳ ຈົນ ຮອດສຸໂຂໄທ ແລະ ສະຫັນຄະໂລກໄວ້ຢ່າງໝັ້ນຄົງ. ຫລັງຈາກສິ້ນລັດຊະໃໝ ຂອງພຣະອົງ ໃນປີ ຄ.ສ 1050 ແລ້ວ ອານາຈັກຂອມ ກໍ່ອ່ອນແອລົງ ເຮັດ ໃຫ້ອານາຈັກອ້າຍລາວ ຕາມທົ່ງພຽງແມ່ນ້ຳເຈົ້າພະຍາ ແລະ ແມ່ນ້ຳຂອງຕອນ ກາງ ແຍກໂຕອອກຈາກຂອມ ປະກາດເອກະລາດ.

ເຖິງປີ ຄ.ສ 1113 ອານາຈັກກຳພູຊາ ຈຶ່ງກັບຂຶ້ນມາເປັນມະຫາອຳ ນາຈັກອີກ ພາຍໃຕ້ການນຳ ຂອງພຣະເຈົ້າ ສຸຣິຍະວໍຣະມັນ ທີ 2 (Suriya varaman II) ພຣະອົງເປັນກະສັດຜູ້ຍິ່ງໃຫຍ່ທີ່ສຸດອົງໜຶ່ງຂອງກຳພູຊາ ຕາມ ຈົດໝາຍເຫດຂອງຈີນ ກ່າວວ່າ : ພຣະອົງມີກອງທັບລ້ານ•200,000 ໃຫ ໄດ້ ຂະຫຍາຍດິນແດນຮອດ ຫະຣິພຸນໄຊ (ລຳພູນ) (ໃນຣັຊສະໄໝ ພຣະເຈົ້າອາ ທິດຕະຍະຣາດ). ເມືອງປະກັນ (ພະໂຄ ຫລື ມຸການ) ໃນພະມ້າເໜືອ. ທາງໃຕ້ ຮອດບ້ານດອນ ແລະ ມາລາຢູ·ໄດ້ເພີ້ມຄວາມໝັກແໜ້ນ ໃນການຝັງຮາກອິດທິ ພົນທາງສັງຄົມ ແລະ ວັດທະນະທຳຂອມ ລົງໃນດິນແດນທົ່ງພຽງແມ່ນ້ຳເຈົ້າ ພະຍາແໜ້ນໜາຍິ່ງຂຶ້ນ. ພຣະເຈົ້າ ສຸຣິຍະວໍຣະມັນ ທີ 2 ສຸຣະຄົດ ໃນປີ ຄ.ສ 1145.

ຫລັງຈາກເຈົ້າສຸຣິຍະວໍຣະມັນທີ 2 ສວັນນະຄົດແລ້ວ. ມະຫາອຳນາຈັກ ກຳພູຊາ ກໍ່ແຕກແຍກກັນອີກ. ອານາຈັກອ້ອຍລາວຊຽງແສນ ແລະ ເມືອງຊວາ ລ້ານຊ້າງ ປະກາດແຍກໂຕ ເປັນເອກະລາດ ບໍ່ຍອມສົ່ງສ່ວຍໃຫ້ຂອມ ຈົນເຖິງ ປີ ຄ.ສ 1181.

ໃນປີ ຄ.ສ 1181 ພຣະເຈົ້າໄຊຍະວໍຣະມັນ ທີ 7 (Jayavaraman VII) ຂຶ້ນຄອງອານາຈັກກຳພູຊາ (ອົງສຸດທ້າຍ) ພຣະອົງ ໄດ້ສ້າງກຳພູຊາ ໃຫ້ເປັນມະຫາອານາຈັກ ເທື່ອສຸດທ້າຍ ໃນປະຫວັດສາດກຳພູຊາ. ພຣະອົງ ໄດ້ ເຮັດສົງຄາມກັບອານາຈັກຈາມປາ ເຊິ່ງເປັນຄູ່ພີພາດກັນມານານ ກ່ອນທີ່ ພຣະອົງຈະຂຶ້ນຄອງກຳພູຊາ ແລະ ພວກຈາມ ໄດ້ມີໄຊຊະນະ ແກ່ພວກກຳພູຊາ ມາຕະຫລອດ. ພຣະອົງສາມາດຂັບໄລ່ພວກຈາມປາ ອອກໄປຈາກດິນແດນ ຂອມໄດ້ສຳເລັດ ແລະ ຍົກກອງທັບໄປຕີເອົາອານາຈັກຈາມປາໄດ ສົງຄາມລະ

ຫວ່າງຈາມກັບຂອມ ເລີ້ມແຕ່ປີ ຄ.ສ 1190 ຈົນເກີ່ງປີ ຄ.ສ 12207. ພາກໃຕ້ ຕີຄືນແດນພະມ້າໄດ້. ຍຶດພາກໃຕ້ສຍາມໄດ້. ພາກເໜືອຕີໂຍນົກຊຽງແສນ ແລະ ລ້ານຊ້າງໄດ້. ອານາເຂດຈັກກະວັດຂອງ ໄຊຍະວໍຣະມັນທີ 7 ກວ້າງຂວາງທີ່ ສຸດ ເກືອບກວມໝົດແຫລມອິນດູຈີນ ມີເມືອງເອກຢູ່ນະຄອນຫົ່ມ (ເວັ້ນແຕ່ ພະມ້າເໜືອ. ແຄວ້ນຕ່ຳແກ ແລະ ພາກໃຕ້ແຫລມມາລາຢູ).

ໃນການປົກຄອງອານາຈັກລ້ານຊ້າງ ພຣະອົງໄດ້ເອົາໃຈໃສ່ ເປັນພິ ເສດ ໂດຍສະເພາະ ເມືອງຊາຍຟອງ ເຊິ່ງໄດ້ສົ່ງອຸປະຣາດ ຈາກກຳພູຊາ ມາ ປົກຄອງ ເພື່ອຄວບຄຸມອານາຈັກອ້າຍລາວ ພາກສ່ວນນີ້. ພຣະອົງໄດ້ສ້າງກະ ໝົນຫົນທາງ. ສ້າງໂຮງໝໍປິ່ນປົວຄົນ ແລະ ສັດ ໃນເມືອງຊາຍຟອງ. ໃນສິລາ ຈາຣຶກໄດ້ພັນລະນາ ກິດຈະການຂອງໂຮງໝໍ ເຊິ່ງປະກອບດ້ວຍ ພະຍາບານ 100 ຄົນ. ໃນນີ້ ມີແພດ 2 ຄົນ. ເພຊັດຊະກອນ 2 ຄົນ. ນາງໝໍ 8 ຄົນ. ແມ່ຄົວ 2 ຄົນ. ຄົກຕ່ຳເຂົ້າ 2 ໜ່ວຍ ແລະ ເພຊັດຊະພັນ (ຢາປົວພະຍາດ) ສຳລັບໃຊ້ ໃນໂຮງໝໍນ້ຳດ້ວຍ.

ຕາມຕຳນານກ່າວວ່າ " ເມືອງຊາຍຟອງ ສ້າງຂຶ້ນໃນປີ ຄ.ສ 887 ລະ ຫວ່າງ ຣາຊການຂອງ ພຣະເຈົ້າອິນທະວໍຣະມັນທີ 1 ເພື່ອຄວບຄຸມ ແລະ ປົກຄອງ ດິນແດນລາວດ້ານເໜືອສຸດ.

ຂອມໄດ້ສົ່ງອຸປະຣາດ ມາປົກຄອງຄວບຄຸມດ້ວຍຕົນເອງ ໃນເຂດທົ່ງ ພຽງແມ່ນ້ຳຂອງ ແລະ ສາຂາ ນັບແຕ່ວຽງຈັນ ລົງໄປຮອດຈຳປາສັກ. ໂດຍໄດ້ ສ້າງສູນກາງປົກຄອງຂຶ້ນ ເປັນ 3 ພາກຄື : ພາກໃຕ້ສຸດ ຄືເມືອງພິມາຍ. ພາກ ກາງ ເມືອງສາກົນນະຄອນ. ພາກເໜືອສຸດ ແມ່ນເມືອງຊາຍຟອງ: ທົ່ງພຽງ

ແມ່ນ້ຳເຈົ້າພະຍາ ຂອມໄດ້ຕັ້ງສູນກາງຂຶ້ນຢູ່ເມືອງລົບບຸລີ. ກຳແພງເພັດ ແລະ ສຸໂຂໄທ. ໂດຍສະເພາະ ລົບບຸລີ ເປັນເມືອງອຸປະຣາດ ທີ່ໝັ້ນຄົງທີ່ສຸດ ເຊື້ອວົງ ທີ່ສົ່ງໄປປົກຄອງລົບບຸລີ ຕ້ອງມາຈາກຣາຊຕະກຸນ ທີ່ໃກ້ຊິດກັບກະສັດຂອມ ທີ່ ນະຄອນທົມ.

ສ່ວນທາງເໜືອ ແຕ່ວຽງຈັນ ໄປຮອດຊາຍແດນອານາຈັກໜອງແສ ເຊັ່ນ ອານາຈັກລາວລ້ານຊ້າງ ເປັນຕົ້ນ ຂອມໄດ້ໃຫ້ກະສັດລາວ ປົກຄອງກັນ ເອງ ເຊັ່ນດຽວກັນກັບແຕ່ປາຍແດນສະວັນຄະໂລກ ຂຶ້ນໄປເຊັ່ນອານາຈັກໂຍ ນົກຣຽງແສນ. ກໍ່ປ່ອຍໃຫ້ອ້າຍລາວຈົກ ປົກຄອງເໝືອນກັນ ພຽງແຕ່ສົ່ງສ່ວຍ ໃຫ້ແຕ່ລະປີເທົ່ານັ້ນ. ເພາະສະນັ້ນ ເວລາໃດ ອຳນາດຂອມ ທີ່ນະຄອນທົມອ່ອນ ແອ ຫລື ກະສັດຂອມອົງໃດ ບໍ່ມີກຳລັງທີ່ເຂັ້ມແຂງ ຫລື ມີການຍາດຊິງກັນຂຶ້ນ ຄອງອຳນາດ ເວລານັ້ນ, ບັນດາອານາຈັກອ້າຍລາວ ກໍ່ປະກາດຕົນເປັນເອກະ ລາດ ຈົນເຖິງປີ ຄ.ສ 1228 ຄືຫລັງຈາກ ເຈົ້າໄຊຍະວໍຣະມັນທີ 7 ສະຫວັນນະ ຄົດແລ້ວ. ຊາດອ້າຍລາວຕ່າງໆ ໃນແຖບທົ່ງພຽງ ແມ່ນ້ຳເຈົ້າພະຍາ ແລະ ທົ່ງ ພຽງແມ່ນ້ຳຂອງຕອນກາງ ແລະ ຕອນລ່າງ ເຊັ່ນ ອານາຈັກອ້າຍລາວ ໄທ ສຍາມ ທີ່ສຸໂຂໄທ ແລະ ອ່ຽງທອງ. ອານາຈັກອ້າຍລາວເຜົ່າລາວຈົກ ທີ່ໂຍນົກ ຣຽງແສນ. ອານາຈັກອ້າຍລາວລ້ານຊ້າງ ກໍ່ໄດ້ປະກາດຕົນເປັນ ເອກະລາດ ນັບແຕ່ນັ້ນເປັນຕົ້ນມາ.

;ການຂະຫຍາຍອິດທິພົນທາງວັດທະນະທຳ ແລະ ສັງຄົມຂອງຂອມ

ສັງຄົມຂອງຂອມ ຫລື ຂະເມນບູຮານ ໄດ້ແບ່ງຊົນຊັ້ນໃນສັງຄົມອອກ ເປັນ 4 ປະເພດ ຫລືວັນນະ 4 ຄື ກະສັດ. ພາມ. ເສນາບໍດີ ຫລື ທະຫານ ແລະ ສູດ ການແບ່ງຊົນຊັ້ນໃນສັງຄົມດັ່ງກ່າວ ຂອມໄດ້ຮັບອິດທະພົນ ທາງວັດທະນະ ທຳ ມາຈາກອິນເດັຍ.

ອິດທິພົນທາງວັດທະນະທຳ ແລະ ສັງຄົມຂອງຂອມ ແຜ່ເຂົ້າມາສູ່ຊົນ ຊາດອ້າຍລາວ ບໍລິເວນແມ່ນ້ຳຂອງຕອນກາງ ຄືອານາຈັກລ້ານຊ້າງ ໃນເມື່ອ ກ່ອນ ປັດຈຸບັນແມ່ນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບໍ່ໄດ້ຝັ່ງ ຮາກລົງເລິກ (ບໍ່ໝັ້ນໝຽວ) ພໍປານໃດ. ສ່ວນໃນບໍລິເວນ ທີ່ເປັນອານາຈັກ ລ້ານເພັຍ ຫລື ສຍາມປະເທດນັ້ນ ມີຄວາມໝັ້ນທ່ຽງ ຝັ່ງຮາກລົງເລິກ ຫລາຍ ທີ່ສຸດ ໂດຍອີງໃສ່ປະຫວັດສາດບູຮານວັດຖຸ ແລະ ສະພາບຄວາມເປັນຈິງ ໃນ ປັດຈຸບັນ ເປັນຂໍ້ມູນສຶກສາ.

ອິດທິພົນທາງສັງຄົມຂອງຂອມ ມີຕໍ່ຊົນຊາດອ້າຍລາວ

ສັງຄົມຂອງຂອມກ່ຶວ່າ ກະສັດ. ຊຸນນາງ ແລະ ຂ້າຮາຊການຊັ້ນສູງ ເປັນອົງປະກອບການປົກຄອງ ຂອງສັກດິນາ ກ່ຶວ່າເປັນຜູ້ຢູ່ສູງກວ່າປະຊາຊົນ ສາມັນທຳມະດາ.

ກະສັດ ຫລື ເຈົ້າແຜ່ນດິນ ກ່ືວ່າເປັນສົມມຸດຕິເທບ ຫລື ເປັນອົງອະວະ ຕາມຂອງເທບພະເຈົ້າ ແລະ ມີອຳນາດສູງສຸດ ເປັນເຈົ້າແຜ່ນດິນ ແລະ ເປັນ ເຈົ້າຊີວິດຂອງປະຊາຊົນທັງມວນ. ຄຳສັ່ງຂອງເຈົ້າແຜ່ນດິນ ເປັນຄຳສັ່ງທີ່ມີ ອຳນາດສູງສຸດ ລະເມີດບໍ່ໄດ້. ກັດຈາກເຈົ້າແຜ່ນດິນລົງມາ ແມ່ນອັກຄະມະ ເຫສີ (ພັນລະຍາ) ແລະ ຣາຊໂອຣົດ (ລູກ) ພ້ອມວົງຄະນາຍາດຣາຊຕະກູນ. ກະສັດມີການພົວພັນກັບເທບພະເຈົ້າ ໃນສາສະໜາອິນດູ ແລະ ໃຊ້ພາສາສັນສະ ກິດເປັນຊື່ກະສັດ ເມື່ອຕາຍແລ້ວ ກໍ່ໄປເກີດໃນສະຫວັນ ເອີ້ນວ່າສະຫວັນນະຄົດ ແລະ ກາຍເປັນເທບພະເຈົ້າ ເຊັ່ນ ພຣະເຈົ້າອິນທະຣະວໍຣະມັນ ເມື່ອຕາຍແລ້ວ ໄດ້ກາຍເປັນອິນທະຣະປະຣະເມສວນ. ມະຫາບໍ່ດີວໍຣະມັນ ເມື່ອຕາຍແລ້ວ ກໍ່ ກາຍເປັນມະຫາບໍ່ດີປະຣະເມສວນ ເຊິ່ງກ່ືວ່າ ເປັນພຣະສິວະເທບ ຫລື ພຣະອີ ສວນ. ສ່ວນອັກຄະມະເຫສີ ກໍ່ມີສ່ວນພົວພັນກັບເທວີ ຂອງເທບພະເຈົ້າ ເຊັ່ນ ດຽວກັນ ເຊັ່ນ : ອັກຄະມະເຫສີ ຂອງພຣະເຈົ້າອິນທະຣະວໍຣະມັນ ກໍ່ກາຍເປັນ ອິນທະຣະວໍຣະມັນເທວີ. ອັກຄະມະເຫສີຂອງຣາເຊັ່ນ ທະຣະວໍຣະມັນ (Rasen tharavaraman) ເປັນຣາເຊັ່ນທະຣະເທວີ ເປັນຕົ້ນ.

ຄວາມເຊື່ອທີ່ວ່າ ກະສັດ ແລະ ອັກຄະມະເຫສີ ເປັນອົງອະວະຕາມ ມາ ຈາກເທບພະເຈົ້ານັ້ນ ໄດ້ຝັງຮາກລົງເລິກໃນອານາຈັກອ້າຍລາວ ສາຂາອານາ ຈັກລ້ານເພັຍ ຫລືສຍາມຢ່າງແໜ້ນໜາ ເຊັ່ນ ເຈົ້າອູ່ທອງ ຜູ້ສ້າງນະຄອນສີອະ ຍຸທະຍາ ກໍ່ໃສ່ຊື່ວ່າ ຣາມາທິບໍ່ດີ (Ramathibodi) ຄືເປັນອົງ " ພຣະຣາມ " ຜູ້ຍິ່ງໃຫຍ່. ຄວາມເຊື່ອອັນນີ້ ໄດ້ມີການນັບຖືສືບຕໍ່ກັນມາຈົນເຖິງປັດຈຸບັນ.

ໃນອານາຈັກລ້ານຊ້າງ. ອິດທິພົນຄວາມເຊື່ອຂອງຂອມ ບໍ່ຄ່ອຍຝັງ ຮາກລົງເລິກພໍປານໃດ. ກະສັດ ຫລື ເຈົ້າແຜ່ນດິນໃນສະໄໝລ້ານຊ້າງ ຫລືກ່ອນ

ນັ້ນ ປະກົດເປັນພຽງ ຫົວໜ້າບໍລິຫານປະເທດຊາດ ມີຊື່ວ່າ ຂຸນ ຫລື ທ້າວ ເຊິ່ງ ໝາຍເຖິງຜົ່ນທັບ ຫລືຈອມທັບ. ກັດລົງມາກໍ່ຜົ່ນຜສນເມືອງ ເຊິ່ງເປັນຮອງ ຈອມທັບ ຫລືຜູ້ບັນຊາການຫົວເສິກ ມີຍົດເປັນເຈົ້າພົນຜສນ. ກັດລົງມາກໍ່ຜົ່ນ ຜົ່ນທັບຜູ້ບັນຊາກອງທະຫານ ມີຍົດເປັນໝື່ນ ຫລື ເຈົ້າພົນໝື່ນ. ກະສັດໝາຍ ເຖິງ ຜູ້ບັນຊາການກອງທັບ ບໍ່ໄດ້ໝາຍເຖິງເປັນເທບພະເຈົ້າ ຫລື ອົງອະວະ ຕາມຂອງເທບພະເຈົ້າ ຫລື ພຣະໂພທິສັດ ແຕ່ປະການໃດ. ຊື່ກະສັດ ຫລື ຜົ່ນທັບ ກໍ່ ເປັນພາສາລາວລ້ວນ ເຊັ່ນ ລຸນລໍ. ຄໍາຜົງ. ຟ້າງຸ່ມ. ສາມຜສນໄທ. ລ້ານຄໍາ ແດງ ເປັນຕົ້ນ. ໃນຕອນຫລັງໆ ຊື່ກະສັດລາວ ຈະມີຄໍາວ່າ " ຟ້າ " ຂົ້ນຕົ້ນ ເຊັ່ນ ເຈົ້າຟ້າຫລວງໂງ່ມ. ເຈົ້າຟ້າງຸ່ມ ເປັນຕົ້ນ ການທີ່ຍົກກະສັດ ຫລື ຈອມທັບຂົ້ນ ເປັນຟ້ານີ້ ຜົ່ນຄວາມເຊື່ອຂອງຊາດອ້າຍລາວ ທີ່ວ່າ ຕົນສືບເຊື້ອສາຍມາ ຈາກຟ້າຈາກແຖນ (ບໍ່ຜົ່ນອະວະຕາມມາຈາກຟ້າແຖນ) ເຊິ່ງເປັນປະເພນີ ນິຍົມຂອງຊາດຕ່າງໆ ໃນຕາເວັນອອກ ເຊັ່ນ ຍີ່ປຸ່ນ ກໍ່ເຊື່ອວ່າ ຕົນເອງ ສືບ ເຊື້ອສາຍມາຈາກດວງຕາເວັນ. ຈີນກໍ່ເຊື່ອວ່າ ຕົນມາຈາກທ້ຽນ (ຟ້າ). ລາວ ເຊື່ອວ່າຕົນສືບເຊື້ອສາຍມາຈາກຟ້າແຖນ ຫລືວ່າດາວ ດັ່ງນີ້ເປັນຕົ້ນ ບໍ່ຜົ່ນ ໄດ້ຮັບອິດທິພົນມ່ຈາກຂອມ ແຕ່ຢ່າງໃດ.

ຊື່ກະສັດລ້ານຊ້າງສະໄໝຫລັງ ແຕ່ພຣະເຈົ້າສາມຜສນໄທ ລົງມາມີຊື່ ເປັນພາສາບາລີ ແລະມີຊື່ຄ້າຍຄືຊື່ພຣະໂພທິສັດນັ້ນ ຍ້ອນວ່າຕັ້ງຂົ້ນຕາມນິມິດ (ຝັນ) ຫລືເຫດການເທົ່ານັ້ນ ເຊັ່ນ ເຈົ້າວິຊຸນນະຣາດ ເວລາທໍາພິທີອະພິເສກ ຂົ້ນຄອງຣາຊບັນລັງ ເກີດມີຝົນຕົກໜັກ ຟ້າຮ້ອງ ຈົ່ງໃສ່ຊື່ວ່າ " ວິຊຸນນະຣາຊ ". ສ່ວນພຣະໂພທິສາລະຣາດ ກໍ່ຄືເອົານິມິດ (ຄວາມຝັນ) ຂອງແມ່ທີ່ຝັນວ່າ " ມີ ຕົ້ນຣັງ ມາປະກົດໃຫ້ເຫັນ ຈົ່ງໃສ່ຊື່ລູກຊາຍວ່າ ໂພທິສາລະຣາດ ".

* ໃນລະບົບສັງຄົມຂອງຂອມ ຊົນຊັ້ນ ກັດຈາກກະສັດ ແມ່ນພາມ ເຊິ່ງກີ ວ່າເປັນອາຈານຜູ້ມີຄວາມຮູ້ສູງ ປະຈຳຣາຊສຳນັກ ເປັນທີ່ປຶກສາ ຂອງເຈົ້າ ຜ່ນດິນ ແລະ ເປັນຜູ້ໃຫ້ການສຶກສາ ແກ່ຣາຊຕະກູນ.

ພາມໃນຣາຊສຳນັກ ອານາຈັກລ້ານຊ້າງ ບໍ່ມີບົດບາດ ແລະ ບໍ່ມີອິດທິ ພົນ ມີແຕ່ພຣະພິກຸ ແລະ ນັກປາດ ໃນພຸດທະສາດເທົ່ານັ້ນ ທີ່ມີອິດທິພົນ ຕໍ່ເຈົ້າ ຜ່ນດິນ ແລະ ຣາຊຕະກູນ. ພາມທີ່ນຳພາເຣັດພິທີຕາມປະເພນີລາວລ້ານຊ້າງ ໄດ້ແກ່ຜູ້ຮຽນຮູ້ ຫລື ຜູ້ຮູ້ຮິດຄອງປະເພນີ ເປັນຢ່າງດີ ເມື່ອຈະນຳພາເຣັດພິທີ ກຳຕ່າງໆ ທາງພຸດທະສາສະໜາ ກໍ່ໃຫ້ຮັບສິນ 5 ຫລື ສິນ 8 ແລ້ວກໍ່ເປັນເຈົ້າ ການນຳພາໃນພິທີນັ້ນໂລດ.

ກັດຈາກພາມລົງມາ ແມ່ນເສນາບໍ່ດີ ຫລື ມົນຕີ ແສ໊ະ ຜູ້ບັນຊາການ ທະຫານ ພ້ອມທັງທະຫານທັງມວນ ເພາະເສນາບໍ່ດີ ຫລື ມົນຕີ ເປັນຜູ້ບໍລິຫານ ປະເທດ ແທນກະສັດ. ໃນລະບົບສັງຄົມລາວທຸກສະໄໝ ກໍ່ໃຫ້ກຽດທະຫານ ແລະ ມົນຕີສູງ ເພາະເປັນຜູ້ບໍລິຫານ ແລະ ປົກປ້ອງປະເທດຊາດ ຈາກຂ້າເສິກພາຍ ນອກ. ແຕ່ບໍ່ໄດ້ໝາຍຄວາມວ່າ ສັງຄົມລາວ ໄດ້ຮັບອິດທິພົນຈາກຂອມ ຫລື ຂະເມນບູຮານ ແຕ່ຢ່າງໃດ ເພາະຊາດອ້າຍລາວ ກໍ່ເປັນຊາດນັກຮົບ ແລະ ຊາດກ້າຫານເທິດທູນບູຊາ ແລະ ຍົກຍ້ອງວິຣະຊົນ ເໝືອນຊາດອື່ນໆ ໃນໂລກ. ໃນປະຫວັດສາດ ກະສັດລາວ ລ້ວນແຕ່ມີຄວາມສາມາດ ທາງດ້ານການສູ້ຮົບ ແລະ ນັກການປົກຄອງ ຄືເສນາບໍ່ດີ ຫລື ມົນຕີ ກໍ່ລ້ວນແຕ່ແມ່ນແມ່ທັບນາຍ ກອງທັງນັ້ນ ຄືເວລາສົງຄາມ ກໍ່ອອກຮົບ ເວລາສະຫງົບ ກໍ່ເປັນເສນາບໍ່ດີ ປົກ ຄອງບ້ານເມືອງ.

ສ່ວນປະຊາຊົນສາມັນນັ້ນ ຂອມກີ່ວ່າເປັນຊົນຊັ້ນຕ່ຳ ເປັນຊົນຊັ້ນທີ 4 ເພາະເປັນຊົນຊັ້ນກີກປົກຄອງ ແລະ ຮັບໃຊ້ຊົນຊັ້ນປົກຄອງ. ປະຊາຊົນສາມັນນີ້ ລວມເອົາພວກຊະເລີຍເສິກ ແລະ ຂ້າທາດເຂົ້າໄວ້ດ້ວຍ.

ກ່ອນສະຕະວັດທີ 17 ບໍ່ຄ່ອຍປະກົດເຫັນວ່າ ໃນອານາຈັກລ້ານຊ້າງ ມີຂ້າທາດ ໃນສະໄໝເຈົ້າຟ້າງຸ່ມ ມະຫາຣາດ (ສະຕະວັດທີ 14) ມີຂໍ້ຫ້າມ ບໍ່ໃຫ້ເອົາສາມັນຊົນມາເປັນຂ້າທາດ ດັ່ງຄຳສັ່ງສອນຂອງພຣະອົງກ່າວໄວ້ ໃນຄຳໂອວາດຕອນໜຶ່ງວ່າ " ອັນໜຶ່ງ ເຈົ້າທັ້ງຫລາຍ ຢ່າໄດ້ເອົາໄພ່ມາເປັນຂ້ອຍ. ໄພ່ ຜິດອັນໜັກເປັນຕົ້ນວ່າ ມີຊູ້ເມັຍທ່ານ ໃຫ້ໃໝເອົາແຕ່ 5 ບາດ ".

ການະໃນສັງຄົມຂອງຂອມ

ຂະເມນບູຮານກີ່ວ່າ ກະສັດ ຫລື ເຈົ້າແຜ່ນດິນ ຕ້ອງຢູ່ໃນພະຣາຊະວັງ ທີ່ໃຫ່ຍ່ໂອ່ໂຖງ ງົດງາມ ຂອບປະຕູປ່ອງຢ້ຽມ ປະດັບຕົບແຕ່ງ ດ້ວຍດອກດວງ ລວດລາຍງົດງາມ ແລະ ຟອກຄຳ ດີກວ່າຊົນຊັ້ນອື່ນໆ. ຊົນຊັ້ນອື່ນ ຈະຢູ່ເຮືອນ ໃຫ່ຍ່ໂຕງົດງາມ ເທົ່າກັບກະສັດບໍ່ໄດ້. ຊົນຊັ້ນພາມ ແລະ ຊຸນນາງອື່ນໆ ຈະຢູ່ ເຮືອນໃຫ່ຍ ງາມ ກັດຈາກກະສັດລົງມາ ສ່ວນປະຊາຊົນ ຈະຢູ່ເຮືອນໃຫ່ຍ່ງາມ ຄືຊົນຊັ້ນພາມ ແລະ ຊຸນນາງບໍ່ໄດ້.

ການແຕ່ງດອງ ຊົນຊັ້ນໃດ ມີສິດແຕ່ງພາຍໃນຊົນຊັ້ນນັ້ນ ບໍ່ໃຫ້ແຕ່ງ ດອງກັບຄົນຊົນຊັ້ນອື່ນ ກ້າຜູ້ໃດຝ່າຝືນ (ບໍ່ເຄົາຣົບຣີດຄອງ) ຈະກີກປະນາມ ຈາກສັງຄົມ. ຕະກູນກະສັດ ຈະຕ້ອງແຕ່ງດອງກັບ ລູກກະສັດ ຫລື ເຊື້ອພຣະວົງ ເພາະກີ່ວ່າເຊື້ອກະສັດ ມາຈາກເທບພະເຈົ້າ ຫລື ເທບພະເຈົ້າລົງມາເກີດ. ຈົ່ງ ເປັນຊົນຊັ້ນສູງ. ກະສັດ ຫລື ເຈົ້າແຜ່ນດິນ ມີເມັຍຫລາຍຄົນ ນອກນັ້ນ ຍັງມີ ນາງສະໜົມກຳນັນອີກເປັນຈຳນວນຫລາຍ.

ຊົນຊາດອ້າຍລາວ ໂດຍທົ່ວໄປ ມີເມັຍຄົນດຽວ. ສ່ວນຊົນຊັ້ນສັກດິນາ ຫລື ເຈົ້າຜ່ນດິນ ໃນຍຸກຕົ້ນໆ ບໍ່ປະກົດຊັດຜເຈົ້າວ່າ ກະສັດມີເມັຍໄດ້ຈັກຄົນ. ໃນສະໄໝເຈົ້າຟ້າງຸ່ມ ລົງມາປະກົດວ່າ ກະສັດມີເມັຍຫລາຍຄົນ ແລະ ຍັງມີນາງ ສະໜົມຕື່ມອີກຈຳນວນຫລາຍ. ອັນນີ້ ຈະກືວ່າ ໄດ້ອິດທິພົນມາຈາກຂອມ ຫລື ຂະເມນບູຮານ ຫລື ບໍ່ ກໍ່ບໍ່ທັນຈະຜເຈົ້າ. ຫລັກການທາງສັງຄົມຂອງອ້າຍລາວ ກືວ່າ ຜູ້ຊາຍຄືຊ້າງເທົ້າໜ້າ ຜູ້ຍິງຄືຊ້າງເທົ້າຫລັງ ນີ້ສະແດງວ່າ ສັງຄົມ ໃຫ້ ຄວາມສຳຄັນແກ່ຜູ້ຊາຍຫລາຍກວ່າຜູ້ຍິງ ແລະ ຄວາມສະເໝີພາບ ລະຫວ່າງ ຍິງຊາຍ ກໍ່ບໍ່ແຕກຕ່າງກັນຫລາຍປານໃດ.

ການນຸ່ງກືຫລື ການແຕ່ງໂຕ

ຊົນຊາດອ້າຍລາວບູຮານ ນຸ່ງສ້ຶງຂາເຄິ່ງແຂ່ງ ຫລື ສ້ຶງຂາກ້ວຍ ເສື້ອ ຄໍມົນ ນຸ່ງຜ້າໝັບຕ່ຽວ ອັນນີ້ເຂົ້າໃຈວ່າ ໄດ້ຮັບອິດທິພົນມາຈາກຂອມ ຫລື ຂະເມນບູຮານ ຂອມໄດ້ຜ້າໝັບຕ່ຽວມາຈາກອິນເດັຍ. ດັ່ງນັ້ນ ຄົນລາວໃນ ສະໄໝໜຶ່ງ ນິຍົມນຸ່ງສ້ຶງຂາເຄິ່ງແຂ່ງ ແລ້ວນຸ່ງຜ້າໝັບຕ່ຽວ (ຜ້າວາ) ທັບລົງ ໄປອີກ. ອັນນີ້ ຍ້ອນວ່າ ການນຸ່ງສ້ຶງຂາກ້ວຍ ແມ່ນໄດ້ນິຍົມໃຊ້ກັນມານານກວ່າ ການນຸ່ງຜ້າວາ (ຜ້າໝັບຕ່ຽວ) ແລະ ການນຸ່ງຜ້າໝັບຕ່ຽວນີ້ ກໍ່ມັກໃຊ້ໃນ ພິທີການສຳຄັນ. ດັ່ງນັ້ນ ຊົນຊາດອ້າຍລາວ ຈຶ່ງມັກນຸ່ງສ້ຶງຂາກ້ວຍກ່ອນແລ້ວ ຈຶ່ງນຸ່ງຜ້າໝັບຕ່ຽວ ທັບທາງນອກຕື່ມອີກ. ປະເພນີການນຸ່ງກືແບບນີ້ ໄດ້ກາຍ ເປັນວັດທະນະທຳ ປະຈຳຊາດລາວ ມາຈົນເກືງປັດຈຸບັນ.

ສ່ວນການນຸ່ງຜ້າສະໂຫລ້ງ ຫລື ຜ້າຕາໂລ່ງນັ້ນ ເຂົ້າໃຈວ່າ ຊາດອ້າຍ ລາວ ໄດ້ມາຈາກພວກຈາມ ຫລື ຈາມປາ (ອິນໂດເນເຊັຍ) ເພາະພວກຈາມ ນິຍົມນຸ່ງຜ້າສະໂຫລ້ງ ແລະ ໃຊ້ຜ້າຂາວມ້າ ເພື່ອສາລະພັດປະໂຫຍດ ເຊັ່ນ ມັດ ແອວ, ປູນອນ, ເຊັດມື ແລະ ອື່ນໆ ຊາວອິນໂດເນເຊັຍ ເອີ້ນວ່າ "ປຮະກະມະ".

ອາຫານການກິນ

ຂອມ ຫລືຂະເມນບູຮານ ກໍ່ເໝືອນກັບຂະເມນປັດຈຸບັນ ນິຍົມກິນເຂົ້າຈ້າວ ສ່ວນຄົນລາວກິນເຂົ້າໜຽວ ມາແຕ່ສະໄໝອ້າຍລາວ ຈົນເກົ້າປັດຈຸບັນ. ຈົນມີຄຳຂວັນວ່າ " ຊົນຊາດໃດ ກິນເຂົ້າໜຽວ ເປົ້າແຄນຢູ່ເຮືອນສູງນັ້ນ ແມ່ນຄົນລາວ ". ສ່ວນຊົນຊາດລາວ ສາຂາໄທສຍາມ ແຕ່ເດີມກໍ່ກິນເຂົ້າໜຽວຄືກັນ ດັ່ງຫລັກການທາງບູຮານຄະດີ ທີ່ໄດ້ພົບໃນເຂດປະກົມເຈດີ ນະຄອນປະກົມ ໄດ້ພົບຮ່ອງຮອຍເມັດເຂົ້າໜຽວ ແຕ່ໄດ້ປ່ຽນມາກິນເຂົ້າຈ້າວ ຕາມແບບຂະເມນຈົນເທົ້າທຸກມື້ນີ້ ຍ້ອນວ່າ ຢາກປັບໂຕ ໃຫ້ເຂົ້າກັບຄົນຂະເມນນັ້ນເອງ.

ການປົກຄອງ

ຮູບແບບການປົກຄອງຂອງຂອມ ແມ່ນລອກແບບມາຈາກ ອິນເດັຍ ໂດຍກ່ຶວ່າ ພຣະເຈົ້າແຜ່ນດິນມີອະພິສິດ ແລະ ເປັນຫລັກ ທາງການປົກຄອງ. ພຣະເຈົ້າແຜ່ນດິນ ມີອຳນາດເດັດຂາດ ທຸກຄົນຕ້ອງປະຕິບັດຕາມຄຳສັ່ງ. ການປົກຄອງແບບນີ້ເອີ້ນວ່າ " ລະບອບຣາຊາທິປະໄຕ " ອັນມີກະສັດເປັນເຈົ້າປົກຄອງໄພ່. ເກົ້າແມ່ນມີຄະນະບໍລິຫານ ກໍ່ແມ່ນເລືອກມາຈາກຊົນຊັ້ນສັກດິນາ ຄື ຈາກຊົນຊັ້ນກະສັດ. ພາມ ແລະມົນຕີ ອັນສືບສາຍເລືອດທາງຕະກູນ. ປະຊາຊົນສາມັນ ບໍ່ມີສິດເຂົ້າເປັນສະມາຊິກບໍລິຫານໄດ້ ເທບພະເຈົ້າ ໃຫ້ຢູ່ພາຍໃຕ້ການປົກຄອງຂອງຊົນຊັ້ນສັກດິນາ ເທບພະເຈົ້າ ໄດ້ສ້າງຊົນຊັ້ນສັກດິນາ ໃຫ້ມາເປັນຜູ້ປົກຄອງ ສາມັນຊົນປະຕິເສດບໍ່ໄດ້.

ແນວຄິດແບບນີ້ ໄດ້ມີອິດທິພົນຕໍ່ຮູບແບບການປົກຄອງຂອງຊົນຊາດ ອ້າຍລາວ ສາຂາໄທສຍາມ ບໍລິເວນແມ່ນ້ຳເຈົ້າພະຍາ ໃນສ່ວນຊົນຊາດອ້າຍ ລາວ ບໍລິເວນທົ່ງພຽງ ແມ່ນ້ຳຂອງ ກໍຮັບເອົາແນວຄິດນີ້ເຊັ່ນດຽວກັນ ແຕ່ບໍ່ໜັກແໜ້ນ ຍັງໃຫ້ໂອກາດສາມັນຊົນ ທີ່ມີຄວາມຮູ້ຄວາມສາມາດ ຂຶ້ນເປັນນັກ ປົກຄອງໄດ້ ໂດຍສະເພາະ ຜູ້ມີຄວາມສາມາດທາງທະຫານ.

ອິດທິພົນທາງວັດທະນະທຳ

ກ. ປະເພນີປີໃໝ່ (ເດືອນ 5)

ບັນທຶກຂອງຣາຊທູດຈີນຊື່ " ຈູຕາກວານ " ມາຢ້ຽມຢາມຣາຊສຳນັກ ກຳພູຊາ ໃນສະຕະວັດທີ 13 ກ່າວວ່າ ປີໃໝ່ຂອງກຳພູຊາ ເລີ້ມຕົ້ນເດືອນ 10 ຂອງຈີນ (ເດືອນທີ 5 ຂອງຂະເມນ) ເອີ້ນວ່າ " ເຈັຍ-ເຕ " (ສົງຂານ) ມີ ການຈູດບັ້ງໄຟ 3 ມື້ 3 ຄືນ ແລະ ມີການຫົດສົງພຣະພຸດທຮູບທົ່ວປະເທດ. ປີໃໝ່ ເລີ້ມເດືອນ 5 ນີ້ ເປັນປະເພນີມ່ວຈາກລັງກາ ໃນພະມ້ານ້ຳເໝືອນກັນ. ປີໃໝ່ ເດືອນ 5 ຂອງລາວ ກໍ່ອາດຈະໄດ້ຮັບມາຈາກຂອມຫລື ຂະເມນບູຮານ ຫລື ບໍ່ ດັ່ງນັ້ນ ອາດຈະໄດ້ຮັບມາຈາກພະມ້າ. ແຕ່ເດີມຊາດອ້າຍລາວ ກີເອົາເດືອນ ຈຽງອອກໃໝ່ 1 ຄ່ຳ ເປັນວັນເລີ້ມຕົ້ນປີໃໝ່ ໃນລະດູໜາວ. ເດືອນຈຽງ ແມ່ນ ເດືອນອ້າຍ ຫລື ເດືອນຕົ້ນຂອງປີໃໝ່ຂອງລາວ ເຜົ່າໄທດຳ ແລະ ຜູ້ໄທອື່ນໆ ເຊິ່ງຍັງປະຕິບັດກັນມາ ຈົນເຖິງທຸກມື້ນີ້ ເອີ້ນວ່າ " ກິນຈຽງ " ຄືການຫລິ້ນປີ ໃໝ່ນັ້ນເອງ. ດັ່ງນັ້ນ: ຄຳວ່າເດືອນຈຽງ ກໍ່ແມ່ນເດືອນໃໝ່ນັ້ນເອງ.

ທຳນຽມ ການນັບວັນເດືອນປີ ຂອງຊາດອ້າຍລາວ ແຕ່ເດີມນັ້ນ ກໍ ແບບຈີນ (ເພາະຢູ່ໃກ້ຈີນ) ແລະ ປີໃໝ່ກໍຄົງຈະບໍ່ຫ່າງຈາກຈີນພໍເທົ່າໃດ, ຊາດ ລາວ ເລີ້ມຕົ້ນປີໃໝ່ ໃນເດືອນຈຽງ ຈີນເລີ້ມຕົ້ນປີໃໝ່ ລະຫວ່າງເດືອນຍີ່ ກັບ ເດືອນສາມ. ເມື່ອຊາດລາວແຜ່ນດິນລາວ ໄດ້ຕົກຢູ່ໃນອິດທິພົນຂອງຂອມ ເປັນ ເວລານານ ຫລາຍສະຕະວັດ ປະເພນີອັນນີ້ ກໍໄດ້ເສື່ອມຊຶມເຂົ້າຈິດໃຈຊົນຊາດ ລາວຢ່າງບໍ່ຕ້ອງສົງໃສ. ປີໃໝ່ລາວ ເລີ້ມຕົ້ນເດືອນຈຽງນັ້ນ ຈະເຫັນໄດ້ຈາກ ຄຳໃຍວາດ ຂອງພະຍາຟ້າງຸ່ມ ຢູ່ວຽງຈັນ ໃນຕອນກາງສະຕະວັດທີ 14 ວ່າ " ອັນໜຶ່ງ ສອງເດືອນໃດ ໃຫ້ໃຊ້ຄົນເມື່ອໄຫວ້ສາທາເຮົາ ສູ່ບ້ານສູ່ເມືອງ ໃຫ້ ເຮົາຮູ້ອັນດີ ແລະ ອັນຮ້າຍ ເຮົາຈັກໄດ້ບູຊາແກນຟ້າ ... ຄັນຮອດເດືອນຈຽງ ໃຫ້ຂຶ້ນສູ່ບ້ານສູ່ເມືອງ ເດືອນສາມໃຫ້ຮອດເມືອງຊວາ ຄັນບໍ່ໄດ້ຂຶ້ນ ເຮົາວ່າ ບໍ່ ຊື່ຕໍ່ເຮົາ ແລະ ... " ນີ້ ອາດຈະໝາຍເຖິງຕົ້ນປີໃໝ່ ໃຫ້ເຈົ້າເມືອງທຸກຄົນ ຂຶ້ນ ມາຍັງເມືອງຫລວງ.

ເຊື່ອໃຈວ່າ ອິດທິພົນປີໃໝ່ ເລີ້ມຕົ້ນເດືອນ 5 ນັ້ນ ຄົງຈະເກີດໃນສະ ໄໝຫລັງເຈົ້າຟ້າງຸ່ມ. ສ່ວນອານາຈັກອ້າຍລາວ ສາຂາໄທສຍາມນັ້ນ ແລະ ອາ ນາຈັກອ້າຍລາວ ອາຊາອື່ນໆ ຄົງຈະຮັບເອົາອິດທິພົນປີໃໝ່ມາຈາກຂະເມນ ບູຮານດົນແລ້ວ ຢ່າງນ້ອຍທີ່ສຸດ ກໍໃນສະໄໝເຈົ້າອູ່ທອງ ຂຶ້ນຄອງນະຄອນສີອະ ຍຸທະຍາ.

ຂ. <u>ອິດທິພົນທາງໜັງສື ແລະ ພາສາ</u>

ຕາມຫລັກຖານຈາກຮູບຮ່າງຂອງການວິວັດທະນາຕົວໜັງສື ເຊື່ອໃຈ ວ່າ ຕົວໜັງສືຂອງເຜົ່າໄທດຳ ແລະ ເຜົ່າໄທຂາວ, ເຜົ່າລາວກຸ່ຍເຈ້ຍ ແລະ ສົງ

ภา (ที่มีบทบาอางๆตๆ) เปันໜังสือดั่งเดิมຂอງลาว ตัวอย่าง ไต ก ส้ภา เปันธูบ . ไทดำเปัน . ลาวเปัน ก. สุโขไทเปัน . ภูยเจ้าเปัน . ไต ๆ ส้ภาเปันธูบ . ภูยเจ้าเปัน ไทดำเปัน . ลาวเปัน ๆ ดั่งนี้เปันต้น.

ອันที่ว่า ขุนลามคำแหง ถีดปะดิดไตໜังสือไทขึ้นในปี ค.ส 1293 นั้น จ้ำบ่ภีภต้องปานใด ถวามจ้ำอันที่เอิ้นลาวสุโขไทนั้น ก่ำแม่นอ้าย ลาว สาขาเผ่าลาวลางเฒ่า ทลี ล้านล้างนี้เอา แม่นแต่พันละเมือๆ ส่วนหลายขอๆสุโขไทในปัดจุบัน ก่ำแม่นลาวล้านล้างๆ. ส่วนอ้ายลาว สาขาไทสยามนั้น มีจำนวนน้อยกว่า: ดั่งนั้น อ้ายลาวสาขาสายแม่น้ำ ยิม. น้ำปาสักนี้ แม่นได้นำเอ้าไตໜังสือดั่งเดิมขอງลาวอ้ายลาว เข้ามานำในสะไໝที่ เข้าไปต้างถากถางนยู่ในล่องน้ำทั้งสองนี้. แม่นแต่สำนวนคำเว้าในสิลาเลก ขอງขุนลามคำแหง ก่ำแม่นสำนวนคำเว้าขอๆลาวปัดจุบันนี้เฉิ่นคำว่า " พ่ำภูไปธ์บขุนสามฉิบหัวล้าย ขุนสามฉิบฮับมาหัวขวา ขุนสามฉิบเกื่อนเอ้าไพฟ้าໜ้ำใส่พ่ำภูໜีพ้าย ยะยายพ้ายจะแจ ภูบ่ໜี ภูขี่ล้างเอกพิบ ภูฮับเข้าก่อนพ่ำภู ภูต่ำล้างด้วยฉิบสามฉิบ ต้บ ภูพุ่างล้างขุนสามฉิบ ต้วฉี่มาดเมือๆแพ้ ขุนสามฉิบพ่ายหนี ". ดั่งนี้ สะแดงเภิ่งว่า เปันพาสาลาวล้านล้างๆ บ่แม่นลาวล้านเพัย ทลี ไทสยามแต่ปะการใด. การปะดิดส้างໜังสือ ขอๆขุนลามคำแหง จ้ำบ่แม่นดีดปะดิดส้างขึ้นใหม่ แต่เอ้าไตໜังสือเดิม มาดัดแปงให้เข้ากามแบบไตໜังสือขอม และ ก้าไตໜังสือบ่พ่ ก่ได้เอ้าไตໜังสือขอมมาใส้. ดั่งนั้น จ้ำเห้นได้ว่า ไตໜังสือ ขอๆขุนลามคำแหงหลายไต มาจากໜังสือขอม และ ใส้เคื่องหมายสะละแบบขอม. แต่ฮูบลูบเปันแภวดูงกัน. ต่ำมา กับใส้

ເຄື່ອງໝາຍແບບຂອມໄປໝົດ. ນັ້ນສະແດງວ່າ ອ້າຍລາວສາຂາທິ່ງພຽງແມ່ນ້ຳເຈົ້າພະຍາ ໄດ້ຮັບອິດທິພົນຂອມທາງອັກຂະລະໂດຍສົມບູນ. ສ່ວນລາວລ້ານຊ້າງ ຍັງໃຊ້ໜັງສືລາວເດີມຢູ່. ແຕ່ຕໍ່ມາ ທາງສາສນາ ຈຶ່ງໄດ້ນຳເອົາໜັງສືມອນ ເຂົ້າມາໃຊ້ຂຽນຄຳສັ່ງສອນ ທາງພຸທສາສນາ. ສ່ວນໜັງສືຂອມນັ້ນ ໃຊ້ຂຽນຄຳສັ່ງສອນ ທາງພຸທສາສນາ ຢູ່ຕາມທິ່ງພຽງ ແມ່ນ້ຳເຈົ້າພະຍາ. ຫາກໍ່ເລີກໄປເມື່ອປະກາດປ່ຽນຊື່ປະເທດສຍາມ ມາເປັນປະເທດໄທ ໄດ້ 40 ກວ່າປີມານີ້ເອງ.

ພາສາຂອມ ຫລື ຂະເມນບູຮານນັ້ນ ມີອິດທິພົນຕໍ່ພາສາລາວຫລາຍໂດຍສະເພາະ ແມ່ນພາສາຂອງອ້າຍລາວໄທສຍາມ ຈົນກາຍມາເປັນພາສາລາວ ໄປໂດຍແທ້ ເຊັ່ນຄຳວ່າ ແຂ, ສັງກັດ, ດຳ (ດຳນາ, ປູກເຂົ້າ), ເກີຍ (ເຊັຍເຮືອ), ຂະໜີຍ (ໜອນ), ເດີນ (ຍ່າງ), ສະເດັດ (ໄປ) ເປັນຕົ້ນ. ຫລັກກາບພັນ ຫລື ແຜ່ງຄຳໃດໃນພາສາລາວ ໃຊ້ເປັນສອງພະຍາງ ກໍ່ໃຊ້ຫລັກກາບຕາມແບບພາສາຂອມ ຫລືຂະເມນບູຮານ ເຊັ່ນຄຳວ່າ ແຜກ ເປັນພະແນກ ຈ່າຍ ເປັນຈ່າໜ່າຍ, ແຈກ ເປັນຈ່າແນກ ເປັນຕົ້ນ ເພື່ອຈຸດປະສົງໃນກາບແຕ່ງກາບກອນ ແລະ ເຮັດໃຫ້ຮູບຂອງຄຳສະຫລະ ສະຫລວຍ ນ່ວນຊົ້ນ ຄຳບາງຄຳ ລາວເອົ້ງກໍ່ໃຊ້ ໂດຍໃຫ້ເຂົ້າກັບສຽງຄົນລາວ ເຊັ່ນຄຳວ່າ ເດືອນເຕັມດວງເອີ້ນວ່າ ເດືອນເພັ້ງ ເປັນຕົ້ນ ແລະ ຍັງມີຄຳອື່ນໆອີກຫລາຍຄຳ. ອິດທິພົນທາງດ້ານພາສານີ້ ບໍ່ແມ່ນແຕ່ລາວເຮົ້າເອົ້ານ້ຳຂອມ ຫລື ຂະເມນເທົ່ານັ້ນ ແມ່ນແຕ່ພາສາຂະເມນເອງ ກໍ່ຢືມໄປຈາກລາວຫລາຍຄຳ ເຊັ່ນ ກາບນັບ ຂະເມນນັບຮອດພຽງ 6 ຕໍ່ຈາກ 6 ຂຶ້ນໄປເອົ້າຈ່ານວນ 1 ບວກເຂົ້າ. ສ່ວນຈ່ານວນ 10-20-30-100-ພັນ ໝື່ນ ແສນ ລ້ານ ແມ່ນຢືມເອົ້າໄປຈາກລາວ. ຄຳວ່າຍ່າງ ຂະເມນກໍ່ນ້ຳເອົ້າໄປໃຊ້ເປັນຄຳສຸພາບເຊັ່ນ ຄຳວ່າ ສະເດັດຍ່າງໄປ ເປັນຕົ້ນ.

ນອກນີ້ ກໍ່ມີຫລາຍຄຳທີ່ຂະເມນໄດ້ຢືມໄປຈາກລາວ ເນື່ອງຈາກວ່າ ລາວ ແລະ ຂະເມນເຄີຍຢູ່ຮ່ວມສາຍເລືອດດຽວກັນ ໃນຄືນຜດນຕອນນີ້ມາກ່ອນນັ້ນເອງ. ແມ່ນແຕ່ຊື່ສະກຸນທີ່ຕ່າງໆ ລາວເຮົາກໍ່ມີຊື່ເປັນພາສາຂະເມນຫລາຍ ແຫ່ງ ເຊັ່ນປັກແຮດ (ແຮດຢູ່ຕົ່ມ). ດົງກະລຶມ. ບ້ານລົບປະດີ. ຈົກ. ບົ່ງ. ທະເລສາບ. ກຸ່ງ (ເມືອງ). ສະພັ່ງໝຶກ. ສະພັ່ງເລນ (ໝຶກ = ດຳ. ເລນ = ຕົ່ມ) ເປັນຕົ້ນ.

* ອິດທິພົນທາງສາສນາ ແລະ ສິລປະກຳ

ວັນນະກຳລາວຮຸ້ນຫລັງ ໄດ້ຮັບອິດທິພົນຄຳສອນລັດທິມະຫາຍານ ນິກາຍຕັນຕະຣະ ຈາກຂອມ ຫລື ຂະເມນບູຮານຢູ່ຢ່າງສູງ ເຊັ່ນ ໜັງສືໄກສອນ ດອກບົວ (ສັດທຳປຸນດຼິກສູດ) ເວົ້າເກີ່ງເລື້ອງ ອາທິພຸດທະສ້າງໂລກ ແລະ ສ້າງສັບພະສິ່ງທັ່ງມວນ. ປະກົມມະປັນນາ ໜັງສືຄະດີໂລກ. ປັນຍາປາຣະມີ. ອຸບ ຫັດສະວີໄຊ. ສູດໄຊ ເປັນຕົ້ນ ໂດຍສະເພາະສູດໄຊນີ້ ເປັນພາສາສັນສະກຼິດ ແປ ຮູບປົນກັບພາສາລາວ: ເພາະວ່າ ຂອມ ຫລື ຂະເມນບູຮານນັ້ນ ກີ່ພຸດທະສາສະ ໜາມີກາຍນີ້ຢ່າງໝັ້ນຄົງ. ກະສັດບາງອົງ ເຊັ່ນ : ພຣະເຈົ້າສຸຣິຍະວໍຣະມັນທີ 2 ແລະ ໄຊຍະວໍຣະມັນທີ 7 ກໍ່ກີ່ວ່າ ເປັນພຣະໂພທິສັດອະວະໂລກິເຕສວນ. ເກີ່ງ ຢ່າງໃດກໍ່ຕາມ, ອິດທິພົນທາງສາສະໜານີ້ ຢູ່ໃນລາວລ້ານຊ້າງບໍ່ແຂງແຮງ ປານໃດ. ແຕ່ສຳລັບໄທສຍາມແລ້ວ ແມ່ນໝັ້ນຄົງແຂງແຮງທີ່ສຸດ ດັ່ງທີ່ກ່າວມາ ແລ້ວໃນເບື້ອງຕົ້ນ. ການເຊື່ອກີ່ເວດມົນກົນຄາກາ ເຄື່ອງແຄ້ວຂອງຄົງ ຂອງ ຊົນຊາດອ້າຍລາວ ກໍ່ແມ່ນໄດ້ຮັບອິດທິພົນມາຈາກ ລັດທິຕັນຕະຣະຍານ ຈາກ ຂອມເໝືອນກັນ; ດັ່ງຈະເຫັນໄດ້ຈາກຈຳນວນ ພະພິກຂຸ ສາມະເນນ ແລະ ປະ

ຊ່ຽນຊົນທົ່ວໄປ ກໍ່ມັກຮຽນເວດມົນກົນຄາຖາ ແລະ ເຊື່ອເຄື່ອງແຄ້ວຂອງຄົງ. ບົດສູດຂອງໝໍທຳ ສຳລັບສູດຂັບໄລ່ຜີ ກໍ່ແມ່ນສ່ວນໜຶ່ງຂອງອິດທິພົນ ລັດທິ ຕັນຕະຣະຍານຈາກຂອມ ຫລື ຂະເມນບູຮານ.

ສິລປະ ການສ້າງພະພຸທຮູບ ແລະ ຮູບໂຄລົບອື່ນໆ ທີ່ພວກຂອມປະກິ້ມ ໄວ້ໃຫ້ເຫັນຢ່າງຫລວງຫລາຍ ເຊັ່ນ ທີ່ຊາຍຝອງ. ວຽງຈັນ. ຈຳປາສັກ. ສະກົນ ນະຄອນ. ມະຫາສາລະຄາມ ແລະ ສ່ວນອື່ນໆ ໃນທົ່ງພຽງແມ່ນ້ຳເຈົ້າພະຍາ ຍ້ອນມີອິດທິພົນຕໍ່ສິລປະການປັ້ນ ແລະ ຫລໍ່ຮູບໂຄລົບຂອງຊາດອ້າຍລາວຢ່າງ ຫລວງຫລາຍ. ສຳລັບສິລປະ ຂອງອະຍຸທະຍາແລ້ວ ໄດ້ສະແດງເຖິງອິດທິພົນ ຂອງຂອມ ຫລື ຂະເມນບູຮານເກືອບ 80%. ສ່ວນສິລປະ ຮູບໂຄລົບຂອງລາວ ລ້ານຊ້າງ ຕາມຫລັກການທີ່ປະກົດທາງບູຮານຄະດີແລ້ວ ອິດທິພົນຂອມທີ່ມີຕໍ່ ພະພຸທຮູບລາວ ສ່ວນໃຫຍ່ ກໍ່ແມ່ນການສ້າງພະພຸທຮູບແບບຢືນ ຫລື ທີ່ເອີ້ນວ່າ ແບບພະບາງ. ທັງນີ້ກໍ່ຍ້ອນວ່າ ອິດທິພົນຂອງພະບາງມີຫລາຍທີ່ສຸດ. ສ່ວນພະ ພຸທຮູບນັ່ງນັ້ນ ກໍ່ນັບວ່າເປັນສິລປະລາວ 80-90%.

ກ່ຽວກັບລວດລາຍຄວັດ ແລະ ລາຍແຕ້ມນັ້ນ ບໍ່ປະກົດວ່າ ໄດ້ຮັບອິດທິ ພົນຈາກຂອມຢ່າງແຈ່ມແຈ້ງ ອາດຈະມີ ແຕ່ກໍ່ບໍ່ຫລາຍ ເພາະວ່າ ລວດລາຍທີ່ ມີຢູ່ຕາມສີໜ້າວັດພູຈຳປາສັກ ແລະ ທີ່ອື່ນໆ ມີສ່ວນສຳພັນກັບລວດລາຍຂອງ ລາວປັດຈຸບັນ ບໍ່ຫລາຍກໍ່ໜ້ອຍ.

ສ່ວນສິ່ງກໍ່ສ້າງ ເຊັ່ນ ຫໍ. ໂຮງ ແລະ ຢ້າວເຮືອນນັ້ນ ປະກົດວ່າ ຊາດ ອ້າຍລາວບໍ່ນິຍົມເຮັດຕາມແບບຂອມ ຫລື ຂະເມນບູຮານ. ຫໍ ໂຮງ ແລະ ຢ້າວ

ເຮືອນ ເປັນລັກສະນະດ້ງເດີມຂອງລາວມາແຕ່ໃດໆ ແລະ ລາວເຮົາກໍ່ນິຍົມ ເຮັດດ້ວຍໄມ້ສ່ວນຫລາຍ. ກໍ່ດ້ວຍດິນຈີ່ມີສ່ວນນ້ອຍ. ບໍ່ນິຍົມເຮັດດ້ວຍຫີນ ເໝືອນຢ່າງຂອມ. ສ່ວນທີ່ຕັ້ງເມືອງຂອງຊາດອ້າຍລາວນັ້ນ ມັກຕັ້ງຢູ່ຝັ່ງຕາ ເວັນອອກ ຫັນຫລັງໃສ່ດວງຕາເວັນສະເໝີໄປ. ສ່ວນເມືອງຂອມ ຫລື ຂະເມນ ບູຮານນັ້ນ ມັກຕັ້ງຢູ່ຝັ່ງຕາເວັນຕົກຂອງແມ່ນ້ຳ: ກ້າຫາກມີການຕັ້ງຢູ່ຝັ່ງຕາ ເວັນອອກແລ້ວ ກໍ່ຕ້ອງຢູ່ບ່ອນນ້ຳຄົດ ຫັນໜ້າໃສ່ດວງຕາເວັນສະເໝີ.

* ກ່ຽວກັບດົນຕີ ຫລື ເຄື່ອງເສບ

ແຄນແມ່ນດົນຕີປະຈຳຊາດອ້າຍລາວ ແຕ່ວ່າ ຄ້ອງວ້ຳ ຫລື ລະນາດ ນັ້ນ ໄດ້ຮັບອິດທິພົນມາຈາກຂອມ ຫລື ບໍ່. ແຕ່ຍັງບໍ່ປະກົດຢ່າງແຈ່ມແຈ້ງ: ແຕ່ ວ່າລະນາດ ແລະ ຄ້ອງວ້ຳນີ້ ເປັນທັງເຄື່ອງເສບຂອງຂະເມນ ແລະ ມອນ. ດັ່ງ ນັ້ນ ເຮົາອາດຈະໄດ້ມາຈາກຂະເມນ ແລະ ມອນທັງສອງທາງກໍ່ເປັນໄດ້. ການ ຮ້ອງລຳ ແລະ ການຂັບຮ້ອງບາງສ່ວນ ກ້າກ່ຽວກັບເນື້ອຮ້ອງຂອງເພງບູຮານ ແລ້ວ ອາດໄດ້ຮັບມາຈາກຂະເມນ. ສ່ວນການລຳ ແລະ ການຂັບຕາມທ້ອງກິ່ນ ນັ້ນ ເປັນຂອງລາວໂດຍສະເພາະ. ວິວັດທະນະການຂອງທຳນອງ ການຮ້ອງ ເພງນີ້ ກໍ່ຢູ່ໃນລະດັບສູງທີ່ສຸດ ສຳລັບໄທສຍາມ.

" ອາຍາຈັກ ເຈນລະ "

ຄຳວ່າ " ເຈນລະ " ຫລື " ເຈ້ນລະ " ເປັນຊື່ອາຍາຈັກຂອມບູຮານ ຫລື ໝາຍເຖິງອາຍາຈັກຂອມບູຮານ ນອກຈາກນີ້ ຄຳວ່າ " ເຈນລະ " ຍັງໝາຍ ເຖິງຮູບແບບສິລປະ ຂອງຄົນກຸ່ມນີ້ອີກດ້ວຍ.

ໄລຍະປະຫວັດສາດ ເຈນລະ ເລີ້ມແຕ່ຄຣິດສະຕະວັດທີ 6 ເຖິງຄຣິດ ສະຕະວັດທີ 9 ໃນລະຫວ່າງເວລາດັ່ງກ່າວ ເຈນລະ ມີຄວາມເຊື່ອແບບອິນດູ ຄື ນັບຖືບູຊາພຣະສິວະ ນັບຖືຮູບເຄົາຣົບ ຄືໂຄນົນທີ ສິວະລິງ.

ນັກວິຊາການຊາວຝຣັ່ງເສດ ມີຄວາມເຫັນວ່າ ເຈນລະ ເປັນຕົ້ນເຄົ້າ ຂອງປະຫວັດສາດອາຍາຈັກຂອມ. ວິວັດທະນາການ ທາງປະຫວັດສາດຂອງ ຂອງເຈນລະ ຢູ່ບໍລິເວນລຸ່ມແມ່ນ້ຳຂອງ ແລ້ວຈຶ່ງຂະຫຍາຍອຳນາດລົງໄປ ບໍລິ ເວນທະເລສາບໃຫຍ່ ເຂດປະເທດກຳປູເຈັຍ ປັດຈຸບັນ.

ຈອດ ເຊເດສ ກຳນົດອາຍາບໍລິເວນຂອງເຈນລະ ຢູ່ລຸ່ມແມ່ນ້ຳຂອງ ຕອນກາງ ເຂດຈຳປາສັກປັດຈຸບັນ ມີ " ເສດກາປຸຣະ " ເປັນສູນກາງສາສະ ນະສະກາບຫລັກຄື " ວັດພູ " ອັນເປັນທີ່ປະດິສກາບ " ເທພເຈົ້າພັທເຣສວນ " ແລະຄຳວ່າ " ວັດພູ " ປຽບໄດ້ກັບ " ລິງຄະບັນພົດ " (ເອກະສານຈີນກ່າວໄວ້ ກົງກັບຈາຣຶກ " ເທວະນີກາ " (Devanika) ພາສາສັນສະກິດ ທີ່ຈຳປາສັກ ໃກ້ວັດພູນັ້ນ ເອງທ່ານ ຈອດ ເຊເດສ ກຳນົດອາຍຸຈາຣຶກນີ້ ປະມານ ຄຣິສຕະ ວັດ ທີ 4).

- ตามพิงสาวะดาบส่วย (ระหว่างปี ค.ส 589-618) ที่ท่าน ชเดส์ เห็นว่าสำคัมหลาย พิงสาวะดาบ ได้ก่าวไว้ว่า ในเวลาที่ " เสดภะปุธะ " เป็นบะคอบหลวางของแคว้นเจนละนั้น อู่ใก้บะคอบหลวา มีพูห่วยหนึ่งชื่อว่า " ลิคียะโปโป " (ลิคะปะธะวะตะ) ที่จอมพูนั้น มีพาสาด มีหะหาบ 1.000 คัน ธักสาปะจำอู่เบื่องบิด. พาสาดหลังนี้ ส้าวให้แก่พูมะเหวะดา ที่ชื่อว่า "โปโตสิ" (พธะเหสะวาส) โดยมีภาบฮ้า คันเส้น เป็นเถื่องบูชายันทุภบี พธะเจ้าแผ่นดิน ได้สะเด็ดไปในพา สาด ฉิงทำพิทีบูชายันด้วยพธะอิงเอง ในเวลาภาวคืน. ท่าน ป. ดุยปิง ธรุนไว้ในหนังสือชื่ " ฮ่าวแภะสะลัก ก่อนสะไหมบะคอบวัด " หน้า 72-73 (พาสาดหินวัดพู แธวางจำปาสัก หน้า 31-32).

- นักวิฮาภาบยุกปัดจุบัน ชื่ ดธ. ดับบลิว เจอาบเลัย เย็นอาธะ ยะทัมวัดพู และ ดินแดนบໍสิเวนบี้ว่า " เธดแคว้นวัดพู " ซึ่งต่มาก่ดี จำปาสัก ธองลาวในปัดจุบัน.

- ภะสัดอิงสำคัน ธองเจนละ คื พธะวะวໍธะมัน พธะอิงมีอำนาด อู่แภบเมือง " พะวะปุธะ " ทางตอนเหือธองทะเลสาบใหย่ พธะอิง เป็นเจื้อสายภะสัดฟูนัน ฉิงธะพิเสกกับเจ้าหิงฮาวก่ำพูฮา ชื่ " ก่ำพู ฮาธาฮลักสะมี " เฉดส์ เจื้อว่า พธะเจ้าพะวะวໍธะมัน ฉิงมีเดฮาบุ พาบยิ่งใหย่ สามาดปาบปามพวกฟูนัน ที่อู่ทางใต้ได้.

พะยาดอิงสำคันธอง พะวะวໍธะมัน คื จิตเสน เมื่อได้เป็นภะ สัดอิงพะนามว่า " มะเหันทะธะวໍธะมัน " ฉิงธะหยายอำนาดเกิงลุ่มน้ำ มูน เกิงสุลิน และ แม่น้ำปาสัก ในประเทดไทในปัดจุบัน.

ໂອຣົດຂອງຈິຕແສນ ຄືອີສານວໍຣະມັນ ເປັນກະສັດທີ່ຍິ່ງໃຫຍ່ອີກອົງ ໜຶ່ງ ຊົງດຳເນີນຕາມຮອຍພຣະບິດາ ໄດ້ຂະຫຍາຍອຳນາດລົງໄປທາງໃຕ້ ແລະ ຕາເວັນຕົກສ່ຽງໃຕ້ ຊົງຕັ້ງເມືອງ " ອີສານປຸຣະ " ເປັນເມືອງຫລວງ ເຊື່ອວ່າ ເມືອງນີ້ ຕັ້ງຢູ່ທີ່ " ສົມໂບໄພຣກຸກ " ທາງເໜືອຂອງນະຄອນທົ່ມ.

ເມືອງເສດກາປຸຣະ ມີຄູນ້ຳ 2 ຊັ້ນ ຂະໜາດ 2 x 2 ກິໂລແມັດ ຕັ້ງຢູ່ ທີ່ຮາບສູງເທິງພູ ລາດລົງສູ່ນ້ຳຂອງ ຄູນ້ຳດ້ານຕາເວັນອອກຂອງໂຕເມືອງ ໄດ້ ສ້າງຄູ່ຂະໜານໄປກັບລຳນ້ຳຂອງ. ດຣ. ວານເລັຍ ໄດ້ບັນທຶກໄວ້ວ່າ ສາເຫດທີ່ ພາໃຫ້ເມືອງນີ້ຮ້າງມີອຸດົມສົມບູນ ເພາະສາມາດຮັດກະເສດຕະກຳໄດ້ກາວອນ ແລະ ບໍ່ໄດ້ຮັບການສູນເສັຍຈາກອຸທົກກະໄພ ຈາກນ້ຳຂອງ ເພາະທີ່ຮາບບໍລິ ເວນພະລິດກະສິກຳ ຢູ່ສູງກວ່າລະດັບນ້ຳຂອງ ຈະກ້ວມເກີງ.

ອານາເຂດຂອງ " ພະວະວໍຣະມັນ " ຫລື ແຄວ້ນ " ເສດກາປຸຣະ " ຫລື " ເຂດແຄວ້ນວັດພູ " ຕັ້ງຢູ່ໃນພູມີພາກສ່ວນໃນ (ແມ່ນ້ຳຂອງຕອນລ່າງ) ມີ ທາງຕິດຕໍ່ກັບທະເລໄດ້ ໂດຍຜ່ານລຳນ້ຳຂອງເທົ່ານັ້ນ.

ຫລັກການທາງບູຮານຄະດີ ທີ່ສຳຄັນຕາມລຳນ້ຳຂອງ ທີ່ສັນນິການວ່າ ກ້ຽກັບສະໄໝຂອງກະສັດ ພະວະວໍຣະມັນ ທີ 1 ຫລື ກ່ຽວຂ້ອງກັບແຄວ້ນເສດ ກາປຸຣະ ໄດ້ແກ່ :

- ປະສາດບາຣັນ (Baran) ຢູ່ແຄມນ້ຳຂອງ ກ້ຽກັບຂ້າມກັບເມືອງ ຊຽງແຕງ (ສຕຣິງແຕຣ) ຢູ່ບໍລິເວນປາກເຊກອງ ອາດຈະຢູ່ໃນດາວດຽວ ກັບສະໄໝ ພະວະວໍຣະມັນທີ 1 ຫລື ປະມານຕົ້ນຍຸກເຈນລະ (ຕົ້ນສະຕະວັດທີ 7)

ນບໍ່ສ່ວນນີ້ ໄດ້ພົບສິລາຈາຣຶກຫລັກໜຶ່ງ ກ່າວເຖິງ ພຣະນາມຂອງພຣະຍ໌ , ພະວະວໍຣະມັນ). ພຣະຣາຊບິດາ ແລະ ພຣະຂນິດກາ (ນ້ອງສາວ) ຂອງ ພຣະອົງ.

- ອາສົມມະຫາລີສີ ຊຶ່ງນັກວິຊາການບາງທ່ານ ກໍານົດອາຍຸຢູ່ລະຫວ່າງ ສະໄໝຟູນັນ ແລະ ເຈນລະ ຕັ້ງຢູ່ທີ່ " ກຣາຕີເອ " (Kratie) ໃກ້ໆກັນນັ້ນ ໄດ້ ພົບນົມແຜ່ນຫີນ ທີ່ " ຕະມະແກຣ " (Thamakre).

- ສາສະນະສະຖານຫັນໄຊ ຢູ່ທາງຝັ່ງຕາເວັນຕົກຂອງແມ່ນ້ຳຂອງເໜືອ ເມືອງກຳປົງຈ່ານ ວ່າສ້າງໃນສະໄໝ ພະວະວໍຣະມັນທີ 1 ແຕ່ໂຕນົນດົນ ອາດຈະ ສ້າງໃນສະໄໝຟູນັນ.

- ປະສາດບັນທາຍໄພຣນະຄອນ ກໍ່ເຊື່ອກັນວ່າ ເປັນສິ່ງກໍ່ສ້າງໃນຍຸກ ລະຫວ່າງເຈນລະ ແລະ ຟູນັນ ເຊັ່ນດຽວກັນ.

- ພາສາດອຸບໂມງ ຢູ່ປາກເຊຊຸ ຕາມລຳເຊກະໝາບ (ສາຂານ້ຳເຊກອງ) ເໜືອ ຂຶ້ນໄປຈາກປາກເຊກອງ ໃນເຂດເມືອງໄຊເສດຖາ ແຂວງອັດຕະປື. ກໍ່ ເຊື່ອວ່າ ສ້າງໃນສະໄໝ ພະວະວໍຣະມັນທີ 1 ນີ້ເໝືອນກັນ. ໄດ້ພົບແຜ່ນສິລາຈາ ຣຶກຢູ່ທີ່ງປຽດ ບ້ານດັກຢັດ (ໃກ້ກັບຊາຍແດນຫວຽດນາມ ພາກໃຕ້) ເມືອງ ສານໄຊ ແລະ ແຜ່ນສິລາຈາຣຶກ ພາສາຂ່ອມ ແລະ ສັນສະກິດ ຢູ່ວັດຊະເຣ ເມືອງໄຊເສດຖາ ເຊື່ອວ່າມີອາຍຸໃນສະໄໝດຽວກັນ. ຮູບແກະສະລັກທັບຫລັງ ອຸບໂມງເຊຊຸ ທີ່ທ່ານຝັ່ງແລ (ນາຍທະຫານຝຣັ່ງ) ເອົາມາໄວ້ວັດສີຣີອາວາດ ບ້ານຝັ່ງແດງປັດຈຸບັນ ມີລວດລາຍ ແລະ ອາຍຸສະໄໝດຽວກັນກັບວັດພູ ຈຳປາ ສັກ ຄືສະໄໝເສດຖາປຸຣະນັ້ນເອງ (ຜູ້ຂຽນ).

- ພາສາດຫີນໂຕະໂມະ ຕັ້ງຢູ່ຜຄມຝັ່ງນ້ຳຂອງ ຫ່າງຈາກວັດພູໄປທາງ ທິດຕາເວັນຕົກ 11 ກິໂລຜມັດ ແລະ ສາມາດຜນມເຫັນ ຈອມພູເກົ້າ ຫລື ລິງ ຄະປະຣະວະຕະ ອັນເປັນທີ່ຕັ້ງພາສາດຫີນວັດພູໄດ້ເປັນຢ່າງດີ. ກົມພິພິທະພັນ ແລະວັດຖຸບູຮານ ມີຄຳເຫັນວ່າ ອຸໂມງໂຕະໂມະ ມີຄວາມກ່ຽວພັນກັບ ວັດພູ ຈຳປາສັກ ຢ່າງໃກ້ຊິດ ລວດລາຍສິລປະ ແມ່ນສິລປະອິນຊີຕາ (Insitar) ຂອງ ສະຕະວັດ ທີ 7 ສ້າງດ້ວຍຫີນເຊົ້າຈີ່ ປະມານ ສະຕະວັດທີ 8-9 ສິລາຈາຣຶກ ກ່າວໄວ້ວ່າ " ການສ້າງອຸໂມງໂຕະໂມະນີ້ ເພື່ອອຸທິດໃຫ້ແກ່ " ພຣະຣຸດຣານີ " (Rudrani) ພຣະມະເຫສີ ຂອງພຣະສີວະເຈົ້າ. (ຈາກວາລະສານເມືອງລາວ ໂດຍທົ່ງເຫີນ ຊຸນພິທັກ).

ນອກຈາກຫລັກຖານ ທາງບູຮານຄະດີ ທີ່ຢັ້ງຢືນຄວາມເກົ່າແກ່ຂອງ ແຄວ້ນເສດຖະປຸຣະ ຕາມແຖບແຄມຂອງແລ້ວ ຍັງມີຈາຣຶກອີກ 7 ຫລັກ ທີ່ນັກວິ ຊາການ ກ່າວົ່ດວ່າ ຢູ່ໃນສະໄໝພະວະວໍຣະມັນທີ 1 ກ່າວຄືຈາກຣຶກ 5 ຫລັກ ພົບ ຢູ່ບໍລິເວນໃກ້ວັດພູ ລົງມາຕາມລຳນ້ຳຂອງ ຄືທີ່ຫັນໄຊຕະມະແກຣ. ວັດຊຣອຍ. ອັມພິນ. ວີນກັນເຕລ. ຈາຣຶກຫລັກທີ 6 ຢູ່ທີ່ພະນົມປັນທາຍນາງ ຢູ່ທາງເບື້ອງ ເໜືອຂອງພະຕະບອງ ແລະ ຢູ່ເບື້ອງຕາເວັນຕົກ ຂອງທະເລສາບໃຫຍ່. ສິລາ ຈາຣຶກຫລັກໜຶ່ງຢູ່ພູລະຄອນ ແຄມນ້ຳຂອງ ຝັ່ງປຸະເທດລາວ ກົງກັນຂ້າມກັບ ປາກນ້ຳມູນເລັກນ້ອຍ.

ຈາຣຶກພູລະຄອນນີ້ ຄືສັນຍາລັກຂອງການລວມອຳນາດ ແລະ ເຄື່ອ ຍາຄລະຫວ່າງຈິດຕະເສນ ແລະ ພະວະວໍຣະມັນ.

ນັກວິຊາການ ມັກອ້າງຈາຣຶກ ພູລະຄອມ ເຖິງຄວາມສຳພັນທາງສາຍເລືອດ ລະຫວ່າງ ພະອະວໍຣະມັນ ແລະ ມະເຫັນທະວໍຣະມັນ ໃນຈາຣຶກນີ້ ກ່າວວ່າ ມະເຫນທະວໍຣະມັນ ເປັນໂອຣົດຂອງວິຣະວໍຣະມັນ ເປັນພຣະອະນຸຊາ (ນ້ອງຊາຍ) ຂອງພະລະວໍຣະມັນ. ກ່ອນການຣາຊາພິເສກ (ສະກາປະນາເປັນພຣະມະຫາກະສັດ) ພຣະອົງມີພະນາມວ່າ ຈິຕເສນ ຈາຣຶກນີ້ ຂຽນຂຶ້ນໃນໂອກາດທີ່ມະເຫັນທະວໍຣະມັນ ສະກາປະນາລິງຄະ ເພື່ອກວາຍຄິຣິສະ ຄືພຣະສິວະ ຜ່ານໄປເຊົ້າໄກລາດ ໃນໂອກາດສະເຫລີມສະຫລອງ ໄຊຊະນະຂອງພຣະອົງ ເໜືອຜ່ນດິນເສດກະປຸຣະ.

ຈິດຕເສນ ຫລືມະເຫັນທະວໍຣະມັນ ພະຍາຍາມຂະຫຍາຍອຳນາດຄວບຄຸມດິນແດນສອງຝັ່ງນ້ຳຂອງ ແລະຂະຫຍາຍລົງໄປຫາທະເລທາງຕອນລ່າງ.

ນັກວິຊາການເຊື່ອວ່າ ບໍລິເວນທີ່ເປັນບ່ອນຕັ້ງອານາຈັກຟູນັນ ແມ່ນບໍລິເວນລຸ່ມນ້ຳຂອງຕອນລ່າງທັງໝົດ (ເຂົ້າໃຈວ່າ ນັບແຕ່ວັດພູຈຳປາສັກ ລົງໄປເຖິງພະຕະບອງ ໃນກຳປູເຈັຍ ປັດຈຸບັນ). ຕໍ່ມາປະມານປາຍສະຕະວັດທີ 6 ຈິຕເສນ ຫລື ມະເຫັນທະວໍຣະມັນ ໄດ້ປາບພວກຟູນັນ ແລະ ໄດ້ຍຶດເອົາຟູນັນເປັນປະເທດສະຫລາດ ແຕ່ເຂົ້າໃຈວ່າ ຄົງຈະບໍ່ສາມາດປົກຄອງໄດ້ນານ ຫລືຄອບຄອງບໍ່ໄດ້ໝົດ ຫລັງຈາກນັ້ນ ປະກົດວ່າ ເມື່ອເລີ້ມຕົ້ນສະໄໝຂອງ ເຊັ້ງຢວນ (ປະມານ ຄ.ສ 627-649) ພຣະເຈົ້າອີສານວໍຣະມັນ (ໂອຣົດຂອງຈິຕເສນ ຫລື ມະເຫັນທະຣະວໍຣະມັນ) ກໍໄດ້ປາບປາມພວກຟູນັນອີກເທື່ອໜຶ່ງ ໃນເທື່ອນີ້ໄດ້ລວມເອົາດິນແດນຟູນັນທັງໝົດ ເຂົ້າໄວ້ໃນພຣະຣາຊອຳນາດດ້ວຍ.

ສິລາຈາຣຶກວັດຈັກເຣດ (Vatchakret) ຫລືທີ່ເອີ້ນວ່າ ພຣະວິຫານ ກົກ (ລະຫວ່າງປີ ຄ.ສ 626-627) ກ່າວເຖິງການປະດິດສະການ ປະຕິມາກຳ ສິວະ-ວິສຸ້ນ ເພື່ອສະຫລອງໄຊຊະນະ ຂອງພຣະເຈົ້າສີສານວ໋ຣະມັນ ທີ່ໄດ້ຄອບ ຄອງເມືອງສຳຄັນ ທາງຕອນລ່າງແມ່ນ້ຳຂອງ ໄດ້ເປັນເມືອງທີ່ສີ່ ເຊິ່ງແຕ່ກ່ອນ ນີ້ ພຣະອົງໄດ້ຊື່ວ່າ ກະສັດແຫ່ງ 3 ນະຄອນ. ທີ່ໜ້າສັງເກດ ຄືການສະການປະນ ປະຕິມາກຳ 2 ເທບພະເຈົ້າ ເປັນສັນຍາລັກຂອງການປະສົມປະສານ ຄວາມ ເຊື່ອ ແລະ ຢືນຢັນ ພຣະຣາຊອຳນາດ ຂອງອີສານວ໋ຣະມັນ ໃນບໍລິເວນນີ້.

ພຣະອົງໄດ້ໂປດໃຫ້ສ້າງເມືອງຫລວງໃໝ່ ຊື່ " ອີສານປຸຣະ " ເຊື່ອໃຈ ວ່າ ເມືອງນີ້ຕັ້ງຢູ່ແຄວ້ນເກົ່າ ຊື່ " ອະນົມທິຕະປຸຣະ " ຫລື " ບາລາທິຍະປຸຣະ " ຕາມຈາຣຶກເມືອງນີ້ ມີຜູ້ປົກຄອງເຊື້ອສາຍ " ຈັນທະວົງ " ຫລື " ໂກນທັນຍະ-ໂສມາ " ຢູ່ໃກ້ກັບກຳປົງທົມ ເປັນເຂດ " ສົມໂບຣໄພຣກຸກ " ປັດຈຸບັນຍັງມີຮ່ອງ ຮອຍສິລປະກຳ ກ່ອນສະໄໝເມືອງພຣະນະຄອນຢູ່.

ເອກະສານຈີນ ໄດ້ກ່າວເຖິງເມືອງອີສານປຸຣະ ໃນສະໄໝສີສານວ໋ຣະ ມັນໄວ້ວ່າ "ເຈົ້າຊາຍອົງນີ້ໂປດໃຫ້ສ້າງທີ່ພຳນັກ ໃນເມືອງ ອີ-ເຈ-ນະ (Yche-na ຄືເມືອງອີສານະ ຫລື ອີສານປຸຣະ) ມີຄົນອາໄສຢູ່ໃນເມືອງນີ້ຫລາຍກ ວ່າ 20,000 ຄອບຄົວ. ເມືອງໃນພຣະຣາຊອານາຈັກມີຫລາຍກວ່າ 30 ເມືອ ແຕ່ລະເມືອງມີຄອບຄົວນັບພັນ ແລະ ປົກຄອງດ້ວຍຜູ້ປົກຄອງ ຕ່ຳແໜ່ງຂ້າຣ ຊະການເປັນແບບດຽວກັນກັບຂອງຫລິນອີ ".

ສະໄໝຂອງອີສານປຸຣະ ເປັນສະໄໝຍິ່ງໃຫຍ່ ຂອງອານາຈັກເຈນລະ ຍຸກຕົ້ນ ເຫັນໄດ້ຈາກສະການປັຕຍະກຳ ທີ່ສົມໂບໄພຣກຸກ ແລະ ອີສານປຸຣະ ກ່ອນ ເມືອງນະຄອນຢ່າງຫລວງຫລາຍ ແລະມີສິ່ງກໍ່ສ້າງໃນອານາບໍລິເວນອື່ນອີກ ເຊັ່ນ

= ສະກາປັຕຍະກຳ ທີ່ອັງກໍບໍໄຣ (Angkor Borei) ພ້ອມທັງຈາ
ຣຶກ ຄ.ສ 611.

= ຈາກຣຶກທີ່ອັງພູ (Ang Pou) ພ້ອມທັງສະກາປະນາສິວະລິງ
ປະຕິມາກຳສິວະ-ວິສຸນ ແລະ ອາສົມພະຄວັດ.

= ຈາຣຶກສອງຫລັກ ຄ.ສ 604 ແລະ 624 ຈາກສາສນະສະກາບ
ບາຢັງ (Bayang) ທີ່ໄດ້ສ້າງເພີ້ມເຕີມໃຫ້ສົມບູນ ໃນສະໄໝ
ອີສານວໍຣະມັນ.

ປະມາບກັນວ່າ ຍຸກສະໄໝຂອງອີສານວໍຣະມັນ ລະຫວ່າງ ຄ.ສ 611-635.

ເອກະສານຈີນໄດ້ບັນທຶກໄວ້ວ່າ ເຈນລະ ແບ່ງອອກເປັນ 2 ສ່ວນ ຄື : ເຈນລະບົກ ແລະ ເຈນລະນ້ຳ ເຊິ່ງສັງເກດຈາກສະພາບການປ່ຽນແປງ ພາຍ ຫລັງສະໄໝອີສານວໍຣະມັນ ການແບ່ງນີ້ ແມ່ນອີງຕາມ ສະພາບທາງພູມີສາດ ເປັນຫລັກກຳນົດ.

ເຈນລະນ້ຳ

ບໍລິເວນທີ່ເປັນເຈນລະນ້ຳ ໄດ້ແກ່ ບໍລິເວນ ທີ່ຕິດຕໍ່ກັບທະເລ, ສຳພັນ ກັບທະເລສາບຂະເມນ ແລະ ບໍລິເວນແຄມຝັ່ງທະເລຕາເວັນຕົກ ຂອງລຸ່ມນ້ຳ ຂອງຕອນລ່າງທັງໝົດ. ໃນບໍລິເວນນີ້ ໄດ້ມີຊຸມຊົນບ້ານເມືອງ ອາໄສຢູ່ແລ້ວ ຢ່າງໜາແໜ້ນ ແລະ ມີເຈົ້າປົກຄອງ ເຊິ່ງຈາຣຶກເອີ້ນວ່າ " ອະທິຣາດ " ຫລື " ອະທິຣາຊາ " ບັນດາເຈົ້າປົກຄອງເຫລົ່ານີ້ ເປັນອຸປະສັກສຳຄັນ ຕໍ່ການລວມ ອຳນາດທາງ ການເມືອງ ແລະ ຕ້ອງການຈັກກຳພູຊາ.

ການຊ່ວງຊີງອຳນາດຂອງອະທິຣາດຕ່າງໆ ປະກົດຂຶ້ນເຈບ ໃນສະໄໝ ພຣະເຈົ້າໄຊຍະວໍຣະມັນທີ 1 (ຄ.ສ 651-681) ຈາຣຶກກ່າວວ່າ ພຣະອົງກ່ຽວ ພັນກັບພຣະເຈົ້າອີສານວໍຣະມັນ ແລະ ວ່າພຣະອົງຊົງເປັນນັກຣົບຜູ້ຊ່ຽວຊານ ແລະ ກ້າຫານ.

ໃນຣັດຊສະໄໝຂອງພຣະອົງ ບັນດາອະທິຣາດ ແລະຊົນເຜົ່າພື້ນເມືອງ ໃນທ້ອງຖິ່ນ ມີຄວາມເປັນເອກະເທດ ຊ່ວງຊີງອຳນາດກັນ ແລະ ປະຕິບັດຕາມ ຄວາມເຊື່ອຂອງຕົນຢ່າງເປັນເອກະລາດ.

* ລັດເລັກ ເມືອງນ້ອຍ ທີ່ຢູ່ທາງຕາເວັນຕົກສ່ຽງເໜືອຂອງທະເລສາບ ສົ່ງທູດໄປເມືອງຈີນ ໂດຍບໍ່ຜ່ານຄະນະທູດຂອງເຈບລະເຊັ່ນ "ເມືອງມະລາຍັ" (Malayang) ແລະ " ເມືອງສັງຄະ " (Sangkhah) (ຢູ່ບໍລິເວນເມືອງ ພະຕະບອງປັດຈຸບັນ) " ເມືອງຂຽວມຽດ " (Kiaw Miet) " ເມືອງຟູນານ " ຫລື " ວະນະປຸຣະ ". ຊາວພື້ນເມືອງໃນລັດເຫລົ່ານີ້ ມີຄວາມເຊື່ອວ່າ ພູເຂົາຈະ ບັນດານຄວາມອຸດົມສົມບູນໃຫ້ ຄວາມເຊື່ອນີ້ເອີ້ນວ່າ " ລັດທິກະເສດ ".

* ທາງຕອນໃຕ້ ເປັນກຸ່ມຂອງພວກເມືອງ ບາລາທິຕິຍະປຸຣະ ('Bala dityapura) ໂດຍມີເມືອງສຳຄັນຄື : ສົມໂບໄພຣກຸກ ແລະ ອັງກໍບໍເຣ (Ang Kor Boreil) ກຸ່ມນີ້ ພາຍຫລັງມາ ໄດ້ປະກົດຊື່ເມືອງສຳຄັນ ຄືເມືອງອະນິນທິ ຕະປຸຣະ (Aninditayapura). ກຸ່ມເມືອງທາງຕອນໃຕ້ເຫລົ່ານີ້ ລວມຢູ່ກັບ ອານາຈັກເຈນລະມາແຕ່ສະໄໝ ພຣະເຈົ້າອີສານຸວໍຣະມັນ ເຊິ່ງເປັນກຸ່ມຈັນທະ ວົງ (ໂກນທັນຍະ-ໂສມາ) ຢູ່ແຕ່ເດີມ.

* ພວກທີ່ຢູ່ທາງຕາເວັນອອກ ຂອງທະເລສາບ ທີ່ຢູ່ຕໍ່ຈາກອະທິນຣະປຸຣະ ຄື ພວກສຳພູປຸຣະ (Samphoupura) ເດີມມີສູນກາງຢູ່ບໍລິເວນ " ສົມໂບ " (Sombor) ແລະ ກຣາຕິເອ (Kratier) ປັດຈຸບັນ. ພວກສຳພູປຸຣະ ເປັນຍາດພີ່ນ້ອງກັບອະນິນທິຕະປຸຣະ ແລະ ມີອຳນາດໄປເຖິງນ້ຳມູນ.

* ກຸມຂອງພຣະໄຊຍະວໍຣະມັນທີ 1 ຢູ່ທາງໃຕ້ສຸດ ໃກ້ປາກນ້ຳຂອງ ເປັນ ພວກ " ວະຍາທະປຸຣະ " (Vyadhapura) ປະກອບດ້ວຍເມືອງສຳຄັນ 2 ເມືອງ ຄືເມືອງບັນທາຍໄພຣນະຄອນ (Banteay Prei Nakor) ແລະ " ບາ ພະນົມ " (Ba Phnom).

ຈາຣຶກຫລັກໜຶ່ງ ທີ່ບາຣາຍ ຢູ່ດ້ານຕາເວັນຕົກຂອງນະຄອນທົມ ກ່າວ ເຖິງຜູ້ຄອງນະຄອນຄົນໜຶ່ງເປັນສະຕຣີ (ແມ່ຍິງ) ຊື່ " ໄຊເທວີ " ຊຶ່ງເຊເດສ໌ ສັນນິຖານວ່າ ເປັນຣາຊີນີ ຂອງພຣະເຈົ້າໄຊຍະວໍຣະມັນທີ 1 ໃນຈາຣຶກຫລັກ ດັ່ງກ່າວ ພຣະນາງກ່າວເຖິງຄວາມອຸ້ນວາຍ ອັນເກີດຈາກພວກເຈົ້າຄອງນະ ຄອນຕ່າງໆ ຍາດຊິງກັນມີອຳນາດ ຈາຣຶກຫຼລັກນີ້ ປະມານ ຄຣິດສຕະວັດ ທີ 8.

ໂດຍລວມແລ້ວ, ແຕ່ປາຍຄຣິດສຕະວັດ ທີ 7 ເຖິງຕົ້ນຄຣິດສຕະວັດ ທີ 8 ບໍລິເວນລຸ່ມນ້ຳຂອງຕອນລ່າງ ທີ່ຈີນເອີ້ນວ່າ ເຈນລະນ້ຳນັ້ນ ເປັນຍຸກທີ່ ເຈົ້າຄອງນະຄອນ (ອະທິຣາດ) ຍາດຊິງກັນມີອຳນາດ. ສ່ວນປະຊາຊົນສ່ວນ ໃຫຍ່ໃນບໍລະເວນນີ້ ຄືຊາວກຳພູຊາ ໃຊ້ພາສາຂອມ ແລະ ພາສາສັນສະກິດ.

* ບັນດາລັດ, ແລະ ຜູ້ຄົນໃນເຈນລະນ້ຳ ໄດ້ຮັບເອົາການແຜ່ເຂົ້າມາ ຂອງວັດທະນະທຳ ແລະ ພາສາສັນສະກິດ ຈາກອິນເດັຍ ຕັ້ງແຕ່ຕົ້ນສະຕະວັດ ທີ 7 ເປັນຕົ້ນມາ.

ອີກປະການໜຶ່ງ. ຊົນຊັ້ນປົກຄອງ ແລະ ປະຊາຊົນຂອງລັດຕ່າງໆຂອງ ເຈນລະນ້ຳນັ້ນ ເປີດຕົວອອກສູ່ວັດທະນະທຳພາຍນອກຫລາຍກວ່າ ຜູ້ຄົນ ແລະ ຊົນຊັ້ນປົກຄອງທີ່ຢູ່ທາງຕອນໃນ (ແຖບນ້ຳຂອງຕອນກາງ) ເຊິ່ງມີລັກສະນະ ວັດທະນະທຳ ຄວາມເຊື່ອເປັນຂອງຕົນເອງ ຢ່າງໜັກແໜ້ນ ເຊັ່ນລັດທິນັບຖື ພູຜາປ່າດົງ. ເມື່ອໄລຍະວໍຣະມັນທີ 2 ສະກາປະນາ ລັດທິເທວະຣາຊຂຶ້ນ ປະ ຊາຊົນກຳພູຊາ ກໍ່ໃຫ້ຄວາມສຳຄັນ ກັບການປະກອບພິທີເທິງພູ ແລະ ທີ່ສູງ ແລະ ຖືວ່າກະສັດ ເປັນສະເໝືອນເທບພະເຈົ້າອົງໜຶ່ງ ຫລື ຜູ້ມີບຸນມາເກີດ.

ປະຊາຊົນທີ່ຢູ່ລັດຕ່າງໆ ຫລາຍກຸ່ມຫລາຍເຜົ່າ ໄດ້ຄ່ອຍໆລວມກັນ ຄື ຊາວກຳພູຊາ ຂອມ ຂະແມ ແລະ ອ່າດຈະມີຊົນເຜົ່າອື່ນອີກ ໄດ້ປະສົມປະສານ ກັນກາຍເປັນຊາວກຳພູຊາ ທີ່ໃຊ້ພາສາຂອມລວມກັນ. ການຮັບເອົາວັດທະນະ ທຳອິນເດັຍເຂົ້າມາໃນລັດເຈນລະນ້ຳນີ້ ສະແດງໃຫ້ເຫັນວ່າ "ພາສາສັນສະກິດ" ໄດ້ແຜ່ເຂົ້າມາສູ່ດິນແດນ ສຸວັນນະພູມີນີ້ ຕັ້ງແຕ່ຕົ້ນສະຕະວັດທີ 7 ເປັນ ຕົ້ນມາ.

ເຈນລະບົກ

" ເຈນລະບົກ " ໄດ້ແກ່ອານາບໍລິເວນ ທີ່ຈົບປຽບທຽບລັກສະນະ ແລະ ພື້ນທີ່ ທີ່ເປັນປ່າເຂົາ ແລະ ທີ່ສູງ ມີຊຸມຊົນບ້ານເມືອງນ້ອຍໆ ຢູ່ທົ່ວໄປ. ເຈນລະ ບົກ ບໍ່ໄດ້ໝາຍເຖິງອານາຈັກ ທີ່ລວມສູນອຳນາດ ແຕ່ຫາກແມ່ນໝາຍເຖິງ ບໍລິ ເວນພື້ນທີ່ ທີ່ຢູ່ເໜືອຈາກເຈນລະນ້ຳຂຶ້ນໄປ ຈົນເຖິງບໍລິເວນລຸ່ມນ້ຳຂອງຕອນ ກາງ ອັນເປັນທີ່ຕັ້ງຂອງບ້ານເມືອງຕ່າງໆ ທົ່ວໄປ. ບາງແຫ່ງວ່າ "ເຈນລະບົກ" ແມ່ນບໍລິເວນຕັ້ງແຕ່ອຽງຈັນ ຂຶ້ນໄປທາງເໜືອ ເຖິງຊາຍແດນຕາເວັນຕົກ ແລະ ຕາເວັນຕົກສ່ຽງເໜືອຂອງຫວຽດນາມ.

ໃນລະຫວ່າງກາງສະຕະວັດທີ 7 (ຫລັງສະໄໝອີສານວໍຣະມັນ) ເມືອງ ນ້ອຍໆ ທີ່ຢູ່ບໍລິເວນນີ້ ໄດ້ລວມກັນເປັນ " ເຈນລະບົກ " ແລະ ໄດ້ສົ່ງທູດໄປຮາ ຊະສໍານັກຈີນ.

ເອກະສານຈີນ ກ່າວວ່າ ປີ ຄ.ສ 638 " ເມືອງຊາງເກົາ " (Sang Kao) (ຢູ່ບໍລິເວນຄໍາມ່ວນປັດຈຸບັນ) ແລະ ເມືອງນ້ອຍ ໃນບໍລິເວນນີ້ ໄດ້ສົ່ງ ທູດໄປຈີນ ແຕ່ບໍລິເວນດັ່ງກ່າວ ກໍ່ກເຈນລະຄອບຄອງ ໃນເວລາຕໍ່ມາ.

ນັກວິຊາການບາງທ່ານ ອາທິ ທ່ານ ບຣິກສ ມີຄວາມເຫັນວ່າບໍລິເວນ ຊາຍແດນຂອງເມືອງຕ່າງໆ ໃນບໍລິເວນນີ້ເປັນທີ່ຢູ່ຂອງພວກລາວເທິງ (ລາວ ເທິງເຜົ່າຕ່າງໆ).

ເອກະສານຈີນກ່າວວ່າ "ເຈນລະບົກ" ມີລັດສໍາຄັນແຫ່ງໜຶ່ງ ຊື່ ເຫວີນ ກາບ ຫລື ເວີນຕານ (Wen Tan). ນັກວິຊາການຫລາຍທ່ານ ຕ່າງກໍ່ພະຍາ ຍາມ ກໍານົດຈຸດທີ່ຕັ້ງ ຂອງເຫວີນກາບວ່າ " ຢູ່ບໍລິເວນນ້ໍາຂອງຕອນກາງ ".

ທ່ານ ອະດັອບ ບາສຕຽນ (Adolf Bustian) ນັກວິຊາການຊາວ ເຢຍລະມັນ ໄດ້ທຽບຊື່ ເວີນຈັນ (Wenchan) ກັບເວີນຕານ ຫລືເຫວີນກາບ ແລ້ວກໍານົດວ່າ ຢູ່ປະມານ ເມືອງວຽງຈັນປັດຈຸບັນ.

ທ່ານ ເຮນຣີ ມາສເປີໂຣ (Henri Maspero) ແລ້ວກໍານົດວ່າ ເມືອງຫລວງຂອງເວີນຕານ ຢູ່ທີ່ປາກຫີນບູນ (Pakhinboun.) (ເມືອງຫີນ ບູນ ແຂວງຄໍາມ່ວນ) ຕອນກາງຂອງລາວ ບໍ່ແມ່ນທີ່ " ສົມໂບຣ໌ ແລະ/ຫລື ວຽງ ຈັນ ຢ່າງທີ່ຄົນອື່ນສະເໜີ.

ສ່ວນທ່ານ ໄຊເດນຟາເດນ (Seidenfaden) ເຫັນວ່າ ຢູ່ໃກ້ທ່ານ ຜຂກ. ທ່ານ ປີແອຣ໌ ດູປອງ (Pierre Dupon) ສະເໜີວ່າ ເຈນລະບົກ ເປັນ ເຂດອຳນາດຂອງກະສັດ ພະເຈົ້າອະນັນທີ 1 ແລະ ເປັນພູມລຳເນົາເດີມຂອງ ພວກຂະແມ ເຊິ່ງຄວນຈະຢູ່ບໍລິເວນຈຳປາສັກ, ປາກເຊ ຂອງລາວ.

.ເວີນຕານ ຕິດຕໍ່ກັບຣາຊສຳນັກຈີນ ເປັນປະຈຳ ທູດເວີນຕານ ໄປປະ ເທດຈີນ ຄັ້ງທຳອິດ ເມື່ອປີ ຄ.ສ 717 ແລະ ຫລັງຈາກນັ້ນ ປະມານ 5 ປີ ກໍ່ໄດ້ ຮ່ວມກັບຫົວໜ້າຄົນພື້ນເມືອງກຸ່ມໜຶ່ງ ຢູ່ເຫ່ງອານ (ຫວຽດນາມ) ເຊິ່ງປະ ກອບດ້ວຍພວກຈາມ ພວກຂະແມ ຕໍ່ຕ້ານຂ້າຫລວງຈີນ ຈົນມີໄຊຊະນະ ເໜືອ ກອງກຳລັງຂອງຈີນ.

ປີ ຄ.ສ 753 ເຈົ້າຊາຍເວີນຕານ ເດີນທາງໄປເຝົ້າເຈົ້າຈັກກະພັດ ຈີນ ຂະນະນັ້ນ ຈີນກຳລັງເຣັດສົງຄາມກັບນ່ານເຈົ້າ ກໍ່ໄດ້ຂໍກຳລັງສະໜັບສະ ໜູນ ຈາກເວີນຕານ ໃຫ້ຣັກສາຊາຍແດນດານຕາເວັນອອກສ່ຽງໃຕ້ໃຫ້.

ປີ ຄ.ສ 771 ທູດເວີນຕານ ເດີນທາງໄປຈີນ ເພື່ອສົ່ງບັນນາການ ເຊິ່ງປະກອບດ້ວຍຊ້າງ ທີ່ໄດ້ຝຶກຫັດແລ້ວ 11 ໂຕ.

ປີ ຄ.ສ 779 ແລະ 799 ກໍ່ໄດ້ສົ່ງທູດໄປຈີນອີກ ເພື່ອເຂົ້າເຝົ້າຈັກກະ ພັດຈີນອີກ. ແຕ່ນັ້ນມາ ກໍ່ບໍ່ປະກົດເຫັນຫລັກຖານ ການພົວພັນລະຫວ່າງ ເວີນ ຕານ ແລະຣາຊສຳນັກຈີນຕື່ມອີກ.

ມີຫລາຍຄົນໃຫ້ຂໍ້ສັງເກດວ່າ ຄຳວ່າ " ເວີນຕານ " ອາດຈະເປັນສຳ ນຽງຝຣັ່ງເສດ ເຊິ່ງກອດມາຈາກພາສາພື້ນເມືອງ ໂດຍຜ່ານນາຍພາສາ ທີ່ ເປັນຄົນຈີນ ດັ່ງນັ້ນ. ນັກວິຊາການຈີນຫລາຍຄົນ ໄດ້ສຶກສາເລື່ອງເວີນຕານ ແລ້ວໃຫ້ຄວາມເຫັນວ່າ " ເວີນຕານ " ຫລື " ເຫວີນການ." ຄືວ່ານຊຽງ ຫລື ວຽງຈັນນັ້ນເອງ.

ຈາກຫລັກການນີ້. ວຽງຈັນອາດຈະເກົ່າແກ່ກ່ອນສະໄໝສຸໂຂໄທອີກກໍ ໄດ້. ຕັ້ງແຕ່ເມືອງຈຳປາສັກ ຂຶ້ນມາທາງເໜືອ ຕາມແຄມຝັ່ງນ້ຳຂອງ ພາກຕາ ເວັນອອກ ພວກເຮົາຮູ້ຈັກເມືອງສຳຄັນໃນແຖບນີ້ ເຊິ່ງມີຊື່ສຽງໃນຍຸກຫລັງໆ ໄດ້ແກ່ວຽງຈັນ, ຫລວງພະບາງ ເທົ່ານັ້ນ. ຄວາມຈິງແລ້ວ ບໍລິເວນນ້ຳຂອງ ຕອນກາງເບື້ອງຝາກຕາເວັນອອກ ໄດ້ມີເມືອງສຳຄັນຕັ້ງຢູ່ກ່ອນແລ້ວ ແລະ ໄດ້ ເປັນຊຸມຊົນ ບ້ານເມືອງມາແລ້ວ ຕັ້ງແຕ່ຍຸກສຳລິດ ແລະຍຸກຫລັກ ເພາະເປັນ ບໍລິເວນວັດທະນະທຳດຽວກັນ ກັບບໍລິເວນທີ່ເອີ້ນວ່າ " ແອ່ງສະກົນນະຄອນ " ໃນພາກອີສານ ຂອງປະເທດໄທ ປັດຈຸບັນ.

ປະຫວັດສາດລາວບູຮານ ເຫລັ້ມ II ໜ້າ 54 ກ່າວໄວ້ວ່າ : " ເມືອງ ຊາຍຝອງ ສ້າງຂຶ້ນໃນ ຄ.ສ 887 ລະຫວ່າງຣັຊການ ຂອງເຈົ້າອິນທະຣະ ວໍຣະວັນທີ 1 ເພື່ອເປັນສູນກາງຄວບຄຸມ ການປົກຄອງດິນແດນລາວ ດ້ານ ເໜືອສຸດ ".

ຢູ່ບໍລິເວນນີ້ ຂອບເຂດນົນທົນ ທາງອຳນາດ ຂອງເຈນລະບົກນັ້ນ ຄວບຄຸມສອງຝັ່ງນ້ຳຂອ່ງ ກວມເອົາບໍລິເວນຕອນໃຕ້ຂອງຈີນ ທາງເໜືອຂອງ ລາວ ແລະ ຕາເວັນຕົກສ່ຽງເໜືອຂອງຫວຽດນາ ໃນປັດຈຸບັນ. ຜູ້ຄົນທີ່ອາໄສ

ຢູ່ໃນບໍລິເວນນີ້ ໄດ້ແກ່ພວກຂອມ, ຂະແມ, ຂ້າ, ລາວ ແລະ ເຜົ່າຕ່າງໆ ຢູ່ຮ່ວມ
ກັນ ແລະ ໄດ້ຮັບວັດທະນະທຳ ຄວາມເຊື່ອຕາມແບບຂອງຊົນຊັ້ນປົກຄອງນຳ
ມາຈົນເປັນວັດທະນະທຳຂອງຕົນເອງ ຢ່າງເລິກເຊິ່ງ ແລະ ຊົນເຜົ່າຕ່າງ ໆ
ເຫລົ່ານັ້ນ ກໍ່ຄ່ອຍໆກາຍເປັນຊາວກຳພູຊາ ຢ່າງຊັດເຈນ ຂຶ້ນເທື່ອລະນ້ອຍ.

ເອກະສານປະກອບການຄົ້ນຄວ້າ

1. ເຈນລະ " ປະຫວັດສາດອີສານບູຮານ " (Kingdom of Chenla "
2. ປາສາດຫີນ ວັດພູຈໍາປາສັກ ໂດຍ ເຈົ້າບຸນເອີ້ຍ ນະຈໍາປາສັກ
3. ປະຫວັດສາດອີສານ ໂດຍ ເຕີມ ວິພາກພົຈນະກິດ
4. ສົມເດັດ ພຣະເຈົ້າໄຊຍະເສດກາທິຣາດ ໂດຍ ດວງໄຊ ຫລວງພະສີ
5. ທາດຫລວງວຽງຈັນ " ປະເພນີ ພິທີກໍາ ນັກຂັດຕະສຶກ " ໂດຍ ກະວີ
6. ເຈົ້າອະນຸວົງ 1767-1829 ໂດຍ ດຣ. ມະຍຸຣີ + ດຣ. ເພັຍພັນ
7. ພຣະຣາຊປະຫວັດ ຂອງສົມເດັດພຣະເຈົ້າອະນຸວົງ ໂດຍ ສີລາ ວີຣະວົ
8. ພົງສາວະດານ ແຫ່ງປະເທດລາວ " ຫລວງພະບາງ, ວຽງຈັນ, ເມືອງພວນ ແລະ ຈໍາປາສັກ " ໂດຍ ເຈົ້າຄໍາໝັ້ນ ວົງກົດຣັຕນະ
9. ປະຫວັດພຣະທາດສີໂຄດຕະບອງ ໂດຍ ເຂມພອນ ແສງປະທຸມ
10. ແອ່ງອາຣະຍະທໍາອີສານ ໂດຍ ສີສັກ ວັນລີໂພດົມ
11. ປະຫວັດຜູ້ໄທ ໂດຍ ກວີ ເກສອນຣາດ
12. ຄົນລາວໃນເມືອງໄທ " ສາຣະຄະດີ " ໂດຍ ສີສັກ ວັນລີໂພດົມ
13. ພຣະທາດກ່ອງເຂົ້ານ້ອຍ ໂດຍ ກອງວິຊາການ ໂຮງຮຽນ ນາຍຮ້ອຍ ຈຸລະຈອມເກົ້າ
14. ປະຫວັດສາດໄທ (ການປົກຄອງ, ສັງຄົມ, ເສດກະກິດ) ໂດຍ ບັງອອນ ປິຍະພັນ
15. ປະຫວັດການແຂວງພົງສາລີ ໂດຍ ເຈົ້າຄໍາໝັ້ນ ວົງກົດຣັຕນະ
16. 700 ປີ ແຫ່ງມໍຣະສຸມ ໃນຣາຊອານາຈັກລາວ " CIA "
17. ນາຍພົນສີງກະໄປ ກັບການປະຕິວັດລາວ ໂດຍ ສຸພົດ ດ່ານຕະກຸນ
18. 3 ບຸຣຸດເຫລັກ ແຫ່ງເມືອງທ່າແຂກ ໂດຍ ດວງໄຊ ຫລວງພະສີ

19. ປະຫວັດສາດລາວ 1778-1975 ໂດຍ ສຸວິດ ທິຣະສາສວັດ
20. ບີດີ ພະນົມຍົງ ກັບຂະບວນການກູ້ເອກະລາດໃນລາວ ອຸດອນ ວົງທັບທິມ
21. ພົງສາວະສີ ສ່ວນໜຶ່ງຂອງຊາວອັດຕະປື
ໂດຍ ພຣະອາຈານ ປະດິດ ພຸທໂຄສາໂກ
22. ເບື້ອງຫລັງຄວາມຂັດແຍ້ງ ລະຫວ່າງ ໄທ-ລາວ ບ້ານຮົ່ມເກົ້າ
ໂດຍ ຍອດທົງ ທັບທິວໄມ້
23 ຣາຊອານາຈັກລາວ ໂດຍ ບຸນຊ່ວຍ ສີສະຫວັດ
24. ປະຫວັດສາດການຕໍ່ສູ້ ຂອງກອງທັບ ແລະ ປະຊາຊົນ ຢູ່ບັນດາແຂວງ
ພາກໃຕ້.
25. ປະຫວັດນະຄອນການລະຈຳບາກ ນາຄະບຸຣີ ສີສັຕນາຄະນະຫຸດ
(ນະຄອນຈຳປາສັກ) ໂດຍ ເຈົ້າສົມປະສິດ ນະຈຳປາສັກ
26. ປະຫວັດສາດລາວ (ເຫລັ້ມ III-1-2-3-4-5) ສະຕະວັດທີ 14-18
ໂດຍ ຄຳ ຈຳປາແກ້ວມະນີ
27. ປະມວນ ສົນທິສັນຍາ ກຳນົດເສັ້ນຊາຍແດນ ອິນດູຈີນ-ສຍາມ
(ລາວ-ໄທ) 1886-1946
28. The CIA's Secret War in Laos and its link in Vietnam
by Roger Warner
29. A short history of Laos the land between
by Grant Evans
30. Le Laos 1945-1949 Par Jean Deuve
31. Le Complot de Chinaimo (1954-1955)
Par Jean Deuve

24/VII
ห้ามจำหน่าย



ດອນຕາເປ້ຍ ປາກນ້ຳ ເຊກອງ ແລະ ເຊກະໝານ

ພິມທີ່ໂຮງພິມ ສຳນັກພິມ ແລະ
ຈຳໜ່າຍປຶ້ມແຫ່ງລັດ